# ການນຳໃຊ້ເທັກນິກຈິກຊໍ (Jigsaw) ເຂົ້າໃນການຮຽນ-ການ ສອນວິຊາຫຼັກ  ສູດ ແລະ  ການສອນ ພາສາອັງກິດສຳ ລັບນັກສຶກສາຄູຊັ້ນປະຖົມສຶກສາລະບົບ 12+4 ປີທີ 4 ທີ່ວິທະຍາໄລຄູສາລະວັນ

## USING JIGSAW TECHNIQUES FOR TEACHING- LEARNING ENGLISH CURRICULUM & INSTRUCTIONS SUBJECT FOR THE PRIMARY SCHOOL TEACHERS 12+4  AT SALAVAN TEACHER TRAINING COLLEGE

**ໂດຍ: ນາງ ລັດສະໝີ ວົງສາລາດ**

**ວິທະຍາໄລຄູສາລະວັນ**

**2019**

# ການນຳໃຊ້ເທັກນິກຈິກຊໍ (Jigsaw) ເຂົ້າໃນການຮຽນ-ການ ສອນວິຊາຫຼັກ  ສູດ ແລະ  ການສອນ ພາສາອັງກິດສຳ ລັບນັກສຶກສາຄູຊັ້ນປະຖົມສຶກສາລະບົບ 12+4 ປີທີ 4 ທີ່ວິທະຍາໄລຄູສາລະວັນ

## USING JIGSAW TECHNIQUES FOR TEACHING- LEARNING ENGLISH CURRICULUM & INSTRUCTIONS SUBJECT FOR THE PRIMARY SCHOOL TEACHERS 12+4  AT SALAVAN TEACHER TRAINING COLLEGE


**ຜູ້ວິໄຈ:**

**ນາງ ລັດສະໝີ ວົງສາລາດ**

**ທີ່ປຶກສາ :**

**ປອ ໂພທອງ ພົງສົງຄາມ**

**ອຈ ນາງ ສົມປອງ ແສນທະວິສຸກ**



**ວິທະຍາໄລຄູສາລະວັນ**

**2019**

# ໃບກຽດຕິຄຸນ

ການຄົ້ນຄວ້າຄັ້ງນີ້ສຳເລັດລົງໄດ້ດ້ວຍດີຍ້ອນຜູ້ສຶກສາຄົ້ນຄວ້າໄດ້ຮັບການຊ່ວຍເຫຼືອເປັນຢ່າງດີຈາກ ປອ ໂພທອງ ພົງສີງຄາມ ປະທານທີ່ປຶກສາວິທະຍານິພົນ ແລະ ຜູ້ຊ່ວຍທີ່ປຶກສາ ອຈ ນາງ ສົມປອງ ແສນທະວິສຸກ ທີ່ໄດ້ຄວາມກະລຸນາໃຫ້ຄຳປຶກສາແນະນຳຢ່າງເອົາໃຈໃສ່ ແລະ ກວດສອບແກ້ໄຂຂໍ້ບົກຜ່ອງຕ່າງໆໃນບົດຄົ້ນຄວ້າວິທະຍາສາດເຫຼັ້ມນີ້ແຕ່ຕົ້ນຈົນເຮັດໃຫ້ຂໍ້ມູນ ແລະ ເນື້ອໃນສົມບູນຂຶ້ນ ຜູ້ຄົ້ນຄວ້າມີຄວາມຮູ້ບືຕິຊົມຊື່ນໃນຄວາມກະລຸນາຂອງພວກທ່ານ ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງພວກທ່ານທັງສອງເປັນຢ່າງສູງ.

ຂໍຂອບໃຈເປັນຢ່າງສູງມາຍັງທ່ານ ປະທານ ຄະນະກຳມະການບົດວິທະຍານິພົນ ທີ່ໄດ້ໃຫ້ຄຳແນະນຳປະກອບຄຳຄິດຄຳເຫັນທີ່ເປັນປະໂຫຍດໃສ່ບົດວິທະຍານິພົນເຫຼັ້ມນີ້ໃຫ້ມີເນື້ອໃນສົມບູນຂຶ້ນ.

ຂໍຂອບໃຈມາຍັງ ປອ ໂພທອງ ພົງສີງຄາມ, ອຈ ນາງ ສົມປອງ ແສນທະວິສຸກ ທີ່ໃຫ້ຄວາມກະລຸນາເປັນຜູ້ທີ່ປຶກສາ ແລະ ຜູ້ຊ່ວຍທີ່ປຶກສາໃນການກວດແກ້ບົດຄົ້ນຄວ້າວິທະຍາສາດໃນຄັ້ງນີ້.

ຂໍສະແດງຄວາມຂອບໃຈມາຍັງເພື່ອນຮ່ວມງານທີ່ໃຫ້ຄວາມເອື້ອເຟື້ອແຜ່ໃຫ້ການຊ່ວຍເຫຼືອໃນເວລາປະຕິບັດການວິໄຈໃນຄັ້ງນີ້.

**ນາງ ລັດສະໝີ ອິ້ງສາລາດ**

# ບົດຄັດຫຍໍ້


ການສຶກສາຄົ້ນຄວ້າຄັ້ງນີ້ຜູ້ວິໄຈໄດ້ສຶກສາກ່ຽວກັບການນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນ ວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສໍາລັບນັກສຶກສາຄູຊັ້ນປະຖົມສຶກສາ ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ຈຸດປະສົງຂອງການຄົ້ນຄ້ວາຄັ້ງນີ້ເພື່ອ: 1). ສຶກສາປະສິດທິພາບຂອງບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນໍາໃຊ້ເທັກ ນິກການສອນແບບຈິກຊໍ(Jigsaw) ຕາມເກນ 80/80; 2). ສຶກສາດັດສະນີປະສິດທິຜົນ effective index (E.I) ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw); 3). ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການສອນຂອງອາຈານທີ່ນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນວິຊາ ຫຼັກສູດ ແລະ ການສອນພາສາອັງກິດ. ກຸ່ມຕົວຢ່າງທີ່ໃຊ້ໃນການສຶກສາແມ່ນນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ຈໍານວນ 31 ຍິງ 19 ຄົນທີ່ໄດ້ມາຈາກການສຸ່ມແບບເຈາະຈົງ. ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າປະກອບມີ ບົດສອນຈໍານວນ 5 ບົດ. ສະຖິຕິທີ່ນໍາໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ ເປີເຊັນ, ຄ່າສະເລ່ຍ ແລະ ສ່ວນຜັນປ່ຽນມາດຕະຖານ.

## ຜົນການຄົ້ນຄ້ວາ

1) ປະສິດທິພາບຂອງບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເທົ່າກັບ 86.28/89.16 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 80/80.

2) ດັດສະນີປະສິດທິຜົນ effective index (E.I) ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ມີຄ່າເທົ່າກັບ 0.82 ໂດຍຄິດເປັນເປີເຊັນເທົ່າກັບ 82%

3) ຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການສອນຂອງອາຈານທີ່ນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນວິຊາ ຫຼັກສູດ ແລະ ການສອນພາສາອັງກິດ ມີຄ່າສະເລ່ຍເທົ່າກັບ 4.33 ແລະ ສ່ວນຜັນປ່ຽນມາຕະຖານເທົ່າກັບ 0.22.

# ABSTRACT

The research is to study about the using Jigsaw techniques for teaching and learning the Curriculum & Instruction Pedagogy for Primary school teacher trainees System 12+4 at Salavan Teacher Training College. This study aims: 1.) To examine the efficiency of using Jigsaw techniques for teaching and learning the Curriculum & Instruction Pedagogy that based on the score 80/80; 2.) To study effectiveness of the students' learning process for teaching and learning the Curriculum & Instruction Pedagogy; 3.) To study of students' satisfactions toward on the using Jigsaw for teaching and learning the Curriculum & Instruction Pedagogy. This research was conducted in second semester of academic year 2017-2018. The research samples were 4$^{th}$ year of Primary School Teacher Students 12+4 System at Salavan Teacher Training College. Amount of research sample 31 students with 19 females who were purposive sample selected. The research tools used consist of 3 types such as 5 lesson plans, 25 items of tests to examine students' learning, each items had 4 choices, and one set of questionnaires. The statistics used to analyze data were percentage, mean and standard deviation.

## Result of research:

1) The efficiency of the lesson plan using Jigsaw techniques for teaching and learning the Curriculum & Instruction Pedagogy were 86.28/89.16 higher than the set criteria 80/80.
2) The effectiveness index of students' learning outcome to the using Jigsaw technique for teaching and learning the Curriculum & Instruction Pedagogy was 0.82 and equivalent to 80 %.
3) The students' satisfactions toward on the teaching and learning by using Jigsaw techniques for teaching and learning the Curriculum & Instruction Pedagogy was $\overline{X}$ = 4.33 and S.D= 6.05.

# ສາລະບານ

**ໜ້າ**


ຄຳຈາລຶກບຸນຄຸນ .......... i
ບົດຄັດຫຍໍ້ພາສາລາວ .......... ii
ABSTRACT .......... iii
ສາລະບານ .......... iv
ສາລະບານຕາຕະລາງ .......... vi
ສາລະບານຮູບ .......... vii
ພາກທີ 1 ບົດນຳ .......... 1
1. ຄວາມເປັນມາຂອງບັນຫາ .......... 47
2. ຄຳຖາມຄົ້ນຄວ້າ .......... 48
3. ຈຸດປະສົງ .......... 48
4.ສົມມຸດຕິຖານ .......... 49
5. ຜົນຄາດວ່າຈະໄດ້ຮັບ .......... 49
ພາກທີ 2 ທົບທວນເອກະສານ ແລະ ຂອບເຂດແນວຄິດ .......... 50
1. ທົບທວນເອກະສານ ແລະ ທິດສະດີທີ່ກ່ຽວຂ້ອງ .......... 50
2. ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ .......... 71
3. ຂອບເຂດແນວຄິດ .......... 72
4. ນິຍາມຄຳສັບທີ່ໃຊ້ໃນທາງປະຕິບັດ .......... 73
ພາກທີ 3 ວິທີການຄົ້ນຄວ້າວິທະຍາສາດ .......... 74
1. ການອອກແບບການສຶກສາ .......... 74
2. ປະຊາກອນ ແລະ ກຸ່ມທົດລອງ .......... 74
3. ຂໍ້ມູນ, ວິທີເກັບຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ .......... 74
4. ການວິເຄາະຂໍ້ມູນ .......... 77
5. ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ .......... 78
6. ຂັ້ນຕອນການຄົ້ນຄວ້າ .......... 82
ພາກທີ 4 ຜົນຂອງການຄົ້ນຄວ້າວິທະຍາສາດ ແລະ ອະພິປາຍ .......... 82
1. ຜົນຂອງການຄົ້ນຄວ້າ .......... 48
2. ອະພິປາຍຜົນ .......... 59
ພາກທີ 5 ສະຫຼຸບ,ຂໍ້ຈຳກັດໃນການຄົ້ນຄວ້າ ແລະ ຂໍ້ແນະນຳ .......... 62
1. ສະຫຼຸບ .......... 62
2. ຂໍ້ຈຳກັດໃນການສຶກສາ .......... 63
3. ຂໍ້ແນະນຳ .......... 63
ຕາຕະລາງເວລາ .......... 64
ເອກະສານອ້າງອີງ .......... 67

ເອກະສານຊ້ອນທ້າຍ........................................................................................... 70
ປະຫວັດຫຍໍ້ຂອງຜູ້ຄົ້ນຄວ້າ..............................................157

# ສາລະບານຕາຕະລາງ

**ໜ້າ**


**ຕາຕະລາງ 1:** ໂຄງສ້າງຫຼັກສູດສາຍຄູປະຖົມ.................................................................. 50
**ຕາຕະລາງ 2:** ໂຄງສ້າງຫຼັກສູດສາຍຄູປະຖົມລະດັບປະລິນຍາຕີ ................................................ 51
**ຕາຕະລາງ 3:** ຂໍ້ມູນໃນການທົດລອງ ແລະ ການລອບລອມຂໍ້ມູນ............................................. 74
**ຕາຕະລາງ 4:** ສະແດງປະສິດທິພາບຂະບວນການຮຽນ-ການສອນຂອງແຕ່ລະບົດສອນ ($E_1$) ................ 48
**ຕາຕະລາງ 5:** ສະແດງປະສິດທິພາບຂອງຜົນສຳເລັດທາງການຮຽນ............................................. 52
**ຕາຕະລາງ 6:** ສະແດງປະສິດທິພາບຂອງບົດສອນ$E_1$/$E_2$........................................................ 53
**ຕາຕະລາງ 7:** ສະແດງຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນ (E.I)..................... 54
**ຕາຕະລາງ 8:** ສະແດງຄວາມເພິ່ງພໍໃຈນັກສຶກສາທັງ 4 ດ້ານຕໍ່ການນຳໃຊ້ເທັກນິກຈິກຊໍ ...................... 54
**ຕາຕະລາງ 9:** ສະແດງຄວາມເພິ່ງພໍໃຈດ້ານກິດຈະກ□າການຮຽນຮູ້ ............................................. 54
**ຕາຕະລາງ 10:** ສະແດງຄວາມເພິ່ງພໍໃຈດ້ານບັນຍາກາດການຮຽນ-ການສອນ .................................. 55
**ຕາຕະລາງ 11:** ສະແດງເພິ່ງພໍໃຈດ້ານຄວາມຮູ້ທີ່ໄດ້ຈາກການຮຽນ............................................. 56
**ຕາຕະລາງ 12:** ສະແດງຄວາມເພິ່ງພໍໃຈດ້ານການວັດຜົນ ແລະ ປະເມີນຜົນ .................................. 58

# ສາລະບານຮູບ

**ໜ້າ**


**ຮູບ 1:** ສະແດງຂັ້ນຕອນການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ(Jigsaw)................................ 62

**ຮູບ 2:** ຂອບເຂດຂອງການຄົ້ນຄ້ວາ ........................................................................................ 73

**ຮູບ3:** ການສອນ 6 ຂັ້ນຕອນ ຂອງເທັກນິກການສອນແບບຈິກຊໍ (Jigsaw)................................... 76

**ຮູບ 4:** ຂັ້ນຕອນດຳເນີນການຄົ້ນຄ້ວາ. ..................................................................................... 82

# ພາກທີ 1

# ບົດນຳ

## 1. ຄວາມເປັນມາ ແລະ ສະພາບບັນຫາ

ພາສາອັງກິດເປັນພາສາຕ່າງປະເທດພາສາໜຶ່ງທີ່ມີຄວາມສຳຄັນ ແລະ ມີບົດບາດສຳຄັນໃນການນຳໃຊ້ເຂົ້າໃນການສື່ສານທາງດ້ານການສຶກສາ, ວຽກງານອຸດສະຫະກຳການທ່ອງທ່ຽວ, ການພັດທະນາເສດຖະກິດ, ການສື່ສານລະຫວ່າງຊາດ ນອກນີ້ພາສາອັງກິດຍັງໄດ້ຖືກນຳໃຊ້ເປັນພາສາເພື່ອສື່ສານກັນເຊິ່ງກັນ ແລະ ກັນໃນທົ່ວໂລກ. ປັດໄຈທີ່ເຮັດໃຫ້ເດັກນ້ອຍສາມາດຮຽນພາສາແມ່ໄດ້ຢ່າງວ່ອງໄວ ແລະ ມີປະສິດທິພາບນັ້ນມັນໝາຍຄວາມວ່າເທັກນິກວິທີສອນ ແລະ ຂະບວນການຮຽນ-ການສອນແມ່ນມີຄວາມສອດຄ່ອງ ແລະ ເຂົ້າໃຈງ່າຍ, ມັນກໍ່ສາມາດນຳປະສົບການເຫຼົ່ານີ້ໄປໃຊ້ເຂົ້າໃນການຮຽນ-ການສອນພາສາຕ່າງປະເທດທີ່ເປັນພາສາສອງຕາມເທັກນິກວິທີການສອນແບບດຽວກັນທີ່ພວກເຂົາຮຽນຮູ້ພາສາແມ່ຂອງພວກເຂົາ (Tough Joan, 1984:213).

ເພື່ອພັດທະນາການສຶກສາລັດຖະບານໄດ້ກຳນົດເປົ້າໝາຍປະຕິຮູບການສຶກສາແຫ່ງຊາດເຊິ່ງຈຸດໝາຍລວມໃນການພັດທະນາການສຶກສາ ຕ້ອງເປັນວຽກງານໃຈກາງຂອງການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນນະພາບດີຂຶ້ນ ເພື່ອຕອບສະໜອງທ່ວງທ່າໃນການຫັນເປັນອຸດສາຫະກຳ ແລະ ທັນສະໄໝເທື່ອລະກ້າວ, ສ້າງປະຖົມປັດໄຈພື້ນຖານຂອງການ ພັດທະນາເສດຖະກິດ-ສັງຄົມ ໃຫ້ຍືນຍົງ, ພັດທະນາການສຶກສາຕ້ອງໃຫ້ມີລັກສະນະຊາດ, ວິທະຍາສາດ, ມະຫາຊົນ ແລະ ທັນສະໄໝ ເພື່ອໃຫ້ຫຍັບມໍ່ເຂົ້າກັບມາດຕະຖານການສຶກສາຂອງຂົງເຂດພາກພື້ນ ແລະ ສາກົນເທື່ອລະກ້າວ ພ້ອມທັງສອດຄ່ອງກັບຄວາມເປັນຈິງຂອງປະເທດເຮົາ, ໃນນີ້ ພັກ ແລະ ລັດຖະບານໄດ້ກ□ານົດຈຸດໝາຍ ສືບຕໍ່ແກ້ໄຂບັນຫາຂາດເຂີນຄູອາຈານ ສ້າງໃຫ້ມີຈ□ານວນພຽງພໍກັບຄວາມຮຽກຮ້ອງຕ້ອງການອັນຈຳເປັນ, ຈັດຝຶກອົບຮົມຍົກລະດັບຄວາມຮູ້ຄວາມສາມາດໃຫ້ ຄູ-ອາຈານ ແລະ ຜູ້ບໍລິຫານການສຶກສາໃຫ້ສູງຂຶ້ນ, ສ້າງນັກວິຊາການໃຫ້ສອດຄ່ອງກັບໂຄງການປະກອບເສດຖະກິດ-ສັງຄົມ ຂອງປະເທດ, ຍົກລະດັບໂຮງຮຽນສ້າງຄູເປັນວິທະຍາໄລ 5 ແຫ່ງ ແລະ ດຳເນີນການສອນຫຼັກສູດປະລິນຍາຕີ ໃນວິທະຍາໄລບາງແຫ່ງ ຮ່ວມກັບຄະນະສຶກສາສາດຂອງມະຫາວິທະຍາໄລແຫ່ງຊາດ, ປັບປຸງຄຸນນະພາບການຮຽນ-ການສອນ ຂອງ 3 ມະຫາວິທະຍາໄລໃຫ້ມີລະດັບ ໃກ້ຄຽງກັບພາກພື້ນ ແລະ ເພື່ອສາມາດເຊື່ອມໂຍງເຂົ້າກັບສາກົນ, ເພີ່ມອັດຕາສ່ວນນັກສຶກສາເພດຍິງ ແລະ ຊົນເຜົ່າເຂົ້າຮຽນໃນຊັ້ນສູງໃຫ້ຫຼາຍຂຶ້ນ ຕາມລຳດັບ ແລະ ເພີ່ມອັດຕາສ່ວນນັກສຶກສາຕໍ່ປະຊາກອນຈາກ 1.068/100.000 ຄົນ ໃນປີ 2005 ໃຫ້ໄດ້ 1.140/100.00 ຄົນ ໃນປີ 2010, ສ້າງເຄືອຄ່າຍເພື່ອເຊື່ອມໂຍງເຂົ້າກັບການສຶກສາຊັ້ນສູງ ຂອງບັນດາປະເທດໃນພາກພື້ນ ແລະ ໃນໂລກ, ສ້າງຍຸດທະສາດການສຶກສາຊັ້ນສູງ. (ກະຊວງສຶກສາທິການ ແລະ ກິລາ, 2008:27-28).

ພາສາລາວ ແລະ ອັກສອນລາວ ແມ່ນພາສາ ແລະ ອັກສອນທາງການທີ່ໃຊ້ໃນການຮຽນ-ການສອນ ໃນສະຖານການສຶກສາ, ສະຖານການສຶກສາສາມາດຈັດຕັ້ງການຮຽນ-ການສອນພາສາຕ່າງປະເທດ, ໃນນັ້ນໃຫເອົາພາສາອັງກິດ ເປັນວິຊາບັງຄັບ ໂດຍເລີ່ມຈັດການຮຽນ-ການສອນວິຊາພາສາອັງກິດແຕ່ຊັ້ນປະຖົມສຶກສາປີທີ ສາມຂຶ້ນໄປ ສ່ວນພາສາອື່ນໃຫ້ເລືອກຮຽນເລືອກສອນຕາມຄວາມເໝາະສົມ ແລະ ຕາມເງື່ອນໄຂຕົວຈິງຂອງສະຖານການສຶກສາ. (ກະຊວງສຶກສາທິການ ແລະ ກິລາ, 2016:19-20).

ໃນຫຼັກສູດການຈັດການຮຽນ-ການສອນຊັ້ນປະຖົມສາມັນສຶກສາກົມອະນຸບານ-ປະຖົມ ກະຊວງສຶກສາໄດ້ບັນຈຸວິຊາພາສາອັງກິດເຂົ້າເປັນວິຊາຫຼັກໃນຫຼັກສູດຊັ້ນປະຖົມສຶກສາຈຸດປະສົງເພື່ອສ້າງພື້ນຖານຄວາມຮູ້ທາງດ້ານພາສາອັງກິດໃຫ້ແກ່ນ້ອງນັກຮຽນ. ເຊິ່ງກົມສ້າງຄູກະຊວງສຶກສາທິການ ແລະ ກິລາ ກໍ່ໄດ້ບັນຈຸວິຊາຫຼັກສູດ ແລະ ການສອນພາສາອັງກິດເຂົ້າໃນຫຼັກສູດການສ້າງຄູຊັ້ນປະຖົມ. ສະນັ້ນ, ນັກສຶກສາຄູສາຍຄູປະຖົມທຸກຄົນຕ້ອງໄດ້ຮຽນພາສາອັງກິດ ແລະ ວິທີສິດສອນພາສາອັງກິດ.(ກະຊວງສຶກສາທິການ ແລະ ກິລາ, 2016:1).

ການຈັດການຮຽນ-ການສອນໃນຫຼາຍສົກຮຽນທີ່ຜ່ານມາຄູສອນທີ່ວິທະຍາໄລຄູປີທີ 4ໄດ້ນຳໃຊ້ຫຼາຍວິທີສອນເຂົ້າໃນການສອນເຊັ່ນ: ການສອນໂດຍນຳໃຊ້ວິທີສອນແບບດາວຫ້າແຈ, ການສອນໂດຍນຳໃຊ້ວິທີສອນແບບທົດລອງ, ການສອນໂດຍນຳໃຊ້ວິທີສອນແບບການສາທິດ ແຕ່ການຈັດການຮຽນ-ການສອນໃນວິທີຕ່າງໆທີ່ກ່າວມານັ້ນກໍ່ບໍ່ໄດ້ຮັບໝາກຜົນດີເທົ່າທີ່ຄວນເນື່ອງຄູສອນຍັງບໍ່ເຂົ້າໃຈເຖິງວິທີການສອນແບບຕ່າງໆເຫຼົ່ານີ້ດີ, ໃນການເຮັດກິດຈະກຳຮ່ວມກັນນັກຮຽນຍັງຂາດທັກສະການເຮັດກິດຈະກຳຮ່ວມກັນ, ສຳມະຊິກພາຍໃນກຸ່ມບໍ່ໄດ້ແບ່ງໜ້າທີ່ຮັບຜິດຊອບພາຍໃນກຸ່ມເຮັດໃຫ້ກິດຈະກຳກຸ່ມບໍ່ເປັນໄປຕາມເປົ້າໝາຍຂອງຄູ ແລະ ກຳໃນເນື້ອໃນການສອນບໍ່ໄດ້ດີເຊິ່ງເປັນສາຍເຫດໃຫ້ຜົນການສອບເສັງທ້າຍພາກຮຽນແມ່ນໄດ້ຄະແນນຫຼຸດໂຕນກັນເຊິ່ງສາມາດຕີລາຄາເປັນເປີເຊັນຕາມ 3 ລະດັບ (ລະດັບເກັ່ງຄະແນນ 3,50-4,00, ລະດັບດີຄະແນນ 3,00-3,49 ແລະ ລະດັບກາງຄະແນນ 2,00-2.99) ດັ່ງນີ້: ຄູອະນຸບານ-ປະຖົມຊັ້ນກາງຢູ່ລະດັບເກັ່ງ 3.46%,ຄູອະນຸບານ-ປະຖົມຊັ້ນສູງຢູ່ລະດັບເກັ່ງ 7,93%, ຄູອະນຸບານ-ປະຖົມຊັ້ນກາງຢູ່ລະດັບດີ 7,32%, ຄູອະນຸບານ-ປະຖົມຊັ້ນສູງຢູ່ລະດັບດີ 14,84%, ຄູອະນຸບານ-ປະຖົມຊັ້ນກາງຢູ່ລະດັບກາງ 0,41%, ຄູອະນຸບານ-ປະຖົມຊັ້ນສູງຢູ່ລະດັບກາງ 0,41%(ວິທະຍາໄລຄູປີທີ 4, 2016:2).

ການຈັດກິດຈະກຳການຮຽນຮູ້ແບບຈິກຊໍ ເປັນເທັກນິກການຈັດການຮຽນຮູ້ອີກຮູບແບບໜຶ່ງທີ່ເນັ້ນຜູ້ຮຽນເປັນຫຼັກໃນການຮຽນຮູ້ ເຊິ່ງຜູ້ສອນຕ້ອງມີການກະກຽມ ແລະ ວາງແຜນໃຫ້ຜູ້ຮຽນມີສ່ວນຮ່ວມໃນການຮຽນຮູ້, ການເຮັດກິດຈະກຳເປັນກຸ່ມຊ່ວຍເຫຼືອກັນ, ຮ່ວມກັນແກ້ບັນຫາ ແລະ ຊອກຫາຄວາມຮູ້ໂດຍທຸກຄົນຮັບຜິດຊອບໜ້າທີ່ຕາມທີ່ໄດ້ຮັບມອບໝາຍຢ່າງເຕັມທີ່ ແລະ ຕາມຄວາມສາມາດຂອງຜູ້ຮຽນ.

Johnson at al (1991:103) ໄດ້ກ່າວວ່າການເຮັດກິດຈະກຳກຸ່ມຮ່ວມມືຈະເຮັດໃຫ້ເກີດຜົນດີແກ່ນັກຮຽນເພາະວ່າການເຮັດກິດຈະກຳເປັນກຸ່ມຈະສ້າງສາຍພົວພັນອັນດີ ແລະ ຍາວນານລະຫວ່າງສຳມະຊິກພາຍໃນກຸ່ມຫຼືໝູ່ຄະນະພາຍໃນຫ້ອງໂດຍສະເພາະຜູ້ທີ່ຈະໃຫ້ການຊຸກຍູ້ຊ່ວຍເຫຼືອສຳມະຊິກຜູ້ອື່ນ ຫຼື ຜູ້ທີ່ໄດ້ຮັບການຊ່ວຍເຫຼືອຈາກສຳມະຊິກຜູ້ອື່ນໃນກຸ່ມ, ການເຮັດກິດຈະກຳກຸ່ມຮ່ວມມືຍັງເປັນການຊ່ວຍນັກຮຽນສ້າງຂະບວນການທາງດ້ານວິຊາການ ພັດທະນາແນວຄວາມຄິດ ແລະ ພັດທະນາທັກສະທາງສັງຄົມ.

ໃນການຈັດກິດຈະກຳການຮຽນ-ການສອນ ໂດຍນຳໃຊ້ເທັກນິກຈິກຊໍ ແລະ ຂະບວນການສອນດັ່ງກ່າວອາດຈະຊ່ວຍໃຫ້ນັກສຶກສາທີ່ຮຽນຈົບຄູສາຍຄູອະນຸບານ-ປະຖົມ ວິທະຍາໄລຄູສາລະວັນສາມາດສອນວິຊາພາສາອັງກິດໃນຊັ້ນປະຖົມໄດ້ຖືກຕ້ອງຕາມວິທີການສອນພາສາອັງກິດເພື່ອເຮັດໃຫ້ນັກຮຽນຊັ້ນປະຖົມມີຄວາມຮູ້ພື້ນຖານທາງດ້ານພາສາອັງກິດໃນການສຶກສາຕໍ່ໃນລະດັບສູງຂຶ້ນ. ດັ່ງນັ້ນ ເມື່ອເຫັນບັນຫາດັ່ງກ່າວ ຜູ້ຄົ້ນຄວ້າຈຶ່ງມີຄວາມສົນໃຈຢາກເຮັດການຄົ້ນຄວ້າ ທົດລອງກ່ຽວກັບວິທີສອນດັ່ງກ່າວເພື່ອຢາກຮູ້ວ່າເທັກນິກການສອນແບບຈິກຊໍສາມາດຊ່ວຍນັກສຶກສາຄູສາຍປະຖົມມີຜົນການຮຽນທີ່ດີຂຶ້ນຫຼືບໍ່.

## 2. ຄຳຖາມຄົ້ນຄວ້າ

2.1. ການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການສອນວິຊາຫຼັກສູດ ແລະ ການສອນພາສາອັງກິດ ມີປະສິດທິພາບຕາມເກນ 80/80 ຫຼືບໍ່?

2.2. ຜົນການຮຽນຂອງນັກສຶກສາຄູທີ່ໄດ້ຜ່ານການຮຽນການສອນໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການສອນວິຊາຫຼັກສູດ ແລະ ການສອນພາສາອັງກິດມີປະສິດທິຜົນສູງຂຶ້ນຫຼືບໍ່?

2.3. ນັກສຶກສາຄູມີຄວາມເພິງພໍໃຈຕໍ່ກັບການຮຽນ-ການສອນໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດ ຢູ່ໃນລະດັບໃດ?

## 3. ຈຸດປະສົງ

3.1. ເພື່ອສຶກສາປະສິດທິພາບຂອງບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນຳໃຊ້ເທັກ ນິກການສອນແບບຈິກຊໍ (Jigsaw) ຕາມເກນ 80/80.

3.2. ເພື່ອສຶກສາປະສິດທິຜົນ (E.I) ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw).
3.3. ເພື່ອສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການສອນຂອງອາຈານທີ່ນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນພາສາອັງກິດ.

## 4. ສົມມຸດຖານ

4.1. ປະສິດທິພາບຂອງບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນຳໃຊ້ເທັກນິກການສອນແບບ (Jigsaw) ສູງກວ່າເກນທີ່ກຳນົດໄວ້80/80.
4.2. ປະສິດທິຜົນ (E.I) ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບ (Jigsaw) ຢູ່ໃນລະດັບສູງ.
4.3. ນັກສຶກສາມີຄວາມເພິ່ງພໍໃຈຕໍ່ກັບການຮຽນ-ການສອນວິທີຫຼັກສູດ ແລະ ການສອນ ພາສາອັງກິດຂອງອາຈານໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ໂດຍລວມຢູ່ໃນລະດັບດີຫຼາຍ.

## 5. ຜົນຄາດວ່າຈະໄດ້ຮັບ

5.1. ຮູ້ເຖິງປະສິດທິພາບການສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນຳໃຊ້ເທັກນິກການສອນແບບ (Jigsaw) ຕາມເກນ 80/80.
5.2. ຮູ້ເຖິງປະສິດທິຜົນການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບ (Jigsaw).
5.3. ຮູ້ເຖິງຄວາມເພິງພໍໃຈຂອງນັກສຶກສາຕໍ່ກັບການນຳໃຊ້ເທັກນິກການສອນແບບ (Jigsaw) ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນພາສາອັງກິດ.
5.4. ເປັນຂໍ້ມູນທີ່ສຳຄັນໃນການຈັດການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ.
5.5. ເປັນຂໍ້ມູນເພື່ອນຳໄປໃຊ້ສຳລັບການຄົ້ນຄ້ວາຄັ້ງຕໍ່ໄປ.

# ພາກທີ 2

# ເອກະສານ ແລະ ງານວິໄຈທີ່ກ່ຽວຂ້ອງ

## 1. ພາກທິດສະດີທີ່ກ່ຽວຂ້ອງ

### 1.2. ຫຼັກສູດການສອນສາຍຄູປະຖົມ

- **ໂຄງສ້າງຫຼັກສູດສ້າງຄູລະດັບປະລິນຍາຕີ**

ໂຄງສ້າງຫຼັກສູດສ້າງຄູລະດັບປະລິນຍາຕີສາຍຄູປະຖົມປະກອບມີ 145 ໜ່ວຍກິດ, ດ□າເນີນການຮຽນ-ການສອນ 3.376 ຊົ່ວໂມງ ເຊິ່ງໄດ້ແບ່ງເປັນ 4 ໝວດ ຄື: ໝວດວິຊາຊີບຄູ ປະກອບມີ 81 ໜ່ວຍກິດຄິດເປັນເປີເຊັນ 55,86 %, ໝວດຄວາມຮູ້ວິຊາສະເພາະ 40 ໜ່ວຍກິດຄິດເປັນເປີເຊັນ 27,58 ເປີເຊັນ, ໝວດວິຊາຄວາມຮູ້ທົ່ວໄປ 20 ໜ່ວຍກິດ ຄິດເປັນເປີເຊັນ 13,79 ເປີເຊັນ ແລະ ໝວດຄວາມຮູ້ວິຊາເລືອກ4 ໜ່ວຍກິດ ຄິດເປັນເປີເຊັນ 2,75 ເປີເຊັນ.

- **ໂຄງສ້າງຫຼັກສູດສ້າງຄູລະບົບປະລິນຍາຕີ**

ໂຄງສ້າງຫຼັກສູດສ້າງຄູລະດັບປະລິນຍາຕີລະບົບ 12+4 ສາຍຄູປະຖົມມີທັງໝົດ 145 ໜ່ວຍກິດ, ດໍາເນີນການຮຽນ-ການສອນຈໍານວນ 3.376 ຊົ່ວໂມງ, ແບ່ງອອກປັນ 4 ໝວດຄື:ໝວດວິຊາຊີບຄູ, ໝວດຄວາມຮູ້ວິຊາສະເພາະ, ໝວດວິຊາຄວາມຮູ້ທົ່ວໄປ,ໝວດຄວາມຮູ້ວິຊາເລືອກ.

**ຕາຕະລາງ 1:** ໂຄງສ້າງຫຼັກສູດສາຍຄູປະຖົມ

| **ໝວດວິຊາຊີບຄູ ປະກອບມີ 81 ໜ່ວຍກິດ 27,58 %** | | | | | |
|---|---|---|---|---|---|
| **ກຸ່ມຄວາມຮູ້ພື້ນຖານ** | **ໜ່ວຍກິດ** | **ກຸ່ມວິຊາວິທີສອນ** | **ໜ່ວຍກິດ** | **ກຸ່ມວິຊາ ເຝິກປະສົບການ** | **ໜ່ວຍກິດ** |
| 1. ກ່ຽວກັບເດັກປະຖົມ | 3(2-2-2) | 1. ຫຼັກສູດ ແລະ ການສອນຄະນິດສາດ1,2 | 5(3-4-2) | 1. ປະສົບການໃນໂຮງຮຽນ1,2,3 | 4(2-4-2) |
| 2. ຫຼັກສູດ ແລະ ການສອນປະຖົມ | 4(2-4-2) | 2. ຫຼັກສູດ ແລະ ການສອນພາສາລາວ1,2 | 5(3-4-2) | 2. ເຝິກຫັດສອນ | 10(0-20-0) |
| 3. ການບໍລິຫານໂຮງຮຽນ ແລະ ພັດທະນາຊຸມຊົນ | 3(2-2-2) | 3. ຫຼັກສູດ ແລະ ການສອນໂລກອ້ອມຕົວ 1.2 | 5(3-4-2) | 3. ການຂຽນບົດຈົບຊັ້ນ | 4(0-8-2) |
| 4. ການວັດ ແລະ ການປະເມີນຜົນ | 3(2-2-2) | 4. ຫຼັກສູດ ແລະ ການສອນສິລະປະດົນຕີ | 3(2-2-2) | 4. ວິໄຈພາກປະຕິບັດ1,2 | 3(1-4-2) |
| 5. ການສຶກສາໃນລາວ | 2(2-0-2) | 5. ຫຼັກສູດ ແລະ ການສອນສິລະປະຟ້ອນ | 3(2-2-2) | | |

**ຕາຕະລາງ 1:** (ຕໍ່)

**ໝວດວິຊາຊີບຄູ ປະກອບມີ 81 ໜ່ວຍກິດ 27,58 %**

| ກຸ່ມຄວາມຮູ້ພື້ນຖານ | ໜ່ວຍກິດ | ກຸ່ມວິຊາວິທີສອນ | ໜ່ວຍກິດ | ກຸ່ມວິຊາ ເຝິກປະສົບການ | ໜ່ວຍກິດ |
|---|---|---|---|---|---|
| 6. ຄວາມເປັນຄູ | 2(2-0-2) | 6. ຫຼັກສູດ ແລະ ການສອນພາລະສຶກສາ | 3(2-2-2) | | |
| 7. ນິເທດການສຶກສາ | 2(2-0-2) | 7. ຫຼັກສູດ ແລະ ການສອນສິລະປະກຳ | 3(2-2-2) | | |
| | | 8. ຫຼັກສູດ ແລະ ການສອນສິລະປະ ຫັດຖະກຳ | 3(2-2-2) | | |
| | | 9. ຫຼັກສູດ ແລະ ການສອນພາສາອັງກິດ | 3(2-2-2) | | |
| | | 10. ຫຼັກສູດ ແລະ ການສອນຄຸນສົມບັດ | 2(1-2-2) | | |
| | | 11. ການສອນຫ້ອງຄວບ | 2(1-2-2) | | |
| | | 12. ການສອນຫ້ອງຮຽນຮ່ວມ | 2(1-2-2) | | |
| | | 13. ຫຼັກສູດ ແລະ ການສອນການສຶກສານອກຫ້ອງຮຽນ | 2(1-2-2) | | |

**ຕາຕະລາງ2:**ໂຄງສ້າງຫຼັກສູດສາຍຄູປະຖົມລະດັບປະລິນຍາຕີ

| ໝວດຄວາມຮູ້ວິຊາສະເພາະ 40 ໜ່ວຍກິດ 27,58 % | | ໝວດວິຊາຄວາມຮູ້ທົ່ວໄປ 20 ໜ່ວຍກິດ 13,79 % | | ໝວດຄວາມຮູ້ວິຊາເລືອກ4 ໜ່ວຍກິດ 2,75 % | |
|---|---|---|---|---|---|
| **ກຸ່ມຄວາມຮູ້ວິຊາສະເພາະ** | **ໜ່ວຍກິດ** | **ກຸ່ມວິຊາທົ່ວໄປ** | **ໜ່ວຍກິດ** | **ໝວດວິຊາເລືອກເສລີ** | **ໜ່ວຍກິດ** |
| 1. ພາສາລາວ-ວັນນະຄະດີ 1,2 | 5(3-4-2) | 1. ການເມືອງ | 4(2-4-2) | 1. ພາສາມືສຳລັບຄູປະຖົມ | 4(2-4-2) |
| 2. ຄະນິດສາດ1,2 | 5(3-4-2) | 2. ພື້ນຖານວິຊາຊີບ | 4(2-4-2) | 2. ຫ້ອງສະໝຸດພື້ນຖານສຳລັບຄູປະຖົມ | 4(2-4-2) |
| 3. ສິລະປະ | 3(2-2-2) | 3. ວັດທະນະທຳສັງຄົມລາວ ແລະ ອາຊຽນ | 2(1-2-2) | 3. ສິລະປະກຳສຳລັບຄູປະຖົມ | 4(2-4-2) |

**ຕາຕະລາງ 2:** (ຕໍ່)

| ໝວດຄວາມຮູ້ວິຊາສະເພາະ 40 ໜ່ວຍກິດ 27,58 % | ໝວດວິຊາຄວາມຮູ້ທົ່ວໄປ 20 ໜ່ວຍກິດ 13,79 % | ໝວດຄວາມຮູ້ວິຊາເລືອກ4 ໜ່ວຍກິດ 2,75 % |
|---|---|---|

| ກຸ່ມຄວາມຮູ້ວິຊາສະເພາະ | ໜ່ວຍກິດ | ກຸ່ມວິຊາທົ່ວໄປ | ໜ່ວຍກິດ | ໝວດວິຊາເລືອກເສລີ | ໜ່ວຍກິດ |
|---|---|---|---|---|---|
| 4. ພາລະສຶກສາ | 3(2-2-2) | 4. ICT | 4(2-4-2) | 4. ສິລະປະດົນຕີສຳລັບຄູປະຖົມ | 4(2-4-2) |
| 5. ສິລະປະດົນຕີ | 3(2-2-2) | 5. ການສຶກສາຮຽນຮ່ວມ ແລະ ບົດບາດຍິງຊາຍ | 2(1-2-2) | 5. ສິລະປະຟ້ອນສຳລັບຄູປະຖົມ | 4(2-4-2) |
| 6. ສິລະປະຟ້ອນ | 3(2-2-2) | 6. ປະຊາກອນສຶກສາ ແລະ ສິ່ງແວດລ້ອມ | 4(2-4-2) | 6. ຄອມພິວເຕີສຳລັບຄູປະຖົມ | 4(2-4-2) |
| 7. ຄຸນສົມບັດສຶດສາ | 2(1-2-2) | | | 7. ພາສາອັງກິດສຳລັບຄູປະຖົມ | 4(2-4-2) |
| 8. ວິທະຍາສາດທຳມະຊາດ 1.2 | 4(2-4-2) | | | 8. ພາລະສຶກສາສຳລັບຄູປະຖົມ | 4(2-4-2) |
| 9. ວິທະຍາສາດສັງຄົມ1,2 | 4(2-4-2) | | | 9. ພາສາເບຣວສຳລັບຄູປະຖົມ | 4(2-4-2) |
| 10.ສິລະປະຫັດຖະກຳ | 3(2-2-2) | | | 10. ອໍທິດສຕິກສຳລັບຄູປະຖົມ | 4(2-4-2) |
| 11.ພາສາອັງກິດ1,2 | 5(4-2-2) | | | | |

## ໂຄງສ້າງຫຼັກສູດລາຍວິຊາສໍາລັບການສ້າງຄູລະດັບປະລິນຍາຕີລະບົບ 12+4

| **ຫຼັກສູດ ແລະ ການສອນພາສາອັງກິດ** | |
|---|---|
| ລະດັບ | ປະລິນຍາຕີ |
| ຈໍານວນຊົ່ວໂມງ | 64 |
| ຈໍານວນໜ່ວຍກິດ | 3(2-2-2) |
| ຈຸດປະສົງ | **ເພື່ອໃຫ້ນັກສຶກສາຄູສາມາດ:**<br>• ອະທິບາຍ4ທັກສະພາສາອັງກິດຂັ້ນພື້ນຖານເຂົ້າໃນການສອນໄດ້<br>• ສ້າງແຜນການສອນ, ນໍາໃຊ້ສື່ການສອນ ແລະ ສອນພາສາອັງກິດໃນຊັ້ນປະຖົມໄດ້<br>• ນໍາໃຊ້ ແລະ ເສີມຂະຫຍາຍຄວາມຮູ້ດ້ານພາສາອັງກິດເຂົາໃນການສອນໄດ້ |
| ເນື້ອໃນ | ວິຊານີ້ໃຫ້ຄວາມຮູ້ແກ່ນັກສຶກສາກ່ຽວກັບ: ວິທີສອນພາສາອັງກິດຂັ້ນພື້ນຖານໃນ 4 ທັກສະ (ການຟັງ, ການອ່ານ, ການຂຽນ ແລະ ການເວົ້າ) ເຊິ່ງຈະເນັ້ນການແຕ່ງບົດສອນ ແລະ ເຝິກສອນພາສາອັງກິດຊັ້ນປະຖົມ. |
| ການດໍາເນີນການສອນ | ວິຊານີ້ດໍາເນີນການຮຽນການສອນຢູ່ໃນພາກຮຽນທີ7 ປີທີ 4 ພາຍໃນ 16 ອາທິດ ມີ 4 ຊົ່ວໂມງຕໍ່ອາທິດ ລວມ 64 ຊົ່ວໂມງ. ວິທີການສອນທີ່ນໍາໃຊ້ເຂົ້າໃນການດໍາເນີນກິດຈະກໍາການຮຽນ-ການສອນມີ: ອະທິບາຍ, ສົນທະນາ, ການຫຼິ້ນເກມ, ບົດບາດສົມມຸດ, ການຄົ້ນຄວ້າເປັນກຸ່ມ, ບັນທຶກຄໍາຄິດເຫັນ, ທັດສະນະສຶກສາ, ລາຍງານ... ໂດຍອີງໃສ່ລາຍຊື່ປຶ້ມຕໍາລາ ຫຼື ເອກະສານທີ່ກ່ຽວຂ້ອງກັບຫຼັກສູດ ແລະ ການສອນວິຊາພາສາອັງກິດເຫຼັ້ມນີ້ມາສອນໃຫ້ນັກສຶກສາຄູສາຍປະຖົມ ລະດັບປະລິນຍາຕີ. (ວິຊານີ້ຕ້ອງໃຊ້ເທັກໂນໂຊເຂົ້າມາຊ່ວຍໃນການສອນເທົ່າມີຄວາມສາມາດເຊັ່ນ: TV, VIDEO, Internet ເພື່ອໃຫ້ນັກສຶກສາຄູໄດ້ນໍາເອົາບົດຮຽນທີ່ເປັນປະໂຫຍດມາຂຽນບົດລາຍງານ ຫຼື ມາໃຊ້ໃນຊີວິດປະຈໍາວັນ) |
| ອາທິດທີ 1 | Lesson 1: Personal Information and Warm-up Activity<br>1. Personal Introduction<br>• Self-Introduction: Name<br>• Address: Village, District, Province<br>2. Warm-up<br>• Elicit Ss' basic English (games, questions, etc) |
| ອາທິດທີ 2 | Lesson 2: Using the Blackboard and Classroom management<br>1. Using the Blackboard<br>1.1 Writing techniques<br>• Activity: Observation task<br>1.2 Organizing the Blackboard<br>• Activity: Class questions<br>• Activity: Organizing the Blackboard<br>2. Classroom Management<br>2.1 Control the classroom<br>• Activity: Classify the Classroom controlling techniques<br>• Activity: Observation Task of Teacher's Good Rapport/Communication Skills<br>• Activity: Decision in using gestures |

| | |
|---|---|
| | *(MoE, teacher Training Department Methodology Textbook year 2&3 Teacher Training College Lao PDR VSO, p 3-15)* |
| ອາທິດທີ 3 | Lesson 3: Teaching Vocabulary (alphabets)<br>1. Elicit students' English vocabulary (Showing visual aids)<br>2. Look, listen and repeat<br>3. Look and say<br>4. Listen and write<br>*(English for Lao primary schools, MoE Research Institution for Educational Science)* |
| ອາທິດທີ 4 | Lesson 4: Teaching Vocabulary (alphabets continued)<br>1. Listen and tick<br>2. Look and write<br>3. Let's talk<br>*(English for Lao primary schools, MoE Research Institution for Educational Science)*. |
| ອາທິດທີ 5 | Lesson 5: Teaching Writing<br>1. How to write each alphabet<br>2. Look and Draw or Writing (look at techer's written alphabet)<br>*(English for Lao primary schools, MoE Research Institution for Educational Science)*. |
| ອາທິດທີ 6 | Lesson 6: Teaching Reading<br>1. Pronuciation Drills: How to read each alphabet correctly<br>2. Practice the alphabets/words/sentences reading (It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) in groups<br>3. Re-practice the alphabets/words/sentences reading (It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) by person in the classroom.<br>*(English for Lao primary schools, MoE Research Institution for Educational Science)*. |
| ອາທິດທີ7 | Lesson 7: Teaching Speaking<br>1. How to speak English for telling Alphabets/words/sentences (It depends on lesson: the alphabets/ words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) without reading.<br>2. Pronuciation drill: Practice alphabets/words/sentences (It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) speaking.<br>3. Re-pratice speaking English for telling (It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) without reading<br>*(English for Lao primary schools, MoE Research Institution for Educational* |

| | |
|---|---|
| | *Science).* |
| ອາທິດທີ 8 | Review Lesson 1-7 and Midterm examination |
| ອາທິດທີ 9 | Lesson 8: Teaching listening<br>1. Listen to the teacher's reading (alphabet/words/sentences)<br>4. Look, listen and repeat (alphabets/words/sentences, It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students for speaking.<br>2. Re-pratice speaking English for telling (It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students*)*.<br>3. Listen and tick (alphabets/words/sentences, It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students).<br>4. Conversation drills: Practice listening (listen to each classmate's saying alphabets/words/sentences, It depends on lesson: the alphabets/words/sentences in each academeic year of primary school. So teacher's teaching in this lesson should select a lesson/each lesson to teach students) and write down what you hear.<br>*(English for Lao primary schools, MoE Research Institution for Educational Science).* |
| ອາທິດທີ 10 | Lesson 9: Lesson Plan Comprehension<br>1. Introduction: 3 P's (Presentation, Practice and Production)<br>2. Lesson Plan Sample<br>• Teacher and students study the exampled sample of an English lesson<br>*(Methodology Material, National University of Laos Faculty of letters Department of English Year 5 2003-2004 p, 65-66)* |
| ອາທິດທີ11 | Lesson 10: Lesson Planing<br>1. Practice in group work:<br>• Students choose teaching lesson to write in groups.<br>2. Checking the written planed lessons: Teacher correct the written planed lessons.<br>*(Methodology Material, National University of Laos Faculty of Letters Department of English Year 5 2003-2004 p, 67-68)* |
| ອາທິດທີ 12 | Lesson 10: lesson Planing (Continue Teaching Practice)<br>1. Students practice teaching their written plened lessons in qroups to the classmates in the classroom and and the rest of them learn and observe theirs and does teacher, too. |
| ອາທິດທີ 13 | Lesson 10: lesson Planing (Continue Teaching Practice)<br>Students practice teaching their written plened lessons in qroups to the classmates in the classroom and and the rest of them learn and observe theirs and does teacher, too. |
| ອາທິດທີ 14 | Lesson 10: lesson Planing (Continue Teaching Practice)<br>Students practice teaching their written plened lessons in qroups to the classmates in the classroom and and the rest of them learn and observe theirs and does teacher, |

| | |
|---|---|
| | too. |
| ອາທິດທີ 15 | Lesson 11: Testing in the English teaching<br>1. Hints for making test<br>• Activity: Students study the instructions from teacher's explanations on testing in the English teaching.<br>2. Kind of questions<br>• Activity: students study the test questions<br>• Activity: Written a test<br>*(Methodology Material, National University of Laos Faculty of Letters Department of English Year 5 2003-2004 p, 72-*75) |
| ອາທິດທີ 16 | Review Lesson 1-7 and Midterm examination |
| ການປະເມີນຜົນ | • Participation 10%<br>• Individual work 10%<br>• Group worl 20%<br>• Midterm test 20%<br>• Final exam 40% |
| ເອກະສານອ້າງອີງ | 1. *English for Lao primary schools MoE, Reseach Institute for Educatioal Sicience 2009.*<br>2. *Methodology Materail, National University of Laos Faculty of Letters Department of English Year 5 2003-2004.*<br>3. *MoE, Teacher Trainig Department Methodology Textbook Year 2&3 Teacher Training Lao PDR.* |

## 2. ຈຸດປະສົງຂອງຫຼັກສູດ

ຫຼັກສູດສ້າງຄູປະຖົມລະດັບປະລິນຍາຕີ ລະບົບ 12+4 ມີຈຸດປະສົງເພື່ອແນໃສ່ໃຫ້ນັກສຶກສາຄູ:

3.1. ມີຄວາມຮູ້ຄວາມສາມາດດ້ານວິຊາຄູ ເພື່ອໄປສອນໃນລະດັບປະຖົມສຶກສາ.

3.2. ມີຄວາມພ້ອມໃນຄວາມເປັນຄູ, ມີວິໄສທັດທີ່ກວ້າງໄກ ແລະ ມີຈັນຍາບັນທາງດ້ານວິຊາຊີບຄູ.

3.3. ສາມາດແກ້ໄຂບັນຫາຢ່າງມີຫົວຄິດປະດິດສ້າງ, ມີຄວາມຮັບຜິດຊອບ ແລະ ພັດທະນາຄວາມຮູ້ ແລະ ຄວາມສາມາດຂອງຕົນໃນອານາຄົດ.

3.4. ມີຄວາມສາມາດສອນທຸກວິຊາໃນຊັ້ນປະຖົມສຶກສາ ແລະ ພົວພັນຊ່ວຍເຫຼືອຄູສອນຢູ່ໃນໂຮງ ຮຽນ ພ້ອມທັງເປັນຫຼັກແຫຼ່ງທາງດ້ານວິຊາການ.

## 3. ເນື້ອໃນຫຼັກສູດ

ວິຊານີ້ໃຫ້ຄວາມຮູ້ນັກສຶກສາຄູກ່ຽວກັບ: ວິທີສອນພາສາອັງກິດຂັ້ນພື້ນຖານໃນ 4 ທັກສະ (ການຟັງ, ການເວົ້າ, ການອ່ານ ແລະ ການຂຽນ)

### 2.1.2 ທິດສະດີການສອນທົ່ວໄປ

ທິດສະໜາ ແຂມມະນີ(2547:3) ໄດ້ກ່າວວ່າ ການສອນແມ່ນການບອກກ່າວ, ສັ່ງ, ອະທິບາຍ, ຊີ້ແຈງ ຫຼື ແມ່ນການສະແດງໃຫ້ເບິ່ງ ການສອນເປັນການຖ່າຍທອດຄວາມຮູ້ ທັກສະ ແລະ ເຈຕະຄະຕິຕ່າງໆ ໂດຍທີ່ຜູ້ສອນ ແລະ ຜູ້ຮັບ ຫຼືຄູ ແລະ ຜູ້ຮຽນມີປະຕິສຳພັນເຊິ່ງກັນ ແລະ ກັນ ໃນຂະບວນການຮຽນຮູ້ໂດຍຄູເປັນຜູ້ມີບົດບາດສຳຄັນ ເປັນຜູ້ຈັດການຮຽນຮູ້ໃຫ້ເກີດຂຶ້ນຕາມຄວາມຄິດເຫັນ ແລະ ຄວາມສາມາດຂອງຕົນ ຜູ້ຮຽນຫຼືລູກສິດເປັນຜູ້ໄດ້ຮັບການຖ່າຍທອດຕາມແຕ່ຄູຈະໃຫ້ ການສອນໂດຍຄູນີ້ເກີດຂຶ້ນໄດ້ທຸກຫົນແຫ່ງ ບໍ່ຈຳກັດເວລາ ແລະ ສະຖານທີ່ ແລ້ວແຕ່ສະຖານະການ ແລະ ຄວາມພໍໃຈຂອງຄູ.

ສົມຈິດ ຈັນສາຍ (2557:59-60) ໄດ້ກ່າວວ່າ ການສອນເປັນຂໍ້ຄວາມທີ່ບັນລະຍາຍເງື່ອນໄຂ ແລະ ສະພາບແວດລ້ອມໃນການຈັດການຮຽນ-ການສອນ ຫຼືຂັ້ນຕອນຂອງການດຳເນີນການຮຽນ-ການສອນທີ່ສຳພັນກັນ ແລະ ເປັນສາເຫດເຮັດໃຫ້ເກີດຜົນການຮຽນຮູ້ຂອງຜູ້ຮຽນ ທິດສະດີການສອນມີພື້ນຖານມາຈາກທິດສະດີການຮຽນຮູ້ ແລະ ຜ່ານການວິໄຈທົດສອບຈົນເປັນທີ່ຍອມຮັບ.

### 2.1.3 ທິດສະດີການຮຽນຮູ້

#### 1. ທິດສະດີການຮຽນຮູ້

**ທິດສະດີການຮຽນຮູ້ຂອງ Bruner**

Brunerເປັນນັກຈິດຕະວິທະຍາທີ່ສົນໃຈ ແລະ ສຶກສາເລື່ອງຂອງພັດທະນາການທາງສະຕິປັນຍາຕໍ່ເນື່ອງຈາກ Piagetເຊິ່ງ Brunerເຊື່ອວ່າມະນຸດເລືອກທີ່ຈະຮັບຮູ້ສິ່ງທີ່ຕົນເອງສົນໃຈ ແລະ ການຮຽນຮູ້ເກີດຈາກຂະບວນການຄົ້ນພົບດ້ວຍຕົນເອງ ແນວຄິດທີ່ສຳຄັນຂອງ Bruner ມີດັ່ງນີ້:

1) ການຈັດໂຄງສ້າງຂອງຄວາມຮູ້ໃຫ້ມີຄວາມສຳພັນ ແລະ ສອດຄ່ອງກັບພັດທະນາການທາງສະຕິປັນຍາຂອງເດັກມີຜົນຕໍ່ການຮຽນຮູ້ຂອງເດັກ.

2) ການຈັດຫຼັກສູດ ແລະ ການຮຽນ-ການສອນໃຫ້ເໝາະສົມກັບລະດັບຄວາມພ້ອມຂອງຜູ້ຮຽນ ແລະ ສອດຄ່ອງກັບພັດທາການທາງສະຕິປັນຍາຂອງຜູ້ຮຽນຈະຊ່ວຍໃຫ້ການຮຽນຮູ້ເກີດປະສິດທິພາບ.

3) ການຄິດແບບຮູ້ຫຍັງ ເປັນການຄິດຫາເຫດຜົນຢ່າງອິດສະຫຼະສາມາດຊ່ວຍພັດທະນາຄວາມຄິດລິເລີ່ມສ້າງສັນໄດ້.

4) ແຮງຈູງໃຈພາຍໃນເປັນປັດໃຈສຳຄັນທີ່ຈະຊ່ວຍໃຫ້ຜູ້ຮຽນປະສົບຜົນສຳເລັດໃນການຮຽນຮູ້.

5) ທິດສະດີພັດທະນາການທາງສະຕິປັນຍາຂອງມະນຸດໄດ້ແບ່ງອອກເປັນ 3 ຂັ້ນໃຫຍ່ຄື:

- ຂັ້ນການຮຽນຮູ້ຈາກການກະທຳຄື: ຂັ້ນຂອງການຮຽນຮູ້ຈາກການໃຊ້ປະສາດສຳພັດຮັບຮູ້ສິ່ງຕ່າງໆ ການລົງມືກະທຳຊ່ວຍໃຫ້ເດັກເກີດການຮຽນຮູ້ໄດ້ດີ ການຮຽນຮູ້ເກີດຈາກການກະທຳ
- ຂັ້ນການຮຽນຮູ້ຈາກຄວາມຄິດເປັນຂັ້ນທີ່ເດັກສາມາດສ້າງມະໂນພາບໃນໃຈໄດ້ ແລະ ສາມາດຮຽນຮູ້ຈາກພາບແທນຂອງຈິງໄດ້
- ຂັ້ນການຮຽນຮູ້ລັກສະນະ ແລະ ນາມມະທຳ ເປັນຂັ້ນການຮຽນຮູ້ສິ່ງທີ່ຊັບຊ້ອນ ແລະ ເປັນນາມມະທຳໄດ້

6) ການຮຽນຮູ້ເກີດຂຶ້ນໄດ້ຈາກການທີ່ຄົນເຮົາສາມາດສ້າງຄວາມຄິດລວມຍອດ ຫຼືສາມາດຈັດປະເພດຂອງສິ່ງຕ່າງໆໄດ້ຢ່າງເໝາະສົມ

7) ການຮຽນຮູ້ທີ່ໄດ້ຜົນດີທີ່ສຸດຄືການໃຫ້ຜູ້ຮຽນຄົ້ນພົບການຮຽນຮູ້ດ້ວຍຕົນເອງ (Bruner, 1963:1-54ອ້າງຈາກທິດສະໜາ ແຂມມະນີ, 2547:66-67)

**ທິດສະດີການຮຽນຮູ້ຂອງ Rogers**

Rogers(1960ອ້າງຈາກທິດສະໜາ ແຂມມະນີ,2547:70)Rogers ເຊື່ອວ່າ ມະນຸດຈະສາມາດພັດທະນາຕົນເອງໄດ້ດີຫາກຢູ່ໃນສະພາບການທີ່ຜ່ອນຄາຍ ແລະ ເປັນອິດສະຫຼະ ການຈັດບັນຍາກາດການຮຽນຮູ້ ແລະ ເນັ້ນໃຫ້ຜູ້ຮຽນເປັນສູນກາງ ໂດຍຄູໃຊ້ວິທີການສອນແບບຊີ້ແນະ ແລະ ທຳໜ້າທີ່ອຳນວຍຄວາມສະດວກໃນການຮຽນຮູ້ໃຫ້ແກ່ຜູ້ຮຽນ ແລະ ການຮຽນຮູ້ຈະເນັ້ນຂະບວນການເປັນສຳຄັນ

ຄວາມຮູ້ບໍ່ແມ່ນວິຊາ ເພາະວິຊາຖ້າຢູ່ລ້າໆໂດຍລຳພັງຈະບໍ່ເກີດຫຍັງຂຶ້ນ ແຕ່ຄວາມຮູ້ເປັນຜົນຈາກປະສົບການທີ່ຜູ້ຮຽນໄດ້ຮັບ ຄືຜູ້ຮຽນໄດ້ມີປະຕິສຳພັນກັບສິ່ງແວດລ້ອມ ຫຼື ສິ່ງທີ່ຕ້ອງການຮຽນຮູ້ເພື່ອເຮັດໃຫ້ເກີດການປ່ຽນແປງໃນຕົວຜູ້ຮຽນ (ບຸນລ້ຽງ ທຸມທອງ, 2554:42)

Slavin(1995ອ້າງຈາກ ທິດສະໜາ ແຂມມະນີ,2547:98)David Johnson&Roger Johnson ກ່າວວ່າ ໃນການຈັດການຮຽນ-ການສອນ ໂດຍທົ່ວໄປ ເຮົາຈະບໍ່ໃຫ້ຄວາມສົນໃຈກ່ຽວກັບຄວາມຄວາມສຳພັນ ແລະ ປະຕິສຳພັນລະຫວ່າງຜູ້ຮຽນ ສ່ວນໃຫຍ່ເຮົາມັນມຸ້ງໄປທີ່ປະຕິສຳພັນລະຫວ່າງຄູກັບຜູ້ຮຽນຫຼືລະຫວ່າງຜູ້ຮຽນ

ກັບບົດຮຽນ ຄວາມສຳພັນລະຫວ່າງຜູ້ຮຽນເປັນມິຕິທີ່ມັກຖືກລະເລີຍຫຼືເບິ່ງຂ້າມໄປ ທັງທີ່ມີຜົນການວິໄຈທີ່ຊັດເຈນວ່າ ຄວາມຮູ້ສຶກຂອງຜູ້ຮຽນຕໍ່ຕົນເອງ ຕໍ່ໂຮງຮຽນ ຄູ ແລະ ເພື່ອນຮ່ວມຫ້ອງຮຽນມີຜົນຕໍ່ການຮຽນຮູ້ຫຼາຍ.

John Dewey(1963ອ້າງໃນ ທິດສະໜາ ແຂມມະນີ,2547:4)ນັກການສຶກສາຄົນສຳຄັນ ໄດ້ແນະນຳວ່າ ການຮຽນຮູ້ຈະເກີດຂຶ້ນໄດ້ດີຈາກການກະທຳ ດັ່ງນັ້ນໃນການສອນຈຶ່ງຄວນເນັ້ນທີ່ຜູ້ຮຽນ ໃຫ້ຜູ້ຮຽນໄດ້ຮຽນຮູ້ຈາກການກະທຳ (Learning by doing) ແນວຄິດນີ້ປະກອບກັບການຄົ້ນຄວ້າວິໄຈໄດ້ສະແດງໃຫ້ເຫັນວ່າຜູ້ຮຽນຄວນຈະເປັນສູນກາງຂອງການຮຽນ-ການສອນ ການຈັດການຮຽນ-ການສອນຄວນຄວນຈະຕ້ອງຄຳນຶງເຖິງຜູ້ຮຽນເປັນສຳຄັນ ຜູ້ຮຽນຄວນມີບົດບາດໃນການຮຽນຮູ້ບໍ່ແມ່ນເປັນຝ່າຍຮັບເທົ່ານັ້ນ

ການຈັດການຮຽນການສອນໂດຍເນັ້ນໃຫ້ຜູ້ຮຽນເປັນສູນກາງ ແມ່ນການຈັດການຮຽນ-ການສອນທີ່ຢຶດຜູ້ຮຽນເປັນຕົວຕັ້ງ ໂດຍຄຳນຶງເຖິງຄວາມເໝາະສົມກັບຜູ້ຮຽນ ແລະ ປະໂຫຍດສູງສຸດທີ່ຜູ້ຮຽນຄວນຈະໄດ້ຮັບ ແລະ ມີການຈັດກິດຈະກຳການຮຽນທີ່ເປີດໂອກາດໃຫ້ຜູ້ຮຽນມີບົດບາດສຳຄັນໃນການຮຽນຮູ້ ໄດ້ມີສ່ວນຮ່ວມໃນກິດຈະກຳການຮຽນຢ່າງຕື່ນຕົວ ແລະ ໄດ້ໃຊ້ຂະບວນການຮຽນຮູ້ຕ່າງໆອັນຈະເຮັດໃຫ້ຜູ້ຮຽນໄປສູ່ການເກີດການຮຽນຮູ້ທີ່ແທ້ຈິງ (ທິດສະໜາ ແຂມມະນີ, 2547:120)

### 2.1.4 ທິດສະດີການຈັດການຮຽນ-ການສອນ

ກົດໝາຍວ່າດ້ວຍການສຶກສາແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປັບປຸງ (ກະຊວງສຶກສາທິການ ແລະ ກິລາ, 2016:2) ມາດຕາ 2 ໄດ້ກ່າວວ່າ ການສຶກສາແມ່ນຂະບວນການສອນ, ການຮຽນຮູ້ທາງທິດສະດີ ແລະ ພຶດຕິກຳຕົວຈິງກ່ຽວກັບວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ ແລະ ເຕັກໂນໂລຊີ ເພື່ອພັດທະນາຊັບພະຍາກອນມະນຸໃຫ້ຂະຫຍາຍຕົວຢ່າງຮອບດ້ານ ແນໃສ່ພັດທະນາຊັບພະຍາກອນມະນຸດໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີວິຊາອາຊີບ, ມີຄວາມສຳນານງານ, ມີສຸຂະພາບພາລານະໄມທີ່ແຂງແຮງ, ຮູ້ຮັກສາ ແລະ ສົ່ງເສີມສິນລະປະວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ, ມີລະບຽບວິໄນ, ມີນ້ຳໃຈຮັກຊາດ ຮັກລະບອບປະຊາທິປະໄຕປະຊາຊົນ ປະກອບສ່ວນເຂົ້າໃນການປົກປັກຮັກສາ, ສ້າງສາພັດທະນາປະເທດຊາດ.

ສົມນະວົງ ມອນມະນີ ພ້ອມດ້ວຍຄະນະ(1998:1) ໄດ້ກ່າວກ່ຽວກັບ ການຮຽນ-ການສອນບາງຕອນວ່າ "ການຮຽນ-ການສອນນັ້ນໄດ້ມີມາແຕ່ບູຮານນະການ, ອາດເວົ້າໄດ່ວ້າ ການຮຽນ-ການສອນັ້ນອາດມີມາພ້ອມກັບການກຳເນີດຂອງມະນຸດ ແຕ່ເປົ້າໝາຍການສຶກສາໃນສະໄໝນັ້ນ ກໍເໝືອນກັບສະໄໝປັດຈຸບັນເພາະວ່າຜູ້ຮຽນຕ້ອງການຮຽນຮູ້ ແລະ ສືບທອດຄວາມຮູ້ຈາກຄົນອື່ນ ທັງເປັນປະໂຫຍດຕໍ່ຕົນເອງ, ຜູ້ສອນກໍ່ມີຄວາມເພິງພໍໃຈທີ່ຈະຖ່າຍທອດຄວາມຮູ້ໃຫ້ແກ່ຜູ້ຮຽນ ສ່ວນໂຄງສ້າງ, ການຈັດັ້ງໂຮງຮຽນ, ຫຼັກສູດແບບປັດຈຸບັນຍັງບໍ່ທັນມີ, ມີແຕ່ເປັນທຳມະຊາດຕາມມີຕາມເກີດ. ຢ່າງໃດກໍ່ດີຂະບວນການທີ່ຜ່ານມານີ້ ກໍ່ໄດ້ມີວິວັດຂຶ້ນມາເລື້ອຍໆ ຕາມການພັດທະນາຂອງສັງຄົມ ບໍ່ວ່າຢູ່ໃນສັງຄົມໃດ ການສຶກສາກໍ່ມີເປົ້າໝາຍເພື່ອຮັບໃຊ້ສັງຄົມນັ້ນໆ.

### 2.1.5ການຮຽນຮູ້ແບບຮ່ວມມື

ໃນການວິໄຈຄັ້ງນີ້ຜູ້ຄົ້ນຄ້ວາໄດ້ເລືອກນຳໃຊ້ການຈັດການຮຽນຮູ້ບາງຮູບແບບດັ່ງນີ້:

**1) ຄວາມໝາຍຂອງການຮຽນຮູ້ແບບຮ່ວມມື**

ໄຊວັດ ສຸທິລັດ(2552:182) ໄດ້ໃຫ້ຄວາມໝາຍການຮຽນຮູ້ແບບຮ່ວມມືວ່າເປັນວິທີການຈັດການຮຽນ-ການສອນທີ່ເນັ້ນຜູ້ຮຽນເຮັດວຽກຮ່ວມກັນເປັນນ້ອຍໆ ໂດຍທົ່ວໄປມີສະມາຊິກກຸ່ມລະ 4 ຄົນ ສະມາຊິກກຸ່ມມີຄວາມສາມາດໃນການຮຽນຕ່າງກັນ ສະມາຊິກກຸ່ມຈະມີຄວາມຮັບຜິດຊອບໃນວຽກທີ່ໄດ້ຮັບ ແລະ ຊ່ວຍເຫຼືອສະມາຊິກໃຫ້ເກີດການຮຽນຮູ້ ສາມະຊິກໃກຸ່ມມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນ ໂດຍມີເປົ້າໝາຍໃນການເຮັດວຽກຮ່ວມກັນ ຄື ເປົ້າໝາຍຂອງກຸ່ມ.

ຊະນາທິບ ພອນກຸນ (2554:102)ໄດ້ໃຫ້ຄວາມໝາຍຂອງການຮຽນຮູ້ແບບຮ່ວມມືວ່າ ເປັນວິທີໃຫ້ຜູ້ຮຽນເຮັດວຽກນຳກັນເປັນກຸ່ມຍ່ອຍໄດ້ຮຽນຮູ້ ແລະ ຮັບຜົນຕອບແທນນຳກັນ.

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2550:134-135) ໄດ້ໃຫ້ຄວາມໝາຍວ່າ ການຮຽນຮູ້ແບບຮ່ວມມືໝາຍເຖິງຂະບວນການຮຽນຮູ້ທີ່ຈັດໃຫ້ຜູ້ຮຽນໄດ້ຮ່ວມມື ແລະ ຊ່ວຍເຫຼືອກັນໃນການຮຽນຮູ້ໂດຍແບ່ງກຸ່ມຜູ້ຮຽນທີ່ຄວາມສາມາດຕ່າງກັນອອກເປັນກຸ່ມນ້ອຍໆ ເຊິ່ງເປັນລັກສະນະການຮ່ວມກຸ່ມຢ່າງມີໂຄງສ້າງທີ່ຊັດເຈນມີການຮ່ວມມືກັນເຮັດວຽກ ມີການແລກປ່ຽນຄວາມຄິດເຫັນ ມີການຊ່ວຍເຫຼືອເພິ່ງພາອາໃສເຊິ່ງກັນ ແລະ ກັນ ມີຄວາມຮັບຜິດຊອບຮ່ວມກັນທັງໃນສ່ວນຕົວ ແລະ ສ່ວນລວມ ເພື່ອໃຫ້ຕົນເອງ ແລະ ສະມາຊິກໃນກຸ່ມປະສົບຄວາມສຳເລັດຕາມເປົ້າໝາຍທີ່ກຳນົດໄວ້.

**2)ຈຸດປະສົງຂອງການຈັດການຮຽນຮູ້ແບບຮ່ວມມື**

(1) ເປັນວິທີການພັດທະນາຜູ້ຮຽນໃນດ້ານວິຊາການ ແລະ ທັກສະທາງສັງຄົມ.

(2) ເປັນສ້າງຜູ້ຮຽນໃຫ້ມີຄວາມສາມາດດຳລົງຊີວິດໃນສັງຄົມປະຊາທິປະໄຕໄດ້ຢ່າງມີປະສິດທິພາບ ແລະ ມີຄວາມສຸກ.

**3) ອົງປະກອບທີ່ສາຄັນ**

ການຈັດການຮຽນຮູ້ແບບຮ່ວມມືອົງປະກອບສຳຄັນດັ່ງນີ້:

(1) ມີຄວາມສຳພັນກ່ຽວຂ້ອງກັນໃນທາງບວກ ເຊິ່ງໝາຍເຖິງສະມາຊິກໃນກຸ່ມເຮັດວຽກຮ່ວມກັນຢ່າງມີເປົ້າໝາຍ ມີການແຂ່ງຂັນ ມີການໃຊ້ວັດສະດຸອຸປະກອນ ແລະ ຂໍ້ມູນຕ່າງໆຮ່ວມກັນ ມີບົດບາດໜ້າທີ່ ແລະ ປະສົບຄວາມສຳເລັດຮ່ວມກັນ ລວມທັງມີຜົນປະໂຫຍດຫຼືລາງວັນໂດຍເທົ່າທຽມກັນ.

(2) ມີການປະຕິສຳພັນກັນຢ່າງໃກ້ສິດໃນລະຫວ່າງການເຮັດວຽກກຸ່ມ ເປັນການເປີດໂອກາດໃຫ້ສະມາຊິກໃນກຸ່ມແລກປ່ຽນຄວາມຄິດເຫັນເຊິ່ງກັນ ແລະ ກັນ ອະທິບາຍຄວາມຮູ້ໃຫ້ໝູ່ເພື່ອນສະມາຊິກໃນກຸ່ມຟັງ ແລະ ມີການໃຫ້ຂໍ້ມູນຢ້ອນກັບເຊິ່ງກັນ ແລະ ກັນ.

(3) ມີການກວດສອບຄວາມຮັບຜິດຊອບຂອງສະມາຊິກແຕ່ລະຄົນ ເປັນການກວດສອບໃຫ້ໝັ້ນໃຈວ່າສະມາຊິກມີຄວາມຮັບຜິດຊອບຕໍ່ວຽກກຸ່ມຫຼາຍ ຫຼືໜ້ອຍພຽງໃດ ໂດຍສາມາດທີ່ຈະທົດສອບເປັນລາຍບຸກຄົນ ເຊັ່ນ: ການສັງເກດການເຮັດວຽກ, ການຖາມປາກເປົ່າເປັນຕົ້ນ.

(4) ການໃຊ້ທັກສະລະຫວ່າງບຸກຄົນ ແລະ ທັກສະການເຮັດວຽກກຸ່ມຍ່ອຍ ການຮຽນຮູ້ແບບຮ່ວມມືນີ້ເພື່ອໃຫ້ວຽກກຸ່ມປະສົບຄວາມສຳເລັດຜູ້ຮຽນຄວນໄດ້ຮັບການຝຶກທັກສະລະຫວ່າງບຸກຄົນ ແລະ ທັກສະການເຮັດວຽກກຸ່ມເຊັ່ນ: ທັກສະການສື່ສານ, ທັກສະການເປັນຜູ້ນຳ, ທັກສະການຕັດສິນໃຈ, ການແກ້ໄຂບັນຫາ ແລະ ທັກສະຂະບວນການກຸ່ມ ເຫຼົ່ານີ້ເປັນຕົ້ນ.

(5) ຂະບວນການກຸ່ມ ເປັນຂະບວນການເຮັດວຽກທີ່ມີຂັ້ນຕອນ ເຊິ່ງສະມາຊິກແຕ່ລະຄົນຈະຕ້ອງທຳຄວາມເຂົ້າໃຈເປົ້າໝາຍຂອງການເຮັດວຽກ, ມີການວາງແຜນ, ດຳເນີນວຽກງານຕາມແຜນ, ປະເມີນຜົນງານ ແລະ ປັບປຸງນຳກັນ.

ອົງປະກອບຂອງການຮຽນຮູ້ແບບຮ່ວມມືທັງ 5 ອົງປະກອບນີ້ ຈະເປັນປັດໃຈສຳຄັນທີ່ຊ່ວຍໃຫ້ວຽກກຸ່ມປະສົບຜົນສຳເລັດຢ່າງມີປະສິດທິພາບ ເຊິ່ງສະມາຊິກທຸກຄົນຕ້ອງມີຄວາມມຸ່ງໝັ້ນ ມີຄວາມສຳພັນ ແລະ ອາໃສເຊິ່ງກັນ ແລະ ກັນຢ່າງຈິງຈັງໃນການເຮັດກິດຈະກຳ ເຊິ່ງຈະເຮັດໃຫ້ວຽກບັນລຸເປົ້າໝາຍທີ່ກຳນົດໄວ້.

### 2.1.6 ການຈັດການຮຽນຮູ້ໂດຍນຳໃຊ້ເທັກນິກຈິກຊໍ (Jigsaw)

ໄຊວັດສຸທິລັດ(2552:188)ໄດ້ໃຫ້ຄວາມໝາຍການຮຽນຮູ້ໂດຍການນຳໃຊ້ເທັກນິກຈິກຊໍ (Jigsaw)(Jigsaw) ວ່າເປັນການຮຽນແບບຮ່ວມມືໂດຍທີ່ຜູ້ຮຽນແຕ່ລະບຸກຄົນຕ້ອງໄປສຶກສາຄົ້ນຄວ້າໃນສ່ວນທີ່ໄດ້ຮັບມອບໝາຍແລ້ວກັບມາສອນໃຫ້ແກ່ສາມະຊິກໃນກຸ່ມໄດ້ຮຽນຮູ້ພາບລວມທັງໝົດ.

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ(2550:177-181) ການຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ (Jigsaw)ເປັນການຈັດຂະບວນການຮຽນຮູ້ທີ່ໃຊ້ແນວຄິດການຕໍ່ພາບ ໂດຍແບ່ງຜູ້ຮຽນອອກເປັນກຸ່ມ, ແຕ່ກຸ່ມຈະໄດ້ຮັບວຽກມອບໝາຍໃຫ້ເຮັດກິດຈະກຳດຽວກັນ, ຜູ້ສອນຈະແບ່ງເນື້ອໃນຂອງເລື່ອງທີ່ຈະໃຫ້ນັກສຶກສາຮຽນຮູ້ອອກເປັນຫົວຂໍ້ຍ່ອຍເທົ່າກັບຈຳນວນສະມາຊິກແຕ່ລະກຸ່ມ ແລະ ມອບໝາຍວຽກໃຫ້ຜູ້ຮຽນແຕ່ລະກຸ່ມຄົ້ນຄວ້າ

ຄົນລະຫົວຂໍ້ ເຊິ່ງຜູ້ຮຽນແຕ່ລະຄົນຈະເປັນຜູ້ຊ່ຽວຊານ ເພາະເລື່ອງທີ່ຕົນໄດ້ຮັບມອບໝາຍໃຫ້ສຶກສາຄົ້ນຄວ້າຮ່ວມກັນ ຈາກນັ້ນຜູ້ຮຽນແຕ່ລະຄົນຈະກັບຄືນເຂົ້າກຸ່ມເກົ່າຂອງຕົນເພື່ອເຮັດໜ້າທີ່ເປັນຜູ້ຊ່ຽວຊານ ເພື່ອອະທິບາຍຄວາມຮູ້ເນື້ອໃນທີ່ຕົນສຶກສາໃຫ້ເພື່ອນຮ່ວມກຸ່ມຟັງ ເພື່ອໃຫ້ເພື່ອນສະມາຊິກທັງກຸ່ມໄດ້ຮູ້ເນື້ອໃນຄົບທຸກຫົວ ຂໍ້ຍ່ອຍ ແລະ ເກີດການຮຽນຮູ້ເນື້ອໃນຂອງເລື່ອງທັງໝົດ.

**1) ຈຸດປະສົງ**

- ເພື່ອສົ່ງເສີມໃຫ້ຜູ້ຮຽນໄດ້ຄົ້ນຄວ້າຫາຄວາມຮູ້ດ້ວຍຕົນເອງ.
- ເພື່ອສົ່ງເສີມໃຫ້ຜູ້ຮຽນເຝິກທັກສະຂະບວນການທາງສັງຄົມ ແລະ ຄວາມຮັບຜິດຊອບ.

**2) ອົງປະກອບສຳຄັນ**

ການຈັດການຮຽນຮູ້ ໂດຍໃຊ້ຈິກຊໍເທັກນິກ(Jigsaw) ມີອົງປະກອບສຳຄັນ 3 ສ່ວນຄື:

(1) ການກຽມສື່ການຮຽນຮູ້: ຜູ້ສອນຕ້ອງກະກຽມເຈ້ຍກິດຈະກຳ, ເຈ້ຍຄວາມຮູ້ ສື່ການຮຽນຮູ້ອື່ນໆ ສຳລັບກຸ່ມຜູ້ຊ່ຽວຊານແຕ່ລະກຸ່ມ ແລະ ແບບທົດສອບຍ່ອຍໃນແຕ່ລະກຸ່ມການຮຽນ.

(2) ການຈັດສະມາຊິກກຸ່ມ: ຜູ້ສອນຕ້ອງແບ່ງຜູ້ຮຽນອອກເປັນກຸ່ມ ເອີ້ນວ່າກຸ່ມພື້ນຖານ ແລະ ກຸ່ມຜູ້ຊ່ຽວຊານ ແຕ່ລະເລື່ອງເຈ້ຍກິດຈະກຳທີ່ຜູ້ສອນສ້າງຂຶ້ນ.

(3) ການລາຍງານ ແລະ ສອບຍ່ອຍ: ເມື່ອຜູ້ຊ່ຽວຊານກັບເຂົ້າກຸ່ມຕົນເອງ ແລະ ສອນເລື່ອງທີ່ຕົນເອງໄດ້ຮຽນຮູ້ມາສອນ ຫຼືລາຍງານໃຫ້ສະມາຊິກໃນກຸ່ມ ແລ້ວມີການອະທິບາຍກັນທັງຫ້ອງຮຽນອີກຄັ້ງຫຼືມີການຖາມ-ຕອບໃນຫົວຂໍ້ເລື່ອງທີ່ຮຽນຮູ້ຫຼັງຈາກຜູ້ສອນທຳການທົດສອບຍ່ອຍ ແລະ ປະເມີນໃຫ້ຄະແນນ.

**3)ຂັ້ນຕອນການຈັດການຮຽນຮູ້**

ຂັ້ນຕອນການຈັດການຮຽນຮູ້ໂດນຳໃຊ້ເທັກນິກຈິກຊໍ (Jigsaw) ມີດັ່ງນີ້:

**(1) ຂັ້ນຕອນກະກຽມ**

ຜູ້ສອນຈະຕ້ອງກະກຽມເນື້ອຫາ ຫຼື ເລື່ອງທີ່ຈະໃຫ້ຜູ້ຮຽນໄດ້ຮຽນຮູ້ ໂດຍແບ່ງເນື້ອໃນຫຼືຫົວຂໍ້ທີ່ຈະຮຽນອອກເປັນຫົວຂໍ້ຍ່ອຍເທົ່າກັບຈຳນວນສະມາຊິກຂອງແຕ່ລະກຸ່ມເຊັ່ນ: ຖ້າຂະໜາດກຸ່ມລະ 4 ຄົນ ກໍ່ແບ່ງເນື້ອໃນອອກເປັນ 4 ສ່ວນເປັນຕົ້ນ ການຈັດການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ເໝາະສຳລັບໃຊ້ຈັດການຮຽນຮູ້ເນື້ອໃນທີ່ມີລັກສະນະດັ່ງນີ້:

- ທົບທວນເນື້ອໃນບົດຮຽນທີ່ຮຽນມາແລ້ວທີ່ມີຫຼາຍຫົວຂໍ້
- ໃຊ້ຈັດການຮຽນຮູ້ເນື້ອໃນຄວາມຮູ້ທີ່ສາມາດແຍກເນື້ອໃນທີ່ເປັນຕ່ອນຍ່ອຍໆໄດ້ ເຊິ່ງຕ່ອນຍ່ອຍນັ້ນໆ ຜູ້ຮຽນສາມາດສຶກສາຮຽນຮູ້ ຫຼືທຳຄວາມເຂົ້າໃຈດ້ວຍຕົນເອງ
- ໃຊ້ກັບເນື້ອໃນທີ່ຜູ້ຮຽນສາມາດສຶກສາຮຽນຮູ້ຈາກເອກະສານ, ຕຳລາ, ບົດຄວາມ, ໃບຄວາມຮູ້ຕະ ຫຼອດຈົນສື່ອື່ນໆເຊັ່ນ: ເທບ, ຊີດີ, ອິນເຕີເນັດ ເປັນຕົ້ນ.

**(2) ຂັ້ນຕອນຈັດກຸ່ມຜູ້ຮຽນ**

- ຜູ້ສອນຈັດແບ່ງກຸ່ມຜູ້ຮຽນໃຫ້ມີສະມາຊິກທີ່ມີຄວາມສາມາດແຕກຕ່າງກັນ (ເກັ່ງ, ກາງ, ອ່ອນ) ເປັນກຸ່ມພື້ນຖານຈຳນວນສະມາຊິກໃນກຸ່ມອາດມີ 2-6 ຄົນກໍ່ໄດ້.
- ຜູ້ສອນຢາຍເອກະສານ, ອຸປະກອນ ຫຼື ສື່ການຮຽນຮູ້ໃຫ້ກຸ່ມລະ 1 ຊຸດ ຫຼືໃຫ້ສະມາຊິກຄົນລະ 1 ຊຸດ ກໍ່ໄດ້ (ເຊິ່ງທຸກກຸ່ມຈະສຶກສາໃນເລື່ອງດຽວກັນ).
- ມອບໝາຍໃຫ້ສາມະຊິກກຸ່ມແຕ່ລະຄົນຮັບຜິດຊອບສຶກສາຄົ້ນຄວ້າພຽງຄົນລະ 1 ສ່ວນເຊິ່ງຫາກຜູ້ສອນແຈກຢາຍເອກະສານໃຫ້ພຽງກຸ່ມລະ 1 ຊຸດກໍ່ໃຫ້ຜູ້ຮຽນແຍກເອກະສານອອກເປັນສ່ວນໆຕາມຫົວຂໍ້ຍ່ອຍເຊັ່ນແບ່ງສາມະຊິກອອກເປັນກຸ່ມໆລະ 4 ຄົນຄວນມອບໝາຍງານດັ່ງນີ້:

ສະມາຊິກຄົນທີ 1 ຂອງແຕ່ລະກຸ່ມຮັບຜິດຊອບອ່ານຄົ້ນຄວ້າສະເພາະຫົວຂໍ້ຍ່ອຍທີ 1.

ສະມາຊິກຄົນທີ 2 ຂອງແຕ່ລະກຸ່ມຮັບຜິດຊອບອ່ານຄົ້ນຄວ້າສະເພາະຫົວຂໍ້ຍ່ອຍທີ 2.

ສະມາຊິກຄົນທີ 3 ຂອງແຕ່ລະກຸ່ມຮັບຜິດຊອບອ່ານຄົ້ນຄວ້າສະເພາະຫົວຂໍ້ຍ່ອຍທີ 3.

ສະມາຊິກຄົນທີ 4 ຂອງແຕ່ລະກຸ່ມຮັບຜິດຊອບອ່ານຄົ້ນຄວ້າສະເພາະຫົວຂໍ້ຍ່ອຍທີ 4.

**(3) ຂັ້ນຕອນກະກຽມຜູ້ຊ່ຽວຊານ**

- ສະມາຊິກທີ່ເຮັດໜ້າທີ່ຜູ້ຊ່ຽວຊານແຕ່ລະຄົນຈະແຈກຢາຍຈາກກຸ່ມພື້ນຖານໄປຈັບກຸ່ມໃໝ່ເພື່ອສຶກສາເອກະສານ ຫຼື ຄົ້ນຄວ້າເພີ່ມເຕີມໃນສ່ວນທີ່ຕົນເອງໄດ້ຮັບມອບໝາຍ ໂດຍສະມາຊິກທີ່ໄດ້ຮັບມອບໝາຍໃຫ້ສຶກສາຫົວຂໍ້ຍ່ອຍດຽວກັນຈະໄປຮ່ວມກຸ່ມກັນ ກຸ່ມລະ 3-6 ຄົນ ຫຼື ຕາມຈຳນວນທີ່ຜູ້ສອນກຳນົດ.
- ສະມາຊິກກຸ່ມຜູ້ຊ່ຽວຊານແຕ່ລະກຸ່ມຈະອ່ານເອກະສານ ສຶກສາ ຫຼື ຄົ້ນຫາ ແລະ ສະຫຼຸບເນື້ອໃນ ຈັດລຳດັບຂັ້ນຕອນການນຳສະເໜີ ແລະ ກຽມນຳໄປສອນ ຫຼື ໃຫ້ຄວາມຮູ້ແກ່ສະມາຊິກໃນກຸ່ມພື້ນຖານ ຫຼື ກຸ່ມເດີມຂອງຕົນເອງ.

ໃນຂັ້ນນີ້ຜູ້ສອນຈະຕ້ອງເປັນຜູ້ດູແລເອົາໃຈໃສ່ເປັນທີ່ປຶກສາໃຫ້ຄຳແນະນຳຊ່ວຍເຫຼືອຢ່າງໃກ້ຊິດ.

**(4) ຂັ້ນຕອນສະມາຊິກຜູ້ຊ່ຽວຊານສະເໜີຄວາມຮູ້**

ຜູ້ຊ່ຽວຊານຂອງແຕ່ລະກຸ່ມກັບກຸ່ມເດີມ (ກຸ່ມບ້ານເຮົາ) ຂອງຕົນແລ້ວຜັດປ່ຽນໝູນວຽນກັນອະທິບາຍໃຫ້ຄວາມຮູ້ເພື່ອນສະມາຊິກໃນກຸ່ມແຕ່ລະຄົນຈົນຄົບ ມີການຊັກຖາມຂໍ້ສົງໄສ, ຕອບບັນຫາ ທົບທວນໃຫ້ເກີດຄວາມເຂົ້າໃຈຢ່າງຊັດເຈນ.

**(5) ຂັ້ນຕອນທົດສອບຄວາມຮູ້**

ຜູ້ສອນໃຫ້ນັກສຶກສາແຕ່ລະຄົນຕອບບົດທົດສອບກ່ຽວກັບເນື້ອໃນຄວາມຮູ້ທີ່ຄວບຄຸມທຸກຫົວຂໍ້ທີ່ຮຽນຮູ້ແລ້ວນຳຄະແນນຂອງສະມາຊິກແຕ່ລະຄົນໃນກຸ່ມມາຮ່ວມກັນເປັນຄະແນນຂອງກຸ່ມ.

**(6) ຂັ້ນຕອນມອບລາງວັນ**

ຜູ້ສອນມອບລາງວັນ ຫຼື ໃຫ້ຄຳຊົມເຊີຍ ກຸ່ມທີ່ໄດ້ຄະແນນລວມສູງສຸດ

**ຂັ້ນຕອນຈັດການຮຽນຮູ້ໂດຍໃຊ້ເທັກນິກຈິກຊໍ(Jigsaw) ສະຫຼຸບເປັນແຜນວາດດັ່ງນີ້**




**ຮູບ1**: ສະແດງຂັ້ນຕອນການຈັດການ gsaw)

**4) ຂໍ້ດີ ແລະ ຂໍ້ຈຳກັດ**

ສຸວິດ ມູນຄຳ ແລະ ອໍລະໄທ ມູນຄຳ (2550:181) ໄດ້ກ່າວວ່າການຈັດການຮຽນ-ການສອນໂດຍໃຊ້ເທັກນິກຈິກຊໍ (Jigsaw)ມີຂໍ້ດີ ແລະ ຂໍ້ຈຳກັດດັ່ງນີ້:

**(1)ຂໍ້ດີ**

- ຜູ້ຮຽນມີຄວາມເອົາໃຈໃສ່ ຮັບຜິດຊອບຕໍ່ຕົວເອງ ແລະ ກຸ່ມຮ່ວມກັບສະມາຊິກອື່ນ.
- ສົ່ງເສີມໃຫ້ຜູ້ຮຽນມີຄວາມສາມາດຕ່າງກັນໄດ້ຮຽນຮູ້ຮ່ວມກັນ.
- ສົ່ງເສີມໃຫ້ຜູ້ຮຽນຜັດປ່ຽນກັນເປັນຜູ້ນຳ.
- ສົ່ງເສີມໃຫ້ຜູ້ຮຽນໄດ້ເຝິກ ແລະ ຮຽນຮູ້ທັກສະທາງສັງຄົມໂດຍກົງ.

**(2)ຂໍ້ຈຳກັດ**

- ຖ້າຜູ້ຮຽນຂາດການເອົາໃຈໃສ່ ແລະ ຄວາມຮັບຜິດຊອບຈະສົ່ງຜົນໃຫ້ຜົນກິດຈະກຳກຸ່ມ ແລະ ການຮຽນຮູ້ບໍ່ປະສົບຜົນສຳເລັດ.

### 2.1.7 ການຫາປະສິດທິພາບຂອງບົດສອນ

**1)ຄວາມໝາຍປະສິດທິພາບຂອງບົດສອນ$E_1$ / $E_2$**

ການຫາປະສິດທິພາບຂອງບົດການສອນໝາຍເຖິງການນຳເອົາບົດສອນໄປທົດລອງໃຊ້ຕາມຂັ້ນຕອນທີ່ໄດ້ກຳນົດໄວ້ແລ້ວນຳເອົາຜົນທີ່ໄດ້ຮັບໄປປັບປຸງຫຼັງຈາກນັ້ນກໍ່ນຳເອົາໄປສອນທົດລອງຕົວຈິງໃຫ້ໄດ້ປະສິດທິພາບຕາມເກນທີ່ກຳນົດໄວ້.

ການປະເມີນຜົນທົດສອບແບບຕໍ່ເນື່ອງຄືການປະເມີນທົດສອບຍ່ອຍຫຼາຍຄັ້ງຫຼືຫຼັງຈາກຮຽນແຕ່ລະບົດ ແລະ ການປະເມີນການທົດສອບໃນການປະຕິບັດດຳເນີນກິດຈະກຳລະຫວ່າງການຮຽນທີ່ປະກອບດ້ວຍກິດຈະກຳບຸກຄົນ ແລະ ກິດຈະກຳກຸ່ມໂດຍກຳນົດຄ່າປະສິດທິພາບ$E_1$.

ການປະເມີນການທົດສອບຂັ້ນສຸດທ້າຍຄື ການປະເມີນການທົດສອບທ້າຍພາກຮຽນຈົບຊຸດການສອນໂດຍກຳນົດຄ່າປະສິດທິພາບ$E_2$.

- ເກນການຫາປະສິດທິພາບແມ່ນລະດັບປະສິດທິພາບຂອງບົດສອນ ທີ່ຈະຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ ເປັນລະດັບທີ່ຜູ້ສອນຈະມີຄວາມເພິ່ງພໍໃຈຖ້າຫາກວ່າບົກສອນມີປະສິດທິພາບໃນລະດັບນັ້ນແລ້ວ ບົດສອນນັ້ນກໍ່ຈະມີຄຸນຄ່າທີ່ຈະນຳໄປສອນນັກສຶກສາ.
- ເກນການຫາປະສິດທິພາບ ໄດ້ກຳນົດເປັນເກນທີ່ຜູ້ສອນຄາດໝາຍວ່າຜູ້ຮຽນຈະປ່ຽນແປງພຶດຕິກຳຂອງຜູ້ຮຽນທັງໝົດຕໍ່ສ່ວນຮ້ອຍຂອງຜົນການທົດສອບຫຼັງການຮຽນຂອງນັກສຶກສາທັງໝົດນັ້ນກໍ່ຄື: $E_1$ / $E_2$ ແມ່ນປະສິດທິພາບຂອງຂະບວນການຮຽນ-ການສອນ/ປະສິດທິພາບຂອງຜົນໄດ້ຮັບຫຼັງການຮຽນ-ການສອນ ເຊິ່ງການກຳນົດເກນ $E_1$ / $E_2$ມີຄ່າເທົ່າໃດນັ້ນແມ່ນຜູ້ສອນຈະເປັນຜູ້ພິຈາລະນາ ໂດຍປົກກະຕິແລ້ວເນື້ອໃນການຮຽນ-ການສອນທີ່ເປັນຄວາມຮູ້ ຄວາມຈຳມັກຈະຕັ້ງຄ່າໄວ້ 80/80, 85/85, 90/90 ແລະ ເນື້ອໃນການຮຽນ-ການສອນທີ່ເປັນການເຝິກທັກສະຈະຕັ້ງໄວ້ຕ່ຳກວ່າເຊັ່ນ: 75/75 ເຫຼົ່ານີ້ເປັນຕົ້ນ.
- ເກນການຫາປະສິດທິພາບ $E_1$ / $E_2$ ຫຼື80/80 ມີຄວາມໝາຍດັ່ງນີ້: 80ທາງໜ້າແມ່ນໝາຍເຖິງຄະແນນຜົນການຮຽນລະຫວ່າງການດຳເນີນການຮຽນ-ການສອນທີ່ມີຜົນສະເລ່ຍ 80ສ່ວນຮ້ອຍ. ສ່ວນ 80 ທາງຫຼັງແມ່ນໝາຍເຖິງຄະແນນຜົນການຮຽນພາຍຫຼັງສຳເລັດການຮຽນ-ການສອນທີ່ມີຜົນສະເລ່ຍ 80 ສ່ວນຮ້ອຍ. (ສຸຣິຍາ ເພັງລີ, 2552:39)

**1) ຂັ້ນຕອນການທົດສອບປະສິດທິພາບຂອງບົດສອນ**

ການທົດສອບປະສິດທິພາບຂອງບົດສອນປະຕິບັດຕາມຂັ້ນຕອນດັ່ງນີ້:

(1) ດຳເນີນການແຕ່ງບົດສອນ, ແຕ່ງບົດສອນຜ່ານອາຈານທີ່ປຶກສາ (ກວດກາ).

(2) ນຳບົດສອນທີ່ໄດ້ປັບປຸງຕາມການແນະນຳຈາກທີ່ປຶກສາແລ້ວນຳສະເໜີຜູ້ຊ່ຽວຊານ 3 ທ່ານ.

(3) ໃຫ້ຜູ້ຊ່ຽວຊານປະເມີນຕາມເກນ(ບຸນຊົມສີສະອາດ, 2545:102-163)

| **ລະດັບຄະແນນສະເລ່ຍ** | **ເກນການປະເມີນ** |
|---|---|
| 5 ໝາຍເຖິງ | ບົດສອນມີຄວາມເໝາະສົມຫຼາຍທີ່ສຸດ |
| 4 ໝາຍເຖິງ | ບົດສອນມີຄວາມເໝາະສົມຫຼາຍ |
| 3 ໝາຍເຖິງ | ບົດສອນມີຄວາມເໝາະສົມປານກາງ |
| 2 ໝາຍເຖິງ | ບົດສອນມີຄວາມເໝາະສົມໜ້ອຍ |
| 1 ໝາຍເຖິງ | ບົດສອນມີຄວາມເໝາະສົມໜ້ອຍທີ່ສຸດ |

(4) ນຳບົດສອນທີ່ໄດ້ຮັບການປັບປຸງສຳເລັດຕາມການແນະນຳຂອງຜູ້ຊ່ຽວຊານໄປສອນທົດລອງກັບກຸ່ມທີ່ບໍ່ແມ່ນກຸ່ມຕົວຢ່າງ, ນຳເອົາຜົນການປະເມີນທີ່ໄດ້ຮັບມາຄຳນວນຫາປະສິດທິພາບແລ້ວນຳບົດສອນໄປປັບປຸງໃຫ້ດີຂຶ້ນ.

(5) ທົດລອງໃຊ້ບົດສອນກັບກຸ່ມຕົວຢ່າງ, ນຳເອົາຜົນທົດລອງທີ່ໄດ້ມາຫາຄ່າປະສິດທິພາບແລ້ວນຳໄປປັບປຸງອີກເທື່ອນຶ່ງ, ຜົນທີ່ໄດ້ຮັບຄວນໃກ້ຄຽງກັບເກນທີ່ຕັ້ງໄວ້.

(6) ການພິຈາລະນາປະສິດທິພາບສາມາດພິຈາລະນາ3 ລະດັບຄື:

- ລະດັບສູງກວ່າເກນ ໝາຍເຖິງປະສິດທິພາບຂອງເຄື່ອງມືສູງກວ່າເກນທີ່ຕັ້ງໄວ້ 2.5%ຂຶ້ນໄປ.
- ລະດັບເທົ່າກັບເກນທີ່ຕັ້ງໄວ້ ໝາຍເຖິງ ເທົ່າກັບ 2.5% ແລະ ຕ□າກວ່າເກນແຕ່ບໍ່ຕໍ່າກວ່າ 2.5% ຖືວ່າເປັນປະສິດທິພາບຍອມຮັບໄດ້.
- ລະດັບຕໍ່າກວ່າເກນທີ່ຕັ້ງໄວ້ ໝາຍເຖິງ ເມື່ອປະສິດທິພາບຕໍ່າກວ່າເກນທີ່ຕັ້ງໄວ້ ຕໍ່າກວ່າ 2.5% ຖືວ່າເຄື່ອງມືບໍ່ມີປະສິດທິພາບ.

**1) ວິທີຊອກຫາປະສິດທິພາບຂອງບົດສອນ**

ການຊອກຫາປະສິດທິພາບໂດຍໃຊ້ສູດ $E_1/E_2$ (ຜະເຊີນກິດຈະການ ແລະ ສົມນຶກພັດທິຍະທານີ, 2545:44-51)

$$E1 = \frac{\frac{\sum x}{n}}{A} \times 100$$

$E_1$ ແມ່ນ ປະສິດທິພາບຂອງຂະບວນການຮຽນຮູ້

$\sum x$ແມ່ນ ຜົນບວກຂອງຄະແນນລະຫວ່າງການຮຽນ ແລະ ການສອບຍ່ອຍທຸກຊຸດ

$n$ແມ່ນຈໍານວນຂອງນັກສຶກສາທັງໝົດ

Aແມ່ນ ຄະແນນເຕັມທັງໝົດ

$$E2 = \frac{\frac{\sum x}{n}}{B} \times 100$$

$E_2$ແມ່ນປະສິດທິພາບຜົນສໍາເລັດຫຼັງການຮຽນ

$\sum x$ແມ່ນຜົນບວກຂອງຄະແນນການສອບຜົນສໍາເລັດຫຼັງການຮຽນ

$n$ແມ່ນຈໍານວນຂອງນັກສຶກສາທັງໝົດ

$B$ແມ່ນຄະແນນເຕັມທັງໝົດ

**2) ການຫາດັດຊະນີປະສິດທິຜົນ**

ປະສິດທິຜົນຄືຄ່າຂອງຄະແນນທົດສອບກ່ອນຮຽນ ແລະ ຄະແນນທົດສອບຫຼັງຮຽນ ຫຼື ເປັນການທົດສອບຄວາມແຕກຕ່າງກ່ຽວກັບຜົນສໍາດລັດທາງການຮຽນ ລະຫວ່າງກຸ່ມທົດສອງກັບກຸ່ມຄວບຄຸມ ດັດສະນີປະສິດທິຜົນຄໍານວນໄດ້ຈາກການຫາຄວາມແຕກຕ່າງຂອງການທົດສອບກ່ອນການທົດລອງ ແລະ ການທົດສອບຫຼັງການທົດລອງດ້ວຍຄະແນນພື້ນຖານ (ຄະແນນທົດສອບກ່ອນການຮຽນ) ແລະ ຄະແນນທີ່ສາມາດເຮັດໄດ້ສູງສຸດ, ດັດສະນີປະສິດທິຜົນຈະເປັນຕົວບົ່ງບອກເຖິງຂອບເຂດ ແລະ ປະສິດທິພາບສູງສຸດຂອງສື່ການຮຽນ-ການສອນ (ຜະເຊີນ ກິດຈະການ ແລະ ສົມນຶກ ພັດທິຍະທານີ, 2545:49-50).

ດັດຊະນີປະສິດທິຜົນໝາຍເຖິງຕົວເລກທີ່ສະແດງເຖິງຄວາມກ້າວໜ້າໃນການຮຽນຂອງຜູ້ຮຽນ, ໂດຍປຽບທຽບຄະແນນທີ່ດພີ່ມຂຶ້ນຈາກ ການທົດສອບກ່ອນການຮຽນກັບຄະແນນທີ່ໄດ້ຮັບຈາກການທົດລອງຫຼັງການຮຽນ, ເມື່ອມີການປະເມີນສື່ການສອນທີ່ຜະລິດຂຶ້ນຈະເບິ່ງມີປະສິດທິພາບທາງການສອນ ແລະ ການວັດປະເມີນຜົນສື່ການສອນນັ້ນ, ຕາມປົກກະຕິການປະເມີນຄວາມແຕກຕ່າງຂອງຄ່າຄະແນນໃນ 2 ລັກສະນະຄື ຄວາມແຕກຕ່າງຂອງຄະແນນທົດສອບກ່ອນຮຽນ ແລະ ຄະແນນທົດສອບຫຼັງຮຽນ ຫຼືການທົດສອບຜົນສໍາເລັດທາງການຮຽນລະຫວ່າງ ກຸ່ມທົດລອງຄວບຄຸມ.

ການປະເມີນປະສິດທິພາບຂອງສື່ ແລະ ເຕັກໂນໂລຊີ ພິຈາລະນາຂະບວນການ ($E_1$) ກັບຜົນສໍາເລັດຂອງສື່ ($E_2$) ທີ່ໃຊ້ ຖ້າຫາກຜູ້ຄົ້ນຄ້ວາພິຈາລະນາຕໍ່ໄປວ່າ ແຜນການຈັດການຮຽນຮູ້ ຫຼືສິ່ງທີ່ສ້າງຂຶ້ນຍັງມີຄຸນນະພາບໃນແງ່ມຸມອື່ນໆອີກຫຼືບໍ່ ກໍ່ສາມາດພິຈາລະນາໄດ້ໂດຍດູພັດທະນາການຂອງນັກຮຽນຄື ພິຈາລະນາວ່າ ກ່ອນ ແລະ ຫຼັງການຮຽນເລື່ອງໃດ ນັກຮຽນໄດ້ພັດທະນາ ຫຼື ມີຄວາມຮູ້ຄວາມສາມາດເພີ່ມຂຶ້ນຢ່າງເຊື່ອຖືໄດ້ ຫຼືບໍ່ ຫຼື ເພີ່ມຂຶ້ນເທົ່າໃດ ເຊິ່ງອາດພິຈາລະນາໄດ້ຈາກການຄໍານວນຫາຄ່າ t-test(Dependent simple) ແລະ

ພິຈາລະນາພັດທະນາການຮຽນຮູ້ໃນຕອນນັ້ນ ເມື່ອທຽບກັບການບັນລຸຈຸດປະສົງແລ້ວນັກຮຽນໄດ້ຮຽນຮູ້ເພີ່ມຢູ່ໃນລະດັບໃດ ເຊິ່ງໄດ້ຈາກການວິເຄາະຫາຄ່າດັດສະນີປະສິດທິພາບຜົນ (Effectiveness Index: E.I)ດັ່ງລາຍລະອຽດລຸ່ມນີ້:

(1) ການພັດທະນາທີ່ເພີ່ມຂຶ້ນຂອງຜູ້ຮຽນດ້ວຍການຫາຄ່າ t-test (Dependent simple) ເປັນການພິຈາລະນາເບິ່ງວ່າ ນັກຮຽນມີພັດທະນາການເພີ່ມຂຶ້ນຢ່າງເຊື່ອຖືໄດ້ ຫຼື ບໍ່ ດ້ວຍການທົດສອບກັບນັກຮຽນທຸກຄົນກ່ອນການຮຽນ (Pre-test) ແລະ ຫຼັງຮຽນ (Post-test) ແລ້ວນຳມາຫາຄ່າ t-test (Dependent simple) ຫາກມີຄວາມສ□າຄັນທາງສະຖິຕິ ຖືໄດ້ວ່ານັກຮຽນກຸ່ມທີ່ຜູ້ຄົ້ນຄ້ວາກ□າລັງສຶກສາມີພັດທະນາການເພີ່ມຂຶ້ນຢ່າງເຊື່ອຖືໄດ້.

(2) ການພັດທະນາການເພີ່ມຂຶ້ນຂອງຜູ້ຮຽນ ໂດຍອາໄສການຫາຄ່າດັດສະນີປະສິດທິຜົນມີສູດດັ່ງນີ້:

**ຄ່າດັດຊະນີປະສິດທິຜົນ** $= \dfrac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ} - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{(\text{ຈຳນວນນັກຮຽນ})(\text{ຄະແນນເຕັມ}) - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}$

***ຫຼື*** **E.I** $= \dfrac{P_2 - P_1}{Total - P_1}$

E.I ແທນ ດັດຊະນີປະສິດທິພາບຜົນ

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນໝົດທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນທຸກຄົນ

Total ແທນ ຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ

ການຫາຄ່າ E.I ເປັນການພິຈາລະນາພັດທະນາການໃນລັກສະນະທີ່ເພີ່ມຂຶ້ນເທົ່າໃດ, ບໍ່ໄດ້ທົດສອບວ່າເພີ່ມຂຶ້ນເຊື່ອຖືໄດ້ ຫຼື ບໍ່ ເຊິ່ງຄ່າທີ່ສະແດງເພີ່ມຂຶ້ນນັ້ນເອີ້ນສ່າຫາຄ່າດັດສະນີປະສິດທິພາບຜົນ ແລະ ແລະ ເພື່ອສື່ຄວາມໝາຍກັນໄດ້ງ່າຍຈຶ່ງແປຄະແນນໃຫ້ຢູ່ໃນຮູບຂອງສ່ວນຮ້ອຍເຊັ່ນຄ່າດັດສະນີປະສິດທິພາບຜົນ E.I0.6240 ຄິດເປັນສ່ວນຮ້ອຍ 62.40(ຜະເຊີນ ກິດຈະການ ແລະ ສົມນຶກ ພັດທິຍະທານີ, 2545:44).

ການແປຜົນວິເຄາະຂໍ້ມູນຂອງບົດວິທະຍານິພົນມັກໃຊ້ຂໍ້ຄວາມບໍ່ເໝາະສົມເຮັດໃຫ້ຜູ້ອ່ານເຂົ້າໃຈຄວາມໝາຍຂອງ E.I ຜິດຈາກຄວາມຈິງເຊັ່ນ: E.Iມີຄ່າເທົ່າກັບ 0.6240 ມັກຈະເອີ້ນວ່າຄ່າດັສະນີປະສິດທິພາບມີຄ່າເທົ່າກັບ 0.6240 ເຊິ່ງສະແດງວ່ານັກສຶກສາມີຄວາມຮູ້ເພີ່ມຂຶ້ນ62.40% ເຊິ່ງຄວາມເປັນຈິງແລ້ວຄ່າ E.Iເທົ່າກັບ 0.6240 ເພາະທຽບກັບຄ່າ E.I ສູງສຸດແມ່ນ 1. ດັ່ງນັ້ນ, ຖ້າຄິດເປັນ % ກໍ່ຄິດທຽບກັບຄ່າສູງສຸດແມ່ນ 100 E.I ມີຄ່າເທົ່າກັບ 62.40%ຈຶ່ງຄວນໃຊ້ຂໍ້ຄວາມວ່າຄ່າດັດສະນີປະສິດທິຜົນເທົ່າກັບ 0.6240 ສະແດງວ່ານັກສຶກສາມີຄວາມຮູ້ເພີ່ມຂຶ້ນ0.6240 ຫຼື ຄິດເປັນ 62.40% (ບໍ່ໄດ້ໝາຍຄວາມວ່ານັກສຶກສາມີຄວາມຮູ້ເພີ່ມຂຶ້ນ62.40%( ຜະເຊີນ ກິດຈະການ ແລະ ສົມນຶກ ພັດທິຍະທານີ, 2545:36).

### 2.1.8 ວິທີການສ້າງແບບທົດສອບວັດຜົນສຳເລັດທາງການຮຽນ

ແບບທົດສອບວັດຜົນສຳເລັດທາງການຮຽນ ໝາຍເຖິງແບບທົດສອບທີ່ໃຊ້ວັດຄວາມຮູ້ຄວາມສາມາດຂອງບຸກຄົນໃນດ້ານວິຊາການເຊິ່ງເປັນຜົນຈາກການຮຽນຮູ້ເນື້ອໃນໃຈຄວາມ ແລະ ຕາມຈຸດປະສົງຂອງວິຊາ ຫຼື ເນື້ອໃນທີ່ສອນນັ້ນໂດຍທົ່ວໄປຈະວັດຜົນສຳເລັດໃນວິຊາຕ່າງໆໃນວິທະຍາໄລ, ມະຫາວິທະຍາໄລ ຫຼື ສະຖາບັນການສຶກສາຕ່າງໆ ເຊິ່ງແບບທົດສອບວັດຜົນສຳເລັດທາງການຮຽນອາດຈຳແນກອອກເປັນ 2 ປະເພດຄື:

(1) ແບບທົດສອບອີງເກນ ໝາຍເຖິງ ແບບທົດສອບທີ່ສ້າງຂຶ້ນຕາມຈຸດປະສົງ ລັກສະນະພຶດຕິກຳມີຄະແນນ, ເກນສຳລັບໃຊ້ຕັດສິນວ່າຜູ້ສອບມີຄວາມຮູ້ຕາມເກນທີ່ກຳນົດໄວ້ ຫຼື ບໍ່. ການວັດກົງຕາມຈຸດປະສົງແມ່ນຫົວໃຈສຳຄັນຂອງຂໍ້ສອບຂອງແບບທົດສອບປະເພດນີ້.

(2) ແບບທົດສອບອີງກຸ່ມ ໝາຍເຖິງ ແບບທົດສອບທີ່ມີຈຸດມຸ່ງໝາຍສ້າງເພື່ອວັດໃຫ້ຄວບຄຸມຫຼັກສູດຈິ່ງສ້າງຕາມຕາຕະລາງວິເຄາະຫຼູກສູດ. ຄວາມສາມາດໃນການຈຳແນກຜູ້ສອບຕາມຄວາມເກັ່ງ, ອ່ອນໄດ້ດີເປັນຫົວໃຈຂອງຂໍ້ສອບໃນແບບທົດສອບປະເພດນີ້. ການລາຍງານຜົນການສອບອາໄສຄະແນນມາດຕະຖານເຊິ່ງເປັນຄະແນນທີ່ສາມາດໃຫ້ຄວາມໝາຍ ສະແດງເຖິງສະຖານະພາບ, ຄວາມສາມາດຂອງບຸກຄົນອື່ນ. ແນວຄວາມຄິດ ແລະ ທິດ

ສະດີທີ່ເປັນແນວທາງໃນການສ້າງແບບທົດສອບວັດຜົນສຳເລັດທາງການຮຽນທີ່ນິຍົມກັນໄດ້ແກ່ ການຂຽນຂໍ້ສອບວັດຕາມການຈັດປະເພດຈຸດມຸ້ງໝາຍຂອງການສຶກສາດ້ານພຸດທິພິໄສ (Cognitive) ຂອງ Bloom(1956ອ້າງຈາກ ວາລີ ຖິຣະຈິດ, 2534:53).

**ຈຸດມຸ້ງໝາຍຂອງການສຶກສາດ້ານພຸດທິພິໄສມີ 6 ດ້ານເຊັ່ນ:**

(1) ຄວາມຮູ້ເປັນເລື່ອງທີ່ຕ້ອງການຮູ້ວ່າຜູ້ຮຽນຈື່ຈຳໄດ້ຂໍ້ມູນທີ່ເປັນຂໍ້ເທັດຈິງໄດ້ຍ້ອນຂໍ້ເທັດຈິງບາງຢ່າງມີຄຸນຄ່າຕໍ່ການຮຽນຮູ້.

(2) ຄວາມເຂົ້າໃຈ ສະແດງລະດັບຄວາມສາມາດ, ການແປຄວາມໝາຍ ການຕີຄວາມໝາຍ ແລະ ຂະຫຍາຍຄວາມໃນເລື່ອງ ແລະ ເຫດການຕ່າງໆໄດ້.

(3) ການນຳໄປໃຊ້ຕ້ອງອາໃສຄວາມເຂົ້າໃຈເປັນພື້ນຖານໃນການຊ່ວຍຕີຄວາມໝາຍ ຂອງຂໍ້ມູນເມື່ອຕ້ອງການຮູ້ວ່າຂໍ້ມູນນັ້ນມີປະເດັນສຳຄັນອັນໃດແດ່ ຕ້ອງອາໃສຄວາມຮູ້ເພື່ອປຽບທຽບ, ຈຳແນກຄວາມແຕກຕ່າງ, ພິຈາລະນານຳເອົາຂໍ້ມູນໄປໃຊ້ໂດຍໃຫ້ເຫດຜົນໄດ້.

(4) ການວິເຄາະ ເປັນທັກສະທາງປັນຍາໃນລະດັບທີ່ສູງ ຈະເນັ້ນການຈຳແນກຂໍ້ມູນອອກເປັນສ່ວນຍ່ອຍໆ ແລະ ພະຍາຍາມຊອກຫາສ່ວນປະກອບວ່າມີຄວາມສ□າພັນກັນແນວໃດ ໂດຍອີງໃສ່ຫຼັກການທີ່ຮອບຮວມໄວ້ແລ້ວ.

(5) ການສັງເຄາະ ໝາຍເຖິງການນຳເອົາອົງປະກອບຕ່າງໆທີ່ແຈກຢາຍກັນຢູ່ມາຮວມເຂົ້າກັນໃນຮູບແບບໃໝ່ ຖ້າສາມາດສັງເຄາະໄດ້ກໍ່ສາມາດປະເມີນໄດ້.

(6) ການປະເມີນ ໝາຍເຖິງການໃຊ້ເກນ ແລະ ມາດຕະຖານເພື່ອພິຈາລະນາວ່າ ຈຸດມຸ້ງໝາຍທີ່ຕ້ອງການທີ່ຕ້ອງການນັ້ນບັນລຸ ຫຼື ບໍ່. ການທີ່ນັກຮຽນສາມາດປະເມີນຄ່າໄດ້ກໍ່ຕ້ອງໃຊ້ເກນ ຫຼື ມາດຖານເປັນແນວທາງໃນການຕັດສິນຄຸນຄ່າ. ການຕັດສິນໃດທີ່ບໍ່ໄດ້ອາໃສເກນອາດຈະເປັນແນວຄິດເຫັນຫຼາຍກວ່າເປັນການປະເມີນ(Bloom, 1956:219ອ້າງຈາກວາລີ ຖິຣະຈິດ, 2534:220-221).

ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ (2543:87-88)ໄດ້ສະເໜີແນວຄິດວ່າ ການສ້າງແບບທົດສອບຜົນສຳເລັດທາງການຮຽນວ່າ ຄວນຢູ່ໃນກອບຂອງການວັດພຶດຕິກຳ 6 ປະເພດຄື:

(1) ຄວາມຈຳ ເປັນຄວາມສາມາດໃນການລະນຶກເຖິງສິ່ງທີ່ຮຽນຮູ້ມາແລ້ວ.

(2) ຄວາມເຂົ້າໃຈ ເປັນຄວາມສາມາດຕີຄວາມໝາຍ ແລະ ຂະຫຍາຍຄວາມ.

(3) ການນຳໄປໃຊ້ ເປັນຄວາມສາມາດໃນການແກ້ໄຂບັນຫາ.

(4) ການວິເຄາະ ເປັນຄວາມສາມາດໃນການໃຊ້ເຫດຜົນ.

(5) ການໃຊ້ສັງເຄາະ ເປັນຄວາມສາມາດໃນການປະສົມປະສານສ່ວນຍ່ອຍໃຫ້ເປັນອັນໃໝ່ທີ່ມີຄວາມສາມາດໃນດ້ານການສ້າງສັນ ແລະ ລິເລີ່ມ.

(6) ການປະເມີນຄ່າ ເປັນຄວາມສາມາດໃນການພິຈາລະນາກ່ຽວກັບຄຸນຄ່າຂອງຄວາມຄິດທຸກຊະນິດເພື່ອປຽບທຽບກັບເກນ ຫຼື ມາດຕະຖານທີ່ກຳນົດໄວ້.

**1)ປະເພດຂອງແບບທົດສອບວັດຜົນສາເລັດທາງການຮຽນ**

ຊໍວະລິດ ຊູຄຳແພງ (2551:49) ໄດ້ແບ່ງແບບທົດສອບວັດຜົນສຳເລັດທາງການຮຽນອອກເປັນ 5 ປະເພດເຊັ່ນ:

(1) ຂໍ້ສອບແບບຖືກ-ຜິດ ເປັນຂໍ້ສອບທີ່ມີ 2 ຕົວເລືອກ ແຕ່ຕົວເລືອກດັ່ງກ່າວເປັນຕົວເລືອກຄົງທີ່ ແລະ ມີຄວາມໝາຍກົງກັນຂ້າມເຊັ່ນ: ຖືກ-ຜິດ. ແມ່ນ-ບໍ່ແມ່ນ, ໄດ້-ບໍ່ໄດ້, ຈິງ-ບໍ່ຈິງ, ຄືກັນ-ຕ່າງກັນ ເປັນຕົ້ນ.

(2) ຂໍ້ສອບແບບຕື່ມຄຳ ເປັນຂໍ້ສອບທີ່ປະກອບດ້ວຍປະໂຫຍກ ຫຼື ຂໍ້ຄວາມທີ່ຍັງບໍ່ທັນສົມບູນແລ້ວໃຫ້ຜູ້ຕອບຕື່ມຄຳ, ປະໂຫຍກ ຫຼື ຂໍ້ຄວາມຕື່ມໃສ່ຊ່ອງຫວ່າງທີ່ຈົງຫວ່າງໄວ້ນັ້ນ ເພື່ອໃຫ້ມີໃຈຄວາມສົມບູນ ແລະ ຖືກຕ້ອງ.

(3) ແບບທົດສອບແບບຕອບສັ້ນ ຂໍ້ສອບປະເພດນີ້ຄ້າຍຄືຂໍ້ສອບແບບຕື່ມຄໍາ ແຕ່ແຕກຕ່າງກັນ ຂໍ້ສອບແບບຕອບສັ້ນໆຂຽນເປັນປະໂຫຍກຄໍາຖາມທີ່ສົມບູນ ແລ້ວໃຫ້ຜູ້ຕອບເປັນຜູ້ຂຽນຄໍາຕອບ ຄໍາຕອບທີ່ຕ້ອງການຈະສັ້ນ ກະທັດຮັດ ໄດ້ໃຈຄວາມທີ່ສົມບູນບໍ່ເປັນການບັນລະຍາຍ ເປັນຂໍ້ສອບແບບອັດຕາໃນ.

(4) ຂໍ້ສອບແບບຈັບຄູ່ ເປັນຂໍ້ສອບເລືອກຕອບຊະນິດໜຶ່ງໂດຍມີຄໍາ ຫຼື ຂໍ້ຄວາມທີ່ແຍກອອກຈາກກັນເປັນສອງສ່ວນ ແລ້ວໃຫ້ຜູ້ຕອບເລືອກຈັບຄູ່ວ່າ ແຕ່ລະຂໍ້ຄວາມໃນສ່ວນທີໜຶ່ງ (ຕົວຫຼັກ) ຈັບຄູ່ກັບຂໍ້ຄວາມໃນສ່ວນທີສອງ (ຕົວເລືອກ) ເຊິ່ງມີຄວາມສໍາພັນກັນດ້ານໃດດ້ານໜຶ່ງ ຕາມຜູ້ອອກຂໍ້ສອບກໍານົດໄວ້.

(5) ຂໍ້ສອບແບບເລືອກຕອບ ລັກສະນະທົ່ວໄປຂອງຄໍາຕອບແບບເລືອກຕອບຈະປະກອບດ້ວຍສອງຕອນຄື: ຄໍາຖາມ ແລະ ຕົວເລືອກ ໃນນັ້ນຈະມີຕົວເລືອກທີ່ຖືກຕ້ອງທີ່ສຸດພຽງແຕ່ຕົວດຽວ ແລະ ຄໍາຖາມແບບເລືອກຕອບທີ່ດີທີ່ມີການນິຍົມກັນຫຼາຍແມ່ນການເລືອກເອົາຕົວເລືອກທີ່ໃກ້ຄຽງກັນຫຼາຍທີ່ສຸດ, ຖ້າເບິ່ງຜິວເຜີນເຫັນວ່າຕົວເລືອກທຸກຕົວຖືກໝົດ ແຕ່ຄວາມຈິງແລ້ວມີຄວາມຖືກຕ້ອງຊັດເຈນຕ່າງກັນ.

ສະຫຼຸບ ທີ່ສະແດງມາຂ້າງເທິງນັ້ນເຫັນວ່າຂໍ້ສອບມີຫຼາຍປະເພດທີ່ແຕກຕ່າງກັນ ແຕ່ຜູ້ອອກຂໍ້ສອບໃນການວັດຜົນສໍາເລັດທາງຮຽນໃນແຕ່ລະຄັ້ງຄວນພິຈາລະນາເພື່ອເລືອກໃຊ້ແບບສອບຖາມທີ່ເໝາະກັບເນື້ອໃນການຮຽນຂອງຜູ້ຮຽນເຊິ່ງແບບທົດສອບແຕ່ລະປະເພດກໍ່ລ້ວນມີຂໍ້ດີ ແລະ ຂໍ້ຈໍາກັດ. ເຊິ່ງໃນການສຶກສາຄົ້ນຄວ້າໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ເລືອກເອົາແບບທົດສອບແບບເລືອກຕອບ ເຊິ່ງປະກອບມີ 4 ຕົວເລືອກໃນການວັດຜົນສໍາເລັດທາງການຮຽນຂອງຜູ້ຮຽນ.

**2) ຫຼັກການການສ້າງແບບທົດສອບວັດຜົນສາລັດທາງການຮຽນແບບເລືອກຕອບ**

ສົມນຶກ ພັດທິຍະທະນີ(2548:83-96) ໄດ້ກ່າວເຖິງແບບທົດສອບການວັດຜົນທາງການຮຽນແບບເລືອກຕອບໄວ້ວ່າ:

(1) ການຂຽນຂັ້ນນໍາໃຫ້ເປັນປະໂຫຍກທີ່ສົມບູນ ແລ້ວໃສ່ເຄື່ອງໝາຍຢູ່ຕໍ່ໜ້າ, ບໍ່ຄວນສ້າງຂຶ້ນໃຫ້ເປັນແບບອ່ານຕໍ່ຄວາມ ເພາະຈະເຮັດໃຫ້ຄໍາຖາມບໍ່ຊັດເຈນ ເກີດບັນຫາສອງແງ່, ຂໍ້ຄວາມບໍ່ຕໍ່າກັນ ຫຼື ເກີດຄວາມສັບສົນໃນການຄິດຫາຄໍາຕອບ.

(2) ເນັ້ນເລື່ອງທີ່ຈະຕັ້ງຄໍາຖາມໃຫ້ຊັດເຈນບໍ່ສັບສົນ ເນື່ອງຈາກວ່າຜູ້ອ່ານຈະບໍ່ເຂົ້າໃຈ, ບໍ່ສາມາດສຸມຄວາມຄິດຫາຄໍາຕອບໃຫ້ຖືກທາງ, ບໍ່ຄວນອ່ານຄໍາຖາມ-ຄໍາຕອບຊໍ້າໄປຊໍ້າມາຫຼາຍເທື່ອ.

(3) ຄວນຖາມໃນເລື່ອງທີ່ມີຄຸນຄ່າຕໍ່ການວັດ ຫຼື ຖາມໃນສິ່ງທີ່ທີປະໂຫຍດ, ຄໍາຖາມແບບເລືອກຕອບສາມາດຖາມພຶດຕິກໍາໃນການສະໜອງໃນຫຼາຍດ້ານ, ບໍ່ສະເພາະຖາມແຕ່ຄວາມຈໍາ ຫຼື ຕາມຕໍາລາ, ຖາມລາຍລະອຽດເກີນຄວາມຈໍາເຊິ່ງບໍ່ແມ່ນສາລະທີ່ສໍາຄັນ ແຕ່ຕ້ອງຖາມໃຫ້ຄິດ ຫຼື ນໍາຄວາມຮູ້ທີ່ໄດ້ຮຽນມາໄປໃຊ້ໃນສະຖານະການໃໝ່ ຈຶ່ງເອີ້ນວ່າມີຄຸນຄ່າຕໍ່ກັບການວັດ.

(4) ຫຼີກລ້ຽງຄໍາຖາມປະຕິເສດ ຖ້າຈໍາເປັນຕ້ອງພິມຕົວໃຫຍ່ ຫຼື ຂີດກ້ອງຄໍາປະຕິເສດນັ້ນ, ແຕ່ຄໍາປະຕິເສດຊ້ອນບໍ່ຄວນໃຊ້ເພາະວ່າເປັນການຫຍຸ້ງຍາກໃນການແປຄວາມໝາຍຂອງຄໍາຖາມ ແລະ ຕອບຄໍາຖາມທີ່ຖາມກັບຄືນ ຫຼື ປະຕິເສດຊໍ້າພັດຜິດຫຼາຍກວ່າຖືກ.

(5) ບໍ່ໃຊ້ຄໍາຟູມເຟືອຍ ຄວນຖາມບັນຫາໂດຍກົງ, ສິ່ງໃດທີ່ບໍ່ກ່ຽວຂ້ອງ ຫຼື ບໍ່ໄດ້ໃຊ້ເປັນເງື່ອນໄຂໃນການຄິດບໍ່ຄວນນໍາມາຂຽນເປັນຄໍາຖາມ.

(6) ຂຽນຕົວເລືອກໃຫ້ເປັນເອກລັກ ໝາຍເຖິງຂຽນຕົວເລືອກທຸກຂໍ້ໃຫ້ເປັນລັກສະນະໃດໜຶ່ງ ຫຼື ທິດທາງແບບດຽວກັນ, ມີໂຄງສ້າງສອດຄ່ອງເປັນທໍານອງດຽວກັນເຊັ່ນ: ນິຍາມ, ລັກສະນະ, ຫຼັກເກນ, ຫຼັກການ ວິທີ ແລະ ອື່ນໆ ໃຊ້ຮູບແບບທີ່ຄືກັນຈະຊ່ວຍໃຫ້ຕົວເລືອກມີຄຸນຄ່າສູງຂຶ້ນ.

(7) ຄວນຂຽນລໍາດັບຕົວເລກ ແລະ ຕົວອັກສອນໃສ່ຕໍ່ໜ້າຕົວເລືອກທີ່ເປັນຄໍາຕອບ, ຕ້ອງລຽງແຕ່ຕົວເລກນ້ອຍຫາໃຫຍ່ ຫຼື ຕາມລໍາດັບຂອງຕົວອັກສອນ ເພື່ອຊ່ວຍໃຫ້ຜູ້ຕອບໄດ້ພິຈາລະນາຊອກຫາຄໍາຕອບໄດ້ສະດວກ ແລະ ປ້ອງກັນການເດົາຄໍາຕອບ.

(8) ໃຊ້ຕົວເລືອກປາຍເປີດ ແລະ ປາຍປິດໃຫ້ເໝາະສົມ ໂດຍທົ່ວໄປເອກະສານທີ່ກ່ຽວຂ້ອງກັບການວັດຜົນ, ປະເມີນຜົນ ໄດ້ສະເໜີແນະການນໍາໃຊ້ຕົວເລືອກຈາກຂໍ້ປາຍເປີດ ແລະ ປາຍປິດ.

(9) ຂໍ້ໜຶ່ງຕ້ອງມີຄໍາຕອບດຽວທີ່ຖືກຕ້ອງ, ແຕ່ບາງຄັ້ງຜູ້ອອກຂໍ້ສອບຈະເຮັດແບບຟ້າວຟັ່ງ ຫຼື ການຂຽນຕົວເລືອກບໍ່ຮັດກຸມ ຈຶ່ງພິຈາລະນາຕົວເລືອກໃນອີກແງ່ໜຶ່ງ ເຮັດໃຫ້ເກີດບັນຫາສອງແງ່ສອງມຸມ.

(10)ຂຽນຕົວຖືກ ແລະ ຕົວຜິດໃຫ້ຖືກຕ້ອງ ຫຼືຜິດຕາມຫຼັກວິຊາຄື: ຈະກໍານົດຕົວຖືກ ຫຼື ຕົວຜິດເພາະສອດຄ່ອງກັບຄວາມເຊື່ອຂອງສັງຄົມ ຫຼື ຄວາມເວົ້າທົ່ວໆໄປບໍ່ໄດ້, ເນື່ອງຈາກການຮຽນ-ການສອນມີຈຸດປະສົງໃຫ້ຜູ້ຕອບຊອກຫາຄວາມຈິງຕາມຫຼັກວິຊາເປັນສໍາຄັນ ຈະນໍາຄວາມເຊື່ອໂຊກລາງ, ອັດທະນະທໍາ, ຮີດຄອງປະເພນີທ້ອງຖິ່ນມາອ້າງບໍ່ໄດ້.

(11)ຂຽນຕົວເລືອກເປັນອິດສະລະ, ພະຍາຍາມບໍ່ໃຫ້ຕົວເລືອກຕົວໃດຕົວໜຶ່ງເປັນສ່ວນໜຶ່ງ ຫຼື ເປັນສ່ວນປະກອບຂອງຕົວເລືອກອື່ນ, ຕ້ອງໃຫ້ຕົວເລືອກເປັນອິດສະຫຼະເຊິ່ງກັນ ແລະ ກັນຢ່າງແທ້ຈິງ.

(12)ຄວນມີຕົວເລືອກ 4-5 ໂຕ.

(13)ຢ່າແນະນໍາຄໍາຕອບ

## 2.1.9ຄວາມເພິ່ງພໍໃຈໃນການຮຽນຮຽນ

### 1) ຄວາມໝາຍຂອງຄວາມເພິ່ງພໍໃຈ

ຄວາມເພິ່ງພໍໃຈເປັນປັດໃຈອັນເປັນພື້ນຖານອັນໜຶ່ງທີ່ມີຜົນໃນການຮຽນຮູ້ຂອງຜູ້ຮຽນ ເຮັດໃຫ້ຜົນການຮຽນຂອງຜູ້ຮຽນເປັນໄປຕາມເປົ້າໝາຍທີ່ວາງໄວ້, ເຊິ່ງມີຫຼາຍທ່ານໄດ້ໃຫ້ຄວາມໝາຍຂອງຄວາມເພິ່ງພໍໃຈເຊັ່ນ:

ກິຕິມາ ປີຄີດີລົກ(2529:21) ໄດ້ກ່າວວ່າ: ຄວາມເພິ່ງພໍໃຈຫໝາຍເຖິງ ຄວາມຮູ້ສຶກທີ່ມັກ ຫຼື ພໍໃຈທີ່ມີຕໍ່ອົງປະກອບ ແລະ ສິ່ງຈູງໃຈໃນດ້ານຕ່າງໆຂອງວຽກ ແລະ ຜູ້ປະຕິບັດວຽກນັ້ນໄດ້ຮັບການຕອບສະໜອງຕາມຄວາມຕ້ອງການຂອງເຂົາໄດ້.

ລັກຄະນາ ສີລະອັນ (2539:132) ໄດ້ໃຫ້ຄວາມໝາຍວ່າ ຄວາມເພິ່ງພໍໃຈໝາຍເຖິງພຶດຕິກ□າທີ່ສະໜອງຄວາມຕ້ອງການຂອງມະນຸດ ແລະ ເປັນພຶດຕິກໍາທີ່ນໍາໄປສູ່ຈຸດມຸ້ງໝາຍທີ່ຕັ້ງໄວ້.

Good, C.V, (1973:165)ໄດ້ກ່າວວ່າ ຄວາມເພິ່ງພໍໃຈໝາຍເຖິງສະພາບ ຫຼື ລະດັບຄວາມເພິ່ງພໍໃຈທີ່ເປັນຜົນມາຈາກຄວາມສົນໃຈ ແລະ ເຈຕະຄະຕິ ຂອງບຸກຄົນທີ່ມີຕໍ່ວຽກງານ.

ດາລີ ສຸລິພົນ(2545:39)ໄດ້ໃຫ້ຄວາມໝາຍວ່າ ທັດສະນະຄະຕິໂດຍມໍທົ່ວໄປຂອງບຸກຄົນທີ່ຈະນໍາໄປສູ່ການປະເມີນຜົນ ແລະ ຄວາມຄາດຫວັງຕໍ່ວຽກງານ.

ພົນ ຄົງພູນ (2529:389) ໄດ້ກ່າວເຖິງຄວາມໝາຍຄວາມເພິ່ງພໍໃຈ ໝາຍເຖິງຄວາມຮູ້ສຶກ ຫຼື ທັດສະນະຄະຕິຂອງບຸກຄົນຕໍ່ການປະຕິບັດວຽກງານດ້ວຍຄວາມສຸກຈົນເປັນຜົນໃຫ້ການເຮັດວຽກນັ້ນປະສົບຄວາມສໍາເລັດສະໜອງນະໂຍບາຍ ແລະ ວັດຖຸປະສົງຂອງການໃນອົງກອນທຸກອົງກອນ ອົງກອນໃດກໍ່ຕາມຖ້າມີບຸກຄົນທີ່ປະຕິບັດວຽກງານດວ້ຍຄວາມເຕັມໃຈ ມີຄວາມສຸກ ອົງກອນນັ້ນຈະພັດທະນາຢ່າງບໍ່ມີວັນສິ້ນສຸດ.

ສູລາງ ໂຄ້ຕະກຸນ (2544:179) ໄດ້ກ່າວວ່າຄວາມເພິ່ງພໍໃຈເປັນອົງປະກອບຄວາມສໍາຄັນໃນການຮຽນຮູ້ ຄວາມສໍາເລັດຜົນໃນການຮຽນຂອງນັກຮຽນນອກຈາກຈະຂຶ້ນກັບຄວາມສາມາດແລ້ວຍັງຂຶ້ນກັບຄວາມເພິ່ງພໍໃຈນໍາອີກ.

### 2) ທິດສະດີຄວາມເພິ່ງພໍໃຈ

Herzberg, Frederisk et al (1970:113-115ອ້າງຈາກຊາດຊາຍ ເນືອງໂນລາດ, 2549:52)ໄດ້ສຶກສາຄົ້ນຄ້ວາທິດສະດີທີ່ເປັນມູນເຫດທີ່ເຮັດໃຫ້ເກີດຄວາມເພິ່ງພໍໃຈ ເອີ້ນວ່າ The motivationHygiene Theoryທິດສະດີນີ້ໄດ້ເວົ້າເຖິງປັດໄຈທີ່ເຮັດໃຫ້ເກີດຄວາມພໍໃຈໃນການເຮັດວຽກ 2 ປັດໃຈຄື:

(1) ປັດໄຈກະຕຸ້ນເປັນປັດໄຈທີ່ກ່ຽວກັບການເຮັດວຽກ ເຊິ່ງມີຜົນກໍ່ໃຫ້ເກີດຄວາມເພິ່ງພໍໃຈໃນການເຮັດວຽກເຊັ່ນ: ຄວາມສໍາເລັດຂອງວຽກ, ການໄດ້ຮັບຄວາມຍ້ອງຍໍນັບຖື, ລັກສະນະຂອງວຽກ, ຄວາມຮັບຜິດຊອບ ແລະ ຄວາມກ້າວໜ້າໃນການຕໍາແໜ່ງວຽກງານ.

(2) ປັດໄຈຄ້ຳຈຸນເປັນປັດໄຈທີ່ກ່ຽວຂ້ອງກັບສິ່ງແວດລ້ອມໃນການເຮັດວຽກ ແລະ ມີໜ້າທີ່ເຮັດໃຫ້ບຸກຄົນເກີດຄວາມເພິງພໍໃຈໃນການເຮັດວຽກເຊັ່ນ: ໂອກາດທີ່ຈະກ້າວໜ້າໃນອານາຄົດ, ສະຖານະຂອງອາຊີ, ສະພາບຂອງການເຮັດວຽກ ເປັນຕົ້ນ.

Chester, B. (1968:339) ໄດ້ກ່າວໄວ້ວ່າ ຄວາມເພິງພໍໃຈຕໍ່ການເຮັດວຽກ ຫຼື ເຮັດກິດຈະກ□ານັ້ນຂຶ້ນກັບການກະຕຸ້ນຂອງສິ່ງຈູງໃຈ 8 ປະການຄື:

(1) ສິ່ງຈູງໃຈທີ່ເປັນວັດຖຸໄດ້ແກ່ ເງິນ, ຄຳ, ສິ່ງຂອງ, ເຄື່ອງມື, ເຄື່ອງໃຊ້.

(2) ສິ່ງຈູງໃຈທີ່ເປັນໂອກາດຂອງບຸກຄົນໄດ້ແກ່ຊື່ສຽງ, ກຽດຕິຍົດ,ອຳນາດພິເສດ,ຕຳແໜ່ງ.

(3) ສິ່ງຈູງໃຈທີ່ເປັນສະພາບໄດ້ແກ່ ສະພາບແວດລ້ອມທີ່ກ່ຽວກັບການເຮັດວຽກ.

(4) ສິ່ງຈູງໃຈທີ່ເປັນອຸດົມຄະຕິໄດ້ແກ່ ຄວາມເພິງພໍໃຈຂອງບຸກຄົນທີ່ໄດ້ສະແດງສີມື, ຄວາມຮູ້ສຶກທີ່ໄດ້ເຮັດຢ່າງເຕັມທີ່.

(5) ສິ່ງຈູງໃຈທີ່ເປັນຄວາມອີງດູດໃຈ ທາງສັງຄົມໄດ້ແກ່ ຄວາມສຳພັນກັບເພື່ອນຮ່ວມງານ, ການຍົກຍ້ອງນັບຖືເຊິ່ງກັນ ແລະ ກັນ.

(6) ສິ່ງຈູງໃຈທີ່ເປັນສະພາບການເຮັດວຽກໄດ້ແກ່ ການປັບປຸງວິທີການເຮັດວຽກໃຫ້ສອດ ຄ່ອງກັບຄວາມສາມາດ ແລະ ໃຫ້ສອດຄ່ອງກັບທັດສະນະຄະຕິຂອງແຕ່ລະບຸກຄົນ.

(7) ສິ່ງຈູງໃຈທີ່ເອື້ອອຳນວຍໂອກາດໃຫ້ມີສ່ວນຮ່ວມໃນການເຮັດວຽກໄດ້ແກ່ ການມີໂອກາດສະແດງຄວາມຄິດເຫັນ ແລະ ມີສ່ວນຮ່ວມໃນໜ້າວຽກທຸກຢ່າງທີ່ທາງໜ່ວຍງານຈັດຂຶ້ນ.

(8) ສິ່ງຈູງໃຈທີ່ເປັນສະພາບການຢູ່ຮ່ວມກັນໄດ້ແກ່ ຄວາມພໍໃຈຂອງບຸກຄົນທີ່ໄດ້ຢູ່ຮ່ວມກັນ, ການຮູ້ຈັກກັນຢ່າງກ້ວາງແຂວງ, ຄວາມສະນິດສະໜົມ, ຄວາມຮ່ວມມືໃນການເຮັດວຽກ.

### 2.1.10 ການຫາຄຸນນະພາບຂອງຂໍ້ສອບ

ໃນການຫາຄຸນນະພາບຂອງຂໍ້ສອບວັດຜົນສຳເລັດທາງການຮຽນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ປະຕິ ບັດຕາມຂັ້ນຕອນດັ່ງນີ້:

(1) ນຳແບບທົດສອບໄປຜ່ານອາຈານທີ່ປຶກສາບົດວິທະຍານິພົນ ເພື່ອກວດກາຄຸນນະພາບທາງດ້ານເນື້ອໃນ, ຄວາມສອດຄ່ອງ ແລະ ຄວາມຖືກຕ້ອງທາງດ້ານການນຳໃຊ້ພາສາ.

(2) ນຳແບບທົດສອບມາປັບປຸງຕາມການແນະນຳຂອງຄູທີ່ປຶກສາ ແລະ ນຳສະເໜີຜູ້ຊ່ຽວຊານຈຳນວນ 3 ທ່ານ ເພື່ອໃຫ້ຜູ້ຊ່ຽວຊານຄ່າດັດຊະນີຄວາມສອດຄ່ອງ ລະຫວ່າງ ແບບທົດສອບກັບຈຸດປະສົງ ໂດຍກຳນົດຄະແນນຄວາມຄິດເຫັນໄວ້ດັ່ງນີ້:

+1 ໝາຍເຖິງ ແນ່ໃຈວ່າ ຄຳຖາມມີຄວາມສອດຄ່ອງກັບຈຸດປະສົງ

0 ໝາຍເຖິງ ບໍ່ແນ່ໃຈວ່າ ຄຳຖາມມີຄວາມສອດຄ່ອງກັບຈຸດປະສົງ ຫຼື ບໍ່

-1ໝາຍເຖິງ ແນ່ໃຈວ່າ ຄຳຖາມບໍ່ມີຄວາມສອດຄ່ອງກັບຈຸດປະສົງ

ໂດຍຄິດໄລ່ຕາມສູດ(ສົມນຶກ ພັດທິຍະທະນີ, 2548:166-167)

$$\boldsymbol{IOC = \frac{\sum R}{N}}$$

ເມື່ອ $IOC$ແທນ ຄວາມທ່ຽງຕົງຂອງດັດຊະນີຄວາມສອດຄ່ອງ ລະຫວ່າງ ຂໍ້ສອບ ແລະ ຈຸດປະສົງ

$\sum R$ແທນ ຜົນລວມຂອງຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ ດ້ານເນື້ອໃນວິຊາທັງໝົດ

N ແທນ ຈຳນວນຜູ້ຊ່ຽວຊານດ້ານເນື້ອໃນທັງໝົດ

ຄວາມທ່ຽງຕົງທີ່ໃຊ້ໄດ້ຕ້ອງມີຄ່າດັດສະນີຄວາມສອດຄ່ອງຂອງບົດທົດສອບແມ່ນມີຄ່າຢູ່ລະຫວ່າງ 0,5-1.00

(3) ນຳເອົາແບບທົດສອບທີ່ມີຄ່າດັດສະນີຄວາມສອດຄ່ອງ (IOC)ຕັ້ງແຕ່ 0.5ຂຶ້ນໄປ ໄປທົດສອບກັບນັກສຶກສາຄູ ທີ່ບໍ່ແມ່ນກຸ່ມທົດລອງຈິງ, ໂດຍຜູ້ຄົ້ນຄວ້າເປັນຜູ້ດຳເນີນການທົດລອງດ້ວຍຕົວເອງ ເພື່ອນຳມາຄຳນວນຫາຄ່າຄວາມຍາກງ່າຍ ແລະ ຄ່າອຳນາດຈຳແນກ.

(4) ການຫາຄ່າຄວາມຍາກງ່າຍ

ການຫາຄ່າຄວາມຍາກງ່າຍໂດຍໃຊ້ສູດ

$$\boldsymbol{P = \frac{N_R}{N}}$$

ເມື່ອ P ແທນ ຄ່າຄວາມຍາກງ່າຍຂອງແບບທົດສອບ

$N_R$ແທນ ຈຳນວນນັກສຶກສາທີ່ຕອບຂໍ້ສອບຖືກ

Nແທນ ຈຳນວນັກສຶກສາທີ່ຕອບຂໍ້ສອບທັງໝົດ

ສະຫຼຸບກ່ຽວກັບການຄ່າຄວາມຍາກງ່າຍຂອງຂໍ້ສອບ:

- ຄ່າດັດສະນີຄວາມຍາກຈະມີຄ່າຕໍ່າສຸດເປັນ 0 ແລະ ມີຄ່າສູງສຸດເປັນ 1
- ຄ່າດັດສະນີຄວາມຍາກເປັນຄ່າທີ່ບອກໃຫ້ຮູ້ວ່າມີຜູ້ຕອບຂໍ້ນັ້ນຖືກຄິດເປັນສັດສ່ວນເທົ່າໃດ ຫຼື ຄິດເປັນສ່ວນຮ້ອຍເທົ່າໃດ ແລະ ຍັງບໍ່ໄດ້ວ່າມີຜູ້ຕອບຜິດເປັນສັດສ່ວນເທົ່າໃດ.
- ຄ່າດັດສະນີຄວາມຍາກທີ່ເຂົ້າໄກ້ 0 ສະແດງວ່າຂໍ້ສອບຍາກ ແຕ່ຖ້າຄ່າດັດສະນີເຂົ້າໄກ້ 1 ສະແດງວ່າຂໍ້ສອບນັ້ນງ່າຍ.
- ຄ່າດັດສະນີຄວາມຍາກທີ່ໄດ້ 0.50 ສະແດງວ່າຜູ້ຕອບຂໍ້ນັ້ນຖືກຮ້ອຍລະ 50 ຫຼື ຜິດຮ້ອຍລະ 50 ໝາຍເຖິງຂໍ້ສອບນັ້ນມີຄວາມຍາກ-ງ່າຍ ປານກາງ ຫຼືວ່າເປັນຄວາມຍາກງ່າຍພໍດີ.

ເກນການແປຄວາມໝາຍຄ່າຄວາມຍາກ-ງ່າຍ ຄ່າ P

ຄ່າ P=0.81 - 1.00 ສະແດງວ່າ ຂໍ້ສອບງ່າຍ

ຄ່າ P=0.60 - 0.80 ສະແດງວ່າ ຂໍ້ສອບຂ້ອນຂ້າງງ່າຍ

ຄ່າ P=0.40 - 0.59 ສະແດງວ່າ ຂໍ້ສອບຍາກປານກາງ

ຄ່າ P=0.2 - 0.39 ສະແດງວ່າ ຂໍ້ສອບຂ້ອນຂ້າງຍາກ

ຄ່າ P=0 – 0.19 ສະແດງວ່າ ຂໍ້ສອບຍາກຫຼາຍ

ລະດັບຄວາມຍາກງ່າຍຂອງຂໍ້ສອບທີ່ເໝາະສົມແມ່ນຢູ່ລະຫວ່າງ $0.2 \leq P \leq 0.8$(ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ,2543:185).

1) ການຫາຄ່າອຳນາດຈຳແນກຂອງແບບທົດສອບວັດຜົນສຳເລັດທາງການຮຽນ

$$r = \frac{H-L}{N}$$

ເມື່ອr ແທນ ດັດຊະນີອ□ນາດຈ□າແນກ

H ແທນ ຈ□ານວນນັກສຶກສາທີ່ຕອບຖືກໃນກຸ່ມສູງ.

Lແທນ ຈຳນວນນັກສຶກສາທີ່ຕອບຖືກໃນກຸ່ມຕໍ່າ.

N ແທນ ຈ□ານວນຄົນໃນກຸ່ມສູງ ຫຼື ກຸ່ມຕໍ່າ.

ໝາຍເຫດ:

- ຂໍ້ສອບທີ່ມີຄຸນນະພາບຕ້ອງມີຄ່າອຳນາດຈຳແນກ$0.2 \leq r \leq 1.00$.

2) ການຫາຄ່າຄວາມເຊື່ອໝັ້ນຂອງແບບທົດສອບໂດຍໃຊ້ສູດຄິດໄລ່

$$r_{tt} = \frac{n}{n-1}\left[1 - \frac{\sum pq}{s_1^2}\right]$$

ເມື່ອ $r_{tt}$ ແມ່ນຄ່າຄວາມເຊື້ອໝັ້ນໃນເຄື່ອງມືວັດ

N ແມ່ນຈຳນວນຂໍ້ສອບເຄື່ອງມືວັດ

P ແມ່ນສັດສ່ວນຂອງຜູ້ເຮັດຂໍ້ສອບຖືກໃນແຕ່ລະຂໍ້ P = $\frac{\text{ຈຳນວນຄົນທີ່ເຮັດຜິດໃນຂໍ້ນັ້ນ}}{\text{ຈຳນວນຄົນທັງໝົດ}}$

q ແມ່ນສັດສ່ວນຂອງຜູ້ເຮັດຜິດໃນແຕ່ລະຂໍ້

$\sum$ ແມ່ນເຄື່ອງສະແດງຜົນບວກ $\sum pq$ຫຼື ຜົນບວກຂອງpq

$S_1^2$ ແມ່ນຄ່າຄວາມຜັນປ່ຽນຂອງຄະແນນລວມ(ສົມນຶກ ພັດທິຍາທານີ, 2552:147)

3) ນຳເອົາແບບທົດສອບທີ່ໄດ້ໄປທົດສອບກັບນັກສຶກສາຄູສາຍປະຖົມ ລະບົບ 12+4ປີ 4 ຫ້ອງ 4ຂ ຈຳນວນ 31 ຄົນ.

4) ນຳເອົາແບບທົດສອບມາປັບປຸງໃຫ້ສອດຄ່ອງ ແລະ ນຳໄປທົດລອງກັບນັກສຶກສາຄູສາຍປະຖົມ ລະບົບ 12+4ປີ 4ຫ້ອງ 4ຂທີ່ເປັນກຸ່ມທົດລອງ ຈຳນວນ 31 ຄົນ.

## 2.2 ທົບທວນບົດຄົ້ນຄວ້າວິທະຍາສາດທີ່ກ່ຽວຂ້ອງ

ລັດຊະນີ ທາເຫຼັກ (2556:59) ໄດ້ໄດ້ເຮັດການຄົ້ນຄວ້າເລື່ອງຜົນການຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ (Jigsaw)ເລື່ອງເສັ້ນຂະໜານທີ່ມີຕໍ່ຄວາມສາມາດໃນການຄິດວິເຄາະ ຂອງນັກຮຽນຊັ້ນມັດທະຍົມສຶກສາຊັ້ນປີທີ 2 ຈຳນວນນັກຮຽນ 32 ຄົນ ທີ່ໂຮງຮຽນສອນແດງວິທະຍາ ອຳເພີເມືອງ ຈັງຫວັດສຸພັນບູລີ. ຜົນການສຶກສາພົບວ່າ:

1) ຄວາມສາມາດໃນການຄິດວິເຄາະຂອງນັກຮຽນຊັ້ນມັດທະຍົມປີທີ 2 ຫຼັງໄດ້ຮັບການຈັດການຮຽນຮູ້ດ້ວຍເທັກນິຈິກຊໍ ສູງກວ່າໄດ້ຮັບການຮຽນຮູ້ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .01.

2) ຄວາມສາມາດໃນການຄິດວິເຄາະຂອງນັກຮຽນຊັ້ນມັດທະຍົມປີທີ 2 ຫຼັງໄດ້ຮັບການຈັດການຮຽນຮູ້ດ້ວຍເທັກນິກຈິກຊໍ ສູງກວ່າເກນຮ້ອຍລະ 65 ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .01.

ອະນິດາ ຊົມພູພົງ (2556:597) ໄດ້ເຮັດບົດຄົ້ນຄ້ວາໃນຫົວຂໍ້ ຜົນການໃຊ້ຊຸດການຮຽນແບບຮ່ວມມືດ້ວຍເທັກນິກຈິກຊໍ ເລື່ອງ ພູມສາດປະເທດໄທທີ່ມີຕໍ່ຜົນສຳເລັດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນເທດສະບານ 4 (ເຊົາວັນປຣິຊາອຸທິດ) ໃນພາກຮຽນທີ 2 ສົກຮຽນ 2556 ຈຳນວນ 36 ຄົນ. ຜົນການຄົ້ນຄ້ວາພົບວ່າ:

1) ຊຸດການຮຽນແບບຮ່ວມມືເລື່ອງ ພູມມິສາດປະເທດໄທ ມີປະສິດທິພາບ 83.33/82.29ສູງຂຶ້ນກວ່າເກນທີ່ກຳນົດໄວ້ 70/70.

2) ຜົນສຳເລັດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1ໂຮງຮຽນເທດສະ ບານ 4 (ເຊົາວັນປຣິຊາອຸທິດ) ທີ່ຮຽນດ້ວຍຊຸດການຮຽນແບບຮ່ວມມື ເລື່ອງ ພູມມິສາດປະເທດໄທ ຫຼັງການຮຽນສູງກວ່າກ່ອນການຮຽນຢ່າງມີໃນສຳຄັນທາງສະຖິຕິທີ່ລະດັບ .01.

3) ຄວາມເພິງພໍໃຈຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນເທດສະບານ 4 (ເຊົາວັນປຣິຊາອຸທິດ) ທີ່ມີຕໍ່ການຮຽນດ້ວຍຊຸດການຮຽນແບບຮ່ວມມື ເລື່ອງ ພູມມິສາດປະເທດໄທ ຢູ່ໃນລະດັບດີຫຼາຍທີ່ສຸດ.

ສຸວັນນາ ສະຫງວນຮັດ (2558: 55)ໄດ້ເຮັດການຄົ້ນຄວ້າເລື່ອງ ການສຶກສາຜົນສຳເລັດທາງການຮຽນດ້ວຍວິທີຈັດກິດຈະກຳການຮຽນຮູ້ດ້ວຍກຸ່ມຮ່ວມມືແບບຈິກຊໍ ເພື່ອພັດທະນາຄວາມຮູ້ ຄວາມເຂົ້າໃຈ ລາຍວິຊາ

EDCI201 ການອອກແບບການຈັດການຮຽນຮູ້ ກັບນັກສຶກສາຊັ້ນປີທີ່ 3 ສາຂາພາສາໄທ ຄະນະຄຣຸສາດ ພາກຮຽນທີ 2 ປີການສຶກສາ 2557ຈຳນວນ 30 ຄົນ ຜົນການຄົ້ນຄວ້າພົບວ່າ:

1) ການຈັດກິດຈະກຳການຮຽນຮູ້ດ້ວຍກຸ່ມຮ່ວມມືແບບຈິກຊໍ ກຸ່ມຕົວຢ່າງມີຜົນສຳ ເລັດທາງການຮຽນຫຼັງຮຽນສູງກວ່າກ່ອນຮຽນ ແຕກຕ່າງກັນຢ່າງມີໄນສຳຄັນທາງສະຖິຕິທີ່ລະດັບ .01

2) ຜົນການພັດທະນາຄວາມຮູ້ ຄວາມເຂົ້າໃຈພົບວ່າ ນັກສຶກສາສາມາດສອບຜ່ານເກນຮ້ອຍລະ 75ຂຶ້ນໄປ ຄິດເປັນຮ້ອຍລະ 87.00ຂອງຈຳນວນນັກສຶກສາທັງໝົດ

3) ການຈັດກິດຈະກຳການຮຽນການສອນນີ້ພາບລວມມີຄວາມເໝາະສົມຢູ່ໃນລະດັບຫຼາຍທີ່ສຸດ

4) ຄວາມຄິດເຫັນ ແລະ ຂໍ້ສະເໜີແນະທີ່ເປັນໜ້າສົນໃຈ ຄື: 1) ດ້ານເນື້ອຫາ ວິທີການ ແລະ ເທັກນິກການຮຽນ-ການສອນວິທີນີ້ເໝາະສົມກັບເລື່ອງທີ່ສອນຊ່ວຍສ້າງບັນຍາກາດການຮຽນໃຫ້ສະໜຸກສະໜານ ບໍ່ໜ້າເບື່ອ ສາມາດທຳຄວາມເຂົ້າໃຈເນື້ອຫາໄດ້ດີ ການຈັດກຸ່ມເໝາະສົມບໍ່ ໃຫຍ່ເກີນໄປເວລາເໝາະສົມກັບເນື້ອຫາ. 2) ດ້ານບຸກຄະລິກລັກສະນະຂອງອາຈານ ຜູ້ສອນມີຄວາມຮູ້ດີ ເຂົ້າສອນກົງເວລາ ໃຊ້ຄຳເວົ້າເໝາະສົມ ແຕ່ງກາຍສຸພາບສະອາດເປັນແບບຢ່າງທີ່ດີແກ່ນັກສຶກສາ.3) ດ້ານສື່ປະກອບການສອນອາຈານມີ ໜັງສື ເອກະສານປະກອບການສອນລາຍວິຊາ EDCI201ການອອກແບບການຈັດການຮຽນຮູ້ ແລະ ມີເຈ້ຍກິດຈະກຳດ່ຽວ ເຈ້ຍກິດຈະກ□າ ແບບທົດສອບ ແລະ ຫ້ອງຮຽນມີເຄື່ອງມືອຸປະກອນ ເຊັ່ນ: ຄອມພິວເຕີ ເຄື່ອງສຽງ ໄມໂຄຣໂຟນ ທີ່ມີປະສິດທິພາບສູງຫຼາຍ ເຮັດໃຫ້ການຮຽນ-ການສອນເປັນໄປດ້ວຍຄວາມສະດວກສະບາຍ ແລະ ມີປະສິດທິຜົນ. 4) ດ້ານການວັດ ແລະ ປະເມີນຜົນຂໍ້ສອບ ຄ່ອນຂ້າງຍາກການອອກຂໍ້ສອບຄິດວ່າອາຈານໄດ້ອອກຂໍ້ສອບຄອບຄລຸມທຸກປະເດັນແລ້ວການກວດໃຫ້ຄະແນນປະເມີນຜົນມີຄວາມຍຸດຕິທຳກັບຜູ້ຮຽນ.

## 2.3 ຂອບເຂດແນວຄິດ

ການດຳເນີນການຄົ້ນຄ້ວາຄັ້ງນີ້ຜູ້ຄົ້ນຄ້ວາໄດ້ກຳນົດແນວຄວາມຄິດຂອງການຄົ້ນຄ້ວາໄວ້ດັ່ງສະແດງໃນພາບລຸ່ມນີ້:

**<u>ຕົວປ່ຽນຕົ້ນ</u>**

ວິທີສອນແບບຈິກຊໍ (Jigsaw)ຕາມ 6 ຂັ້ນຕອນ: (ຂັ້ນກະກຽມ, ຂັ້ນຈັດກຸ່ມຜູ້ຮຽນ, ຂັ້ນກຸ່ມຜູ້ຊ່ຽວຊານສຶກສາຮຽນຮູ້, ຂັ້ນສະມາຊິກກຸ່ມຜູ້ຊ່ຽວຊານສະເໜີຄວາມຮູ້, ຂັ້ນທົດສອບຄວາມຮູ້, ຂັ້ນມອບລາງວັນ

⇒

**<u>ຕົວປ່ຽນຕາມ</u>**

1. ປະສິດທິພາບຂອງບົດສອນວິຊາຫຼັກສູດແລະການສອນພາສາອັງກິດໂດຍນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw). ຕາມເກນ 80/80.
2. ປະສິດທິຜົນການຮຽນຮູ້ຂອງນັກຮຽນທີ່ຮຽນວິຊາຫຼັກສູດແລະການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw).
3. ຄວາມເພິ່ງພໍໃຈຂອງນັກຮຽນຕໍ່ກັບການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw). ເຂົ້າໃນການຮຽນ-ການສອນວິຊາຫຼັກສູດແລະການສອນພາສາອັງກິດ.

**ຮູບ2:**ຂອບເຂດຂອງການຄົ້ນຄ້ວາ

## 2.4 ນິຍາມຄຳສັບທີ່ໃຊ້ໃນທາງປະຕິບັດ

***ເທັກນິກການສອນແບບຈິກຊໍ* (Jigsaw)** ໝາຍເຖິງການຈັດການຮຽນຮູ້ແບບຮ່ວມມືດ້ວຍການຈັດນັກຮຽນອອກເປັນກຸ່ມເພື່ອໃຫ້ນັກຮຽນໄດ້ສະແດງຄວາມຄິດເຫັນຢ່າງເປັນອິດສະຫຼະ, ເຊິ່ງເທັກນິກການສອນແບບຈິກຊໍ ໄດ້ແບ່ງອອກເປັນ 6 ຂັ້ນຕອນ ຄື: ຂັ້ນກະກຽມເນື້ອໃນ, ຂັ້ນຈັດກຸ່ມຜູ້ຮຽນ, ຂັ້ນກຸ່ມຜູ້ຊ່ຽວຊານ, ຂັ້ນສະມາຊິກຜູ້ຊ່ຽວຊານສະເໜີຄວາມຮູ້, ຂັ້ນທົດສອບຄວາມຮູ້ ແລະ ຂັ້ນມອບລາງວັນ.

***ປະສິດທິພາບຂອງບົດສອນ***ໝາຍເຖິງຄວາມສາມາດໃນການພັດທະນາທັກສະການຮຽນຮູ້ ວິຊາຫຼັກສູດ ແລະ ການສອນພາສາອັງກິດ.

**$E_1$**ໝາຍເຖິງເປີເຊັນຂອງຄະແນນສະເລ່ຍທີ່ໄດ້ຈາກການເຮັດກິດຈະກຳລະຫວ່າງຮຽນຂອງນັກສຶກສາທີ່ໄດ້ຈາກວິທີສອນແບບຈິກຊໍ.

**$E_2$**ໝາຍເຖິງເປີເຊັນຂອງຄະແນນສະເລ່ຍທີ່ໄດ້ຈາກການເຮັດບົດທົດສອບພາຍຫຼັງການຮຽນຮູ້ຂອງນັກສຶກສາທີ່ຜູ້ສອນນຳໃຊ້ວິທີສອນແບບຈິກຊໍ.

***ປະສິດທິຜົນຂອງການຮຽນຮູ້ໂດຍນຳໃຊ້ວິທີສອນແບບຈິກຊໍ* (Jigsaw)**ໝາຍເຖິງຄວາມເຂົ້າໃຈທີ່ສູງຂຶ້ນເຊິ່ງໄດ້ຈາກການເຮັດບົດທົດສອບສຳທາງການຮຽນທີ່ຜູ້ຄົ້ນຄວ້າສ້າງຂຶ້ນ.

***ຄວາມເພິ່ງພໍໃຈ***: ໝາຍເຖິງຄວາມຮູ້ສຶກນຶກຄິດນັກສຶກສາຕໍ່ກັບການສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ວິທີສອນແບບຈິກຊໍ.

# ພາກທີ 3

# ວິທີການຄົ້ນຄວ້າວິທະຍາສາດ

ການຄົ້ນຄ້ວາຄັ້ງນີ້ເປັນການສຶກສາແບບທົດລອງ (Experimental Research) ເຊິ່ງມີຈຸດປະສົງເພື່ອສຶກສາປະສິດທິພາບຂອງບົດສອນ, ປະສິດທິຜົນຂອງການຮຽນຮູ້ ແລະ ຄວາມເພິງພໍໃຈຂອງນັກຮຽນ ໂດຍການນຳໃຊ້ເທັກນິກຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດ ສຳລັບນັກສກສາຄູຊັ້ນປະຖົມລະບົບ 12+4 ທີ່ວິທະຍາໄລຄູປີທີ 4 ສົກຮຽນ 2017-2018. ເຊິ່ງຜູ້ຄົ້ນຄ້ວາໄດ້ດ□າເນີນການຄົ້ນຄ້ວາຕາມຂັ້ນຕອນຕ່າງໆ ດັ່ງລາຍລະອຽດລຸ່ມນີ້:

## 3.1 ການອອກແບບການສຶກສາ

ການຄົ້ນຄ້ວາຄັ້ງນີ້ເປັນການຄົ້ນຄ້ວາຮູບແບບການທົດລອງ (experimental Research) ເຊິ່ງຜູ້ຄົ້ນຄ້ວາໄດ້ດຳເນີນການທົດລອງໂດຍນຳໃຊ້ການທົດລອງຂັ້ນພື້ນຖານ (Pre-experimental Design) ແບບທົດສອບກ່ອນການສອນ ແລະ ທົດສອບຫຼັງການສອນດັ່ງນີ້:

| ຮູບແບບ | Pre-test | Treatment | Post-test |
|---|---|---|---|
| ກຸ່ມທົລອງ | $Q_1$ | X | $Q_2$ |

$Q_1$ ແທນ ການທົດສອບກ່ອນການຮຽນ

$Q_2$ ແທນ ການທົດສອບຫຼັງການຮຽນ

X ແທນ ຂະບວນການຈັດການຮຽນ-ການສອນໂດຍນຳໃຊ້ເທັກນິການສອນແບບຈິກຊໍ Jigsaw).

## 3.2 ປະຊາກອນ ແລະ ກຸ່ມທົດລອງ

1) ປະຊາກອນໃນການຄົ້ນຄ້ວາຄັ້ງນີ້ແມ່ນນັກສຶກສາຄູສາຍຄູປະຖົມລະບົບ 12+4 ປີທີ4 ຈຳນວນ ສອງຫ້ອງ ມີຈຳນວນນັກສຶກສາທັງໝົດ66ຄົນທີ່ກຳລັງສຶກສາຢູ່ທີ່ວິທະຍາໄລຄູບ້ານເກີນສົກຮຽນ 2017-2018.

2) ກຸ່ມຕົວຢ່າງໃນການຄົ້ນຄວ້າຄັ້ງນີ້ແມ່ນນັກສຶກສາຄູສາຍຄູປະຖົມລະບົບ 12+4 ປີທີ4 ຈຳນວນ1 ຫ້ອງມີຈຳນັກສຶກສາ 30 ຄົນທີ່ກຳລັງສຶກສາທີ່ວິທະຍາໄລຄູບ້ານເກີນມາເປັນກຸ່ມທົດລອງໃນການດຳການວິໄຈຄັ້ງນີ້ດ້ວຍການເຈາະຈົງ.

## 3.3 ຂໍ້ມູນ, ວິທີເກັບຂໍ້ມູນ ແລະ ເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ

### 3.3.1 ຂໍ້ມູນ ແລະ ວິທີເກັບກາຂໍ້ມູນ

ໃນການທົດລອງ ແລະ ການເກັບກຳຂໍ້ມູນໄດ້ດຳເນີນຂັ້ນຕອນດັ່ງນີ້:

**ຕາຕະລາງ 3:** ຂໍ້ມູນໃນການທົດລອງ ແລະ ການລວບລວມຂໍ້ມູນ

| ເນື້ອໃນ | ກ່ອນການສອນ | ລະຫວ່າງສອນ | ຫຼັງການສອນ |
|---|---|---|---|
| ແບບທົດສອບຜົນສຳເລັດການຮຽນ-ການສອນ | √ | √ | √ |
| ແບບທົດສອບຍ່ອຍ | √ | √ | √ |
| ແບບປະເມີນພຶດຕິກຳ | √ | √ | √ |
| ແບບສອບຖາມຄວາມເພິງພໍໃຈ | √ | √ | √ |

### 3.3.2 ເຄື່ອງມືທີ່ໃຊ້ໃນການເກັບກາຂໍ້ມູນ

ເຄື່ອງມືທີ່ຜູ້ຄົ້ນຄ້ວາໃຊ້ໃນການເກັບກຳຂໍ້ມູນຄັ້ງນີ້ປະກອບມີ 5 ປະເພດຄື:

1) ບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດ ທີ່ນຳໃຊ້ຈິກຊໍເທັກນິກ(Jigsaw) ສຳລັບນັກສຶກສາຄູປະຖົມລະບົບ 12+4 ປີທີ 4 ຈຳນວນ 5 ບົດ, ເຊິ່ງແຕ່ລະບົດໃຊ້ເວລາ 2 ຊົ່ວໂມງລວມທັງໝົດ 10 ຊົ່ວໂມງ.

2) ແບບທົດສອບວັດຜົນສຳເລັດທາງການຮຽນ (Pre-test/Post-test) ວິຊາຫຼັກສູດ ແລະ ການສອນພາສາອັງກິດສຳລັບນັກສຶກສາຄູປະຖົມລະບົບ 12+4 ປີທີ 4 ເປັນແບບທົດສອບອີງຕາມເກນເຊິ່ງເປັນບົດທົດສອບແບບເລືອກຕອບ (ປະລາໄນ) ຈຳນວນ25ຂໍ້.

3) ບົດທົດສອບຍ່ອຍລະຫວ່າງການຮຽນຂອງ 5 ບົດສອນ ລວມທັງໝົດ 5 ບົດສອບ.

4) ແບບສັງເກດພຶດຕິກຳການຮຽນ-ການສອນ.

5) ແບບສອບຖາມວັດຄວາມເພິ່ງພໍໃຈຂອງນັກສຶກສາຄູປະຖົມລະບົບ 12+4 ປີທີ 4 ຕໍ່ການຈັດການຮຽນ-ການສອນວິຊາຫຼັກສູດ ແລະ ການສອນໂດຍນຳໃຊ້ຈິກຊໍເທັກນິກເຊິ່ງເປັນແບບວັດຄວາມເພິ່ງພໍໃຈແບບມາດຕາສ່ວນປະມານຄ່າຈຳນວນ 20 ຂໍ້.

### 3.3.3 ການສ້າງບົດສອນ

#### 1) ຂັ້ນຕອນການສ້າງບົດສອນ

ຜູ້ຄົ້ນຄ້ວາໄດ້ດຳເນີນການສ້າງບົດສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດ ສຳລັບນັກສຶກສາຄູສາຍປະຖົມ ລະບົບ 12+4ປີທີ4ຕາມຂັ້ນຕອນດັ່ງນີ້:

(1) ສຶກສາທິດສະດີ ຮູບແບບການສອນຂອງ ຈິກຊໍເທັກນິກ ເພື່ອເປັນແນວທາງໃນການສ້າງບົດສອນ.

(2) ສຶກສາຫຼັກສູດວິຊາ ຫຼັກສູດ ແລະ ການສອນພາສາອັງກິດ ຕຳລາທີ່ກ່ຽວຂ້ອງກັບວິຊາ ຫຼັກສູດ ແລະ ການສອນພາສາອັງກິດ ຕາມຫຼັກສູດສ້າງຄູສາຍຄູປະຖົມວິທະຍາໄລຄູບ້ານເກີນ.

(3) ສຶກສາຈຸດປະສົງ ແລະ ເນື້ອໃນບົດສອນວິຊາ ຫຼັກສູດ ແລະ ການສອນພາສາອັງກິດ ສຳລັບນັກສຶກສາຄູສາຍປະຖົມ ລະບົບ 12+4 ປີທີ 4 ຈາກຈຸດປະສົງ ແລະ ເນື້ອໃນຜູ້ຄົ້ນຄ້ວາສາມາດແບ່ງບົດສອນອອກເປັນ 5 ແຜນການສອນດັ່ງນີ້:

ບົດສອນທີ 1: ການສອນຄຳສັບພາສາອັງກິດ

ຈຸດປະສົງ: ນັກສຶກສາຄູສາມາດນຳສະເໜີຄຳສັບ ແລະ ອອກສຽງຄຳສັບໄດ້ຖືກວິທີ

ບົດສອນທີ 2: ການສອນການຂຽນ

ຈຸດປະສົງ: ນັກສຶກສາຄູຈະສາມາດສອນວິທີຂຽນຕົວອັກສອນພາສາອັງກິດຖືກຕາມຂັ້ນຕອນ

ບົດສອນທີ 3: ການສອນການອ່ານ

ຈຸດປະສົງ: ນັກສຶກສາຄູຈະສາມາດສອນການອ່ານໄດ້ຖືກຕ້ອງຕາມຂັ້ນຕອນ

ບົດສອນທີ 4: ການສອນການຟັງ

ຈຸດປະສົງ: ນັກສຶກສາຄູຈະສາມາດສອນການຟັງໄດ້ຖືກຕ້ອງຕາມຂັ້ນຕອນ

ບົດສອນທີ 5: ການສອນການເວົ້າ

ຈຸດປະສົງ: ນັກສຶກສາຄູຈະສາມາດສອນການເວົ້າໄດ້ຖືກຕ້ອງຕາມຂັ້ນຕອນ

(4) ສຶກສາວິທີ ແລະ ດຳເນີນກິດຈະກຳການຮຽນ-ການສອນ ຕາມຈຸດປະສົງ, ເນື້ອໃນແຕ່ລະແຜນບົດສອນຕາມ 6 ຂັ້ນຕອນຂອງວິທີສອນແບບ ຈິກຊໍ (Jigsaw) ຄືດັ່ງນີ້:




**ຮູບ3:** ການສອນ 6 ຂັ້ນຕອນ ຂອງເທັກນິກການສອນແບບຈິກຊໍ(Jigsaw)

**3) ວິທີຫາຄຸນນະພາບຂອງບົດສອນ**

(1) ສ້າງແບບປະເມີນບົດສອນສຳລັບຜູ້ຊ່ຽວຊານ

(2) ນຳເອົາບົດສອນ ແລະ ແບບປະເມີນໄປຜ່ານຄູທີ່ປຶກສາ

(3) ນຳເອົາບົດສອນມາປັບປຸງຕາມການແນະນຳຂອງຄູທີ່ປຶກສາ

(4) ນຳເອົາບົດສອນໄປຜ່ານຜູ້ຊ່ຽວຊານເພື່ອຊອກຫາຄ່າIOC

+ 1 ແນ່ໃຈວ່າ ແຜນການສອນນັ້ນສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກ□ານົດໄວ້.

0 ບໍ່ແນ່ໃຈວ່າ ແຜນການສອນນັ້ນສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກຳນົດໄວ້.

-1ແນ່ໃຈວ່າ ແຜນການສອນນັ້ນບໍ່ສອດຄ່ອງກັບເນື້ອໃນຕາມຈຸດປະສົງທີ່ກຳນົດໄວ້.

(5) ນຳເອົາບົດສອນມາປັບປຸງຕາມຄຳເຫັນຂອງຜູ້ຊ່ຽວຊານ ແລະ ນຳເອົາບົດສອນໄປທົດລອງກັບນັກສຶກສາກຸ່ມຕົວຢ່າງ ເພື່ອຫາປະສິດທິພາບຂອງບົດສອນ.

(6) ກຳນົດວິທີວັດ ແລະ ປະເມີນຜົນຄົ້ນຄວ້າໄດ້ພິຈາລະນາໃຫ້ເໝາະສົມກັບຈຸດປະສົງ ແລະ ເນື້ອໃນຂອງການຮຽນຮູ້ແຕ່ລະເລື່ອງເກນການໃຫ້ຄະແນນຜູ້ຄົ້ນຄ້ວາໄດ້ກຳນົດດັ່ງນີ້:

- ຄະແນນທົດສອບຫຼັງການຮຽນຄະແນນເຕັມເທົ່າ 5.

### 3.3.4 ວິທີເກັບກຳຂໍ້ມູນ

ການດຳເນີນການທົດລອງຄັ້ງນີ້ຜູ້ຄົ້ນຄວ້າໄດ້ເກັບກຳຂໍ້ມູນໂດຍການເອົາບົດສອນໄປທົດລອງປະຕິບັດສອນຕົວຈິງດ້ວຍຕົນເອງກັບນັກສຶກສາຄູສາຍປະຖົມລະບົບບົບ 12+4 ປີທີ 4 ໂດຍຜູ້ຄົ້ນຄວ້າເຊິ່ງໄດ້ດຳເນີນສອນຕາມຂັ້ນຕອນດັ່ງນີ້:

1) ນຳໜັງສືຂໍອະນຸມັດເກັບກຳຂໍ້ມູນຈາກຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ໄປສະເໜີຕໍ່ຄະນະອຳນວຍການວິທະຍາໄລຄູບ້ານເກິນ ແລະ ຫົວໜ້າຫ້ອງການຄູອະນຸບານ-ປະຖົມ ເພື່ອຂໍອະນຸຍາດດຳເນີນການຄົ້ນຄວ້າ.

2) ກຽມກຸ່ມນັກສຶກສາທີ່ເປັນກຸ່ມທົດລອງ.

3) ຜູ້ຄົ້ນຄວ້າດຳເນີນການສອນທົດລອງ 5 ແຜນການສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ໂດຍຜູ້ຄົ້ນຄວ້າໄດ້ກຳນົດຂັ້ນຕອນດັ່ງນີ້:

- ຄູແນະນຳວິທີການຮຽນເປັນກຸ່ມແບບຈິກຊໍ (Jigsaw)ກັບນັກຮຽນກຸ່ມຕົວຢ່າງ.
- ຄູແບ່ງນັກຮຽນອອກເປັນ5ກຸ່ມດ້ວຍວິທີໃຫ້ນັກຮຽນນັບເລກເພື່ອຈັດແບ່ງເປັນກຸ່ມ (ກຸ່ມບ້ານຂອງເຮົາ).
- ຄູຢາຍບົດທົດສອບໃຫ້ນັກສຶກສາແຕ່ລະກຸ່ມເຮັດກ່ອນການຮຽນ, ຄູເກັບບົດທົດສອບເພື່ອກວດຈາກນັ້ນຄູຢາຍກິດຈະກຳໃຫ້ນັກສຶກສາແຕ່ລະກຸ່ມພ້ອມທັງແບ່ງກິດຈະກຳໃຫ້ສຳມະຊິກກຸ່ມແຕ່ລະນ້ອງເພື່ອກຽມຄົ້ນຄວ້າ.
- ຄູແຍກນັກສຶກສາແຕ່ລະຄົນໃນກຸ່ມບ້ານຂອງເຮົາເຂົ້າເຮັດກິດຈະກຳ (ເປັນກຸ່ມຜູ້ຊ່ຽວຊານ) ແລະ ໃຫ້ນັກສຶກສາຄົ້ນຄວ້າກິດຈະກຳຕາມທີ່ຄູແບ່ງໃຫ້ຈາກກຸ່ມບ້ານຂອງເຮົາ.
- ຄູໃຫ້ນັກສຶກສາຈາກກຸ່ມຜູ້ຊ່ຽວຊານກັບຄືນໄປຫາ (ກຸ່ມບ້ານຂອງເຮົາ) ແລະ ນຳເອົາເນື້ອໃນທີ່ຕົນເອງໄດ້ສົນທະນາຈາກ (ກຸ່ມຜູ້ຊ່ຽວຊານ) ຜັດປ່ຽນກັນເລົ່າ/ອະທິບາຍໃຫ້ສຳມະຊິກໃນກຸ່ມເດີມ (ກຸ່ມບ້ານຂອງເຮົາ)ຟັງເພື່ອໃຫ້ສຳມະຊິກໃນກຸ່ມພ້ອມກັນສະຫຼຸບຫາຄຳຕອບໃຫ້ຄູ.
- ຂັ້ນປະເມີນຄູຢາຍບົດທົດສອບໃຫ້ສຳມະຊິກໃນກຸ່ມຂອງແຕ່ລະກຸ່ມເຮັດບົດທົດສອບ. ຈາກນັ້ນຄູກໍ່ເກັບບົດທົດສອບກັບຄືນມາເພື່ອກວດ, ກຸ່ມທີ່ໄດ້ຄະແນນສູງຄູກໍ່ໃຫ້ລາງວັນ (ຄະແນນກຸ່ມແມ່ນໄດ້ມາຈາກຜົນຈາກການເອົາຄະແນນຂອງສຳມະຊິກມາລວມກັນແລ້ວຫານໃຫ້ຈຳນວນຂອງສຳມະຊິກທັງໝົດ).
- ຄູດຳເນີນການທົດສອບຍ່ອຍຫຼັງການຮຽນ-ການສອນໃນແຕ່ລະແຜນການສອນ.

4) ຜູ້ຄົ້ນຄວ້າດຳເນີນການທົດສອບຫຼັງການຮຽນກັບນັກສຶກສາຄູທີ່ເປັນກຸ່ມທົດລອງໂດຍນຳໃຊ້ບົດທົດສອບສະບັບດຽວກັນກັບການສອບກ່ອນການຮຽນ.

5) ນຳເອົາແບບສອບຖາມຄວາມເພິ່ງພໍໃຈໄປທົດສອບກັບນັກສຶກສາກຸ່ມທົດລອງ.

6) ນຳເອົາບົດທອບສອບມາກວດໃຫ້ຄະແນນ ແລະ ເອົາແບບສອບຖາມວັດຄວາມເພິ່ງພໍໃຈມາວິເຄາະຂໍ້ມູນ.

## 3.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນໃນຄົ້ນຄ້ວາຄັ້ງນີ້ຜູ້ຄົ້ນຄ້ວາໄດ້ປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້

1) ການຄຳນວນເພື່ອຫາຄ່າປະສິດທິພາບຂອງແຜນການຈັດການຮຽນ-ການສອນ ວິຊາ ຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ຈິກຊໍ ເທັກນິກ ໂດຍຄິດໄລ່ຫາຄ່າປະສິດທິພາບຂອງນະບວນການ E1 ແລະ ປະສິດພາບຂອງຜົນຮັບ E1.

**ສູດການຄິດໄລເພື່ອຄຳນວນຫາປະສິດທິພາບພາບຂອງການຮຽນຮູ້ (E1)**

$$E1 = \frac{\frac{\sum x}{n}}{A} \times 100$$

E1 ແມ່ນ ປະສິດຖິພາບຂອງຂະບວນການຮຽນຮູ້

$\sum x$ແມ່ນ ຜົນບວກຂອງຄະແນນລະຫວ່າງການຮຽນ ແລະ ການສອບຍ່ອຍທຸກຊຸດ

nແມ່ນຈຳນວນຂອງນັກສຶກສາທັງໝົດ

Aແມ່ນ ຄະແນນເຕັມທັງໝົດ

**ສູດການຄິດໄລເພື່ອຄຳນວນຫາຜົນໄດ້ຮັບຈາກການທົດສອບຫຼັງການຮຽນຮູ້ (E2)**

$$E2 = \frac{\frac{\sum x}{n}}{B} \text{x } 100$$

*E2*ແມ່ນປະສິດຖິພາບຜົນສຳເລັດຫຼັງການຮຽນ

$\sum x$ແມ່ນຜົນບວກຂອງຄະແນນການສອບຜົນສຳເລັດຫຼັງການຮຽນ

*n*ແມ່ນຈຳນວນຂອງນັກສຶກສາທັງໝົດ

*B*ແມ່ນຄະແນນເຕັມທັງໝົດ

2) ການຄຳນວນເພື່ອຫາຄ່າດັດສະນີປະສິດທິຜົນຂອງການຈັດການຮຽນ-ການສອນ ວິຊາ ຫຼັກສູດ ແລະ ການສອນ ໂດຍໃຊ້ຈິກຊໍ ເທັກນິກ ໂດຍນຳໃຊ້ສູດເພື່ອຫາຄ່າປະສິດທິຜົນ

**ສູດຄິດໄລ່ເພື່ອຄຳນວນຄ່າປະສິດທິຜົນ (E.I)**

***ຄ່າດັດຊະນີປະສິດທິຜົນ***= $\frac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ}-\text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{(\text{ຈຳນວນນັກຮຽນ})(\text{ຄະແນນເຕັມ})-\text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}$

***ຫຼື*** $\text{E.I} = \frac{P_2 - P_1}{Total - P_1}$

E.I ແທນ ດັດຊະນີປະສິດທິຜົນ

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນໝົດທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນທຸກຄົນ

Total ແທນ ຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ

3) ການຫາຄ່າສະເລ່ຍ ແລະ ຄ່າຜັນປ່ຽນມາດຕະຖານເພື່ອສຶກສາຄວາມເພິງພໍໃຈຂອງນັກຮຽນທີ່ມີຕໍ່ການສອນ ວິຊາ ຫຼັກສູດ ແລະ ການສອນ ໂດຍນຳໃຊ້ຈິກຊໍເທັກນິດ ເຂົ້າໃນການຮຽນ-ການສອນ ແລ້ວນຳຄ່າມາປຽບທຽບກັບເກນ (ບຸນຊົມ ສີສະອາດ, 2545:100)

ຄ່າສະເລ່ຍລະຫວ່າງ 4.51 – 5.00 ໝາຍເຖິງ ເພິງພໍໃຈຫຼາຍທີ່ສຸດ

ຄ່າສະເລ່ຍລະຫວ່າງ 3.51 – 4.50 ໝາຍເຖິງ ເພິງພໍໃຈຫຼາຍ

ຄ່າສະເລ່ຍລະຫວ່າງ 2.51 – 3.50 ໝາຍເຖິງ ເພິງພໍໃຈປານກາງ

ຄ່າສະເລ່ຍລະຫວ່າງ 1.51 – 2.50 ໝາຍເຖິງ ເພິງພໍໃຈໜ້ອຍ

ຄ່າສະເລ່ຍລະຫວ່າງ 1.00 – 1.50 ໝາຍເຖິງ ເພິງພໍໃຈໜ້ອຍທີ່ສຸດ

## 3.5 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

### 3.5.1 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ

1) ການຫາຄ່າສະເລ່ຍ ( $\bar{X}$: Mean)

ການຫາຄ່າສະເລ່ຍ ( $\bar{X}$: Mean)ໂດຍນຳໃຊ້ສູດ (ບຸນຊົມ ສີສະອາດ, 2545:112)

$$\bar{X} = \frac{\sum X}{n}$$

$\bar{X}$ ແມ່ນ ຄ່າສະເລ່ຍ

$\sum X$ ແມ່ນ ຜົນບວກຄະແນນທັງໝົດ

n ແມ່ນ ຈຳນວນຄະແນນ

2) ການຫາຄ່າຜັນປ່ຽນມາດຕະຖານ (Standard Devition)

ການຫາຄ່າຜັນປ່ຽນມາດຕະຖານ(ບຸນຊົມ ສີສະອາດ, 2545:112)

$$S=\sqrt{\frac{n\sum x^2-(\sum x)^2}{n(n-1)}}$$

Sແມ່ນ ຄ່າຜິດບ່ຽງມາດຕະຖານ

n ແມ່ນ ຈໍານວນຄະແນນ

x ແມ່ນ ຄະແນນສະເລ່ຍແຕ່ລະຕົວ

$\sum$ ແມ່ນ ຜົນບວກ

3) ການຄິດໄລ່ຫາຄ່າສ່ວນຮ້ອຍ (Percentage)

ການຄິດໄລ່ຫາຄ່າສ່ວນຮ້ອຍໂດຍນໍາໃຊ້ສູດ (ບຸນຊົມ ສີສະອາດ, 2545:124)

$$P=\frac{f}{n}\times 100$$

P ແມ່ນ ຄ່າເປີເຊັນ

$f$ ແມ່ນ ຄ່າຄວາມທີ່ຂອງຂໍ້ມູນ

n ແມ່ນ ຈໍານວນຄະແນນ

### 3.5.2 ສະຖິຕິທີ່ໃຊ້ໃນການວິເຄາະຄຸນນະພາບຂອງເຄື່ອງມື

1) ຫາຄ່າປະສິດທິພາບຂອງແຜນການສອນE1/E2.

ຄ່າປະສິດທິພາບຂອງແຜນການສອນວິຊາ ຫຼັກສູດ ແລະ ການສອນ ສໍາລັບນັກສຶກສາຄູສາຍອະນຸບານ-ປະຖົມ ປີທີ 4 ລະບົບ 12+4 ວິທະຍາໄລຄູບ້ານເກີນຕາມເກນ80/80ຫຼື ເກນມາຕະຖານ E1/E2 (ຜະເຊີນກິດຈະການ ແລະ ສົມນຶກພັນທິບທານີ, 2545:44-45)

$$E1=\frac{\frac{\sum x}{n}}{A}\text{x } 100$$

E1 ແມ່ນ ປະສິດຖິພາບຂອງຂະບວນການຮຽນຮູ້

$\sum x$ແມ່ນ ຜົນບວກຂອງຄະແນນລະຫວ່າງການຮຽນ ແລະ ການສອບຍ່ອຍທຸກຊຸດ

nແມ່ນຈໍານວນຂອງນັກສຶກສາທັງໝົດ

Aແມ່ນ ຄະແນນເຕັມທັງໝົດ

$$E2=\frac{\frac{\sum x}{n}}{B}\text{x } 100$$

*E2*ແມ່ນປະສິດຖິພາບຜົນສໍາເລັດຫຼັງການຮຽນ

$\sum x$ແມ່ນຜົນບວກຂອງຄະແນນການສອບຜົນສໍາເລັດຫຼັງການຮຽນ

*n*ແມ່ນຈໍານວນຂອງນັກສຶກສາທັງໝົດ

*B*ແມ່ນຄະແນນເຕັມທັງໝົດ

2) ຫາຄ່າຄວາມທ່ຽງຕົງ(Validity)ຕາມເນື້ອໃນຂອງແບບທົດສອບວັດຜົນສໍາເລັດທາງການຮຽນ ໂດຍໃຊ້ສູດດັດສະນີຄວາມສອດຄ່ອງ Index of Item Objective Congruence (IOC) (ສົມນຶກ ພັດທິຍະທະນີ, 2548:166-167)

$$\boldsymbol{IOC=\frac{\sum R}{N}}$$

ເມື່ອ $IOC$ແທນ ຄວາມທ່ຽງຕົງຂອງດັດຊະນີຄວາມສອດຄ່ອງ ລະຫວ່າງ ຂໍ້ສອບ ແລະ ຈຸດປະສົງ

$\sum R$ແທນ ຜົນລວມຂອງຄະແນນຄວາມຄິດເຫັນຂອງຜູ້ຊ່ຽວຊານ ດ້ານເນື້ອໃນວິຊາທັງໝົດ

N ແທນ ຈໍານວນຜູ້ຊ່ຽວຊານດ້ານເນື້ອໃນທັໝົດ

3) ຫາຄ່າດັດຊະນີປະສິດທິຜົນ (Effectiveness Index: E.I) ເພື່ອຫາຄ່າ ຄວາມກ້າວໜ້າໃນການຮຽນຂອງນັກສຶກສາຄູສາຍອະນຸບານ-ປະຖົມ ລະບົບ 12+4 ປີທີ 4 ວິທະຍາໄລຄູບ້ານເກີນ ໂດຍນຳໃຊ້ຈິກຊໍ (Jigsaw) ເຂົ້າໃນການຈັດການຮຽນ-ການສອນ ວິຊາ ຫຼັກສູດ ແລະ ການສອນ.

ສູດຄິດໄລ່ເພື່ອຄຳນວນຄ່າປະສິດທິຜົນ (E.I) (ສົມນຶກ ພັດທິຍາທານີ, 2552:117)

$$\textbf{ຄ່າດັດຊະນີປະສິດທິຜົນ} = \frac{\text{ຜົນລວມຂອງຄະແນນທົດສອບຫຼັງຮຽນ} - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}{(\text{ຈຳນວນນັກຮຽນ})(\text{ຄະແນນເຕັມ}) - \text{ຜົນລວມຂອງຄະແນນທົດສອບກ່ອນຮຽນ}}$$

$$\text{ຫຼື } E.I = \frac{P_2 - P_1}{Total - P_1}$$

E.I ແທນ ດັດຊະນີປະສິດທິຜົນ

$P_1$ ແທນ ຜົນລວມຂອງຄະແນນກ່ອນຮຽນໝົດທຸກຄົນ

$P_2$ ແທນ ຜົນລວມຂອງຄະແນນຫຼັງຮຽນທຸກຄົນ

Total ແທນ ຜົນຄູນຂອງຈຳນວນນັກຮຽນກັບຄະແນນເຕັມ

4) ຫາຄ່າຄວາມຍາກງ່າຍ

ການຫາຄ່າຄວາມຍາກງ່າຍໂດຍໃຊ້ສູດ

$$P = \frac{N_R}{N}$$

ເມື່ອ P ແທນ ຄ່າຄວາມຍາກງ່າຍຂອງແບບທົດສອບ

$N_R$ແທນ ຈຳນວນນັກສຶກສາທີ່ຕອບຂໍ້ສອບຖືກ

Nແທນ ຈຳນວນັກສຶກສາທີ່ຕອບຂໍ້ສອບທັງໝົດ

ສະຫຼູບກ່ຽວກັບການຄ່າຄວາມຍາກງ່າຍຂອງຂໍ້ສອບ:

(1) ຄ່າດັດສະນີຄວາມຍາກຈະມີຄ່າຕ່ຳສຸດເປັນ 0 ແລະ ມີຄ່າສູງສຸດເປັນ 1

(2) ຄ່າດັດສະນີຄວາມຍາກເປັນຄ່າທີ່ບອກໃຫ້ຮູ້ວ່າມີຜູ້ຕອບຂໍ້ນັ້ນຖືກຄິດເປັນສັດສ່ວນເທົ່າໃດ ຫຼື ຄິດເປັນສ່ວນຮ້ອຍເທົ່າໃດ ແລະ ຍັງບໍ່ໄດ້ວ່າມີຜູ້ຕອບຜິດເປັນສັດສ່ວນເທົ່າໃດ.

(3) ຄ່າດັດຊະນີຄວາມຍາກທີ່ເຂົ້າໄກ້ 0 ສະແດງວ່າຂໍ້ສອບຍາກ ແຕ່ຖ້າຄ່າດັດສະນີເຂົ້າໃກ້ 1 ສະແດງວ່າຂໍ້ສອບນັ້ນງ່າຍ.

(4) ຄ່າດັດຊະນີຄວາມຍາກທີ່ໄດ້ 0.50 ສະແດງວ່າຜູ້ຕອບຂໍ້ນັ້ນຖືກຮ້ອຍລະ 50 ຫຼື ຜິດຮ້ອຍລະ 50 ໝາຍເຖິງຂໍ້ສອບນັ້ນມີຄວາມຍາກ-ງ່າຍ ປານກາງ ຫຼືວ່າເປັນຄວາມຍາກງ່າຍພໍດີ.

ເກນການແປຄວາມໝາຍຄ່າຄວາມຍາກ-ງ່າຍ ຄ່າ P

ຄ່າ P=0.81 - 1.00 ສະແດງວ່າ ຂໍ້ສອບງ່າຍ

ຄ່າ P=0.60 - 0.80 ສະແດງວ່າ ຂໍ້ສອບຂ້ອນຂ້າງງ່າຍ

ຄ່າ P=0.40 - 0.59 ສະແດງວ່າ ຂໍ້ສອບຍາກປານກາງ

ຄ່າ P=0.2 - 0.39 ສະແດງວ່າ ຂໍ້ສອບຂ້ອນຂ້າງຍາກ

ຄ່າ P= 0 – 0.19 ສະແດງວ່າ ຂໍ້ສອບຍາກຫຼາຍ (ລ້ອນ ສາຍຍົດ ແລະ ອັງຄະນາ ສາຍຍົດ, 2543:185)

$$r = \frac{P_H - P_L}{N_H}$$

ເມື່ອ r ແທນ ດັດຊະນີອ□ານາດຈຳແນກ

$P_H$ ແທນ ຈຳນວນນັກສຶກສາທີ່ຕອບຖືກໃນກຸ່ມສູງ

$P_L$ແທນ ຈຳນວນນັກສຶກສາທີ່ຕອບຖືກໃນກຸ່ມຕ່ຳ

$N_H$ແທນ ຈຳນວນນັກສຶກສາທັງໝົດໃນກຸ່ມສູງ

$N_L$ ແທນ ຈຳນວນນັກສຶກສາທັງໝົດໃນກຸ່ມຕ່ຳ

5) ຫາຄ່າຄວາມເຊື່ອໝັ້ນຂອງແບບທົດສອບໂດຍໃຊ້ສູດຄິດໄລ່

$$r_{tt} = \frac{n}{n-1}\left[1 - \frac{\sum pq}{s_1^2}\right]$$

ເມື່ອ $r_{tt}$ ແມ່ນຄ່າຄວາມເຊື່ອໝັ້ນໃນເຄື່ອງມືວັດ

N ແມ່ນຈຳນວນຂໍ້ສອບເຄື່ອງມືວັດ

P ແມ່ນສັດສ່ວນຂອງຜູ້ເຮັດຂໍ້ສອບຖືກໃນແຕ່ລະຂໍ້ $P = \frac{\text{ຈຳນວນຄົນທີ່ເຮັດຖືກໃນຂໍ້ນັ້ນ}}{\text{ຈຳນວນຄົນທັງໝົດ}}$

q ແມ່ນສັດສ່ວນຂອງຜູ້ເຮັດຜິດໃນແຕ່ລະຂໍ້

$\sum$ ແມ່ນເຄື່ອງສະແດງຜົນບວກ $\sum pq$ຫຼື ຜົນບວກຂອງpq

$S_1^2$ ແມ່ນຄ່າຄວາມຜັນປ່ຽນຂອງຄະແນນລວມ(ສົມນຶກ ພັດທິຍາທານີ, 2552:147)

### 3.6 ຂັ້ນຕອນການຄົ້ນຄວ້າ

- ສຶກສາຫຼັກສູດວິຊາຫຼັກສູດ ແລະ ການສອນພາສາອັງກິດສຳລັບນັກຮຽນຊັ້ນປະຖົມ ເລື່ອງ: ການສອນການຟັງ, ການສອນການເວົ້າ, ການສອນການອ່ານ ແລະ ການສອນການຂຽນ

↓

- ກຳນົດຈຸດປະສົງແລະເນື້ອໃນທີ່ຈະສອນ.
- ສ້າງບົດການສອນໂດຍນຳໃຊ້ຈິກຊໍເທັກນິກ.
- ສ້າງແບບທົດສອບ

↓

ນຳສະເໜີອາຈານທີ່ປຶກສາ

↓

ນຳໄປທົດລອງໃຊ້ກັບກຸ່ມທີ່ບໍ່ແມ່ນກຸ່ມທົດລອງ

↓

ນຳສະເໜີຜູ້ຊ່ຽວຊານ

ຫາປະສິດທິພາບຂອງແຜນການສອນ ແລະ ຄູນນະພາບຂອງເຄື່ອງມື

↓

ນຳມາປັບປຸງ

↓

ນຳໄປໃຊ້ກັບກຸ່ມທົດລອງຈິງ

↓

- ຫາປະສິດທິພາບຂອງບົດສອນ
- ຫາປະສິດທິພາບຜົນການຮຽນຂອງນັກສຶກສາ
- ຫາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຮຽນວິຊາ ຫຼັກສູດ ແລະ ການສອນ ພາສາອັງກິດ ທີ່ນຳໃຊ້ເທັກນິກຈິກຊໍເຂົ້າໃນການຮຽນ-ການສອນ.

↓

ການນຳໃຊ້ເທັກນິກຈິກຊໍເຂົ້າໃນການຮຽນ-ການສອນວິຊາ ຫຼັກສູດ ແລະ ການສອນ ພາສາອັງກິດ ສາຍຄູປະຖົມ ປີທີ 4 ລະບົບ 12+4 ວິທະຍາໄລຄູສາລະວັນ

ຊັ້ນປະຖົມ ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ, ຜູ້ຄົ້ນຄວ້າໄດ້ສະເໜີຜົນການວິເຄາະຂໍ້ມູນ ແລະ ການອະທິບາຍຜົນຕາມລຳດັບດັ່ງນີ້:

1) ຜົນການວິເຄາະປະສິດທິພາບຂອງຂະບວນການຈັດການຮຽນ-ການສອນ
2) ຜົນການວິເຄາະປະສິດທິຜົນຂອງການຈັດການຮຽນ-ການສອນ
3) ຜົນການວິເຄາະຄວາມເພິງພໍໃຈຂອງນັກສຶກສາ

ສັນຍາລັກທີ່ນຳສະເໜີທີ່ນຳໃຊ້ໃນການວິເຄາະຂໍ້ມູນຂອງການຄົ້ນຄວ້າ

$E_1$ ແທນ ປະສິດທິພາບຂອງຂະບວນການຈັດການຮຽນ-ການສອນ

$E_2$ແທນ ປະສິດທິຜົນຂອງການຈັດການຮຽນ-ການສອນ

**SD** ແທນ ຄ່າຜົນປ່ຽນມາດຕະຖານ

N ແທນ ຈ□ານວນນັກຮຽນທັງໝົດ

$\bar{X}$ ແທນ ຄ່າສະເລ່ຍ

E.Iແທນ ດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນ

## 4.1 ຜົນຂອງການຄົ້ນຄວ້າ

### 4.1.1 ຜົນການວິເຄາະປະສິດທິພາບຂະບວນການຈັດການຮຽນ-ການສອນ ($E_1$)

**ຕາຕະລາງ 4:**ສະແດງປະສິດທິພາບຂະບວນການຮຽນ-ການສອນຂອງແຕ່ລະບົດສອນ($E_1$)

| ນັກສຶກສາຄົນທີ | ບົດສອນທີ 1 | | | ບົດສອນທີ 2 | | | ບົດສອນທີ 3 | | | ບົດສອນ ທີ 4 | | | ບົດສອດທີ 5 | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ລວມຄະແນນ 5ບົດສອນ |
| 1 | 15 | 3 | 18 | 17 | 4 | 21 | 17 | 4 | 21 | 18 | 4 | 22 | 18 | 4 | 22 | 104 |
| 2 | 19 | 4 | 23 | 19 | 5 | 24 | 19 | 5 | 24 | 18 | 4 | 22 | 18 | 5 | 23 | 116 |
| 3 | 17 | 4 | 21 | 18 | 4 | 22 | 18 | 5 | 23 | 19 | 5 | 24 | 19 | 5 | 24 | 114 |
| 4 | 16 | 4 | 20 | 17 | 3 | 20 | 18 | 4 | 22 | 17 | 4 | 21 | 18 | 4 | 22 | 105 |
| 5 | 18 | 4 | 22 | 18 | 4 | 22 | 18 | 4 | 22 | 19 | 4 | 23 | 19 | 4 | 23 | 112 |
| 6 | 16 | 5 | 21 | 18 | 5 | 23 | 19 | 5 | 24 | 19 | 5 | 24 | 19 | 4 | 23 | 115 |
| 7 | 19 | 4 | 23 | 19 | 5 | 24 | 19 | 4 | 23 | 19 | 5 | 24 | 19 | 5 | 24 | 118 |
| 8 | 18 | 5 | 23 | 18 | 5 | 23 | 17 | 5 | 22 | 18 | 5 | 23 | 18 | 4 | 22 | 113 |

**ຕາຕະລາງ 4:**(ຕໍ່)

| | ບົດສອນທີ 1 | | | ບົດສອນທີ 2 | | | ບົດສອນທີ 3 | | | ບົດສອນ ທີ 4 | | | ບົດສອດທີ 5 | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| ນັກສຶກສາຄົນທີ | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ລວມຄະແນນ 5ບົດສອນ |
| 9 | 19 | 4 | 23 | 19 | 4 | 23 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 118 |
| 10 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 18 | 5 | 23 | 18 | 5 | 23 | 118 |
| 11 | 19 | 4 | 23 | 19 | 4 | 23 | 18 | 4 | 22 | 18 | 4 | 22 | 19 | 4 | 23 | 113 |
| 12 | 19 | 4 | 23 | 19 | 5 | 24 | 18 | 4 | 22 | 19 | 5 | 24 | 19 | 5 | 24 | 117 |
| 13 | 15 | 3 | 18 | 16 | 3 | 19 | 16 | 4 | 20 | 17 | 4 | 21 | 18 | 4 | 22 | 100 |
| 14 | 15 | 3 | 18 | 17 | 3 | 20 | 17 | 4 | 21 | 16 | 4 | 20 | 17 | 4 | 21 | 100 |
| 15 | 18 | 4 | 22 | 18 | 4 | 22 | 19 | 4 | 23 | 18 | 5 | 23 | 18 | 5 | 23 | 113 |
| 16 | 19 | 3 | 22 | 18 | 4 | 22 | 19 | 4 | 23 | 19 | 5 | 24 | 19 | 5 | 24 | 115 |
| 17 | 19 | 4 | 23 | 18 | 4 | 22 | 19 | 5 | 24 | 18 | 5 | 23 | 18 | 5 | 23 | 115 |
| 18 | 19 | 4 | 23 | 17 | 5 | 22 | 18 | 5 | 23 | 19 | 5 | 24 | 19 | 5 | 24 | 116 |
| 19 | 19 | 3 | 22 | 17 | 3 | 20 | 18 | 4 | 22 | 18 | 4 | 22 | 19 | 5 | 24 | 110 |
| 20 | 19 | 5 | 24 | 18 | 5 | 23 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 119 |
| 21 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 120 |
| 22 | 16 | 3 | 19 | 16 | 3 | 19 | 16 | 4 | 20 | 17 | 4 | 21 | 18 | 4 | 22 | 101 |
| 23 | 19 | 5 | 24 | 18 | 5 | 23 | 19 | 5 | 24 | 18 | 5 | 23 | 18 | 5 | 23 | 117 |
| 24 | 19 | 4 | 23 | 18 | 4 | 22 | 19 | 5 | 24 | 18 | 5 | 23 | 18 | 5 | 23 | 115 |
| 25 | 19 | 5 | 24 | 18 | 5 | 23 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 119 |

**ຕາຕະລາງ 4:**(ຕໍ່)

| ນັກສຶກສາຄົນທີ | ບົດສອນທີ 1 | | | ບົດສອນທີ 2 | | | ບົດສອນທີ 3 | | | ບົດສອນ ທີ 4 | | | ບົດສອດທີ 5 | | | |
|---|---|---|---|---|---|---|---|---|---|---|---|---|---|---|---|---|
| | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ຄະແນນລະຫວ່າງຮຽນ (21) | ຄະແນນທົດສອບຍ່ອຍຫຼັງການຮຽນ (5) | ຄະແນນລວມ (26) | ລວມຄະແນນ 5ບົດສອນ |
| 26 | 17 | 3 | 20 | 16 | 3 | 19 | 18 | 4 | 22 | 17 | 4 | 21 | 18 | 4 | 22 | 104 |
| 27 | 17 | 4 | 21 | 17 | 5 | 22 | 19 | 5 | 24 | 19 | 5 | 24 | 19 | 5 | 24 | 115 |
| 28 | 17 | 4 | 21 | 17 | 4 | 21 | 19 | 5 | 24 | 19 | 4 | 23 | 20 | 4 | 24 | 113 |
| 29 | 17 | 5 | 22 | 18 | 5 | 23 | 19 | 5 | 24 | 17 | 5 | 22 | 18 | 5 | 23 | 114 |
| 30 | 17 | 4 | 21 | 17 | 4 | 21 | 17 | 4 | 21 | 17 | 4 | 21 | 18 | 4 | 22 | 106 |
| 31 | 15 | 3 | 18 | 16 | 4 | 20 | 17 | 4 | 21 | 17 | 4 | 21 | 18 | 4 | 22 | 102 |
| **ລວມ** | 549 | 124 | 673 | 549 | 131 | 680 | 565 | 140 | 705 | 562 | 142 | 704 | 573 | 142 | 715 | 3477 |
| $\bar{X}$ | 17.71 | 4.00 | 21.71 | 17.71 | 4.23 | 21.94 | 18.23 | 4.52 | 22.74 | 18.13 | 4.58 | 22.71 | 18.48 | 4.58 | 23.06 | 112.16 |
| **SD** | 1.46 | 0.72 | 1.90 | 0.96 | 0.75 | 1.54 | 0.94 | 0.50 | 1.29 | 0.87 | 0.49 | 1.22 | 0.62 | 0.49 | 0.88 | 6.05 |
| **E1** | | | 83.50 | | | 84.37 | | | 87.47 | | | 87.34 | | | 88.71 | 86.28 |

ຈາກຕາຕະລາງ 4 ພົບວ່າ ຜົນການວິເຄາະປະສິດທິພາບຂອງບົດສອນ ໂດຍນໍາໃຊ້ເທັກນິກການສອນແບບຈິກຊໍ(Jigsaw) ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະການສອນ ພາສາອັງກິດສໍາລັບນັກສຶກສາຄູຊັ້ນປະຖົມ ປີທີ4 ຈາກຄະແນນການວັດປະເມີນຜົນຂະບວນການຮຽນ ແລະ ບົດທົດສອບຍ່ອຍຫຼັງຈາກການສອນຂອງ5ບົດສອນ ເຊິ່ງມີຄະແນນເຕັມ 130 ຄະແນນ. ໂດຍລວມແລ້ວມີຄ່າສະເລ່ຍ $\bar{X}$=112.16 ຄ່າຜັນປ່ຽນມາດຕະຖານ S.D =6.05 ແລະ ມີປະສິດທິພາບ $E_1$= 86.28ຄິດເປັນເປີເຊັ່ນເທົ່າກັບ 86.28%, ຖ້າພິຈາລະນາເປັນແຕ່ລະບົດສອນ ແລ້ວເຫັນວ່າ ບົດສອນທີ 1 ມີຄ່າສະເລ່ຍ $\bar{X}$= 21.71, ຄ່າຜັນປ່ຽນມາດຕະຖານ S.D =1.90, ມີປະສິດທິພາບ $E_1$= 83.50, ບົດສອນທີ 2 ມີຄ່າສະເລ່ຍ $\bar{X}$= 21.94, ຄ່າຜັນປ່ຽນມາດຕະຖານ S.D =1.54, ມີປະສິດທິພາບ $E_1$= 84.37, ບົດສອນທີ 3 ມີຄ່າສະເລ່ຍ $\bar{X}$= 22.74, ຄ່າຜັນປ່ຽນມາດຕະຖານ

S.D =1.29, ມີປະສິດທິພາບ $E_1$= 87.47, ບົດສອນທີ 4 ມີຄ່າສະເລ່ຍ $\bar{X}$=22.71, ຄ່າຜັນປ່ຽນມາດຕະຖານ S.D =1.22, ມີປະສິດທິພາບ $E_1$= 87.34, ບົດສອນທີ 5 ມີຄ່າສະເລ່ຍ $\bar{X}$= 23.06, ຄ່າຜັນປ່ຽນມາດຕະຖານ S.D =0.88, ມີປະສິດທິພາບ $E_1$= 88.71.

ໂດຍລວມແລ້ວສະຫຼຸບໄດ້ວ່າ ປະສິດທິພາບຂອງຂະບວນການຮຽນ-ການສອນຂອງບົດສອນແບບຮ່ວມມືໂດຍນຳໃຊ້ເທັກນິກຈິກຊໍ Jigsawເຂົ້າໃນການສອນ ວິຊາຫຼັກສູດ ແລະ ການສອນພາສາອັງກິດມີປະສິດທິພາບ $E_1$= 86.28.

### 4.1.2 ຜົນການວິເຄາະປະສິດທິພາບຂອງຜົນການຮຽນ (E2)

**ຕາຕະລາງ 5:** ສະແດງປະສິດທິພາບຂອງຜົນສ□າເລັດທາງການຮຽນ

| | ຄະແນນວັດຜົນກ່ອນ ແລະ ຫຼັງການຮຽນ | |
|---|---|---|
| **ລ/ດ** | ຄະແນນທົດສອບກ່ອນການຮຽນ-ການສອນ | ຄະແນນທົດສອບຫຼັງການຮຽນ-ການສອນ |
| 1 | 9 | 19 |
| 2 | 11 | 23 |
| 3 | 10 | 24 |
| 4 | 8 | 22 |
| 5 | 10 | 22 |
| 6 | 10 | 23 |
| 7 | 9 | 24 |
| 8 | 9 | 24 |
| 9 | 9 | 24 |
| 10 | 10 | 25 |
| 11 | 8 | 19 |
| 12 | 8 | 24 |
| 13 | 7 | 18 |
| 14 | 6 | 17 |
| 15 | 8 | 24 |
| 16 | 10 | 24 |
| 17 | 10 | 24 |
| 18 | 11 | 23 |
| 19 | 9 | 22 |
| 20 | 10 | 25 |
| 21 | 12 | 24 |
| 22 | 8 | 18 |
| 23 | 9 | 25 |
| 24 | 11 | 23 |
| 25 | 10 | 25 |
| 26 | 8 | 18 |
| 27 | 11 | 24 |
| 28 | 9 | 19 |
| 29 | 9 | 24 |
| 30 | 9 | 22 |
| 31 | 7 | 19 |

**ຕາຕະລາງ 5:**(ຕໍ່)

| ຄະແນນວັດຜົນກ່ອນ ແລະ ຫຼັງການຮຽນ | | |
|---|---|---|
| ລ/ດ | ຄະແນນທົດສອບກ່ອນການຮຽນ-ການສອນ | ຄະແນນທົດສອບຫຼັງການຮຽນ-ການສອນ |
| ລວມ | 285 | 691 |
| $\bar{X}$ | 9.19 | 22.29 |
| S.D | 1.33 | 2.48 |
| | **$E_2$ = 89.16** | |

ຕາຕະລາງ5ຂ້າງເທິງສະແດງຜົນການວິເຄາະຄ່າປະສິດທິພາບຂອງຜົນສຳເລັດທາງຮຽນ$E_2$ຈາກການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ເຫັນວ່ານັກຮຽນມີຜົນສຳເລັດທາງການຮຽນໂດຍມີຄ່າສະເລ່ຍ $\bar{X}$=22.29, ມີຄ່າຜັນປ່ຽນມາດຕະຖານS.D =2.48, ແລະ ມີປະສິດທິຜົນ$E_2$ = 89.16.

### 4.1.3 ຜົນການວິເຄາະປະສິດທິພາບ ($E_1/E_2$)

**ຕາຕະລາງ 6:**ສະແດງປະສິດທິພາບຂອງບົດສອນ$E_1/E_2$

| ຄະແນນ | ຄະແນນເຕັມ | $\bar{X}$ | S.D | % |
|---|---|---|---|---|
| ປະສິດທິພາບຂອງຂະບວນການ$E_1$ | 3477 | 112.16 | 6.05 | 86.28 |
| ປະສິດທິພາບຂອງຜົນການຮຽນ$E_2$ | 691 | 22.29 | 2.48 | 89.16 |
| **$E_1/E_2$ = 86.28/89.16** | | | | |

ຕາຕະລາງ6 ສະແດງໃຫ້ເຫັນເຖິງຜົນຂອງການວິເຄາະໃນການຊອກຫາຄ່າປະສິດທິພາບຂອງຜົນສຳເລັດການຮຽນຮູ້ ($E_1/E_2$) ໃນການຂະບວນການຈັດການຮຽນ-ການສອນ ດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ4ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ເຫັນວ່າ ປະສິດທິພາບຂອງຂະບວນການຈັດການຮຽນ-ການສອນ ມີຄະແນນ ລວມ 3477, ມີຄ່າສະເລ່ຍ$\bar{X}$ =112.16, ມີຄ່າຜັນປ່ຽນມາດຕະຖານS.D = 6.05,ປະສິດທິພາບຂອງຂະບວນການ$E_1$ = 83.93 ແລະ ປະສິດທິພາບຂອງຜົນສຳເລັດທາງການຮຽນມີຄະແນນລວມ 691, ມີຄ່າ$\bar{X}$ =22.29, ມີຄ່າຜັນປ່ຽນມາດຕະຖານS.D = 2.47 ແລະ ມີຜົນສຳເລັດທາງການຮຽນ$E_2$ = 82.57ໂດຍລວມແລ້ວປະສິດທິພາບຂອງບົດສອນ($E_1/E_2$)ເທົ່າກັບ86.28/89.16ເຊິ່ງສູງກວ່າເກນທີ່ຕັ້ງໄວ້80/80.

### 4.1.4 ຜົນການວິເຄາະປະສິດທິຜົນການຮຽນຂອງນັກຮຽນ

**ຕາຕະລາງ7:** ສະແດງຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນ(E.I)

| ຈຳນວນນັກຮຽນທັງໝົດ | ຄະແນນເຕັມ | ຄະແນນລວມ | | |
|---|---|---|---|---|
| | | ຄະແນນທົດສອບກ່ອນຮຽນ | ຄະແນນທົດສອບຫຼັງຮຽນ | ດັດສະນີປະສິດທິຜົນ E.I |
| 31 | 25 | 285 | 691 | 0.82 |

ຕາຕະລາງ7 ສະແດງໃຫ້ເຫັນເຖິງຜົນການວິເຄາະຫາຄ່າດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນຮູ້ຂອງນັກສຶກສາ (E.I) ດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍJigsawເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ມີຄ່າປະສິດທິຜົນເທົ່າກັບ 0,82 ສະແດງວ່ານັກສຶກສາທີ່ຮຽນຮູ້ດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ມີຄວາມຮູ້ເພີ່ມຂຶ້ນໂດຍຄິດເປັນ 82 ສ່ວນຮ້ອຍ ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 0.5.

### 4.1.5ຜົນການວິເຄາະຄວາມເພິ່ງພໍໃຈນັກຮຽນຕໍ່ການຈັດການຮຽນຮູ້

**ຕາຕະລາງ 8:**ສະແດງຄວາມເພິ່ງພໍໃຈນັກສຶກສາທັງ 4 ດ້ານຕໍ່ການນຳໃຊ້ເທັກນິກຈິກຊໍ

| ດ້ານທີ | ລາຍການຄວາມເພີ່ມພໍໃຈໃນແຕ່ລະດ້ານ | $\bar{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ດ້ານກິດຈະກຳການຮຽນຮູ້ | 4.38 | 0.24 | ເພິ່ງພໍໃຈຫຼາຍ |
| 2 | ບັນຍາກາດການຮຽນ-ການສອນ | 4.29 | 0.22 | ເພິ່ງພໍໃຈຫຼາຍ |
| 3 | ຄວາມຮູ້ທີ່ໄດ້ຈາກການຮຽນ | 4.30 | 0.24 | ເພິ່ງພໍໃຈຫຼາຍ |
| 4 | ດ້ານການວັດຜົນ ແລະ ປະເມີນຜົນ | 4.34 | 0.17 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.33** | **0.22** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງ8ສະແດງຜົນການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການຈັດການຮຽນ-ການສອນດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍJigsawເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ພົບວ່າ ນັກສຶກສາຄູມີຄວາມເພິ່ງພໍໃຈຫຼາຍເຊິ່ງມີຄ່າສະເລ່ຍ $\bar{X}$ = 4.33, ມີຄ່າຜັນປ່ຽນມາດຕະຖານS.D = 0.22, ເມື່ອພິຈາລະນາຈາກແຕ່ລະດ້ານເຫັນວ່າ ດ້ານທີ່ມີຄ່າສະເລ່ຍສູງທີ່ສຸດແມ່ນ ດ້ານກິດຈະກຳການຮຽນຮູ້ເຊິ່ງມີຄ່າສະເລ່ຍ $\bar{X}$ = 4.38 ແລະ ຄ່າຜັນປ່ຽນມາດຕະຖານມີຄ່າS.D = 0.24 ສະແດງວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍ, ຖັດລົງມາແມ່ນດ້ານການວັດຜົນ ແລະ ປະເມີນຜົນ ມີຄ່າສະເລ່ຍ$\bar{X}$ = 4.34 ແລະ ຄ່າຜັນປ່ຽນມາດຕະຖານມີຄ່າS.D = 0.17ສະແດງວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍ,ຖັດລົງແມ່ນດ້ານຄວາມຮູ້ທີ່ໄດ້ຈາກການຮຽນ ມີຄ່າສະເລ່ຍ$\bar{X}$ = 4.30 ແລະ ຄ່າຜັນປ່ຽນມາດຕະຖານມີຄ່າS.D = 0.24ສະແດງວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍ ແລະ ດ້ານທີ່ມີຄະແນນຕ່ຳສຸດ ແມ່ນດ້ານບັນຍາກາດການຮຽນ-ການສອນ ມີຄ່າສະເລ່ຍ$\bar{X}$ = 4.29 ແລະ ຄ່າຜັນປ່ຽນມາດຕະຖານມີຄ່າS.D = 0.22ສະແດງວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍຕາມລຳດັບ.

**ຕາຕະລາງ 9:** ສະແດງຄວາມເພິ່ງພໍໃຈດ້ານກິດຈະກ□າການຮຽນຮູ້

| ລ/ດ | ເນື້ອໃນ | $\bar{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ການກະກຽມເນື້ອໃນ ຫຼືເລື່ອງທີ່ຈະໃຫ້ຜູ້ຮຽນຮູ້ຂອງຄູ | 4.00 | 0 | ເພິ່ງພໍໃຈຫຼາຍ |
| 2 | ການແບ່ງຜູ້ຮຽນອອກເປັນກຸ່ມທີ່ມີສະມາຊິກເທົ່າກັນຂອງຄູ | 4.70 | 0.44 | ເພິ່ງພໍໃຈຫຼາຍທີ່ສຸດ |
| 3 | ການເຮັດໜ້າທີ່ເປັນຜູ້ຊ່ຽວຊານຂອງກຸ່ມເພື່ອຈະແຍກໄປສູ່ກຸ່ມໃໝ່ | 4.30 | 0.52 | ເພິ່ງພໍໃຈຫຼາຍ |
| 4 | ການກັບຄືນສູ່ກຸ່ມເດີມເພື່ອນຳສະເໜີເລື່ອງທີ່ໄດ້ຈາກກຸ່ມຜູ້ຊ່ຽວຊານມາຜັດປ່ຽນກັນເວົ້າໃຫ້ສຳມະຊິກໃນກຸ່ມເດີມຟັງ | 4.48 | 0.56 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.37** | **0.38** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງ9 ໄດ້ສະແດງໃຫ້ເຫັນເຖິງຜົນການວິເຄາະຄວາມເພິ່ງພໍໃຈນັກສຶກສາຄູທີ່ມີຄວາມເພິ່ງໃຈຕໍ່ກັບການຈັດການຮຽນ-ການສອນດ້ວຍການນຳໃຊ້ເຕັກນິກການສອນແບບຈິກຊໍJigsawເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ເມື່ອພິຈາລະນາໂດຍລວມແລ້ວນັກສຶກສາມີຄວາມເພິ່ງພໍໃຈຫຼາຍໂດຍມີຄ່າສະເລ່ຍ $\bar{X}$ =4.37ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.38, ເຊິ່ງຜົນການວິເຄາະໃນແຕ່ລະດ້ານເຫັນວ່ານັກສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ກັບການແບ່ງຜູ້ຮຽນອອກເປັນກຸ່ມທີ່ມີສະມາຊິກເທົ່າກັນຂອງຄູເຊິ່ງມີຄ່າສະເລ່ຍ $\bar{X}$ = 4.70, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.44, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານ ການກັບຄືນສູ່ກຸ່ມເດີມເພື່ອນຳສະເໜີເລື່ອງທີ່ໄດ້ຈາກກຸ່ມຜູ້ຊ່ຽວຊານມາຜັດປ່ຽນກັນເວົ້າໃຫ້ສຳມະຊິກໃນກຸ່ມເດີມຟັງໂດຍມີຄ່າສະເລ່ຍ $\bar{X}$ = 4.48 ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.56, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານການເຮັດໜ້າທີ່ເປັນຜູ້ຊ່ຽວຊານຂອງກຸ່ມເພື່ອຈະແຍກໄປສູ່ກຸ່ມໃໝ່ໂດຍມີຄ່າສະເລ່ຍ$\bar{X}$ = 4.30, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.52, ລ□າດັບສຸດທ້າຍແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານການກະກຽມເນື້ອໃນ ຫຼືເລື່ອງທີ່ຈະໃຫ້ຜູ້ຮຽນຮູ້ຂອງຄູໂດຍມີຄ່າສະເລ່ຍ $\bar{X}$ =4.00ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.

**ຕາຕະລາງ 10:**ສະແດງຄວາມເພິ່ງພໍໃຈດ້ານບັນຍາກາດການຮຽນ-ການສອນ

| ລ/ດ | ເນື້ອໃນ | $\bar{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ມີຄວາມສຸກໃນການຮຽນ | 4.50 | 0.50 | ເພິ່ງພໍໃຈຫຼາຍ |
| 2 | ມີຄວາມຕັ້ງໃຈໃນການຮຽນ | 4.20 | 0.47 | ເພິ່ງພໍໃຈຫຼາຍ |

| | | | | |
|---|---|---|---|---|
| 3 | ມີຄວາມໝັ້ນໃຈໃນການຮຽນ | 4.30 | 0.47 | ເພິ່ງພໍໃຈຫຼາຍ |
| 4 | ມີການຍອມຮັບຈາກສະມາຊິກໃນກຸ່ມ | 4.30 | 0.63 | ເພິ່ງພໍໃຈຫຼາຍ |
| 5 | ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນກຸ່ມ | 4.60 | 0.48 | ເພິ່ງພໍໃຈຫຼາຍທີ່ສຸດ |
| 6 | ມີຄວາມຮັບຜິດຊອບໃນຖານະເປັນຜູ້ຕາງໜ້າກຸ່ມ | 3.90 | 0.39 | ເພິ່ງພໍໃຈຫຼາຍ |
| 7 | ການອອກຄຳຄິດເຫັນ-ຮັບຟັງເຊິ່ງກັນ ແລະ ກັນໃນການສະເໜີຂໍ້ມູນຂອງແຕ່ລະຄົນ | 4.20 | 0.37 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.29** | **0.47** | **ເພິ່ງພໍໃຈຫຼາຍ** |

ຕາຕະລາງ10 ໄດ້ສະແດງໃຫ້ເຫັນເຖິງຜົນການວິເຄາະຄວາມເພິ່ງພໍໃຈນັກສຶກສາຄູທີ່ມີຄວາມເພິ່ງໃຈຕໍ່ກັບບັນຍາກາດການຮຽນ-ການສອນດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍJigsaw ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ເມື່ອພິຈາລະນາໂດຍລວມແລ້ວນັກສຶກສາມີຄວາມເພິ່ງພໍໃຈຫຼາຍຕໍ່ດ້ານບັນຍາກາດການຮຽນ-ການສອນໂດຍມີຄ່າສະເລ່ຍ $\bar{X}$ =4. 29ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.47, ເຊິ່ງຜົນການວິເຄາະໃນແຕ່ລະດ້ານເຫັນວ່ານັກສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດໃນດ້ານ ມີການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນກຸ່ມເຊິ່ງມີຄ່າສະເລ່ຍ $\bar{X}$ = 4.6, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.48, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງໃຈຫຼາຍໃນດ້ານ ມີຄວາມສຸກໃນການຮຽນໂດຍມີຄ່າສະເລ່ຍ $\bar{X}$ = 4.50ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.50, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານ ມີຄວາມໝັ້ນໃຈໃນການຮຽນໂດຍມີຄ່າສະເລ່ຍ $\bar{X}$ = 4.30, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.47 ແລະ ໃນດ້ານມີການຍອມຮັບຈາກສະມາຊິກໃນກຸ່ມ ເຊິ່ງມີຄ່າສະເລ່ຍ $\bar{X}$ = 4.30, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.63,ລະດັບຮອງລົງມາແມ່ນນັກຮຽນມີຄວາມເພິ່ງພໍໃຈຫຼາຍໃນດ້ານ ມີຄວາມຕັ້ງໃຈໃນການຮຽນເຊິ່ງມີຄ່າສະເລ່ຍ $\bar{X}$ = 4.20, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.47 ແລະ ໃນດ້ານການອອກຄ□າຄິດເຫັນ-ຮັບຟັງເຊິ່ງກັນ ແລະ ກັນໃນການສະເໜີຂໍ້ມູນຂອງແຕ່ລະຄົນເຊິ່ງມີຄ່າສະເລ່ຍ $\bar{X}$ = 4.20, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.37.

**ຕາຕະລາງ 11:** ສະແດງເພິ່ງພໍໃຈດ້ານຄວາມຮູ້ທີ່ໄດ້ຈາກການຮຽນ

| ລ/ດ | ເນື້ອໃນ | $\bar{X}$ | S.D | ລະດັບຄວາມເພິ່ງພໍໃຈ |
|---|---|---|---|---|
| 1 | ໄດ້ຮັບຄວາມຮູ້ຕາມຈຸດປະສົງທີ່ຖືກຕັ້ງໄວ້ | 4.20 | 0.49 | ເພິ່ງພໍໃຈຫຼາຍ |
| 2 | ເປັນການຮຽນຮູ້ທີ່ຜູ້ຮຽນສາມາດອະທິບາຍໄດ້ | 4.10 | 0.44 | ເພິ່ງພໍໃຈຫຼາຍ |
| 3 | ເປັນການຮຽນທີ່ສາມາດເຂົ້າໃຈງ່າຍ | 4.50 | 0.50 | ເພິ່ງພໍໃຈຫຼາຍ |

| | | | | |
|---|---|---|---|---|
| 4 | ເປັນຄວາມຮູ້ທີ່ຈື່ຈຳໄດ້ດົນ | 4.50 | 0.50 | ເພິ່ງພໍໃຈຫຼາຍ |
| 5 | ຄວາມຮູ້ທີ່ໄດ້ມາສາມາດນຳໄປໃຊ້ໄດ້ໃນການສອນພາສາອັງກິດ ຊັ້ນປະຖົມ | 4.30 | 0.45 | ເພິ່ງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.32** | **0.48** | **ເພິ່ງພໍໃຈ ຫຼາຍ** |

ຕາຕະລາງ11 ສະແດງໃຫ້ເຫັນເຖິງຜົນການວິເຄາະຄວາມເພິ່ງພໍໃຈນັກສຶກສາຄູທີ່ມີຄວາມເພິ່ງໃຈຕໍ່ກັບການຈັດການຮຽນ-ການສອນດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍ Jigsawເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ,ເມື່ອພິຈາລະນາໂດຍລວມແລ້ວນັກສຶກສາມີຄວາມເພິ່ງພໍໃຈຫຼາຍໂດຍມີຄ່າສະເລ່ຍ $\bar{X}$ =4.32 ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.48, ເຊິ່ງຜົນການວິເຄາະໃນແຕ່ລະດ້ານເຫັນວ່ານັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານ ເປັນການຮຽນທີ່ສາມາດເຂົ້າໃຈງ່າຍເຊິ່ງມີຄ່າສະເລ່ຍ $\bar{X}$ = 4.50, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.50 ແລະ ໃນດ້ານ ເປັນຄວາມຮູ້ທີ່ຈື່ຈ□າໄດ້ດົນເຊິ່ງມີຄ່າສະເລ່ຍ $\bar{X}$ = 4.50, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.50, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານ ຄວາມຮູ້ທີ່ໄດ້ມາສາມາດນຳໄປໃຊ້ໄດ້ໃນການສອນພາສາອັງກິດຊັ້ນປະຖົມເຊິ່ງມີຄ່າສະເລ່ຍ$\bar{X}$ = 4.30, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.45, ຖັດລົງມາແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍໃນດ້ານໄດ້ຮັບຄວາມຮູ້ຕາມຈຸດປະສົງທີ່ຖືກຕັ້ງໄວ້ໂດຍມີຄ່າສະເລ່ຍ $\bar{X}$ = 4.20, ແລະ ມີຄ່າຜັນປ່ຽນມາດຕະຖານ S.D =0.49, ລຳດັບສຸດທ້າຍແມ່ນນັກສຶກສາມີຄວາມເພິ່ງພໍໃຈຫຼາຍຕໍ່ດ້ານຄວາມຮູ້ທີ່ໄດ້ຈາກການຮຽນໂດຍມີຄ່າສະເລ່ຍ $\bar{X}$ =4.10ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0,49.

**ຕາຕະລາງ 12:** ສະແດງຄວາມເພິງພໍໃຈດ້ານການວັດຜົນ ແລະ ປະເມີນຜົນ

| ລ/ດ | **ເນື້ອໃນ** | $\bar{X}$ | **S.D** | **ລະດັບຄວາມເພິງພໍໃຈ** |
|---|---|---|---|---|
| 1 | ບົດທົດສອບສອດຄ່ອງກັບຈຸດປະສົງຂອງບົດສອນ | 4.70 | 0.45 | ເພິງພໍໃຈຫຼາຍທີ່ສຸດ |
| 2 | ຄໍາຖາມທີ່ໃຊ້ໃນບົດທົດສອບມີຄວາມຊັດເຈນ | 4.30 | 0.45 | ເພິງພໍໃຈຫຼາຍ |
| 3 | ຄໍາຖາມທີ່ໃຊ້ແມ່ນກົງກັບເນື້ອໃນທີ່ໄດ້ຮຽນ | 4.70 | 0.44 | ເພິງພໍໃຈຫຼາຍທີ່ສຸດ |
| 4 | ຄວາມຍາກຂອງຄໍາຖາມທີ່ໃຊ້ໃນການທົດສອບ | 4.10 | 0.30 | ເພິງພໍໃຈຫຼາຍ |
| 5 | ຄວາມງ່າຍຂອງຄໍາຖາມທີ່ໃຊ້ໃນການທົດສອບ | 3.90 | 0.34 | ເພິງພໍໃຈຫຼາຍ |
| | **ສະເລ່ຍລວມ** | **4.34** | **0.40** | **ເພິງພໍໃຈຫຼາຍ** |

ຕາຕະລາງ12ສະແດງໃຫ້ເຫັນເຖິງຜົນການວິເຄາະຄວາມເພິງພໍໃຈຂອງນັກສຶກສາຄູທີ່ມີຄວາມເພິງພໍໃຈຕໍ່ກັບການຈັດການຮຽນ-ການສອນດ້ວຍການນໍາໃຊ້ເທັກນິກການສອນແບບຈິກຊໍ Jigsawເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສໍາລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ເມື່ອພິຈາລະນາໂດຍລວມແລ້ວນັກສຶກສາມີຄວາມເພິງພໍໃຈຫຼາຍຕໍ່ດ້ານດ້ານການວັດຜົນ ແລະ ປະເມີນຜົນໂດຍມີຄ່າສະເລ່ຍ $\bar{X}$ =4.34 ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.40, ເຊິ່ງຜົນການວິເຄາະໃນແຕ່ລະດ້ານເຫັນວ່ານັກສຶກສາມີຄວາມເພິງພໍໃຈຫຼາຍທີ່ສຸດຕໍ່ດ້ານບົດທົດສອບສອດຄ່ອງກັບຈຸດປະສົງຂອງບົດສອນເຊິ່ງມີຄ່າສະເລ່ຍ$\bar{X}$ =4.70ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.45 ແລະ ຕໍ່ດ້ານຄໍາຖາມທີ່ໃຊ້ແມ່ນກົງກັບເນື້ອໃນທີ່ໄດ້ຮຽນໂດຍມີຄ່າສະເລ່ຍ $\bar{X}$ =4.70ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.45, ຖັດລົງມານັກສຶກສາມີຄວາມເພິງພໍໃຈຫຼາຍຕໍ່ດ້ານຄ□າຖາມທີ່ໃຊ້ໃນບົດທົດສອບມີຄວາມຊັດເຈນເຊິ່ງມີຄ່າສະເລ່ຍ $\bar{X}$ =4.30 ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.45, ລໍາດັບຕໍ່ມານັກສຶກສາມີຄວາມເພິງພໍໃຈຫຼາຍຕໍ່ດ້ານ ຄວາມຍາກຂອງຄໍາຖາມທີ່ໃຊ້ໃນການທົດສອບເຊິ່ງມີຄ່າສະເລ່ຍ $\bar{X}$ =4.10ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.30, ລ□າດັບສຸດທ້າຍແມ່ນຕໍ່ດ້ານຄວາມງ່າຍຂອງຄ□າຖາມທີ່ໃຊ້ໃນການທົດສອບ, ເຊິ່ງມີຄ່າສະເລ່ຍ $\bar{X}$ =3.90ມີຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 0.34 ຕາມລ□າດັບ.

## 4.2 ອະພິປາຍຜົນ

ການຄົ້ນຄວ້າຄັ້ງນີ້ ເປັນການສຶກສາປະສິດທິພາບຂອງບົດສອນ ຕາມເກນ 80/80, ສຶກສາດັດສະນີປະສິດທິຜົນຂອງການຮຽນຮູ້ແບບຮ່ວມມື ໂດຍການນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ແລະ ສຶກສາຄວາມເພິງພໍໃຈຂອງນັກສຶກສາຄູທີ່ຮຽນ ໂດຍການນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ເຂົ້າໃນການຮຽນ-ການສອນ ວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສໍາລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ອະພິປາຍຜົນໄດ້ດັ່ງນີ້:

1) ປະສິດທິພາບຂອງບົດສອນ ໂດຍການນໍາໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສໍາລັບນັກສຶກສາຄູຊັ້ນປະຖົມປີທີ 4 ລະບົບ 12+4 ມີປະສິດທິພາບເທົ່າກັບ 86.28/89.16 ເຊິ່ງສູງກວ່າເກນທີ່ຕັ້ງໄວ້. ໝາຍຄວາມວ່າຜູ້ຮຽນໄດ້ຄະແນນສະເລ່ຍຈາກການປະເມີນການທົດສອບຍ່ອຍ ຈາກການຮຽນຮູ້ແບບຮ່ວມມືໂດຍການນໍາໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດຄິດເປັນເປີເຊັນ 86.28 ແລະໄດ້ຄະແນນຈາກການເຮັດບົດທົດສອບວັດຜົນສໍາເລັດທາງການຮຽນຄິດເປັນເປີເຊັນ 89.16, ຜົນຂອງການຄົ້ນຄ້ວາປະກົດຜົນແນວນີ້ຍ້ອນວ່າ ຜູ້ສຶກສາຄົ້ນຄ້ວາມີແຜນການຈັດກິດຈະກໍາການຮຽນຮູ້ຢ່າງເປັນລະບົບ, ເປັນຂັ້ນຕອນເຊິ່ງຜູ້ຄົ້ນຄວ້າໄດ້ສຶກສາຫຼັກສູດ, ໄດ້ວິເຄາະເນື້ອໃນ, ສຶກສາອີງປະກອບໃນການສ້າງແຜນການສອນ ແລະ ສຶກສາທິດສະດີການຮຽນຮູ້ແບບຮ່ວມມືແບບຈິກຊໍ, ການຮຽນຮູ້ຕາມທິດສະດີດັ່ງກ່າວເປັນຮຽນຮູ້ທີ່ມີຂະບວນການຈັດການຮຽນຮູ້ໂດຍການຈັດແບ່ງຜູ້ຮຽນອອກເປັນກຸ່ມທີ່ມີສະມາຈໍານວນສະມາຊິກກຸ່ມລະ 5 ຫາ 6 ຄົນ ແລະ ມີລະດັບຄວາມສາມາດໃນການຮຽນທີ່ແຕກຕ່າງກັນເຊັ່ນ:ເກັ່ງ, ປານກາງ ແລະ ອ່ອນ, ສະມາຊິກຂອງກຸ່ມແຕ່ລະຄົນຈະມີໜ້າທີ່ຮັບຜິດຊອບຂອງໃຜລາວ ແລະ ຈະຕ້ອງໄດ້ຊ່ວຍເຫຼືອກັນໃນການແກ້ໄຂບັນຫາການຮຽນຮູ້ເພື່ອໃຫ້ວຽກສໍາເລັດຕາມເປົ້າໝາຍຂອງກຸ່ມ. ເຊິ່ງຜູ້ສອນຕ້ອງໄດ້ເຮັດໜ້າທີ່ເປັນຜູ້ແນະນໍາ,ຕິດຕາມການເຮັດກິດຈະກໍາຂອງຜູ້ຮຽນແຕ່ລະກຸ່ມ ແລະ ໃຫ້ຄວາມຊ່ວຍເຫຼືອຜູ້ຮຽນພາຍຫຼັງສໍາເລັດການເຮັດກິດຈະກໍາແລ້ວຄູຜູ້ຕ້ອງໄດ້ມີການປະເມີນຜົນການເຮັດກິດຈະກໍາພາຍໃນກຸ່ມຂອງແຕ່ລະຄົນແລ້ວສະເລ່ຍເປັນຄະແນນຂອງກຸ່ມ. ການຈັດກິດຈະກໍາການຮຽນຮູ້ຮູບແບບຮ່ວມມືເທັກນິກຈິກຊໍຈະເຮັດໃຫ້ຜູ້ຮຽນມີໂອກາດຊອກຫາຄວາມຮູ້ດ້ວຍຕົນເອງ, ມີໂອກາດສະແດງຄວາມຄິດຄວາມເຫັນ, ມີຄວາມທ້າວຫັນ, ກະຕືລືລົ້ນ, ມີຄວາມຮັບຜິດຊອບຕໍ່ໜ້າທີ່ຮັບຜິດຊອບຕໍ່ຕົນເອງ ແລະ ກຸ່ມ ເພື່ອເຮັດໃຫ້ກຸ່ມຕົນເອງປະສົບຜົນສໍາເລັດ ແລະ ໄດ້ຮັບການຍ້ອງຍໍສັນລະເສີນຈາກໝູ່ເພື່ອນ ແລະ ຄູຜູ້ອນ ນອກຈາກນີ້ຍັງເປັນການໃຫ້ໂອກາດແກ່ນັກຮຽນໃນການພັດທະນາທັກສະທາງສັງຄົມ. ເຊິ່ງການຄົ້ນຄ້ວາໄດ້ສອດຄ່ອງກັບແນວຄິດທິດສະດີຂອງສຸວິດ ມູນຄໍາ ແລະ ອໍລະໄທ ມູນຄໍາ(2550:134-136) ໄດ້ສະເໜີວ່າ: ຄວາມຮູ້ກ່ຽວກັບການຈັດການຮຽນຮູ້ແບບຮ່ວມມືໝາຍເຖິງຂະບວນການຮຽນຮູ້ທີ່ຈັດໃຫ້ຜູ້ຮຽນໄດ້ຮ່ວມມື ແລະ ຊ່ວຍເຫຼືອກັນໃນການຮຽນຮູ້ ໂດຍແບ່ງກຸ່ມຜູ້ຮຽນທີ່ມີຄວາມສາມາດຕ່າງກັນອອກເປັນກຸ່ມນ້ອຍໆເຊິ່ງເປັນລັກສະນະການຮ່ວມກຸ່ມຢ່າງມີໂຄງສ້າງທີ່ຊັດເຈນ, ມີການເຮັດວຽກຮ່ວມກັນ, ມີການແລກປ່ຽນຄວາມຄິດເຫັນ, ມີການຊ່ວຍເຫຼືອເພິງພາອາໄສເຊິ່ງກັນ ແລະ ກັນ, ມີຄວາມຮັບຜິດຊອບຮ່ວມກັນທັງໃນສ່ວນຕົວ, ເພື່ອໃຫ້ຕົນເອງ ແລະ ສະມາຊິກທຸກຄົນໃນກຸ່ມປະສົບຜົນສໍາເລັດຕາມເປົ້າໝາຍທີ່ກໍານົດໄວ້.ສອດຄ່ອງກັບ ອະນິດາ ຊິມພູພົງ (2556) ໄດ້ຄົ້ນຄວ້າກ່ຽວກັບຜົນການໃຊ້ຊຸດການຮຽນແບບຮ່ວມມືຈິກຊໍ ເລື່ອງ ພູມມິສາດປະເທດໄທທີ່ມີຕໍ່ຜົນສໍາເລັດທາງການຮຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນເທດສະບານ 4 (ເຊົາວ໌ນປຣິຊາອຸທິດ) ຜົນການວິໄຈພົບວ່າ ຊຸດການຮຽນແບບຮ່ວມມືເລື່ອງ ພູມມິສາດປະເທດໄທມີປະສິດທິພາບ 83.33/62.29 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ 70/70. ສອດຄ່ອງກັບ ສະວິຕີ ເຖົາໂທ (2553)ໄດ້ຄົ້ນຄວ້າກ່ຽວກັບຜົນການໃຊ້ແບບການສອນທີມີຜົນຕໍ່ຄວາມສໍາເລັດທາງການຮຽນລາຍວິຊາການພັດທະນາຫຼັກສູດຂອງນັກສຶກສາລະດັບປະລິນຍາຕີ ມະຫາວິທະຍາໄລນະຄອນພະນົມ ຜົນການວິໄຈພົບວ່າ ແຜນການຮຽນທີ່ພັດທະນາຂຶ້ນມີປະສິດ 80.25/83.20 ແລະ ສູງກວ່າເກນທີ່ຕັ້ງໄວ້ຄື 75/75.

ສະຫຼຸບແລ້ວປະສິດທິພາບຂອງບົດສອນໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ມີປະສິດທິພາບເທົ່າກັບ 86.28/89.16 ສະແດງວ່າເປັນໄປຕາມເກນ ແລະ ສູງກວ່າເກນທີ່ຕັ້ງໄວ້.

2) ການວິເຄາະດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນຮູ້ຂອງນັກສຶກສາຄູ ໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ມີຄ່າສະແດງຜົນຄວາມກ້າວໜ້າທາງດ້ານຮຽນເທົ່າກັບ 0.82ສະແດງວ່ານັກສຶກສາຄູມີຄວາມກ້າວໜ້າຂຶ້ນຈາກຄວາມຮູ້ເດີມ 0.82ຄິດເປັນເປີເຊັນ 0.82 ສ່ວນຮ້ອຍ ເຊິ່ງສູງກວ່າເກນທີ່ຕັ້ງໄວ້ທີ່ 0.50. ສອດຄ່ອງກັບການຄົ້ນຄ້ວາຂອງ ອຸໄລວອນ ວະລະກຸນລັງສອນ (2557:8) ໄດ້ຄົ້ນຄວ້າກ່ຽວກັບ ການພັດທະນາທັກສະການຄິດດ້ວຍເທັກນິກຈິກຊໍ 2 ໃນລາຍວິຊາສາລະສົນເທດເພື່ອການສຶກສາຄົ້ນຄ້ວາ ຜົນສຳເລັດທາງການຮຽນຂອງນັກສຶກສາລະດັບປະລິນຍາຕີ ປີທີ 1 ຄະນະສຶກສາສາດ ສະຖາບັນການພົນສຶກສາ ວິທະຍາເຂດ ຊຸມພົນ ທີ່ຮຽນຮູ້ດ້ວຍເທັກນິກຈິກຊໍ 2 ພົບວ່າ ນັກສຶກສາທີ່ເປັນກຸ່ມທົດລອງມີຜົນສຳເລັດທາງການຮຽນຫຼັງການຮຽນ-ການສອນ ມີຄະແນນສະເລ່ຍ 19.89 (79.56 ສ່ວຍຮ້ອຍ) ສູງກວ່າເກນທີ່ປະເມີນທີ່ກຳນົດໄວ້ 16.5 ຄະແນນ (70 ສ່ວນຮ້ອຍ) ເຊິ່ງເປັນໄປຕາມສົມມຸດຖານການວິໄຈ. ສອດຄ່ອງກັບການຄົ້ນຄ້ວາຂອງ ປະພົນ ເຈຍລະກຸນ (2554:9)ໄດ້ຄົ້ນຄວ້າໃນຫົວຂໍ້ ຜົນການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ທີ່ມີຕໍ່ມະນຸດສຳພັນ ແລະ ຜົນສຳເລັດທາງການຮຽນເລື່ອງ ປະຊາຄົມເສດຖະກິດອາຊ່ຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 4 ໂຮງຮຽນສຶກສາສົງເຄາະພະນົມທວນ ຈັງຫວັດການຈະນະບູລີ ຜົນການວິໄຈພົບວ່າ ນັກຮຽນທີ່ຮຽນຮູ້ດ້ວຍເທັກນິກມີຜົນສຳເລັດທາງການຮຽນຫຼັງການຮຽນສູງກວ່າກ່ອນການຮຽນ ຢ່າງມີໃນສຳຄັນທາງສິຖິຕິທີ່ລະດັບ .05 ເປັນໄປຕາມສົມມຸດຖານທີ່ຕັ້ງໄວ້. ສອດຄ່ອງກັບການຄົ້ນຄວ້າຂອງ ສຸລະພົນ ຜ່ອງນະລາ (2553:66) ທີ່ໄດ້ສຶກສາຄົ້ນຄ້ວາກ່ຽວກັບຜົນການຮຽນແບບຮ່ວມມືດ້ວຍເທັກນິກຈິກຊໍ ເລື່ອງ ຫຼັກທຳໃນພະພຸດທະສາສະໜາ ຜົນການສຶກສາຄົ້ນຄ້ວາພົບວ່າ: ນັກຮຽນທີ່ໄດ້ຮັບການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍມີຜົນສຳເລັດທາງການຮຽນຫຼັງຮຽນສູງກວ່າກ່ອນຮຽນ ຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ .01.ສອດຄ່ອງກັບການວິໄຈໃນຊັ້ນຮຽນຂອງ ນາລີຄຳ ຈັນ (2557)ໄດ້ເຮັດການວິໄຈການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ໃນຫົວຂໍ້ເລື່ອງ ລະບົບຄຸນນະພາບວິຊາການປະກັນຄຸນນະພາບການສຶກສາ ຂອງນັກສຶກສາປີທີ 2 ຄະນະສຶກສາສາດ ສະຖາບັນການພົນສຶກສາ ວິທະຍາເຂດເພັດຊະບູນ ຜົນການວິໄຈພົບວ່າ ນັກສຶກສາທີ່ຮຽນດ້ວຍເທັກນິກຈິກຊໍ ມີຄະແນນສະເລ່ຍກ່ອນການຮຽນເທົ່າກັບ 17.44 ຄະແນນ ຄະແນນສະເລ່ຍຫຼັງການຮຽນເທົ່າກັບ 23.00 ແລະ ຜົນສຳເລັດທາງການຮຽນສູງກວ່າກ່ອນການຮຽນຢ່າງມີໃນສຳຄັນທາງສະຖິຕິທີ່ລະດັບ 0.05.

ສະຫຼຸບຜົນການຄົ້ນຄວ້າດັດສະນີປະສິດທິຜົນຄວາມກ້າວໜ້າທາງດ້ານການຮຽນຮູ້ຂອງນັກສຶກສາຄູໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ມີປະສິດທິຜົນເທົ່າກັບກັບ 0,82 ສະແດງວ່ານັກສຶກສາທີ່ຮຽນຮູ້ດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍມີຄວາມຮູ້ເພີ່ມຂຶ້ນ ໂດຍຄິດເປັນ 82 ສ່ວນຮ້ອຍ ເຊິ່ງສູງກວ່າເກນທີ່ກຳນົດໄວ້ 0.5.

3) ການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ-ການສອນໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ4ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ພົບວ່າ ນັກສຶກສາຄູມີຄວາມເພິ່ງພໍໃຈໃນລະດັບຄວາມເພິ່ງພໍໃຈຫຼາຍໂດຍມີຄ່າສະເລ່ຍເທົ່າກັບ $\bar{X}$ = 4.33, ແລະ ມີຄ່າຜັນປ່ຽນມາດຕະຖານS.D = 0.22. ສອດຄ່ອງກັບການວິໄຈໃນຊັ້ນຮຽນຂອງ ນາລີຄຳ ຈັນ (2557:30)ໄດ້ເຮັດການວິໄຈການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ໃນຫົວຂໍ້ເລື່ອງ ລະບົບຄຸນນະພາບວິຊາການປະກັນຄຸນນະພາບການສຶກສາ ຂອງນັກສຶກສາ

ປີທີ 2 ຄະນະສຶກສາສາດ ສະຖາບັນການພົນສຶກສາ ວິທະຍາເຂດເພັດຊະບູນ ຜົນການວິໄຈພົບວ່າ ນັກສຶກສາມີຄວາມເພິ່ງພໍໃຈຕໍ່ການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ເລື່ອງ ລະບົບຄຸນນະພາບໂດຍລວມຢູ່ໃນລະດັບຫຼາຍ ແລະ ມີຄວາມເພິ່ງພໍໃຈທຸກຄົນຢູ່ໃນລະດັບຫຼາຍ ແຕ່ລະຂໍ້ທີ່ນັກສຶກສາເພິ່ງພໍໃຈທີ່ສຸດແມ່ນ ເນື້ອໃນມີປະໂຫຍດຕໍ່ວິຊາຊີບຄູ ແລະ ອາຊີບອື່ນໆ ການນຳສະເໜີອົງຄວາມຮູ້ຂອງແຕ່ລະກຸ່ມ ເນື້ອຫາວິຊາເປັນຄວາມຮູ້ໃໝ່ ແລະ ບໍ່ຍາກເກີນໄປ ແລະ ການຫາກິດຈະກຳ ແລະ ການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນກຸ່ມຕາມລະດັບ. ສອດຄ່ອງກັບຜົນການວິໄຈຂອງ ທັດສະນີຍາ ກອງພາ (2550:11) ທີ່ພົບວ່ານັກຮຽນມີຄວາມເພິ່ງພໍໃຈຕໍ່ກັບກິດຈະກຳແບບມີສ່ວນຮ່ວມ ເລື່ອງໂລກຕິດຕໍ່ ແລະ ບໍ່ຕິດຕໍ່ ກຸ່ມສາລະການຮຽນຮູ້ສຸຂະສຶກສາ ແລະ ພະລະສຶກສາ ຊັ້ນມັດທະຍົມປີທີ 3 ຢູ່ໃນລະດັບດີຫຼາຍ. ສອດຄ່ອງກັບ ອະນິດາ ຊິມພູພົງ (2556) ໄດ້ຄົ້ນຄວ້າກ່ຽວກັບຜົນການໃຊ້ຊຸດການຮຽນແບບຮ່ວມມືຈິກຊໍ ເລື່ອງ ພູມມີສາດປະເທດໄທທີ່ມີຕໍ່ຜົນສຳເລັດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນເທດສະບານ 4 (ເຊົາວົນປຣິຊາອຸທິດ) ຜົນການວິໄຈພົບວ່ານັກຮຽນມີຄວາມເພິ່ງພໍໃຈຕໍ່ການຮຽນດ້ວຍຊຸດການຮຽນແບບຮ່ວມມືໂດຍພາບລວມຢູ່ໃນລະດັບດີຫຼາຍ.

ສະຫຼູບແລ້ວ ຄວາມເພິ່ງພໍໃຈຂອງນັກຮຽນທີ່ມີຕໍ່ການຈັດການຮຽນ-ການສອນໂດຍການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ມີຄ່າສະເລ່ຍເທົ່າກັບ $\overline{X} = 4.33$, ແລະ ມີຄ່າຜັນປ່ຽນມາດຕະຖານ S.D = 0.22 ສະແດງວ່ານັກຮຽນມີຄວາມເພິ່ງພໍໃຈຫຼາຍ.

# ພາກທີ 5

# ສະຫຼຸບ,ຂໍ້ຈຳກັດໃນການຄົ້ນຄວ້າ ແລະ ຂໍ້ແນະນຳ

ການຄົ້ນຄວ້າຄັ້ງນີ້ແມ່ນການສອນທົດລອງເພື່ອສຶກສາວິທີການສອນຮູບແບບການຮຽນຮູ້ແບບຮ່ວມມືດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ຈຸດປະສົງຂອງການຄົ້ນຄວ້າຄັ້ງນີ້ແມ່ນເພື່ອ:1. ສຶກສາປະສິດທິພາບຂອງບົດສອນວິຊາຫຼັກສູດ ແລະ ການສອນພາສາອັງກິດໂດຍນຳໃຊ້ເທັກ ນິກການສອນແບບຈິກຊໍ(Jigsaw) ຕາມເກນ80/80.2. ສຶກສາປະສິດທິຜົນ (E.I)ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw).3. ສຶກສາຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ກັບການສອນຂອງອາຈານທີ່ນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາ ຫຼັກສູດ ແລະ ການສອນພາສາອັງກິດ.

ເຄື່ອງມືທີ່ໃຊ້ໃນການສຶກສາຄົ້ນຄວ້າປະກອບມີບົດສອນຈຳນວນ 5 ບົດ, ແບບທົດສອບວັດຜົນສຳເລັດທາງການຮຽນຊະນິດເລືອກຕອບ 4 ຕົວເລືອກ 1 ສະບັບ ມີຈຳນວນຄຳຖາມທັງໝົດ 25 ຂໍ້, ແບບທົດສອບລະຫວ່າງຮຽນ 5 ຊຸດ, ແບບສັງເກດຂະບວນການຮຽນ-ການສອນ ແລະ ແບບສອບຖາມວັດຄວາມເພິ່ງພໍໃຈສີ່ດ້ານ 1 ສະບັບ ມີຄຳຖາມ 21 ຂໍ້. ກຸ່ມທົດລອງທີ່ໃຊ້ໃນການສອນທົດລອງແມ່ນ ນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ຈຳນວນ 31 ຍິງ 19 ຄົນ. ຂັ້ນຕອນໃນການລວບລວມຂໍ້ມູນຜູ້ຄົ້ນຄວ້າໄດ້ເອົາໜັງສືສະເໜີຈາກຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດໄປສະເໜີຫ້ອງການສົ່ງເສີມວິຊາການ ແລະ ຫ້ອງການສາຍສ້າງຄູອະນຸບານ-ປະຖົມເພື່ອຂໍອະນຸຍາດເກັບຂໍ້ມູນເມື່ອໄດ້ຮັບອະນຸຍາດແລ້ວກໍ່ດຳເນີນການສອນທົດລອງ. ການວິເຄາະຂໍ້ມູນແມ່ນນຳໃຊ້ Microsoft Office Excel ເພື່ອວິເຄາະຫາຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ, ສ່ວນຮ້ອຍ, ຄ່າປະສິດທິພາບ ແລະ ຄ່າດັດສະນີປະສິດທິຜົນເພື່ອນຳເອົາຜົນມາທຽບກັບເກນທີ່ກຳນົດໄວ້.

## 5.1 ສະຫຼຸບ

ຈາກການສຶກສາຄົ້ນຄ້ວາການຮຽນ-ການສອນ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ4ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ສາມາດອະພິປາຍຜົນໄດ້ດັ່ງນີ້:

### 5.1.1ຜົນການວິເຄາະຫາປະສິດທິພາບຂອງບົດສອນ ($E_1/E_2$)

ຜົນການວິເຄາະຫາຄ່າປະສິດທິພາບຂອງບົດສອນ ພົບວ່າ: ປະສິດທິພາບຂອງຂະບວນການຮຽນມີຄ່າສະເລ່ຍ $\overline{X}$ = 112.16, ມີຄ່າຜັນປ່ຽນມາດຕະຖານ S.D= 6.05, $E_1$ = 86.28 ແລະ ຜົນສ□າເລັດທາງການຮຽນຮູ້ຫຼັງການຮຽນມີຄ່າສະເລ່ຍ $\overline{X}$ = 22.29, ມີຄ່າຜັນປ່ຽນມາດຕະຖານ S.D= 2.48, $E_2$ = 89.16 ເຊິ່ງສະແດງໃຫ້ເຫັນວ່າປະສິດທິພາບຂອງບົດສອນ ($E_1/E_2$)ເທົ່າກັບ86.28/89.16ສູງກວ່າເກນທີ່ຕັ້ງໄວ້80/80.

### 5.1.2ຜົນການວິເຄາະດັດສະນີປະສິດທິຜົນຄວາມກ້າວໜ້າທາງການຮຽນ

ຜົນການວິເຄາະປະສິດທິຜົນ (E.I)ການຮຽນຮູ້ຂອງນັກສຶກສາທີ່ຮຽນວິຊາຫຼັກສູດ ແລະ ການສອນພາສາອັງກິດ ໂດຍນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ມີຄ່າເທົ່າກັບ 0.82 ສະແດງວ່ານັກສຶກສາມີຄວາມຮູ້ເພີ່ມຂຶ້ນ82 ສ່ວນຮ້ອຍ ແລະ ສູງກວ່າເກນທີ່ຕັ້ງໄວ້ 0.50.

### 5.1.3ຜົນການວິເຄາະຄວາມເພິ່ງພໍໃຈຂອງນັກຮຽນ

ຈາກຜົນຂອງການວິເຄາະຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຮຽນຫຼການສອນ ດ້ວຍການນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw) ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບ

ນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລຄູສາລະວັນ ໂດຍລວມສະແດງໃຫ້ເຫັນວ່ານັກສຶກສາຄູມີຄວາມເພິ່ງພໍໃຈຫຼາຍ ມີຄ່າສະເລ່ຍເທົ່າກັບ$\bar{X}$ = 4.33 ແລະ ມີຄ່າຜັນປ່ຽນມາດຕະຖານS.D = 0.22.

## 5.2 ຂໍ້ຈຳກັດໃນການສຶກສາ

ຈາກການສຶກສາຄົ້ນຄ້ວາ ຜູ້ສຶກສາໄດ້ພົບເຫັນຂໍ້ຈຳກັດໃນໄລຍະການດຳເນີນການຄົ້ນຄ້ວາດັ່ງນີ້:

- ການຈັດການຮຽນ-ການສອນໂດຍນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ຄູຕ້ອງໄດ້ກະກຽມເນື້ອໃນ, ພ້ອມທັງມີຄວາມພ້ອມທາງດ້ານວິທີການສອນເປັນຢ່າງດີ ແລະ ຕ້ອງໄດ້ຊອກຮູ້ຄວາມສາມາດຂອງຜູ້ຮຽນ ເພາະຄວາມສາມາດໃນການຮຽນຂອງນັກສຶກສາແມ່ນອີກປັດໃຈນຶ່ງທີ່ສົ່ງຜົນຕໍ່ຂະບວນການການປະຕິບັດກິດຈະກຳຂອງຜູ້ຮຽນ.
- ການຈັດການຮຽນ-ການສອນໂດຍນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ຜູ້ສອນຕ້ອງໄດ້ໃຊ້ສື່ ແລະ ອຸປະກອນຮັບໃຊ້ຢ່າງຫຼວງຫຼາຍສະນັ້ນມັນຈຶ່ງເປັນຂໍ້ຈຳກັດໃນການຈັດຫາງົບປະມານຮັບໃຊ້ໃນການສອນ.
- ການຈັດການຮຽນ-ການສອນໂດຍນຳໃຊ້ເທັກນິກການສອນແບບຈິກຊໍ (Jigsaw)ເປັນຮູບແບບການຮຽນຮູ້ແບບຮ່ວມມືແບບໃໝ່ທີ່ບໍ່ໄດ້ມີການນຳໃຊ້ເຂົ້າໃນການຈັດການຮຽນ-ການສອນເຊິ່ງນັກຮຽນນັກສຶກບໍ່ມີຄວາມຄຸ້ຍເຄີຍສະນັ້ນຄູສອນ ແລະ ນັກສຶກສາອາດພົບບັນຫາ ແລະ ຂໍ້ຫຍຸ້ງຍາກໃນໄລຍະການປະຕິບັດຂະບວນການຮຽນ-ການສອນ.

## 5.3 ຂໍ້ແນະນຳ

ຈາກການສຶກສາຄົ້ນຄ້ວາການນຳໃຊ້ເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນວິຊາຫຼັກສູດ ແລະ ການສອນ ພາສາອັງກິດ ສຳລັບນັກສຶກສາຄູຊັ້ນປະຖົມ ປີທີ 4 ລະບົບ 12+4 ທີ່ວິທະຍາໄລສ້າງຄູສາລະວັນ ຜູ້ຄົ້ນຄວ້າມີຂໍ້ສະເໜີດັ່ງນີ້:

### 5.3.1 ຂໍ້ສະເໜີແນະໃນການນຳເອົາຜົນການສຶກສາຄົ້ນຄວ້າໄປນຳໃຊ້

1. ຄູສອນຄວນນຳເອົາເທັກນິກການສອນແບບຈິກຊໍ(Jigsaw)ເຂົ້າໃນການຮຽນ-ການສອນ ເນື່ອງຈາກເທັກນິກດັ່ງກ່າວເປັນເທັກນິກການສອນທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ.

2. ຄູສອນຄວນສຶກສາເທັກນິກການສອນແບບຈິກຊໍໃຫ້ມີຄວາມເຂົ້າໃຈ ແລະ ເລິກເຊິ່ງເພື່ອຈະສາມາດປະຕິບັດກິດຈະກຳໃຫ້ຖືກຕ້ອງຕາມຂັ້ນຕອນ ແລະ ເພື່ອບັນລຸເປົ້າໝາຍທີ່ຕັ້ງໄວ້.

### 5.3.2 ຂໍ້ສະເໜີແນະໃນການສຶກສາຄົ້ນຄ້ວາຄັ້ງຕໍ່ໄປ

1)ຄວນດຳເນີນການຄົ້ນຄວ້າເພື່ອປຽບທຽບການສອນຮູບແບບການຮຽນຮູ້ແບບຮ່ວມມືເທັກນິກຈິກຊໍກັບເທັກການສອນຮູບແບບອື່ນເຊັ່ນ: ຮູບແບບ LT, STAD, 7E ເພື່ອເຮັດໃຫ້ຜົນການຄົ້ນຄວ້າມີຄວາມຊັດເຈນຂຶ້ນ.

2) ຄວນມີການນ□າເອົາເທັກນິກການສອນແບບຈິກຊໍໄປສອນໃນລາຍວິຊາພາສາອັງກິດແຕ່ງລົງເລິກທາງດ້ານຫຼັກໄວຍະກອນພາສາອັງກິດ, ທັກສະການອ່ານ, ທັກສະການຂຽນ, ທັກສະການເວົ້າ ແລະ ທັກສະການຂຽນ.

# ຕາຕະລາງເວລາ

ໄລຍະເວລາທີ່ຜູ້ຄົ້ນຄ້ວາໃຊ້ໃນການດຳເນີນການທົດລອງ ການຈັດການຮຽນ-ການສອນໃນຄັ້ງນີ້ແມ່ນ ໃນພາກຮຽນທີ 1 ສົກຮຽນ 2018-2019 ເປັນຈຳນວນ 5 ອາທິດ, ອາທິດລະ 1 ຄັ້ງ, ຄັ້ງລະ 2 ຊົ່ວໂມງ ລວມທັງໝົດ 5 ຄັ້ງ ເທົ່າກັບ 10 ຊົ່ວໂມງ.

**ຕາຕະລາງດຳເນີນການເກັບກຳຂໍ້ມູນ**

ການດຳເນີນການເກັບກຳຂໍ້ມູນຂອງຜູ້ຄົ້ນຄ້ວາໄດ້ດຳເນີນເລີ່ມຕັ້ງແຕ່ ວັນທີ 3 ເດືອນ ຕຸລາ ປີ 2018, ຜູ້ຄົ້ນຄວ້າໄດ້ສະເໜີແຜນການດຳເນີນການຄົ້ນຄວ້າໄວ້ດັ່ງນີ້:

| ເວລາ ແລະ ສະຖານ | ຫົວຂໍ້ | ກິດຈະກຳ |
|---|---|---|
| 3 ຕຸລາ2018<br>10:10-11:40AM<br>ຫ້ອງ B2 | ແນະນຳການຮຽນ-ການສອນ ແລະ ອະທິບາຍວິທີສອນແບບຮ່ວມມືນຳໃຊ້ເທັກ (Jigsaw) ພ້ອມທັງທົດສອບກ່ອນການຮຽນ (Pre-test) | ນັກສຶກສາຄູເຮັດແບບທົດສອບວັດຜົນກ່ອນການຮຽນ |
| 10 ຕຸລາ2018<br>10:10-11:40AM<br>ຫ້ອງ B2 | ການສອນຄຳສັບພາສາອັງກິດ (Teaching Vocabulary) | ນັກສຶກສາແບ່ງກຸ່ມເຮັດກິດຈະກຳ, ຄົ້ນຄວ້າສົນທະນາ,ສະເໜີຜົນການຄົ້ນຄ້ວາ ແລະ ເຮັດບົດທົດສອບຍ່ອຍ ບົດທີ 1 |
| 17 ຕຸລາ2018<br>10:10-11:40AM<br>ຫ້ອງ B2 | ການສອນການຂຽນ (Teaching hand writing) | ນັກສຶກສາແບ່ງກຸ່ມເຮັດກິດຈະກຳ, ຄົ້ນຄວ້າສົນທະນາ, ສະເໜີຜົນການຄົ້ນຄ້ວາ ແລະ ເຮັດບົດທົດສອບຍ່ອຍ ບົດທີ 2 |
| 24 ຕຸລາ2018<br>10:10-11:40AM<br>ຫ້ອງ B2 | ການສອນການອ່ານ (Teaching Reading) | ນັກສຶກສາແບ່ງກຸ່ມເຮັດກິດຈະກຳ, ຄົ້ນຄວ້າສົນທະນາ, ສະເໜີຜົນການຄົ້ນຄ້ວາ ແລະ ເຮັດບົດທົດສອບຍ່ອຍ ບົດທີ 3 |
| 31 ຕຸລາ2018<br>10:10-11:40AM<br>ຫ້ອງ B2 | ການສອນການເວົ້າ (Teaching Speaking) | ນັກສຶກສາແບ່ງກຸ່ມເຮັດກິດຈະກຳ, ຄົ້ນຄວ້າສົນທະນາ, ສະເໜີຜົນການຄົ້ນຄ້ວາ ແລະ ເຮັດບົດທົດສອບຍ່ອຍ ບົດທີ 4 |
| 7ພະຈິກ2018<br>10:10-11:40AM<br>ຫ້ອງ B2 | ການສອນການຟັງ (Teaching Listenint) | ນັກສຶກສາແບ່ງກຸ່ມເຮັດກິດຈະກຳ, ຄົ້ນຄວ້າສົນທະນາ, ສະເໜີຜົນການຄົ້ນຄ້ວາ ແລະ ເຮັດບົດທົດສອບຍ່ອຍ ບົດທີ 5 |
| 14 ພະຈິກ2017<br>10:10-11:40 AM<br>ຫ້ອງ B2 | ທົດສອບວັດຜົນສຳເລັດທາງການຮຽນ (Post-test) ແລະ ເກັບກຳຂໍ້ມູນ ຂອງແບບສອບຖາມວັດຄວາມເພິງພໍໃຈ | ນັກສຶກສາຄູເຮັດບົດທົດສອບວັດຜົນສຳເລັດທາງການຮຽນ ແລະ ສະແດງຄວາມຄິດເຫັນຕາມແບບສອບຖາມວັດຄວາມເພິງພໍໃຈ |

# ເອກະສານອ້າງອີງ

# ເອກະສານອ້າງອີງ


ກະຊວງສຶກສາທິການ ແລະ ກິລາ. (2008). *ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006-2015.* ນະຄອນຫຼວງວຽງຈັນ: ໂຮງພິມສີສະຫວາດ.

ກະຊວງສຶກສາທິການ ແລະ ກິລາ. (2016). *ກົດໝາຍວ່າດ້ວຍການສຶກ.* (ພິມຄັ້ງທີ່ 8). ນະຄອນຫຼວງວຽງຈັນ: ລັດວິສາຫະກິດໂຮງພິມສຶກສາ.

ກິຕິມາ ປີຕີດີລົກ. (2529). *ທິດສະດີບໍລິຫານອົງກອນ.* ກຸງເທບມະຫານະຄອນ: ທະນະການພິມ.

ສິນນະວົງ ມອນມະນີ ພ້ອມຄະນະ. (1998). *ປະຫວັດການຮຽນ-ການສອນຂອງລາວສໍາລັບໂຮງຮຽນສ້າງຄູ ລະບົບ 11+3.* ໂຮງພິມແຫ່ງລັດ.

ສຸຣິຍາ ເພັງລີ. (2552). *ການຈັດກິດຈະກໍາການຮຽນຮູ້ເພື່ອພັດທະນາທັກສະການອ່ານຈັບໃຈວາມຊັ້ນປະຖົມສຶກສາປີທີ 3, ໂດຍກຸ່ມຮ່ວມມືແບບຈິກຊໍ*[ວິທະຍານິພົນ].ມະຫາບັນດິດ ສາຂາ ຫຼັກສູດ ແລະ ການສອນ*.* ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ສຸລາງ ໂຄ້ຕະກຸນ. (2544). *ຈິດຕະວິທະຍາການສຶກສາ* (ພິມຄັ້ງທີ່ 5.). ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ສຸລະພົນ ຜ່ອງນະລາ.(2553). *ການຮຽນແບບຮ່ວມມືດ້ວຍເທັກນິກຈິກຊໍ ເລື່ອງ ຫຼັກທໍາໃນພະພຸດທະສາສະໜາ* [ວິທະຍານິພົນ]ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ສຸວິດ ມູນຄໍາ ແລະ ອໍລະໄທ ມູນຄໍາ. (2550). *19 ວິທີຈັດການຮຽນຮູ້ເພື່ອພັດທະນາຄວາມຮູ້ ແລະ ທັກສະ* (ພິມຄັ້ງທີ່ 6). ກຸງເທບ: ພາບພິມ.

ສຸວັນນາ ສະຫງວນຣັດ. (2558). ການສຶກສາຜົນສໍາເລັດທາງການຮຽນດ້ວຍການຈັດກິດຈະກໍາການຮຽນຮູ້ດ້ວຍກຸ່ມຮ່ວມມືແບບຈິກຊໍ ເພື່ອພັດທະາຄວາມຮູ້ ຄວາມເຂົ້າໃຈ ລາຍວິຊາ EDCI201 ການອອກແບບການຈັດການຮຽນຮູ້. *ບົດຄວາມວິໄຈຄະນະສຶກສາສາດ ມະຫາວິທະຍາໄລລາດຊະພັດເພັດບູລີ, 25*(5).

ສົມຈິດ ຈັນສາຍ. (2557). *ການອອກແບບ ແລະ ການພັດທະນາການຮຽນ-ການສອນ.* ນະຄອນປະຖົມ: ບໍລິສັດ ເພຊະເກມພຣິນຕິ້ງ ກຣຸບຈໍາກັດ.

ສົມນຶກ ພັດທິຍະທະນີ. (2548). *ການວັດຜົນການສຶກສາ.*(ພິມຄັ້ງທີ 5). ກາລະສິນ: ການລະສິນປະສານການພິມ.

ສົມນຶກ ພັດທິຍາທານີ. (2552). *ການວັດຜົນການສຶກສາ.* ກາລະສິນ: ປະສານການພິມ.

ຊະນາທິບພອນກຸນ. (2554). *ການສອນລະບົບການຄິດ:ທິດສະດີ ແລະ ການນໍາໄປໃຊ້.* ກຸງເທບ: ຈຸລາລົງກອນມະຫາວິທະຍາໄລ.

ໄຊວັດ ສຸທິລັດ. (2552). *80 ນະວັດຕະກ□າການຮຽນຮູ້ທີ່ເນັ້ນຜູ້ຮຽນເປັນສ□າຄັນ.* ກຸງເທບ: ແຄເນັກອິນເຕີໂຄເປີເລຊັນ.

ຊາດຊາຍ ເນືອງໂນລາດ. (2549). *ການພັດທະນາແຜນການຈັດກິດຈະກໍາການຮຽນຮູ້ແບບຮ່ວມມືໂດຍໃຊ້ເທັກນິກ TAI ກຸ່ມການຮຽນຮູ້ສິລະປະເລື່ອງດົນຕີ ຊັ້ນມັດທະຍົມສຶກສາ ປີທີ 1.* [ວິທະຍານິພົນ]ມະຫາສາລະຄາມ: ມະຫາວິທະຍາໄລສາລະຄາມ.

ຊໍວະລິດ ຊູຄໍາແພງ. (2551). *ການປະເມີນການຮຽນຮູ້ Learning assment.* ມະຫາສາລະຄາມ: ສ□ານັກພິມມະຫາວິທະຍາໄລມາຫາສາລະຄາມ.

ດາລີ ສຸລິພັນ. (2545). *ຄວາມເພິ່ງພໍໃຈ ແລະ ຄວາມຕ້ອງການດ້ານການຈັດການສຶກສາສາຍອາຊີບຂອງສູນບໍລິການການສຶກສານອກໂຮງຮຽນອໍາເພີເມືອງ ຈັງຫວັດໜອງບົວລໍາພູ.*[ວິທະຍານິພົນ]. ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ທິດສະໜາ ແຂມມະນີ. (2547). *ອົງຄວາມຮູ້ເພື່ອການຈັດລະບົບການຮຽນຮູ້ທີ່ມີປະສິດທິພາບ.* ກຸງເທບ: ສໍານັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ທັດສະນີຍາ ກອງພາ.(2550).*ຄວາມເພິ່ງພໍໃຈຕໍ່ກັບກິດຈະກໍາແບບມີສ່ວນຮ່ວມ ເລື່ອງໂລກຕິດຕໍ່ ແລະ ບໍ່ຕິດຕໍ່ ກຸ່ມສາລະການຮຽນຮູ້ສຸຂະສຶກສາ ແລະ ພະລະສຶກສາ ຊັ້ນມັດທະຍົມປີທີ 3*. [ວິທະຍານິພົນ]. ມະຫາສາລະຄາມ: ມະຫາວິທະຍາໄລມະຫາສາລະຄາມ.

ນາລີຄໍາ ຈັນ. (2557).*ການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ໃນຫົວຂໍ້ເລື່ອງ ລະບົບຄຸນນະພາບວິຊາການປະກັນຄຸນນະພາບການສຶກສາ ຂອງນັກສຶກສາປີທີ 2 ຄະນະສຶກສາສາດ ສະຖາບັນການພົນສຶກສາວິທະຍາເຂດເພັດຊະບູນ.* [ວິທະຍານິພົນ]. ເພັດຊະບູນ: ຄະນະສຶກສາສາດ

ບຸນຊົມ ສີສະອາດ. (2545). *ການວິໄຈເບື້ອງຕົ້ນ.* ກຸງເທບ: ສຸລີວິຍະສານ.

ບຸນລ້ຽງ ທຸມທອງ. (2554). *ການພັດທະນາຫຼັກສູດ.*(ພິມຄັ້ງທີ 3). ກຸງເທບ: ສ□ານັກພິມຈຸລາລົງກອນມະຫາວິທະຍາໄລ.

ປະພົນ ເຈຍລະກຸນ.(2554).*ຜົນການຮຽນແບບຮ່ວມມືໂດຍໃຊ້ເທັກນິກຈິກຊໍ ທີ່ມີຕໍ່ມະນຸດສໍາພັນ ແລະ ຜົນສໍາເລັດທາງການຮຽນເລື່ອງ ປະຊາຄົມເສດຖະກິດອາຊຽນ ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 4 ໂຮງຮຽນສຶກສາສົງເຄາະພະນົມທວນ ຈັງຫວັດການຈະນະບູລີ.* [ວິທະຍານິພົນ]ການຈະນະບໍລີ: ບໍ່ລະບຸສະຖານທີ່ພິມ.

ວາລີ ຖີຣະຈິດ. (2534). *ຈິດຕະວິມະຍາການສຶກສາ:ພາກວິຊາຈິດຕະວິທະຍາ ແລະ ການແນະແນວ.* ກຸງເທບ: ມະຫາວິທະຍາໄລສາລະຄາມ.

ຜະເຊີນ ກິດຈະການ ແລະ ສົມນຶກ ພັນທິບທານີ. (2545). *ດັດສະນີປະສິດທິຜົນ (Effectiveness Index: E.I).* ການວັດຜົນການສຶກສາ: ມະຫາວິທະຍາໄລສາລະຄາມ.

ພົນ ຄົງພູນ. (2529).*ຄວາມເພິ່ງພໍໃຈທີ່ມີຕໍ່ບົດບາດໜ້າທີ່ຄວາມຮັບຜິດຊອບຂອງຄະນະກໍາມະການປະຖົມສຶກສາໃນຈັງຫວັດ 14 ຈັງຫວັດພາກໃຕ້.* ກຸງເທບ: ມະຫາວິທະຍາໄລສີນະຄະລິນວິໂລດ.

ລ້ວນ ສາຍຍົດ ແລະ ອັງຄະນາ ສາຍຍົດ. (2543). *ເທັກນິກການວັດຜົນການຮຽນຮູ້* (ພິມຄັ້ງທີ່ 2.). ກຸງເທບ: ສຸວີຣິຍະສານ.

ລັກຄະນາ ສີລະວັນ. (2539). *ການຄິດ Thinking.* ກຸງເທບ: ໂອດຽນສະຕໍ.

ລັດຊະນີ ທາເຫຼັກ. (2556). *ຜົນການຈັດການຮຽນຮູ້ແບບຮ່ວມມືດ້ວຍເທັກນິກຈິກຊໍ ເລື່ອງ ເສັ້ນຂະໜານທີ່ມີຕໍ່ຄວາມສາມາດໃນການຄິດວິເຄາະຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 2.* ກຸງເທບ: ບໍ່ລະບຸສະຖານທີ່ພິມ.

ອະນິດາ ຊຶມພູພິງ. (2556). ຜົນການໃຊ້ຊຸດການຮຽນການສອນແບບຮ່ວມມືດ້ວຍເທັກນິກຈິກຊໍ ເລື່ອງ ພູມມິສາດປະເທດໄທທີ່ມີຕໍ່ຜົນສໍາເລັດທາງການຮຽນຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1 ໂຮງຮຽນເທດສະບານ 4 (ເຊົາວັນປຣິຊາອຸທິດ). *ວາລະສານວິຊາການ, 59*(7).

ວິທະຍາໄລຄູບ້ານເກິນ. (2016). *ບົດສະຫຼຸບການຈັດການຮຽນ-ການສອນ ຫ້ອງການຄູອະນຸບານ-ປະຖົມ ສົກຮຽນ 2014-2015.* ທຸລະຄົມ, ແຂວງວຽງຈັນ: ວິທະຍາໄລຄູບ້ານເກິນ.

ອຸໄລວອນ ວະລະກຸນລັງສອນ. (2557).ການພັດທະນາທັກສະການຄິດດ້ວຍເທັກນິກຈິກຊໍ 2 ໃນລາຍວິຊາສາລະສິນເທດເພື່ອການສຶກສາຄົ້ນຄວ້າ. *ວາລະສານບັນນາສາດ ມສວ7*(1).

Chester, B. (1968). *The functions of the Excecutive.*Massachusett: Harward University Press.

Good, C.V. (1973). *Dictionary of Education.*New York: McGraw-Hill Book Company.

Johnson, D.W.,Johnson, R. T.,&Smith, K. A. (1991). *Coorerative learning: Increasing colleage facility instuctional productivity.*Washington DC: The George Washington University.

Tough, Joan. (1984). *"Young children learning languages." Teaching English to Children from.*London:Ed. Christopher Brumfit, Joyne Moon and Ray Tongue.

# ເອກະສານຊ້ອນທ້າຍ

# ເອກະສານຊ້ອນທ້າຍ ກ.
# ໜັງສືສະເໜີຕ່າງໆ

# ເອກະສານຊ້ອນທ້າຍ ຂ.
# ເຄື່ອງມືທີ່ໃຊ້ໃນການຄົ້ນຄວ້າ

# ບົດສອນທີ 1

ວິຊາຫຼັກສູດ ແລະ ການສອນ ຫ້ອງປີ 3 ຂ ຄູປະຖົມ

ບົດທີ 1: ວັນທີ......./......./201
8

ຫົວຂໍ້: ການສອນຄຳສັບໃໝ່ ເວລາ: 100 ນາທີ

**1. ຈຸດປະສົງ:** ເມື່ອນັກຮຽນ ຮຽນຈົບບົດນີ້ແລ້ວຈະສາມາດສອນຄຳສັບພາສາອັງກິດໃໝ່ໄດ້ຢ່າງຖືກວິທີ.

**2. ອຸປະກອນ:** ແບບຮຽນ, ໃບກິດຈະກຳ

**3. ເນື້ອໃນ:**

- ຄວາມສຳຄັນຂອງການສອນຄຳສັບໃໝ່

ຄູເອົາເຈ້ຍກິດຈະກຳໃຫ້ນັກຮຽນເຮັດກິດຈະກຳຕື່ມຂໍ້ມູນໃສ່ບົດຄວາມສອງບົດຄວາມເພື່ອເປັນການຍົກຕົວຢ່າງໃຫ້ນັກຮຽນເຫັນເຖິງຄວາມສຳຄັນໃນການເຂົ້າໃຈເນື້ອຫາຂອງບົດຄວາມຈຶ່ງສາມາດຕື່ມຂໍ້ມູນທີ່ຂາດຫາຍໄປໄດ້ງ່າຍຂຶ້ນ ເຊິ່ງບົດຄວາມທີ 1 ເນັ້ນໜັກໃສ່ຫຼັກໄວຍະກອນພາສາອັງກິດ ແລະ ບົດຄວາມທີ່ 2 ໄດ້ເນັ້ນໜັກໃສ່ຄວາມເຂົ້າໃຈທາງດ້ານຄຳສັບພາສາອັງກິດ (ຄູໃຫ້ນັກຮຽນຕື່ມຂໍ້ມູນໃສບົດຄວາມທີ 1 ກ່ອນ 3-4 ນາທີ ແລ້ວຈຶ່ງເອົາບົດຄວາມທີ 2 ເຮັດ).

**ບົດຄວາມທີ 1**

| |
|---|
| _____ _____ I was _____ _____ when I _____ a _____ _____. A _____ had ______ into a ______. |

**ບົດຄວາມທີ 2**

| |
|---|
| Last night _____ _____ walking home _____ _____ saw ____ road accident. _____ tuk-tuk crashed _____ _____ motorbike. |

- ການສະແດງຄວາມໝາຍຂອງຄຳສັບໃໝ່

ຄູໃຫ້ສະຖານະການຈຳລອງນຶ່ງແກ່ນັກຮຽນ (ຢູ່ທີ່ເຮືອນຂອງພວກນ້ອງມີຄົນຕ່າງປະເທດຄົນ 1 ມາພັກອາໃສນຳ, ຄົນຕ່າງປະເທດຕ່າງປະເທດຜູ້ນັ້ນບໍ່ສາມາດເວົ້າພາສາລາວໄດ້ຈັກຄຳເລີຍ ແລະ ເຈົ້າເອງກໍ່ບໍ່ສາມາດເວົ້າພາສາອັງກິດໄດ້. ເຈົ້າຕ້ອງການໃຫ້ລາວຮູ້ຄວາມໝາຍຂອງຄຳສັບພາສາລາວວ່າ: ***ຈອກ*** )

- ເທັກນິກໃນການສະແດງຄວາມໝາຍຂອງຄຳສັບໃໝ່

ຄູເອົາໃບເຈ້ຍກິດຈະກຳໃຫ້ນັກຮຽນເຮັດເພື່ອຈັບຄູເທັກນິກໃນການສະແດງຄວາມໝາຍຄຳສັບພາສາອັງກິດໃສ່ກັບຕົວຢ່າງ

**ເທັກນິກ**

1. ການໃຊ້ສື່ປະຈັກຕາ (ສິ່ງນັກຮຽນສາມາເບິ່ງເຫັນໄດ້) _________
2. ການອະທິບາຍສະຖານນະການດ້ວຍການເອົາຄໍາສັບໃໝ່ມາໃສ່ໃນບໍລິບົດ ________
3. ການນໍາໃຊ້ຄໍາທີ່ຄ້າຍຄືກັນ/ກົງກັນຂ້າມກັນ ________
4. ການຍົກຕົວຢ່າງ _________
5. ການແປ _________

**ຕົວຢ່າງ**

ກ. ***Hope*** ພາສາລາວແປວ່າ: ຫວັງ

ຂ. A car, motorbike, tuk-tuk ເລົ່ານີ້ແມ່ນ ພະຫານະ.

ຄ. ການສະແດງທ່າທາງ / ການເອົາຮູບພາບໃຫ້ເບິ່ງ / ການເອົາວັດຖຸຕົວຈິງໃຫ້ເບິ່ງ / ການເຕັ້ມຮູບໃສ່ການດານ ໃຫ້ເບິ່ງ.

ງ. Good-lookingມີຄວາມໝາຍດຽວກັນກັບ handsome.ຄໍາທີ່ກົງກັນຂ້າມແມ່ນ ugly.

ຈ.***Honest*** ໝາຍເຖິງ I don' t lie, I don' t cheat in exams. I tell the truth all the time.

- ການເຝິກຊ້ອມອອກສຽງຄໍາສັບໃໝ່

ຄູເອົາໃບເຈ້ຍກິດຈະກໍາກ່ຽວກັບຂັ້ນຕອນການເຝິກຊ້ອມອອກສຽງໃຫ້ນັກຮຽນຈັບຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບຕົວຢ່າງເຊິ່ງມີເນື້ອໃນວ່າ:

| **ຂັ້ນຕອນStage** | **ຕົວຢ່າງExample** |
|---|---|
| ຂັ້ນຕອນນໍາສະເໜີPresentation | ຄູ: ນັກຮຽນຄູ່ໄກ້ກັນຜິດປ່ຽນກັນເວົ້າຄໍາສັບໃຫ້ກັນຟັງ |
| ຄູອອກສຽງເປັນແບບຢ່າງ Model repetition | ຄູເອີ້ນຊື່ນັກຮຽນ: Noi<br>Noi: A ruler<br>ຄູເອີ້ນຊື່ນັກຮຽນ: Bounchan<br>Bounchan: A ruler |
| ນັກຮຽນຊ້ອມອອກຽງຄໍາສັບພ້ອມກັນໝົດຫ້ອງ Choral repetition | ຄູ: Listen A ruler….a ruler….a ruler |
| ເຝິກອອກສຽງເປັນບຸກຄົນ Individual repetition | ຄູ: ຂຽນຄໍາສັບໃສ່ກະດານ ພ້ອມຖາມນັກຮຽນວ່າພາສາລາວແປວ່າແນວໃດ? ແລະ ຂຽນຄໍາແປ. |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ຄູ: Every body repeat after me<br>ນັກຮຽນ: A ruler<br>ຄູ: again<br>ນັກຮຽນ: A ruler |
| ຄູຂຽນຄໍາສັບໃສ່ກະດານ ແລະ ແປ | ຄູ: Shows a realia: a ruler<br>ຄູ: What's this (Tell me in Lao) |
| ການກວດກາຄວາມເຂົ້າໃຈ | - ຫຼັງຈາກຄູສອນຄໍາສັບແລ້ວ, ຄູລຶບຄໍາສັບເຫຼົ່ານັ້ນແຕ່ |

| **ຂັ້ນຕອນStage** | **ຕົວຢ່າງExample** |
|---|---|
| | ຈື່ງຄຳແປໄວ້.<br>- ຄູຊີ້ໃສ່ຄຳແປແລ້ວຖາມນັກຮຽນວ່າຄຳນີ້ພາສາອັງກິດວ່າແນວໃດ |

- ເຫດຜົນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງຄຳສັບໃໝ່

ຄູເອົາໃບເຈ້ຍກິດຈະກຳກ່ຽວກັບເຫດຜົນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງຄຳສັບໃໝ່ໃຫ້ຫ້ນັກຮຽນຈັບຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບເຫດຜົນຂອງການປະຕິບັດແຕ່ລະຂັ້ນຕອນເຊິ່ງມີເນື້ອໃນວ່າ:

| **ຂັ້ນຕອນStages** | **ເຫດຜົນ** |
|---|---|
| ຂັ້ນຕອນນຳສະເໜີPresentation | ເພື່ອຄູຈະໝັ້ນໃຈວ່ານັກຮຽນມີຄວາມເຂົ້າໃຈໃນຄວາມໝາຍ ແລະ ການນຳໃຊ້ຄຳສັບ |
| ຄູອອກສຽງເປັນແບບຢ່າງ Model repetition | ນັກຮຽນໝົດຫ້ອງກໍ່ຈະໄດ້ເຝິກຊ້ອມອອກສຽງພາຍຫຼັງໄດ້ຮັບການປັບປຸງການອອກສຽງຈາກຄູສອນ |
| ນັກຮຽນຊ້ອມອອກກຽງຄຳສັບພ້ອມກັນໝົດຫ້ອງ Choral repetition | ນັກຮຽນຈະໄດ້ເຝິກອອກສຽງພ້ອມກັນໝົດຫ້ອງ, ເຖິງວ່າພວກເຂົາເຈົ້າຈະອອກສຽງບໍ່ຖືກກໍ່ບໍ່ເປັນຫຍັງ |
| ເຝິກອອກສຽງເປັນບຸກຄົນ Individual repetition | ນັກຮຽນຈະມີບົດຮຽນທີ່ເຂົາເຈົ້າໄດ້ຮຽນພາຍຫຼັງໄດ້ຮູ້ຄວາມໝາຍ ແລະ ໄດ້ເຝິກຊ້ອມອອກສຽງ |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ເພື່ອສະແດງຄວາມໝາຍຂອງຄຳສັບໃໝ່ກ່ອນການເຝິກຊ້ອມອອກສຽງ |
| ຄູຂຽນຄຳສັບໃສ່ກະດານ ແລະ ແປ | ນັກຮຽນຈະໄດ້ຍິນການອອກສຽງຢ່າງຈະແຈ້ງກ່ອນທີ່ເຂົາເຈົ້າຈະໄດ້ເວົ້າ. |
| ການກວດກາຄວາມເຂົ້າໃຈ | ນັກຮຽນ ແລະ ອາຈານຈະໄດ້ຍິນການອອກສຽງຂອງເຂົາເຈົ້າພ້ອມທັງສາມາດປັບປຸງການອອກສຽງ |

# ກິດຈະກຳການຮຽນ-ການສອນ

1. **ຂັ້ນນຳ**

- ຄູອະທິບາຍກິດຈະກຳການຮຽນ-ການສອນແບບຮ່ວມມືເທັກນິກຈິກຊໍ (Jigsaw) ທັງຮູບແບບການດຳເນີນກິດຈະກຳ, ບົດບາດຂອງຄູ, ບົດບາດນັກຮຽນ ແລະ ໄລຍະເວລາການປະຕິບັດກິດຈະກຳ.
- ຄູແຈ້ງຈຸດປະສົງຂອງບົດຮຽນ
- ຄູທົບທວນບົດຮຽນທີ່ຜ່ານມາ

2. **ຂັ້ນສອນ**

**2.1. ຂັ້ນທີ 1: ການກຳນົດຂະໜາດຂອງກຸ່ມ** (10 ນາທີ)

ນັກຮຽນກຸ່ມທົດລອງມີຈຳນວນທັງໝົດ 31 ຄົນ ຜູ້ຄົ້ນຄວ້າແບ່ງອອກເປັນ 6 ກຸ່ມໆລະ 5 ຄົນ ເຊິ່ງເອີ້ນວ່າກຸ່ມ ບ້ານຂອງເຮົາ (Home Group) ເຊິ່ງສະມາຊິກໃນກຸ່ມປະກອບດ້ວຍນັກຮຽນທີ່ມີຄວາມສາມາດແຕກຕ່າງກັນເຊັ່ນ: ນັກຮຽນເກັ່ງ, ກາງ ແລະ ອ່ອນ. ຈາກນັ້ນໃຫ້ນັກຮຽນແຕ່ລະຄົນໃນກຸ່ມແບ່ງໜ້າທີ່ຮັບຜິດຊອບກັນເຊັ່ນ: ຫົວໜ້າກຸ່ມ, ເລຂາກຸ່ມ ແລະ ອື່ນໆດັ່ງຕົວຢ່າງນີ້:

ກຸ່ມA: ນັກສຶກສາຄົນທີ A1, ນັກສຶກສາຄົນທີ A2, ນັກສຶກສາຄົນທີ A3, ນັກສຶກສາຄົນທີ A4, ນັກສຶກສາຄົນທີ A5.

ກຸ່ມB: ນັກສຶກສາຄົນທີ B1, ນັກສຶກສາຄົນທີ B2, ນັກສຶກສາຄົນທີ B3, ນັກສຶກສາຄົນທີ B4, ນັກສຶກສາຄົນທີ B5.

ກຸ່ມC: ນັກສຶກສາຄົນທີ C1, ນັກສຶກສາຄົນທີ C2, ນັກສຶກສາຄົນທີ C3, ນັກສຶກສາຄົນທີ C4, ນັກສຶກສາຄົນທີ C5.

ກຸ່ມD: ນັກສຶກສາຄົນທີ D1, ນັກສຶກສາຄົນທີ D2, ນັກສຶກສາຄົນທີ D3, ນັກສຶກສາຄົນທີ D4, ນັກສຶກສາຄົນທີ D5.

ກຸ່ມE: ນັກສຶກສາຄົນທີ E1, ນັກສຶກສາຄົນທີ E2, ນັກສຶກສາຄົນທີ E3, ນັກສຶກສາຄົນທີ E4, ນັກສຶກສາຄົນທີ E5.

ກຸ່ມF: ນັກສຶກສາຄົນທີ F1, ນັກສຶກສາຄົນທີ F2, ນັກສຶກສາຄົນທີ F3, ນັກສຶກສາຄົນທີ F4, ນັກສຶກສາຄົນທີ F5+ F6.

**2.2. ຂັ້ນທີ 2: ການແບ່ງຫົວຂໍ້ຍ່ອຍ** (5 ນາທີ)

ຄູແຈກໃບກິດຈະກຳໃຫ້ສຳມະຊິກໃນກຸ່ມບ້ານເຊິ່ງໃນແຕ່ລະກຸ່ມປະກອບດ້ວຍຫົວຂໍ້ຍ່ອຍທີ່ສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານຈະໄດ້ແຈກຢາຍໄປສຶກສາ ແລະ ເຮັດກິດຈະກຳ ເປັນກຸ່ມໃໝ່ເຊິ່ງເອີ້ນວ່າກຸ່ມຜູ້ຊ່ຽວຊານ (Expert Group) ເຊັ່ນ:

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 1 ໄດ້ຮັບຫົວຂໍ້ຍ່ອຍທີ 1 ຄູເອົາເຈ້ຍກິດຈະກຳໃຫ້ນັກຮຽນເຮັດກິດຈະກຳຕື່ມຂໍ້ມູນໃສ່ບົດຄວາມສອງບົດຄວາມເພື່ອເປັນການຍົກຕົວຢ່າງໃຫ້ນັກຮຽນເຫັນເຖິງຄວາມສຳຄັນໃນການເຂົ້າໃຈເນື້ອຫາຂອງບົດຄວາມຈິ່ງສາມາດຕື່ມຂໍ້ມູນທີ່ຂາດຫາຍໄປໄດ້ງ່າຍຂຶ້ນ ເຊິ່ງບົດຄວາມທີ 1 ເນັ້ນໜັກໃສ່ຫຼັກໄວຍາກອນພາສາອັງກິດ ແລະ ບົດຄວາມທີ່ 2 ໄດ້ເນັ້ນໜັກໃສ່ຄວາມເຂົ້າໃຈທາງດ້ານຄຳສັບພາສາອັງກິດ (ຄູໃຫ້ນັກຮຽນຕື່ມຂໍ້ມູນໃສບົດຄວາມທີ 1 ກ່ອນ 3-4 ນາທີ ແລ້ວຈິ່ງເອົາບົດຄວາມທີ 2 ເຮັດ).

**ບົດຄວາມທີ 1**

| |
|---|
| _____ _____ I was _____ _____ when I _____ a _____ _____. A _____ had ______ |

| |
|---|
| into a ______. |

**ບົດຄວາມທີ 2**

| |
|---|
| Last night _____ _____ walking home _____ _____ saw ____ road accident. _____ tuk-tuk crashed _____ _____ motorbike. |

ສອງບົດຄວາມນີ້ບົດຄວາມໃດສາມາດເຂົ້າໃຈງ່າຍຍ້ອນຫຍັງ?

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 2 ໄດ້ຮັບຫົວຂໍ້ຍ່ອຍທີ 2: ຄູໃຫ້ສະຖານະການຈຳລອງນຶ່ງແກ່ນັກຮຽນ (ຢູ່ທີ່ເຮືອນຂອງພວກນ້ອງມີຄົນຕ່າງປະເທດຄົນ 1 ມາພັກອາໃສນຳ, ຄົນຕ່າງປະເທດຜູ້ນັ້ນບໍ່ສາມາດເວົ້າພາສາລາວໄດ້ຈັກຄຳເລີຍ ແລະ ເຈົ້າເອງກໍ່ບໍ່ສາມາດເວົ້າພາສາອັງກິດໄດ້. ເຈົ້າຕ້ອງການໃຫ້ລາວຮູ້ຄວາມໝາຍຂອງຄຳສັບພາສາລາວວ່າ: ***ຈອກ*** ) ເຈົ້າຈະເຮັດແນວໃດເພື່ອໃຫ້ຄົນຕ່າງປະເທດຜູ້ນັ້ນເຂົ້າໃຈຄວາມໝາຍຂອງຄຳສັບພາສາລາວໄດ້?
- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 3 ໄດ້ຮັບຫົວຂໍ້ຍ່ອຍທີ 3: ຄູເອົາໃບເຈ້ຍກິດຈະກ□າໃຫ້ນັກຮຽນເຮັດເພື່ອຈັບຄູ່ເທັກນິກໃນການສະແດງຄວາມໝາຍຄຳສັບພາສາອັງກິດໃສ່ກັບຕົວຢ່າງ

**ເທັກນິກ**

1. ການໃຊ້ສື່ປະຈັກຕາ (ສິ່ງນັກຮຽນສາມາເບິ່ງເຫັນໄດ້) _________
2. ການອະທິບາຍສະຖານນະການດ້ວຍການເອົາຄຳສັບໃໝ່ມາໃສ່ໃນບໍລິບົດ ________
3. ການນຳໃຊ້ຄຳທີ່ຄ້າຍຄືກັນ/ກົງກັນຂ້າມກັນ ________
4. ການຍົກົວຢ່າງ _________
5. ການແປ _________

**ຕົວຢ່າງ**

ກ. ***Hope*** ພາສາລາວແປວ່າ:ຫວັງ

ຂ. A car, motorbike, tuk-tuk ເລົ່ານີ້ແມ່ນ ພະຫານະ.

ຄ. ການສະແດງທ່າທາງ / ການເອົາຮູບພາບໃຫ້ເບິ່ງ / ການເອົາວັດຖຸຕົວຈິງໃຫ້ເບິ່ງ / ການແຕ້ມຮູບໃສ່ການດານໃຫ້ເບິ່ງ.

ງ. Good-looking ມີຄວາມໝາຍດຽວກັນກັບ handsome.ຄຳທີ່ກົງກັນຂ້າມແມ່ນ ugly.

ຈ.***Honest*** ໝາຍເຖິງ I don’t lie, I don’t cheat in exams. I tell the truth all the time.

ເທັກນິກໃນການນຳສະເໜີຄວາມໝາຍຄຳສັບໃໝ່ມີຫຍັງແດ່?

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 4 ໄດ້ຮັບຫົວຂໍ້ຍ່ອຍທີ 4: ຄູເອົາໃບເຈ້ຍກິດຈະກຳກ່ຽວກັບຂັ້ນຕອນການເຝິກຊ້ອມອອກສຽງໃຫ້ນັກຮຽນຈັບຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບຕົວຢ່າງເຊິ່ງມີເນື້ອໃນວ່າ:

| **ຂັ້ນຕອນ Stage** | **ຕົວຢ່າງ Example** |
|---|---|
| ຂັ້ນຕອນນຳສະເໜີPresentation | ຄູ: ນັກຮຽນຄູ່ໃກ້ກັນຜິດປ່ຽນກັນເວົ້າຄຳສັບໃຫ້ກັນຟັງ |
| ຄູອອກສຽງເປັນແບບຢ່າງ Model repetition | ຄູເອີ້ນຊື່ນັກຮຽນ: Noi<br>Noi: A ruler<br>ຄູເອີ້ນຊື່ນັກຮຽນ: Bounchan |

| ຂັ້ນຕອນ Stage | ຕົວຢ່າງ Example |
|---|---|
| | Bounchan: A ruler |
| ນັກຮຽນຊ້ອມອອກງຽງຄຳສັບພ້ອມກັນໝົດຫ້ອງ Choral repetition | ຄູ: Listen A ruler….a ruler….a ruler |
| ເຝິກອອກສຽງເປັນບຸກຄົນ Individual repetition | ຄູ: ຂຽນຄຳສັບໃສ່ກະດານ ພ້ອມຖາມນັກຮຽນວ່າພາສາລາວແປວ່າແນວໃດ? ແລະ ຂຽນຄຳແປ. |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ຄູ: Every body repeat after me<br>ນັກຮຽນ: A ruler<br>ຄູ: again<br>ນັກຮຽນ: A ruler |
| ຄູຂຽນຄຳສັບໃສ່ກະດານ ແລະ ແປ | ຄູ: Shows a realia: a ruler<br>ຄູ: What’s this (Tell me in Lao) |
| ການກວດກາຄວາມເຂົ້າໃຈ | - ຫຼັງຈາກຄູສອນຄຳສັບແລ້ວ, ຄູລຶບຄຳສັບເຫຼົ່ານັ້ນແຕ່ຈົ່ງຄຳແປໄວ້.<br>- ຄູຊີ້ໃສ່ຄຳແປແລ້ວຖາມນັກຮຽນວ່າຄຳນີ້ພາສາອັງກິດວ່າແນວໃດ |

ສາມຢ່າງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການເຝິກຊ້ອມອອກສຽງຄຳສັບໃໝ່ມີຫຍັງແດ່?

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 5 ໄດ້ຮັບຫົວຂໍ້ຍ່ອຍທີ 5: ຄູເອົາໃບເຈ້ຍກິດຈະກຳກ່ຽວກັບເຫດຜົນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງຄຳສັບໃໝ່ ໃຫ້ຫ້ນັກຮຽນຈັບຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບເຫດຜົນຂອງການປະຕິບັດແຕ່ລະຂັ້ນຕອນເຊິ່ງມີເນື້ອໃນວ່າ:

| ຂັ້ນຕອນStages | ເຫດຜົນ |
|---|---|
| ຂັ້ນຕອນນຳສະເໜີPresentation | ເພື່ອຄູຈະໝັ້ນໃຈວ່ານັກຮຽນມີຄວາມເຂົ້າໃຈໃນຄວາມໝາຍ ແລະ ການນຳໃຊ້ຄຳສັບ |
| ຄູອອກສຽງເປັນແບບຢ່າງ Model repetition | ນັກຮຽນໝົດຫ້ອງກໍ່ຈະໄດ້ເຝິກຊ້ອມອອກສຽງພາຍຫຼັງໄດ້ຮັບການປັບປຸງການອອກສຽງຈາກຄູສອນ |
| ນັກຮຽນຊ້ອມອອກງຽງຄຳສັບພ້ອມກັນໝົດຫ້ອງ Choral repetition | ນັກຮຽນຈະໄດ້ເຝິກອອກສຽງພ້ອມກັນໝົດຫ້ອງ, ເຖິງວ່າພວກເຂົາເຈົ້າຈະອອກສຽງບໍ່ຖືກກໍ່ບໍ່ເປັນຫຍັງ |
| ເຝິກອອກສຽງເປັນບຸກຄົນ Individual repetition | ນັກຮຽນຈະມີບົດຮຽນທີ່ເຂົາເຈົ້າໄດ້ຮຽນພາຍຫຼັງໄດ້ຮູ້ຄວາມໝາຍ ແລະ ໄດ້ເຝິກຊ້ອມອອກສຽງ |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ເພື່ອສະແດງຄວາມໝາຍຂອງຄຳສັບໃໝ່ກ່ອນການເຝິກຊ້ອມອອກສຽງ |
| ຄູຂຽນຄຳສັບໃສ່ກະດານ ແລະ ແປ | ນັກຮຽນຈະໄດ້ຍິນການອອກສຽງຢ່າງຈະແຈ້ງກ່ອນທີ່ເຂົາເຈົ້າຈະໄດ້ເວົ້າ. |

| ຂັ້ນຕອນStages | ເຫດຜົນ |
| --- | --- |
| ການກວດກາຄວາມເຂົ້າໃຈ | ນັກຮຽນ ແລະ ອາຈານຈະໄດ້ຍິນການອອກສຽງຂອງເຂົາເຈົ້າພ້ອມທັງສາມາດປັບປຸງການອອກສຽງ |

ເປັນຫຍັງຄູຈິ່ງດຳເນີນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງຄຳສັບໃໝ່?

**2.3. ຂັ້ນທີ 3: ການສຶກສາຄວາມຮູ້** (15 ນາທີ)

- ນັກສຶກສາທີ່ໄດ້ຮັບຫົວຂໍ້ຍ່ອຍທີ່ຄືກັນຈາກກຸ່ມບ້ານແຕ່ລະກຸ່ມມາລວມກັນເປັນກຸ່ມດຽວກັນເປັນກຸ່ມໃໝ່ເຊິ່ງເອີ້ນວ່າຜູ້ຊ່ຽວຊານ (Expert Group) ມີ 6 ກຸ່ມໆລະ 5-6 ຄົນ.
- ພາຍໃນກຸ່ມຜູ້ຊ່ຽວຊານກຸ່ມລະ 5 ຄົນນັ້ນ ແຕ່ລະກຸ່ມສຶກສາເນື້ອໃນອັນດຽວກັນ, ທຳຄວາມເຂົ້າໃຈ ແລະ ອະທິບາຍຫົວຂໍ້ທີ່ສຶກສາຮ່ວມກັນ ເຊິ່ງສະມາຊິກພາຍໃນກຸ່ມອາດສະຫຼູບປະເດັນຄວາມຮູ້ທີ່ສຳຄັນຕາມແນວຄິດຂອງສະມາຊິກໃນກຸ່ມ ເພື່ອທີ່ບັນທຶກ ແລະ ນຳເອົາຄວາມຮູ້ທີ່ໄດ້ຄົ້ນຄວ້າກັບໄປສອນໃຫ້ສະມາຊິກໃນກຸ່ມບ້ານ.

**2.4. ຂັ້ນທີ 4: ການຖ່າຍທອດຄວາມຮູ້** (20 ນາທີ)

ນັກສຶກສາຜູ້ທີ່ເປັນຜູ້ຊ່ຽວຊານແຕ່ລະຄົນທີ່ໄດ້ໄປສຶກສາຂໍ້ມູນຄວາມຮູ້ຈາກກຸ່ມຜູ້ຊ່ຽວຊານ ແລະ ໄດ້ກັບຄືນມາກຸ່ມບ້ານໃນຫົວຂໍ້ທີ່ຕົນເອງຮັບຜິດຊອບສຶກສາມາ.

ຜູ້ຊ່ຽວຊານທັງ 6 ຄົນ ນຳສະເໜີຂໍ້ມູນໃນກຸ່ມບ້ານສ□າເລັດແລ້ວສະມາຊິກໃນກຸ່ມຕ້ອງສົນທະນາຫາຂໍ້ສະຫຼູບໃນແຕ່ລະຫົວຂໍ້ຈາກ ສະມາຊິກທັງ 5 ຄົນເພື່ອເປັນຄວາມຮູ້ຂອງກຸ່ມ.

**2.5. ຂັ້ນທີ 5: ທົດສອບຄວາມຮູ້** (20 ນາທີ)

- ຫຼັງຈາກສຳເລັດການດຳເນີນກິດຈະກຳການຮຽນ-ການສອນຄູຢາຍບົດທົດສອບໃຫ້ນັກຮຽນແຕ່ລະຄົນໃນກຸ່ມບ້ານທົດສອບໃນຫົວຂໍ້ດຽວກັນ.
- ຄູໃຫ້ຄະແນນແຕ່ລະຄົນໃນກຸ່ມບ້ານທຸກໆກຸ່ມ ແລ້ວນຳເອົາຄະແນນຂອງສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານມາລວມເຂົ້າກັນ.

**2.6. ຂັ້ນທີ 6: ຊົມເຊີຍ ແລະ ມອບລາງວັນ** (5 ນາທີ)

ກຸ່ມທີ່ໄດ້ຄະແນນສູງສຸດຈະໄດ້ຮັບລາງວັນຈາກຄູ, ຊົມເຊີຍ ແລະ ນຳເອົາຜົນການທົດສອບຕິດໄວ້ຫ້ອງຮຽນ.

**3. ຂັ້ນສະຫຼູບ**

ເມື່ອສຳເລັດການຮຽນ-ການສອນແລ້ວ ຄູ ແລະ ນັກສຶກສາຮ່ວມກັນສະຫຼູບຜົນການເຮັດກິດຈະກຳ, ບັນຫາທີ່ເກີດຂຶ້ນໃນລະຫວ່າງການດຳເນີນກິດຈະກຳ ແລະ ຫາທາງແກ້ໄຂເພື່ອເປັນແນວທາງໃນການດຳເນີນການຮຽນ-ການສອນຄັ້ງຕໍ່ໄປ.

**4. ຂັ້ນປະເມີນ**(25 ນາທີ)

- ກວດສອບຈາກຄວາມຖືກຕ້ອງຂອງໃບກິດຈະກຳ
- ກວດສອບຈາກຄະແນນການເຮັດບົດທົດສອບຍ່ອຍ
- ສັງເກດຈາກການຮ່ວມມືໃນການເຮັດກິດຈະກຳກຸ່ມ
- ກວດສອບຈາກໃບຕິດຕາມຂະບວນການ

## ໃບກິດຈະກຳ ບົດສອນທີ 1

- ໃຫ້ນັກຮຽນເຮັດກິດຈະກຳຕື່ມຂໍ້ມູນໃສ່ບົດຄວາມສອງບົດຄວາມເພື່ອເປັນການຍົກຕົວຢ່າງໃຫ້ນັກຮຽນເຫັນເຖິງຄວາມສຳຄັນໃນການເຂົ້າໃຈເນື້ອຫາຂອງບົດຄວາມຈຶ່ງສາມາດຕື່ມຂໍ້ມູນທີ່ຂາດຫາຍໄປໄດ້ງ່າຍຂຶ້ນ ເຊິ່ງບົດຄວາມທີ 1 ເນັ້ນໜັກໃສ່ຫຼັກໄວຍາກອນພາສາອັງກິດ ແລະ ບົດຄວາມທີ 2 ໄດ້ເນັ້ນໜັກໃສ່ຄວາມເຂົ້າໃຈທາງດ້ານຄຳສັບພາສາອັງກິດ (ຄູໃຫ້ນັກຮຽນຕື່ມຂໍ້ມູນໃສບົດຄວາມທີ 1 ກ່ອນ 3-4 ນາທີ ແລ້ວຈຶ່ງເອົາບົດຄວາມທີ 2 ເຮັດ).

**ບົດຄວາມທີ 1**

| |
|---|
| _____ _____ I was _____ _____ when I _____ a _____ _____. A _____ had ______ into a ______. |

**ບົດຄວາມທີ 2**

| |
|---|
| Last night _____ _____ walking home _____ _____ saw ____ road accident. _____ tuk-tuk crashed _____ _____ motorbike. |

1. ສອງບົດຄວາມນີ້ບົດຄວາມໃດສາມາດເຂົ້າໃຈງ່າຍຍ້ອນຫຍັງ?

- ສະຖານະການຈຳລອງ (ຢູ່ທີ່ເຮືອນຂອງພວກນ້ອງມີຄົນຕ່າງປະເທດຄົນ 1 ມາພັກອາໃສນຳ, ຄົນຕ່າງປະເທດຜູ້ນັ້ນບໍ່ສາມາດເວົ້າພາສາລາວໄດ້ຈັກຄຳເລີຍ ແລະ ເຈົ້າເອງກໍ່ບໍ່ສາມາດເວົ້າພາສາອັງກິດໄດ້. ເຈົ້າຕ້ອງການໃຫ້ລາວຮູ້ຄວາມໝາຍຂອງຄຳສັບພາສາລາວວ່າ: ***<u>ຈອກ</u>*** )

2. ເຈົ້າຈະເຮັດແນວໃດເພື່ອໃຫ້ຄົນຕ່າງປະເທດຜູ້ນັ້ນເຂົ້າໃຈຄວາມໝາຍຂອງຄຳສັບພາສາລາວໄດ້?

- ໃຫ້ນັກຮຽນເຮັດກິດຈະກຳເພື່ອຈັບຄູເທັກນິກໃນການສະແດງຄວາມໝາຍຄຳສັບພາສາອັງກິດໃສ່ກັບຕົວຢ່າງ

**<u>ເທັກນິກ</u>**

1. ການໃຊ້ສື່ປະຈັກຕາ (ສິ່ງນັກຮຽນສາມາເບິ່ງເຫັນໄດ້) _________
2. ການອະທິບາຍສະຖານນະການດ້ວຍການເອົາຄຳສັບໃໝ່ມາໃສ່ໃນບໍລິບົດ ________
3. ການນຳໃຊ້ຄຳທີ່ຄ້າຍຄືກັນ/ກົງກັນຂ້າມກັນ ________
4. ການຍົກົວຢ່າງ _________
5. ການແປ _________

**<u>ຕົວຢ່າງ</u>**

ກ. ***<u>Hope</u>***ພາສາລາວແປວ່າ:ຫວັງ

ຂ. A car, motorbike, tuk-tuk ເລົ່ານີ້ແມ່ນ ພະຫານະ.

ຄ. ການສະແດງທ່າທາງ / ການເອົາຮູບພາບໃຫ້ເບິ່ງ / ການເອົາວັດຖຸຕົວຈິງໃຫ້ເບິ່ງ / ການເຕັ້ມຮູບໃສ່ການດານໃຫ້ເບິ່ງ.

ງ. Good-lookingມີຄວາມໝາຍດຽວກັນກັບ handsome.ຄຳທີ່ກົງກັນຂ້າມແມ່ນ ugly.

ຈ.***<u>Honest</u>***ໝາຍເຖິງ I don’ t lie, I don’ t cheat in exams. I tell the truth all the time.

3. ເທັກນິກໃນການນ□າສະເໜີຄວາມໝາຍຄ□າສັບໃໝ່ມີຫຍັງແດ່?

- ຈັດຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບຕົວຢ່າງເຊິ່ງມີເນື້ອໃນວ່າ:

| **ຂັ້ນຕອນ Stage** | **ຕົວຢ່າງ Example** |
|---|---|
| ຂັ້ນຕອນນຳສະເໜີPresentation | ຄູ: ນັກຮຽນຄູ່ໄກ້ກັນຜິດປ່ຽນກັນເວົ້າຄຳສັບໃຫ້ກັນຟັງ |

| **ຂັ້ນຕອນ Stage** | **ຕົວຢ່າງ Example** |
|---|---|
| ຄູອອກສຽງເປັນແບບຢ່າງ Model repetition | ຄູເອີ້ນຊື່ນັກຮຽນ: Noi<br>Noi: A ruler<br>ຄູເອີ້ນຊື່ນັກຮຽນ: Bounchan<br>Bounchan: A ruler |
| ນັກຮຽນຊ້ອມອອກກຽງຄໍາສັບພ້ອມກັນໝົດຫ້ອງ Choral repetition | ຄູ: Listen A ruler….a ruler….a ruler |
| ເຝິກອອກສຽງເປັນບຸກຄົນ Individual repetition | ຄູ: ຂຽນຄໍາສັບໃສ່ກະດານ ພ້ອມຖາມນັກຮຽນວ່າພາສາລາວແປວ່າແນວໃດ? ແລະ ຂຽນຄໍາແປ. |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ຄູ: Every body repeat after me<br>ນັກຮຽນ: A ruler<br>ຄູ: again<br>ນັກຮຽນ: A ruler |
| ຄູຂຽນຄໍາສັບໃສ່ກະດານ ແລະ ແປ | ຄູ: Shows a realia: a ruler<br>ຄູ: What’s this (Tell me in Lao) |
| ການກວດກາຄວາມເຂົ້າໃຈ | - ຫຼັງຈາກຄູສອນຄໍາສັບແລ້ວ, ຄູລືບຄໍາສັບເຫຼົ່ານັ້ນແຕ່ຈື່ງຄໍາແປໄວ້.<br>- ຄູຊີ້ໃສ່ຄໍາແປແລ້ວຖາມນັກຮຽນວ່າຄໍານີ້ພາສາອັງກິດວ່າແນວໃດ |

4. ສາມຢ່າງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການເຝິກຊ້ອມອອກສຽງຄ□າສັບໃໝ່ມີຫຍັງແດ່?

- ຈັດຄູ່ລະຫວ່າງຂັ້ນຕອນການອອກສຽງໃສ່ກັບເຫດຜົນຂອງການປະຕິບັດແຕ່ລະຂັ້ນຕອນເຊິ່ງມີເນື້ອໃນວ່າ:

| **ຂັ້ນຕອນ Stages** | **ເຫດຜົນ** |
|---|---|
| ຂັ້ນຕອນນຳສະເໜີPresentation | ເພື່ອຄູຈະໝັ້ນໃຈວ່ານັກຮຽນມີຄວາມເຂົ້າໃຈໃນຄວາມ ໝາຍ ແລະ ການນຳໃຊ້ຄຳສັບ |
| ຄູອອກສຽງເປັນແບບຢ່າງ Model repetition | ນັກຮຽນໝົດຫ້ອງກໍ່ຈະໄດ້ເຝິກຊ້ອມອອກສຽງພາຍຫຼັງ ໄດ້ຮັບການປັບປຸງການອອກສຽງຈາກຄູສອນ |
| ນັກຮຽນຊ້ອມອອກຽງຄຳສັບພ້ອມກັນໝົດຫ້ອງ Choral repetition | ນັກຮຽນຈະໄດ້ເຝິກອອກສຽງພ້ອມກັນໝົດຫ້ອງ, ເຖິງ ວ່າພວກເຂົາເຈົ້າຈະອອກສຽງບໍ່ຖືກກໍ່ບໍ່ເປັນຫຍັງ |
| ເຝິກອອກສຽງເປັນບຸກຄົນ Individual repetition | ນັກຮຽນຈະມີບົດຮຽນທີ່ເຂົາເຈົ້າໄດ້ຮຽນພາຍຫຼັງໄດ້ຮູ້ ຄວາມໝາຍ ແລະ ໄດ້ເຝິກຊ້ອມອອກສຽງ |
| ນັກຮຽນຄູ່ໄກ້ກັນເຝິກຊ້ອມອອກສຽງ Close pair drill | ເພື່ອສະແດງຄວາມໝາຍຂອງຄຳສັບໃໝ່ກ່ອນການ ເຝິກຊ້ອມອອກສຽງ |
| ຄູຂຽນຄຳສັບໃສ່ກະດານ ແລະ ແປ | ນັກຮຽນຈະໄດ້ຍິນການອອກສຽງຢ່າງຈະແຈ້ງກ່ອນທີ່ ເຂົາເຈົ້າຈະໄດ້ເວົ້າ. |
| ການກວດກາຄວາມເຂົ້າໃຈ | ນັກຮຽນ ແລະ ອາຈານຈະໄດ້ຍິນການອອກສຽງຂອງ ເຂົາເຈົ້າພ້ອມທັງສາມາດປັບປຸງການອອກສຽງ |

5. ເປັນຫຍັງຄູຈິ່ງດ□າເນີນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງຄ□າສັບໃໝ່?

## ຄຳຕອບໃບກິດຈະກຳ ບົດທີ 1

ສອງບົດຄວາມນີ້ບົດຄວາມໃດສາມາດເຂົ້າໃຈງ່າຍຍ້ອນຫຍັງ?

- ບົດຄວາມທີ 2 ສາມາດເຂົ້າໃຈງ່າຍໃນການເຮັດກິດຈະກຳເພາະວ່າພວກເຮົາສາມາດຊ່ວຍໃຫ້ເຮົາເຂົ້າໃຈໄດ້ດ້ວຍການນຳໃຊ້ຄຳສັບ ບໍ່ແມ່ນນຳໃຊ້ຫຼັກໄວຍາກອນ.

ເຈົ້າຈະເຮັດແນວໃດເພື່ອໃຫ້ຄົນຕ່າງປະເທດຜູ້ນັ້ນເຂົ້າໃຈຄວາມໝາຍຂອງຄຳສັບພາສາລາວໄດ້?

- ໃຊ້ວັດຖຸທີ່ເປັນຂອງຈິງສາມາດຊ່ວຍໃຫ້ເຂົ້າໃຈງ່າຍ ແລະ ຫາໄດ້ງ່າຍ

ເທັກນິກໃນການນຳສະເໜີຄວາມໝາຍຄຳສັບໃໝ່ມີຫຍັງແດ່?

- ການແປວ່າ
- ການອະທິບາຍ
- ການສະແດງທ່າທາງ
- ໃຊ້ຮູບພາບ
- ໃຊ້ວັດວັດຖຸຕົວຈິງ
- ການແຕ້ມຮູບໃສ່ການດານ
- ຄຳທີ່ມີຄວາມໝາຍກົງກັນຂ້າມ/ຄຳທີ່ມີຄວາມໝາຍຄືກັນ
- ໃຊ້ຄຳສັບເພື່ອຕົວຢ່າງ

ສາມຢ່າງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການເຝິກຊ້ອມອອກສຽງຄຳສັບໃໝ່ມີຫຍັງແດ່?

- ຄວາມໝາຍຂອງຄຳສັບໃໝ່
- ການອອກສຽງຄຳສັບໃໝ່
- ການສະກົດຄຳສັບ/ການຂຽນໃສ່ກະດານ

ເປັນຫຍັງຄູຈຶ່ງດຳເນີນແຕ່ລະຂັ້ນຕອນຂອງການເຝິກຊ້ອມອອກສຽງ?

- ເພື່ອສະແດງຄວາມໝາຍຂອງຄຳສັບໃໝ່ກ່ອນການເຝິກຊ້ອມອອກສຽງ
- ນັກຮຽນຈະໄດ້ຍິນການອອກສຽງຢ່າງຈະແຈ້ງກ່ອນທີ່ເຂົາເຈົ້າຈະໄດ້ຝຶກເວົ້າ.
- ນັກຮຽນຈະໄດ້ເຝິກອອກສຽງພ້ອມກັນໝົດຫ້ອງ, ເຖິງວ່າພວກເຂົາເຈົ້າຈະອອກສຽງບໍ່ຖືກກໍ່ບໍ່ເປັນຫຍັງ
- ນັກຮຽນ ແລະ ອາຈານຈະໄດ້ຍິນການອອກສຽງຂອງເຂົາເຈົ້າພ້ອມທັງສາມາດປັບປຸງການອອກສຽງ
- ນັກຮຽນໝົດຫ້ອງກໍ່ຈະໄດ້ເຝິກຊ້ອມອອກສຽງພາຍຫຼັງໄດ້ຮັບການປັບປຸງການອອກສຽງຈາກຄູສອນ
- ນັກຮຽນຈະມີບົດຮຽນທີ່ເຂົາເຈົ້າໄດ້ຮຽນພາຍຫຼັງໄດ້ຮູ້ຄວາມໝາຍ ແລະ ໄດ້ເຝິກຊ້ອມອອກສຽງ
- ເພື່ອຄູຈະໝັ້ນໃຈວ່ານັກຮຽນມີຄວາມເຂົ້າໃຈໃນຄວາມໝາຍ ແລະ ການນຳໃຊ້ຄຳສັບ

# ບົດທົດສອບ ບົດທີ 1

**ຈົ່ງໃຊ້ເຄື່ອງໝາຍ (√ ) ໃສ່ດ້ານຫຼັງຄາຕອບທີ່ຖືກທີ່ສຸດຂອງຄາຖາມລຸ່ມນີ້**

**ບົດທີ 1**

1. ຂໍ້ໃດຂ້າງລຸ່ມນີ້ແມ່ນວິທີທີ່ງ່າຍ ແລະ ໄວທີ່ສຸດໃນການສະເໜີຄວາມໝາຍຂດອງຄຳສັບພາສາອັງກິດ ຄຳວ່າ: (elephant)?
   ກ. ການນຳໃຊ້ຮູບພາບ
   ຂ. ການອະທິບາຍ
   ຄ. ການສະແດງທ່າທາງ
   ງ. ນຳໃຊ້ວັດຖຸຂອງຈິງ
2. ຂໍ້ໃດຂ້າງລຸ່ມນີ້ບໍ່ແມ່ນເທັກນິກການສະເໜີຄວາມໝາຍຂອງຄຳສັບໃໝ່?
   ກ. ການນຳໃຊ້ຮູບພາບ, ການສະແດງທ່າທາງ ແລະ ການແຕ້ມຮູບໃສ່ກະດານ, ການນຳໃຊ້ວັດຖຸຈິງ ແລະ ການອະທິບາຍ
   ຂ. ການນຳໃຊ້ຮູບພາບ, ການສະແດງທ່າທາງ ແລະ ການແຕ້ມຮູບໃສ່ກະດານ, ການນຳໃຊ້ວັດຖຸຈິງ ແລະ ການແປ
   ຄ. ການນຳໃຊ້ຮູບພາບ, ການສະແດງທ່າທາງ ແລະ ການແຕ້ມຮູບໃສ່ກະດານ, ການນຳໃຊ້ວັດຖຸຈິງ ແລະ ການໃຊ້ຄຳສັບເພື່ອຍົກຕົວຢ່າງ
   ງ. ການນຳໃຊ້ຮູບພາບ, ການສະແດງທ່າທາງ ແລະ ການແຕ້ມຮູບໃສ່ກະດານ, ການນຳໃຊ້ວັດຖຸຈິງ ແລະ ການຝຶກອອກສຽງຄຳສັບໃໝ່
3. ຄວາມໝາຍຂອງຄຳສັບໃໝ່, ການອອກສຽງຄຳສັບໃໝ່, ການການສະກົດຄຳສັບ/ການຂຽນໃສ່ກະດານໝາຍເຖິງຫຍັງ?
   ກ. ໝາຍເຖິງສິ່ງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການຝຶກຊ້ອມອອກສຽງຄຳສັບໃໝ່
   ຂ. ໝາຍເຖິງສິ່ງທີ່ຄູຕ້ອງການໃຫ້ນັກຮຽນໄດ້ເຮັດໃນການຝຶກຊ້ອມອອກສຽງຄຳສັບໃໝ່
   ຄ. ໝາຍເຖິງສິ່ງທີ່ຄູບໍ່ຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການຝຶກຊ້ອມອອກສຽງຄຳສັບໃໝ່
   ງ. ໝາຍເຖິງສິ່ງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການຂຽນຄຳສັບໃໝ່
4. ການຝຶກຊ້ອມອອກສຽງຄຳສັບໃໝ່ມີຈັກຂັ້ນຕອນ?
   ກ. ມີ 3 ຂັ້ນຕອນ
   ຂ. ມີ 4 ຂັ້ນຕອນ
   ຄ. ມີ 5 ຂັ້ນຕອນ
   ງ. ມີ 6 ຂັ້ນຕອນ
5. ເປັນຫຍັງຄູຈິ່ງອອກສຽງຄູສັບໃໝ່ເປັນແບບຢ່າງໃຫ້ນັກຮຽນຟັງ?
   ກ. ຍ້ອນວ່ານັກຮຽນຈະໄດ້ຝຶກຊ້ອມອອກສຽງພ້ອມກັນໝົດຫ້ອງ
   ຂ. ຍ້ອນວ່ານັກຮຽນຈະໄດ້ຝຶກຊ້ອມອອກສຽງພາຍຫຼັງທີ່ໄດ້ຮັບການປັບປຸງການອອກສຽງຈາກຄູສອນ
   ຄ. ຍ້ນວ່ານັກຮຽນຈະໄດ້ຍິນການອອກສຽງຄຳສັບໃໝ່ຢ່າງຈະແຈ້ງກ່ອນເຂົາເຈົ້າຈະໄດ້ເວົ້າ
   ງ. ຍ້ອນວ່ານັກຮຽນຈະໄດ້ຮູ້ຄວາມໝາຍຂອງຄຳສັບໃໝ່

## ຄຳຕອບບົດທົດສອບ ບົດທີ 1

1. ຂໍ້ໃດຂ້າງລຸ່ມນີ້ແມ່ນວິທີທີ່ງ່າຍ ແລະ ໄວທີ່ສຸດໃນການສະເໜີຄວາມໝາຍຂດອງຄ□າສັບພາສາອັງກິດ ຄ□າ ວ່າ: (elephant)?

   ກ. ການນຳໃຊ້ຮູບພາບ

2. ຂໍ້ໃດຂ້າງລຸ່ມນີ້ບໍ່ແມ່ນເທັກນິກການສະເໜີຄວາມໝາຍຂອງຄ□າສັບໃໝ່?

   ງ. ການນຳໃຊ້ຮູບພາບ, ການສະແດງທ່າທາງ ແລະ ການແຕ້ມຮູບໃສ່ກະດານ, ການນຳໃຊ້ວັດຖຸຈິງ ແລະ ການຝຶກອອກສຽງຄຳສັບໃໝ່

3. ຄວາມໝາຍຂອງຄ□າສັບໃໝ່, ການອອກສຽງຄ□າສັບໃໝ່, ການການສະກົດຄ□າສັບ/ການຂຽນໃສ່ກະດານ ໝາຍເຖິງຫຍັງ?

   ກ. ໝາຍເຖິງສິ່ງທີ່ຄູຕ້ອງການໃຫ້ນັກຮຽນໄດ້ຮູ້ໃນການຝຶກຊ້ອມອອກສຽງຄຳສັບໃໝ່

4.ການຝຶກຊ້ອມອອກສຽງຄ□າສັບໃໝ່ມີຈັກຂັ້ນຕອນ?

   ຂ. ມີ 4 ຂັ້ນຕອນ

5.ເປັນຫຍັງຄູຈິ່ງອອກສຽງຄູສັບໃໝ່ເປັນແບບຢ່າງໃຫ້ນັກຮຽນຟັງ?

   ຄ. ຍ້ອນວ່ານັກຮຽນຈະໄດ້ຍິນການອອກສຽງຄຳສັບໃໝ່ຢ່າງຈະແຈ້ງກ່ອນເຂົາເຈົ້າຈະໄດ້ເວົ້າ

# ບົດສອນທີ 2

ວິຊາຫຼັກສູດ ແລະ ການສອນ ຫ້ອງປີ 3 ຂ ຄູປະຖົມ

ບົດທີ 2: ວັນທີ ......../......./2018

ຫົວຂໍ້: ການສອນການຂຽນ ເວລາ: 100 ນາທີ

**1. ຈຸດປະສົງ:**ຫຼັງຈາກຮຽນຈົບບົດນີ້ແລ້ວນັກຮຽນຈະສາມາດ:

- ສອນນັກຮຽນໃຫ້ຮູ້ວິທີການຂຽນຕົວອັກສອນ
- ປຽບທຽບຮູບແບບການຂຽນອັກສອນລາວ ແລະ ພາສາອັງກິດ
- ຮູ້ບັນຫາ ແລະ ຂໍ້ຫຍຸ້ງຍາກຂອງນັດຮຽນເວລາຂຽນອັກສອນພາສາອັງກິດ

**2. ອຸປະກອນ:**ໃບກິດຈະກຳ, ແບບຮຽນ, ປຶ້ມແບບຮຽນພາສາອັງກິດຊັ້ນປະຖົມປີ 3

**3. ເນື້ອໃນ:**

- ຄວາມແຕກຕ່າງລະຫວ່າງພາສາອັງກິດ ແລະ ພາສາລາວ

ຄູເອົາໃບເຈ້ຍກິດຈະກຳປະໂຫຍກພາສາອັງກິດ ແລະ ພາສາລາວທີ່ມີເນື້ອໃນອັນດຽວກັນໃຫ້ນັກຮຽນອ່ານ:

- It is a very beautiful necklace
- ມັນເປັນສ້ອຍຄໍທີ່ງາມຫຼາຍ.

- ການສອນການຂຽນຕົວອັກສອນ

ຄູເອົາໃບກິດຈະກຳຕາຕະລາງຕົວອັກສອນພາສາອັງກິດ ໃຫ້ນັກຮຽນເບິ່ງ ແລະ ຂຽນຕົວອັກສອນ a-z ພ້ອມທັງແຕ້ມເສັ້ນເພື່ອສະແດງໃຫ້ເຫັນຂັ້ນຕອນຂອງການຂຽນຕົວອັກສອນພາສາອັງກິດ (ນັກຮຽນສາມານຳໃຊ້ປຶ້ມແບບຮຽນພາສາອັງກິດຊັ້ນປະຖົມ ປ 3 ເພື່ອອ້າງອີງວິທີຂຽນຕົວອັກສອນ).

| | | | | | | | | |
|---|---|---|---|---|---|---|---|---|
| a | b | c | d | e | f | g | h | i |
| j | k | l | m | n | o | p | q | r |
| s | t | u | v | w | x | y | z | |
| A | B | C | D | E | F | G | H | I |
| J | K | L | M | N | O | P | Q | R |
| S | T | U | V | W | X | Y | Z | |

- ການສອນການຂຽນປະໂຫຍກ

ຄູເອົາໃບກິດຈະກຳທີ່ມີປະໂຫຍກພາສາອັງກິດທີ່ວ່າ:

1. THANKS YOU FOR MY BIRTHDAY PRESENT.
2. Thanks you for my birthday present.
3. Thanks you for my birthday present.
4. Thanks you for my birthday present.

- ຮູບຮ່າງ ແລະ ທີ່ຕັ້ງ

ຄູເອົາໃບເຈ້ຍກິດຈະກຳທີ່ສະແດງເຖິງການຂຽນທີ່ນັກຮຽນມັກມີບັນຫາໃນການໃນການວາງທີ່ຕັ້ງຂອງຕົວອັກສອນ, ຂະໜາດ ແລະ ຮູບຮ່າງຂອງຕົວອັກສອນ.

i am ThUrtEEnyeArS oLd

- ການຈື່ຈຳຕົວອັງສອນ

ຄູເອົາໃບກິດຈະກຳໃຫ້ນັກຮຽນເພື່ອຈັບຄູ່ຄຳສັບທີ່ຂຽນດ້ວຍຕົວພິມໃຫຍ່ ແລະ ຕົວພິມນ້ອຍດັ່ງລຸ່ມນີ້:

| | | | | | |
|---|---|---|---|---|---|
| UMBRELLA | mouth | ORANGE | triangle | MOUSE | lemonade |
| monkey | ELEPHANT | goose | LEMONADE | elephant | SANDWICH |
| umbrella | TRIANGGLE | GOOSE | sandwich | MONKEY | orange |
| MOUTH | mouse | | | | |

## ກິດຈະກຳການຮຽນ-ການສອນ

**1. ຂັ້ນນຳ**

- ຄູອະທິບາຍກິດຈະກຳການຮຽນ-ການສອນແບບຮ່ວມມືເທັກນິກຈິກຊໍ (Jigsaw) ທັງຮູບແບບການດຳເນີນກິດຈະກຳ, ບົດບາດຂອງຄູ, ບົດບາດນັກຮຽນ ແລະ ໄລຍະເວລາການປະຕິບັດກິດຈະກຳ.

- ຄູແຈ້ງຈຸດປະສົງຂອງບົດຮຽນ
- ຄູທົບທວນບົດຮຽນທີ່ຜ່ານມາ
- ຄູນຳເຂົ້າສູ່ບົດຮຽນດ້ວຍການຫຼິ້ນເກມ (ມູບຄຳສັບ)

**2. ຂັ້ນສອນ**

**2.1. ຂັ້ນທີ 1: ການກຳນົດຂະໜາດຂອງກຸ່ມ** (10 ນາທີ)

ນັກຮຽນກຸ່ມທົດລອງມີຈຳນວນທັງໝົດ 31 ຄົນ ຜູ້ຄົ້ນຄວ້າແບ່ງອອກເປັນ 6 ກຸ່ມໆລະ 5 ຄົນ ເຊິ່ງເອີ້ນວ່າກຸ່ມ ບ້ານຂອງເຮົາ (Home Group) ເຊິ່ງສະມາຊິກໃນກຸ່ມປະກອບດ້ວຍນັກຮຽນທີ່ມີຄວາມສາມາດແຕກຕ່າງກັນເຊັ່ນ: ນັກຮຽນເກັ່ງ, ກາງ ແລະ ອ່ອນ. ຈາກນັ້ນໃຫ້ນັກຮຽນແຕ່ລະຄົນໃນກຸ່ມແບ່ງໜ້າທີ່ຮັບຜິດຊອບກັນເຊັ່ນ: ຫົວໜ້າກຸ່ມ, ເລຂາກຸ່ມ ແລະ ອື່ນໆດັ່ງຕົວຢ່າງນີ້:

ກຸ່ມA: ນັກສຶກສາຄົນທີ A1, ນັກສຶກສາຄົນທີ A2, ນັກສຶກສາຄົນທີ A3, ນັກສຶກສາຄົນທີ A4, ນັກສຶກສາຄົນທີ A5.

ກຸ່ມB: ນັກສຶກສາຄົນທີ B1, ນັກສຶກສາຄົນທີ B2, ນັກສຶກສາຄົນທີ B3, ນັກສຶກສາຄົນທີ B4, ນັກສຶກສາຄົນທີ B5.

ກຸ່ມC: ນັກສຶກສາຄົນທີ C1, ນັກສຶກສາຄົນທີ C2, ນັກສຶກສາຄົນທີ C3, ນັກສຶກສາຄົນທີ C4, ນັກສຶກສາຄົນທີ C5.

ກຸ່ມD: ນັກສຶກສາຄົນທີ D1, ນັກສຶກສາຄົນທີ D2, ນັກສຶກສາຄົນທີ D3, ນັກສຶກສາຄົນທີ D4, ນັກສຶກສາຄົນທີ D5.

ກຸ່ມE: ນັກສຶກສາຄົນທີ E1, ນັກສຶກສາຄົນທີ E2, ນັກສຶກສາຄົນທີ E3, ນັກສຶກສາຄົນທີ E4, ນັກສຶກສາຄົນທີ E5.

ກຸ່ມF: ນັກສຶກສາຄົນທີ F1, ນັກສຶກສາຄົນທີ F2, ນັກສຶກສາຄົນທີ F3, ນັກສຶກສາຄົນທີ F4, ນັກສຶກສາຄົນທີ F5+ F6.

**2.2. ຂັ້ນທີ 2: ການແບ່ງຫົວຂໍ້ຍ່ອຍ** (5 ນາທີ)

ຄູແຈກໃບກິດຈະກຳໃຫ້ສຳມະຊິກໃນກຸ່ມບ້ານເຊິ່ງໃນແຕ່ລະກຸ່ມປະກອບດ້ວຍຫົວຂໍ້ຍ່ອຍທີ່ສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານຈະໄດ້ແຈກຢາຍໄປສຶກສາ ແລະ ເຮັດກິດຈະກຳ ເປັນກຸ່ມໃໝ່ເຊິ່ງເອີ້ນວ່າກຸ່ມຜູ້ຊ່ຽວຊານ (Expert Group) ເຊັ່ນ:

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 1 ໄດ້ຮັບຫົວຂໍ້ຍ່ອຍທີ 1: ຄູເອົາໃບເຈ້ຍກິດຈະກຳປະໂຫຍກພາສາອັງກິດ ແລະ ພາສາລາວທີ່ມີເນື້ອໃນອັນດຽວກັນໃຫ້ນັກຮຽນອ່ານ:
  - It is a very beautiful necklace
  - ມັນເປັນສາຍຄໍທີ່ງາມຫຼາຍ

1. ຈົ່ງບອກວ່າພາສາອັງກິດ  ແລະ  ພາສາລາວມີການຂຽນທີ່ແຕກຕ່າງກັນອັນໃດແດ່?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 2 ໄດ້ຮັບຫົວຂໍ້ຍ່ອຍທີ 2: ຄູເອົາໃບກິດຈະກຳຕົວອັກສອນພາສາອັງກິດ a-zໃຫ້ນັກຮຽນເບິ່ງ  ແລະ  ຂຽນຕົວອັກສອນ ພ້ອມທັງແຕ້ມເສັ້ນເພື່ອສະແດງໃຫ້ເຫັນຂັ້ນຕອນຂອງການຂຽນຕົວອັກສອນພາສາອັງກິດ (ນັກຮຽນສາມານຳໃຊ້ປຶ້ມແບບຮຽນພາສາອັງກິດຊັ້ນປະຖົມ ປ 3 ເພື່ອອ້າງອີງວິທີຂຽນຕົວອັກສອນ).

| | | | | | | | | |
|---|---|---|---|---|---|---|---|---|
| a | b | c | d | e | f | g | h | i |
| j | k | l | m | n | o | p | q | r |
| s | t | u | v | w | x | y | z | |
| A | B | C | D | E | F | G | H | I |
| J | K | L | M | N | O | P | Q | R |
| S | T | U | V | W | X | Y | Z | |

2. ວິທີຂຽນຕົວອັກສອນພາສາອັງກິດທີ່ຖືກຕ້ອງມີຄືແນວໃດ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ3 ໄດ້ຮັບຫົວຂໍ້ຍ່ອຍທີ 3: ປະໂຫຍກພາສາອັງກິດທີ່ວ່າ:

1. THANKS YOU FOR MY BIRTHDAY PRESENT.
2. Thanks you for my birthday present.
3. Thanks you for my birthday present.
4. Thanks you for my birthday present.

3. ປະໂຫຍກໃດທີພວກເຈົ້າສາມາດເຂົ້າໃຈໄດ້ງ່າຍ, ຂຽນໄດ້ງ່າຍ  ແລະ  ອ່ານໄດ້ສະດວກທີ່ສຸດ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 4 ໄດ້ຮັບຫົວຂໍ້ຍ່ອຍທີ 4:ໃຫ້ນັກຮຽນເພື່ອຈັບຄູຄຳສັບທີ່ຂຽນດ້ວຍຕົມພິມໃຫຍ່ ແລະ ຕົວພິມນ້ອຍດັ່ງລຸ່ມນີ້:

UMBRELLA mouth ORANGE triangle MOUSE lemonade monkey ELEPHANT goose LEMONADE elephant SANDWICH umbrella TRIANGGLE GOOSE sandwich MONKEY orange MOUTH mouse

4. ນັກຮຽນຈະມີບັນຫາຫຍັງໃນການຈັບຄູຄ□າສັບ?
5. ຖ້ານ□າໃຊ້ຕົວພິມໃຫຍ່ເຂົ້າໃນການສອນຈະເປັນແນວໃດ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 5 ໄດ້ຮັບຫົວຂໍ້ຍ່ອຍທີ 5: ຄູເອົາໃບເຈ້ຍກິດຈະກຳທີ່ສະແດງເຖິງການຂຽນທີ່ນັກຮຽນມັກມີບັນຫາໃນການໃນການວາງທີ່ຕັ້ງຂອງຕົວອັກສອນ, ຂະໜາດ  ແລະ  ຮູບຮ່າງຂອງຕົວອັກສອນ.

6. ຈົ່ງສັງເກດເບິ່ງປະໂຫຍກພາສາອັງກິດຂ້າງລຸ່ມນີ້ວ່າມັນມີຄວາມຜິດປົກກະຕິຫຍັງ?

i am  ThUrtEEnyeArS  oLd

**2.3. ຂັ້ນທີ 3: ການສຶກສາຄວາມຮູ້** (15 ນາທີ)

- ນັກສຶກສາທີ່ໄດ້ຮັບຫົວຂໍ້ຍ່ອຍທີ່ຄືກັນຈາກກຸ່ມບ້ານແຕ່ລະກຸ່ມມາລວມກັນເປັນກຸ່ມດຽວກັນເປັນກຸ່ມໃໝ່ ເຊິ່ງເອີ້ນວ່າຜູ້ຊ່ຽວຊານ (Expert Group) ມີ 6 ກຸ່ມໆລະ 5-6 ຄົນ.
- ພາຍໃນກຸ່ມຜູ້ຊ່ຽວຊານກຸ່ມລະ 5 ຄົນນັ້ນ ແຕ່ລະກຸ່ມສຶກສາເນື້ອໃນອັນດຽວກັນ, ທຳຄວາມເຂົ້າໃຈ ແລະ ອະທິບາຍຫົວຂໍ້ທີ່ສຶກສາຮ່ວມກັນ ເຊິ່ງສະມາຊິກພາຍໃນກຸ່ມອາດສະຫຼູບປະເດັນຄວາມຮູ້ທີ່ສຳຄັນຕາມແນວຄິດຂອງສະມາຊິກໃນກຸ່ມ ເພື່ອທີ່ບັນທຶກ ແລະ ນຳເອົາຄວາມຮູ້ທີ່ໄດ້ຄົ້ນຄວ້າກັບໄປສອນໃຫ້ ສະມາຊິກໃນກຸ່ມບ້ານ.

**2.4. ຂັ້ນທີ 4: ການຖ່າຍທອດຄວາມຮູ້** (20 ນາທີ)

ນັກສຶກສາຜູ້ທີ່ເປັນຜູ້ຊ່ຽວຊານແຕ່ລະຄົນທີ່ໄດ້ໄປສຶກສາຂໍ້ມູນຄວາມຮູ້ຈາກກຸ່ມຜູ້ຊ່ຽວຊານ ແລະ ໄດ້ກັບຄືນມາກຸ່ມບ້ານໃນຫົວຂໍ້ທີ່ຕົນເອງຮັບຜິດຊອບສຶກສາມາ.

ຜູ້ຊ່ຽວຊານທັງ 6 ຄົນ ນຳສະເໜີຂໍ້ມູນໃນກຸ່ມບ້ານສ□າເລັດແລ້ວສະມາຊິກໃນກຸ່ມຕ້ອງສົນທະນາຫາຂໍ້ສະຫຼູບໃນແຕ່ລະຫົວຂໍ້ຈາກ ສະມາຊິກທັງ 5 ຄົນເພື່ອເປັນຄວາມຮູ້ຂອງກຸ່ມ.

**2.5. ຂັ້ນທີ 5: ທົດສອບຄວາມຮູ້** (20 ນາທີ)

- ຫຼັງຈາກສຳເລັດການດຳເນີນກິດຈະກຳການຮຽນ-ການສອນຄູຢາຍບົດທົດສອບໃຫ້ນັກຮຽນແຕ່ລະຄົນໃນກຸ່ມບ້ານທົດສອບໃນຫົວຂໍ້ດຽວກັນ.
- ຄູໃຫ້ຄະແນນແຕ່ລະຄົນໃນກຸ່ມບ້ານທຸກໆກຸ່ມ ແລ້ວນຳເອົາຄະແນນຂອງສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານມາລວມເຂົ້າກັນ.

**2.6. ຂັ້ນທີ 6: ຊົມເຊີຍ ແລະ ມອບລາງວັນ** (5 ນາທີ)

ກຸ່ມທີ່ໄດ້ຄະແນນສູງສຸດຈະໄດ້ຮັບລາງວັນຈາກຄູ, ຊົມເຊີຍ ແລະ ນຳເອົາຜົນການທົດສອບຕິດໄວ້ຫ້ອງຮຽນ.

**3. ຂັ້ນສະຫຼຸບ**

ເມື່ອສຳເລັດການຮຽນ-ການສອນແລ້ວ ຄູ ແລະ ນັກສຶກສາຮ່ວມກັນສະຫຼູບຜົນການເຮັດກິດຈະກຳ, ບັນຫາທີ່ເກີດຂຶ້ນໃນລະຫວ່າງການດຳເນີນກິດຈະກຳ ແລະ ຫາທາງແກ້ໄຂເພື່ອເປັນແນວທາງໃນການດຳເນີນການຮຽນ-ການສອນຄັ້ງຕໍ່ໄປ.

**4. ຂັ້ນປະເມີນ**(25 ນາທີ)

- ກວດສອບຈາກຄວາມຖືກຕ້ອງຂອງໃບກິດຈະກຳ
- ກວດສອບຈາກຄະແນນການເຮັດບົດທົດສອບຍ່ອຍ
- ສັງເກດຈາກການຮ່ວມມືໃນການເຮັດກິດຈະກຳກຸ່ມ
- ກວດສອບຈາກໃບຕິດຕາມຂະບວນການ

# ໃບກິດຈະກຳ ບົດສອນທີ 2

- ປະໂຫຍກພາສາອັງກິດ ແລະ ພາສາລາວທີ່ມີເນື້ອໃນອັນດຽວກັນໃຫ້ນັກຮຽນອ່ານ:
- It is a very beautiful necklace
- ມັນເປັນສາຍຄໍທີ່ງາມຫຼາຍ.

1. ຈົ່ງບອກວ່າພາສາອັງກິດ ແລະ ພາສາລາວມີການຂຽນທີ່ແຕກຕ່າງກັນອັນໃດແດ່?

- ໃຫ້ນັກຮຽນຂຽນຕົວອັກສອນ a-zພ້ອມທັງແຕ້ມເສັ້ນເພື່ອສະແດງໃຫ້ເຫັນຂັ້ນຕອນຂອງການຂຽນຕົວອັກສອນພາສາອັງກິດ (ນັກຮຽນສາມານຳໃຊ້ປຶ້ມແບບຮຽນພາສາອັງກິດຊັ້ນປະຖົມ ປ 3 ເພື່ອອ້າງອີງວິທີຂຽນຕົວອັກສອນ).

| | | | | | | | | |
|---|---|---|---|---|---|---|---|---|
| a | b | c | d | e | f | g | h | i |
| j | k | l | m | n | o | p | q | r |
| s | t | u | v | w | x | y | z | |
| A | B | C | D | E | F | G | H | I |
| J | K | L | M | N | O | P | Q | R |
| S | T | U | V | W | X | Y | Z | |

2. ວິທີຂຽນຕົວອັກສອນພາສາອັງກິດທີ່ຖືກຕ້ອງມີຄືແນວໃດ?

- ປະໂຫຍກພາສາອັງກິດທີ່ວ່າ:
  1. THANKS YOU FOR MY BIRTHDAY PRESENT.
  2. Thanks you for my birthday present.
  3. Thanks you for my birthday present.
  4. Thanks you for my birthday present.

3. ປະໂຫຍກໃດທີພວກເຈົ້າສາມາດເຂົ້າໃຈໄດ້ງ່າຍ, ຂຽນໄດ້ງ່າຍ ແລະ ອ່ານໄດ້ສະດວກທີ່ສຸດ?

- ຄູເອົາໃບເຈ້ຍກິດຈະກຳທີ່ສະແດງເຖິງການຂຽນທີ່ນັກຮຽນມັກມີບັນຫາໃນການໃນການວາງທີ່ຕັ້ງຂອງຕົວອັກສອນ, ຂະໜາດ ແລະ ຮູບຮ່າງຂອງຕົວອັກສອນ.

4. ຈົ່ງສັງເກດເບິ່ງປະໂຫຍກພາສາອັງກິດຂ້າງລຸ່ມນີ້ວ່າມັນມີຄວາມຜິດປົກກະຕິຫຍັງ?

i am ThUrtEEnyeArS oLd

- ຈັບຄູຄຳສັບທີ່ຂຽນດ້ວຍຕົວພິມໃຫຍ່ ແລະ ຕົວພິມນ້ອຍດັ່ງລຸ່ມນີ້:

| | | | | | |
|---|---|---|---|---|---|
| UMBRELLA | mouth | ORANGE | triangle | MOUSE | lemonade |
| monkey | ELEPHANT | goose | LEMONADE | elephant | SANDWICH |
| umbrella | TRIANGGLE | GOOSE | sandwich | MONKEY | orange |
| MOUTH | mouse | | | | |

5. ນັກຮຽນຈະມີບັນຫາຫຍັງໃນການຈັບຄູຄ□າສັບ?
6. ຖ້ານ□າໃຊ້ຕົວພິມໃຫຍ່ເຂົ້າໃນການສອນຈະເປັນແນວໃດ?

## ຄຳຕອບໃບກິດຈະກຳ ບົດທີ2

1. ການຂຽນພາສາລາວບໍ່ໄດ້ຍະຫວ່າງລະຫວ່າງຄຳສັບ, ບໍ່ໄດ້ຂຶ້ນຕົ້ນດ້ວຍຕົວພິມໃຫຍ່, ມີເຄື່ອງໝາຍເທິງຕົວອັກສອນ (ໄມ້ກົງ, ໄມ້ກັນ, ໄມ້ເອກ...)
2. ວິທີຂຽນຕົວອັກສອນພາສາອັງກິດຂຽນແຕ່ຊ້າຍຫາຂວາ, ແຕ່ເທິງລົງລຸ່ມ.
3. ນຳໃຊ້ຮູບແບບການຂຽນເປັນຕົວພິມຈຶ່ງສາມາດຮຽນໄດ້ງ່າຍ, ຂຽນໄດ້ງ່າຍ ແລະ ອ່ານໄດ້ສະດວກທີ່ສຸດ
4. ການຂຽນບໍ່ຖືກແຖວ, ນັກຮຽນບໍ່ຮູ້ຂະໜາດຂອງຕົວອັກສອນ, ການຂຽນບໍ່ຍະຫວ່າງຄຳສັບ, ການຂຽນໃຊ້ຕົວພິມໃຫຍ່ ແລະ ຕົວພິມນ້ອຍສັບປົນກັນ.
5. ນັກຮຽນອາດຈະມີບັນຫາໃນການຈຳແນກຕົວອັກ ລະຫວ່າງຕົວພິມໃຫຍ່ ແລະ ຕົວພິມນ້ອ
6. ນັກຮຽນຈະເກີດຄວາມສັບສົນໃນການຮຽນຄຳສັບ, ຈື່ຄຳສັບໄດ້ຍາກ, ບໍ່ເອົາໃຈໃສ່ໃນການຮຽນ.

## ບົດທົດສອບ ບົດທີ 2

**ຈົ່ງໃຊ້ເຄື່ອງໝາຍ (√ ) ໃສ່ດ້ານໜ້າຄໍາຕອບທີ່ຖືກທີ່ສຸດຂອງຄໍາຖາມລຸ່ມນີ້**

1. ຕົວອັກສອນພາສາອັງກິດມີທັງໝົດຈັກຕົວ?
   ກ. ຕົວອັກສອນພາສາອັງກິດມີ 24 ຕົວ
   ຂ. ຕົວອັກສອນພາສາອັງກິດມີ 25 ຕົວ
   ຄ. ຕົວອັກສອນພາສາອັງກິດມີ 26 ຕົວ
   ງ. ຕົວອັກສອນພາສາອັງກິດມີ 27 ຕົວ
2. ການຂຽນປະໂຫຍກໃນພາສາລາວບໍ່ໄດ້ຍະຫວ່າງລະຫວ່າງຄໍາສັບ, ສ່ວນການຂຽນປະໂຫຍກໃນພາສາອັງກິດແມ່ນຕ້ອງໄດ້ຍະຫວ່າງລະຫວ່າງຄໍາສັບ ຄໍາເວົ້ານີ້ໝາຍເຖິງຫຍັງ?
   ກ. ໝາຍເຖິງວິທີການຂຽນຂອງສອງພາສາ ພາສາລາວ ແລະ ພາສາອັງກິດ
   ຂ. ໝາຍເຖິງຄວາມແຕກຕ່າງລະຫວ່າງພາສາລາວ ແລະ ພາສາອັງກິດ
   ຄ. ໝາຍເຖິງຄວາມແຕກຕ່າງລະຫວ່າງການຂຽນຄໍາສັບພາສາລາວ ແລະ ພາສາອັງກິດ
   ງ. ໝາຍເຖິງຄວາມແຕກຕ່າງຂອງການຂຽນປະໂຫຍກພາສາລາວ ແລະ ພາສາອັງກິດ
3. ການຂຽນຕົວອັກສອນພາສາອັງກິດທີ່ຖືກວິທີແມ່ນຂຽນແນວໃດ?
   ກ. ຂຽນແຕ່ເທິງລົງລຸ່ມ, ຕາມຄວາມຖະນັດຂອງຜູ້ຂຽນ
   ຂ. ຂຽນແຕ່ເບື້ອງຊ້າຍຫາເບື້ອງຂວາ, ຕາມຄວາມຖະນັດຂອງຜູ້ຂຽນ
   ຄ. ຂຽນແຕ່ເບື້ອງຊ້າຍຫາເບື້ອງຂວາ, ຂຽນແຕ່ເທິງລົງລຸ່ມ
   ງ. ຂຽນແຕ່ເບື້ອງຊ້າຍຫາເບື້ອງຂວາ, ຂຽນແຕ່ລຸ່ມຂຶ້ນເທິງ
4. ການຂຽນປະໂຫຍກຫຼືຄໍາສັບໃນພາສາອັງກິດຮູບແບບຕົວອັກສອນຮູບແບບໃດທີ່ຖືກຕ້ອງນໍາໃຊ້?
   ກ. ນໍາໃຊ້ຕົວອັກສອນຮູບແບບຕົວພິມໃຫຍ່, ຕົວຂຽນທີ່ມີລວດລາຍສວຍງາມ
   ຂ. ນໍາໃຊ້ຕົວອັກສອນຮູບແບບຕົວພິມໃຫຍ່ ແລະ ຕົວພິມນ້ອຍ
   ຄ. ນໍາໃຊ້ຕົວອັກສອນຮູບແບບຕົວພິມນ້ອຍ
   ງ.ນໍາໃຊ້ຕົວອັກສອນຮູບແບບຕົວພິມນ້ອຍ ແລະ ຕົວຂຽນທີ່ມີລວດລາຍສວຍງາມ
5. ບັນຫາໃນການຂຽນປະໂຫຍກພາສາອັງກິດມີຫຍັງແດ່?
   ກ. ການຂຽນບໍ່ຖືກແຖວ, ບໍ່ຮູ້ຂະໜາດຂອງຕົວອັກສອນ, ບໍ່ຍະຫວ່າງຄໍາສັບ, ຂຽນຕົວພິມໃຫຍ່ ແລະ ຕົວພິມນ້ອຍສັບປົນກັນ
   ຂ. ການຂຽນຕາມຖືກແຖວ, ບໍ່ຮູ້ຂະໜາດຂອງຕົວອັກສອນ, ບໍ່ຍະຫວ່າງຄໍາສັບ, ຂຽນຕົວພິມໃຫຍ່ ແລະ ຕົວພິມນ້ອຍສັບປົນກັນ
   ຄ. ການຂຽນບໍ່ຖືກແຖວ, ສາມາດກໍານົດຂະໜາດຂອງຕົວອັກສອນ, ບໍ່ຍະຫວ່າງຄໍາສັບ, ຂຽນຕົວພິມໃຫຍ່ ແລະ ຕົວພິມນ້ອຍສັບປົນກັນ
   ງ. ການຂຽນບໍ່ຖືກແຖວ, ບໍ່ຮູ້ຂະໜາດຂອງຕົວອັກສອນ, ບໍ່ຍະຫວ່າງຄໍາສັບ, ຈໍາແນກຕົວພິມໃຫຍ່ ແລະ ຕົວພິມນ້ອຍ

## ຄຳຕອບບົດທົດສອບ ບົດທີ 2

1. ຕົວອັກສອນພາສາອັງກິດມີທັງໝົດຈັກຕົວ?
   ຄ. ຕົວອັກສອນພາສາອັງກິດມີ 26 ຕົວ
2. ການຂຽນປະໂຫຍກໃນພາສາລາວບໍ່ໄດ້ຍະຫວ່າງລະຫວ່າງຄຳສັບ, ສ່ວນການຂຽນປະໂຫຍກໃນພາສາອັງກິດແມ່ນຕ້ອງໄດ້ຍະຫວ່າງລະຫວ່າງຄຳສັບ ຄຳເວົ້ານີ້ໝາຍເຖິງຫຍັງ?
   ງ. ໝາຍເຖິງຄວາມແຕກຕ່າງຂອງການຂຽນປະໂຫຍກພາສາລາວ ແລະ ພາສາອັງກິດ
3. ການຂຽນຕົວອັກສອນພາສາອັງກິດທີ່ຖືກວິທີແມ່ນຂຽນແນວໃດ?
   ຄ. ຂຽນແຕ່ເບື້ອງຊ້າຍຫາເບື້ອງຂວາ, ຂຽນແຕ່ເທິງລົງລຸ່ມ
4. ການຂຽນປະໂຫຍກຫຼືຄຳສັບໃນພາສາອັງກິດຮູບແບບຕົວອັກສອນຮູບແບບໃດທີ່ຖືກຕ້ອງນຳໃຊ້?
   ຂ. ນ□າໃຊ້ຕົວອັກສອນຮູບແບບຕົວພິມໃຫຍ່ ແລະ ຕົວພິມນ້ອຍ
5. ບັນຫາໃນການຂຽນປະໂຫຍກພາສາອັງກິດມີຫຍັງແດ່?
   ກ. ການຂຽນບໍ່ຖືກແຖວ, ບໍ່ຮູ້ຂະໜາດຂອງຕົວອັກສອນ, ບໍ່ຍະຫວ່າງຄຳສັບ, ຂຽນຕົວພິມໃຫຍ່ ແລະ ຕົວພິມນ້ອຍສັບປົນກັນ

## ບົດສອນທີ 3

ວິຊາຫຼັກສູດ ແລະ ການສອນ ຫ້ອງປີ 3ຂ ຄູປະຖົມ

ບົດທີ 3: ວັນທີ ……../……./2018

ຫົວຂໍ້: ການສອນການອ່ານ ເວລາ: 100 ນາທີ

**1. ຈຸດປະສົງ:**ຫຼັງຈາກຮຽນຈົບບົດນີ້ແລ້ວນັກຮຽນຈະສາມາດ:

- ຮູ້ບາດກ້າວຂອງການສອນທັກສະການອ່ານ
- ສອນທັກການສະອ່ານໄດ້ຢ່າງຖືກບາດກ້າວຂອງການສອນການອ່ານ

**2. ອຸປະກອນ:**ໃບກິດຈະກໍາ, ແບບຮຽນ.

**3. ເນື້ອໃນ:**

- ຕົວຢ່າງການສອນການອ່ານ

ຄູເອົາໃບກິດຈະກໍາໃຫ້ນັກຮຽນຄົ້ນຄ້ວາເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການອ່ານທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| ເນື້ອໃນ |
|---|
| ການສອນຕ້ອງມີກິດຈະກໍາໃຫ້ນັກຮຽນໄດ້ເຮັດໃນບາດກ້າວກ່ອນການອ່ານ, ໃນຂະນະທີ່ກໍາລັງດໍາເນີນການອ່ານ ແລະ ຫຼັງຈາ ກສໍາເລັດການອ່ານ ໃຫ້ນັກຮຽນເຮັດ. ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈນັກຮຽນມີເຫດຜົນໃນການອ່ານບົດເລື່ອງກິດຈະກໍາການອ່ານຕ້ອງບໍ່ຍາກເກີນໄປໃນການຊອກຫາຄໍາຕອບຂອງນັກຮຽນ ນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ກໍາລັງດໍາເນີນການອ່ານ |

- ກິດຈະກໍາບາດກ້າວກ່ອນການອ່ານ

ຄູເອົາໃບກິດຈະກໍາກ່ຽວກັບກິດຈະກໍາກ່ອນອ່ານໃຫ້ນັກຮຽນອ່ານເຊິ່ງປະກອບມີ:

- ໃຫ້ນັກຮຽນສ້າງຄໍາຖາມທີ່ຄິດວ່າອາດຈະມີຄໍາຕອບຈາກບົດເລື່ອງທີ່ນັກຮຽນຈະໄດ້ອ່ານ
- ຄູເອົາເຈ້ຍທີ່ມີຄໍາສັບກ່ຽວກັບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານ ແລະ ເລືອກເອົາຄໍາສັບທີ່ເຂົາເຈົ້າຄາດຄະເນວ່າອາດຈະມີໃນບົດເລື່ອງທີ່ພວກເຂົາກໍາລັງຈະໄດ້ອ່ານ.
- ຄູເອົາເຈ້ຍກິດຈະກໍາທີ່ຂຽນເປັນວະລີຫຼືປະໂຫຍກທີ່ກ່ຽວກັບບົດເລື່ອງໃຫ້ນັກຮຽນອ່ານແລ້ວເລືອກວ່າຈະມີເຫດການຫຍັງເກີດຂຶ້ນແດ່ຈາກວະລີດັ່ງກ່າວໃນບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.
- ຄູເອົາເຈ້ຍຄໍາຖາມທີ່ມີຄໍາຕອບຖືກ-ຜິດໃຫ້ນັກຮຽນທົດລອງເລືອກຄໍາຕອບກ່ຽວກັບບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.

- ກິດຈະກໍາບາດກ້າວໃນຂະນະທີ່ອ່ານ

ກິດຈະກໍາໃນຂະນະທີ່ອ່ານຄູຕ້ອງຢາຍໃບເຈ້ຍກິດຈະກໍາທີ່ມີເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານພ້ອມທັງຊອກເອົາຄໍາຕອບຂອງຄໍາຖາມຈາກກິດຈະກໍາທີ່ພວກເຂົາໄດ້ເຮັດໃນກິດຈະກໍາກ່ອນການອ່ານ ແລະ ຄູຢາຍເຈ້ຍຄໍາຖາມໃຫ້ນັກຮຽນເຮັດເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ກັບການອ່ານ

- ກິດຈະກໍາບາດກ້າວຫຼັງຈາກການອ່ານ

ຄູເອົາໃບກິດຈະກໍາໃຫ້ນັກຮຽນທີ່ມີຄໍາແນະນໍາຂອງຄູວ່າ: ໃຫ້ນັກຮຽນອ່ານກິດຈະກໍາທີ່ສາມາດນໍາໃຊ້ເປັນກິດຈະກໍາໃນບາດກ້າວຂະນະທີ່ອ່ານໃຫ້ນັກຮຽນສົມມຸດສະຖານະການໃດນຶ່ງທີ່ໃກ້ຄຽງກັບເນື້ອໃນຂອງບົດເລື່ອງທີ່ນັກຮຽນໄດ້ອ່ານ ແລ້ວໃຫ້ເຂົາເຈົ້າຂຽນກ່ຽວກັບຕົວຂອງເຂົາເຈົ້າຈາກບົດເລື່ອງທີ່ມີດມຸດຂຶ້ນມາ

- ຄູເຈົາຮູບພາບໃຫ້ນັກຮຽນເບິ່ງແລ້ວສ້າງບົດເລື່ອງຈາກຮູບພາບທີ່ຄູໃຫ້
- ຄູເອົາຮູບພາບທີ່ມີລັກສະນະລຽງລໍາດັບຂັ້ນຕອນຂອງເຫດການໃດນຶ່ງໃຫ້ນັກຮຽນເບິ່ງແລ້ວໃຫ້ນັກຮຽນພັນລະນາເປັນບົດເລື່ງຕາມຮູບພາບ

- ກິດຈະກໍາຕ່າງໆຂອງແຕ່ລະບາດກ້າວຂອງການສອນການອ່ານ

ຄູເອົາໃບກິດຈະກຳໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະຂັ້ນຕອນຂອງການສອນການອ່ານ.

**ປະເພດກິດຈະກຳທີ່ສາມາດນຳໃຊ້ໃນແຕ່ລະບາດກ້າວ**

ການເດົາບົດເລື່ອງຈາກຄຳສັບ ຫຼືວະລີຕ່າງໆ, ການເດົາບົດເລື່ອງຈາກການເບິ່ງຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, ການສົນທະນາກ່ຽວກັບຮູບພາບ. ການສ້າງປະໂຫຍກ, ການຕັ້ງຄຳຖາມກວດຄວາມເຂົ້າໃຈ, ການສະແດງບົດບາດສົມມຸດ, ໃຫ້ນັກຮຽນຂຽນບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄຳຕອບຈາກການເດົາການອ່ານ, ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄ□າຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| ຂາດກ້າວກ່ອນການອ່ານ | ຂາດກ້າວໃນຂະນະທີ່ອ່ານ | ຂາດກ້າວຫຼັງການອ່ານ |
|---|---|---|
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |

# ກິດຈະກຳການຮຽນ-ການສອນ

1. **ຂັ້ນນຳ**

- ຄູອະທິບາຍກິດຈະກຳການຮຽນ-ການສອນແບບຮ່ວມມືເທັກນິກຈິກຊໍ (Jigsaw) ທັງຮູບແບບການດຳເນີນກິດຈະກຳ, ບົດບາດຂອງຄູ, ບົດບາດນັກຮຽນ ແລະ ໄລຍະເວລາການປະຕິບັດກິດຈະກຳ.
- ຄູແຈ້ງຈຸດປະສົງຂອງບົດສອນ ແລະ ທົດທວນບົດຮຽນທີ່ຜ່ານມາ

2. **ຂັ້ນສອນ**

**2.1. ຂັ້ນທີ 1: ການກຳນົດຂະໜາດຂອງກຸ່ມ** (10 ນາທີ)

ນັກຮຽນກຸ່ມທົດລອງມີຈຳນວນທັງໝົດ 31 ຄົນ ຜູ້ຄົ້ນຄວ້າແບ່ງອອກເປັນ 6 ກຸ່ມໆລະ 5 ຄົນ ເຊິ່ງເອີ້ນວ່າ ກຸ່ມ ບ້ານຂອງເຮົາ (Home Group) ເຊິ່ງສະມາຊິກໃນກຸ່ມປະກອບດ້ວຍນັກຮຽນທີ່ມີຄວາມສາມາດແຕກຕ່າງກັນເຊັ່ນ: ນັກຮຽນເກັ່ງ, ກາງ ແລະ ອ່ອນ. ຈາກນັ້ນໃຫ້ນັກຮຽນແຕ່ລະຄົນໃນກຸ່ມແບ່ງໜ້າທີ່ຮັບຜິດຊອບກັນເຊັ່ນ: ຫົວໜ້າກຸ່ມ, ເລຂາກຸ່ມ ແລະ ອື່ນໆດັ່ງຕົວຢ່າງນີ້:

ກຸ່ມA: ນັກສຶກສາຄົນທີ A1, ນັກສຶກສາຄົນທີ A2, ນັກສຶກສາຄົນທີ A3, ນັກສຶກສາຄົນທີ A4, ນັກສຶກສາຄົນທີ A5.

ກຸ່ມB: ນັກສຶກສາຄົນທີ B1, ນັກສຶກສາຄົນທີ B2, ນັກສຶກສາຄົນທີ B3, ນັກສຶກສາຄົນທີ B4, ນັກສຶກສາຄົນທີ B5.

ກຸ່ມC: ນັກສຶກສາຄົນທີ C1, ນັກສຶກສາຄົນທີ C2, ນັກສຶກສາຄົນທີ C3, ນັກສຶກສາຄົນທີ C4, ນັກສຶກສາຄົນທີ C5.

ກຸ່ມD: ນັກສຶກສາຄົນທີ D1, ນັກສຶກສາຄົນທີ D2, ນັກສຶກສາຄົນທີ D3, ນັກສຶກສາຄົນທີ D4, ນັກສຶກສາຄົນທີ D5.

ກຸ່ມE: ນັກສຶກສາຄົນທີ E1, ນັກສຶກສາຄົນທີ E2, ນັກສຶກສາຄົນທີ E3, ນັກສຶກສາຄົນທີ E4, ນັກສຶກສາຄົນທີ E5.

ກຸ່ມF: ນັກສຶກສາຄົນທີ F1, ນັກສຶກສາຄົນທີ F2, ນັກສຶກສາຄົນທີ F3, ນັກສຶກສາຄົນທີ F4, ນັກສຶກສາຄົນທີ F5+ F6.

**2.2. ຂັ້ນທີ 2: ການແບ່ງຫົວຂໍ້ຍ່ອຍ** (5 ນາທີ)

ຄູແຈກໃບກິດຈະກຳໃຫ້ສຳມະຊິກໃນກຸ່ມບ້ານເຊິ່ງໃນແຕ່ລະກຸ່ມປະກອບດ້ວຍຫົວຂໍ້ຍ່ອຍທີ່ສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານຈະໄດ້ແຈກຢາຍໄປສຶກສາ ແລະ ເຮັດກິດຈະກຳ ເປັນກຸ່ມໃໝ່ເຊິ່ງເອີ້ນວ່າກຸ່ມຜູ້ຊ່ຽວຊານ (Expert Group) ເຊັ່ນ:

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 1 ໄດ້ຮັບຫົວຂໍ້ຍ່ອຍທີ 1: ຄູເອົາໃບກິດຈະກ□າໃຫ້ນັກຮຽນຄົ້ນຄ້ວາເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການອ່ານທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| **ເນື້ອໃນ** |
|---|
| 1. ການສອນຕ້ອງມີກິດຈະກຳໃຫ້ນັກຮຽນໄດ້ເຮັດໃນບາດກ້າວກ່ອນການອ່ານ, ໃນຂະນະທີ່ກຳລັງດຳເນີນການອ່ານ ແລະ ຫຼັງຈາກສຳເລັດການອ່ານ ໃຫ້ນັກຮຽນເຮັດ. |
| 2. ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈ |
| 3. ນັກຮຽນມີເຫດຜົນໃນການອ່ານບົດເລື່ອງ |
| 4. ກິດຈະກຳການອ່ານຕ້ອງບໍ່ຍາກເກີນໄປໃນການຊອກຫາຄຳຕອບຂອງນັກຮຽນ |
| 5. ນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ກຳລັງດຳເນີນການອ່ານ |

1. ການສອນທັກສະການອ່ານມີຈັກບາດກ້າວ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 2 ໄດ້ຮັບຫົວຂໍ້ຍ່ອຍທີ 2:ຄູເອົາໃບກິດຈະກຳກ່ຽວກັບກິດຈະກຳກ່ອນອ່ານໃຫ້ນັກຮຽນອ່ານເຊິ່ງປະກອບມີ:

- ໃຫ້ນັກຮຽນສ້າງຄຳຖາມທີ່ຄິດວ່າອາດຈະມີຄຳຕອບຈາກບົດເລື່ອງທີ່ນັກຮຽນຈະໄດ້ອ່ານ
- ຄູເອົາເຈ້ຍທີ່ມີຄຳສັບກ່ຽວກັບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານ ແລະ ເລືອກເອົາຄຳສັບທີ່ເຂົາເຈົ້າຄາດຄະເນວ່າອາດຈະມີໃນບົດເລື່ອງທີ່ພວກເຂົາກຳລັງຈະໄດ້ອ່ານ.
- ຄູເອົາເຈ້ຍກິດຈະກຳທີ່ຂຽນເປັນອະລິຫຼືປະໂຫຍກທີ່ກ່ຽວກັບບົດເລື່ອງໃຫ້ນັກຮຽນອ່ານແລ້ວເລືອກວ່າຈະມີເຫດການຫຍັງເກີດຂຶ້ນແດ່ຈາກວະລີດັ່ງກ່າວໃນບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.
- ຄູເອົາເຈ້ຍຄຳຖາມທີ່ມີຄຳຕອບຖືກ-ຜິດໃຫ້ນັກຮຽນທົດລອງເລືອກຄຳຕອບກ່ຽວກັບບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.

2. ກິດຈະກ□າກ່ອນການອ່ານຄູສາມາດໃຫ້ນັກຮຽນເຮັດກິດຈະກ□າໃດແດ່?

3. ເປັນຫຍັງຄູຈິ່ງເຮັດກິດຈະກ□າກ່ອນການອ່ານ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 3 ໄດ້ຮັບຫົວຂໍ້ຍ່ອຍທີ 3:ກິດຈະກຳໃນບາດກ້າວຂະນະທີ່ອ່ານຄູຕ້ອງຢາຍໃບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານພ້ອມທັງຊອກໃຫ້ເອົາຄຳຕອບຂອງຄຳຖາມທີ່ພວກເຂົເຈົ້າໄດ້ເຮັດຈາກກິດຈະກຳທີ່ພວກເຂົາໄດ້ເຮັດໃນກິດຈະກຳກ່ອນການອ່ານ ແລະ ຄູຢາຍເຈ້ຍຄຳຖາມໃຫ້ນັກຮຽນເຮັດເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ກັບການອ່ານ

4. ໃນກິດຈະກ□າຂະນະທີ່ອ່ານນັກຮຽນຈະໄດ້ເຮັດຫຍັງແດ່?

5. ເປັນຫຍັງຄູຈິ່ງເຮັດກິດຈະກ□າໃນຂະນະທີ່ອ່ານ?

ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 4 ໄດ້ຮັບຫົວຂໍ້ຍ່ອຍທີ 4:ຄູເອົາໃບກິດຈະກຳໃຫ້ນັກຮຽນທີ່ມີຄຳແນະນຳຂອງຄູວ່າ: ໃຫ້ນັກຮຽນອ່ານກິດຈະກຳທີ່ສາມາດນຳໃຊ້ເປັນກິດຈະກຳໃນບາດກ້າວຂະນະທີ່ອ່ານ

- ໃຫ້ນັກຮຽນສົມມຸດສະຖານະການໃດນຶ່ງທີ່ໃກ້ຄຽງກັບເນື່ອໃນຂອງບົດເລື່ອງທີ່ນັກຮຽນໄດ້ອ່ານ ແລ້ວໃຫ້ເຂົາເຈົ້າຂຽນກ່ຽວກັບຕົວຂອງເຂົາເຈົ້າຈາກບົດເລື່ອງທີ່ມົດມຸດຂຶ້ນມາ
- ຄູເຈົາຮູບພາບໃຫ້ນັກຮຽນເບິ່ງແລ້ວສ້າງບົດເລື່ອງຈາກຮູບພາບທີ່ຄູໃຫ້
- ຄູເອົາຮູບພາບທີ່ມີລັກສະນະລຽງລຳດັບຂັ້ນຕອນຂອງເຫດການໃດນຶ່ງໃຫ້ນັກຮຽນເບິ່ງແລ້ວໃຫ້ນັກຮຽນພັນລະນາເປັນບົດເລື່ງຕາມຮູບພາບ

6. ໃນກິດຈະກຳຫຼັງຈາກອ່ານຄູສາມາດໃຫ້ນັກຮຽນເຮັດກິດຈະກຳໃດແດ່?

7. ເປັນຫຍັງຄູຈິ່ງເຮັດກິດຈະກ□າຫຼັງການອ່ານໝາຍຄວາມວ່າແນວໃດ?

○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 5 ໄດ້ຮັບຫົວຂໍ້ຍ່ອຍທີ 5: ໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະບາດກ້າວຂອງການສອນການອ່ານ.

**ກິດຈະກຳ**

ການເດົາບົດເລື່ອງຈາກຄຳສັບ ຫຼືວະລີຕ່າງໆ, ການເດົາບົດເລື່ອງຈາກການເບິ່ງຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, ການສົນທະນາກ່ຽວກັບຮູບພາບ. ການສ້າງປະໂຫຍກ, ການຕັ້ງຄຳຖາມກວດຄວາມເຂົ້າໃຈ, ການສະແດງບົດບາດສົມມຸດ, ໃຫ້ນັກຮຽນຂຽນບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄຳຕອບຈາກການເດົາການອ່ານ, ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄ□າຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| ບາດກ້າວກ່ອນການອ່ານ | ບາດກ້າວໃນຂະນະທີ່ອ່ານ | ບາດກ້າວຫຼັງການອ່ານ |
|---|---|---|
| - | - | - |

| | | |
|---|---|---|
| -<br>-<br>-<br>-<br>- | -<br>-<br>-<br>-<br>- | -<br>-<br>-<br>-<br>- |

8. ກິດຈະກ□າທີ່ສາມາດນ□າໃຊ້ເຂົ້າໃນບາດກ້າວກ່ອນການອ່ານ, ຂະນະທີ່ກ□າລັງອ່ານ ແລະ ຫຼັງຈາກສໍາເລັດການອ່ານມີຫຍັງແດ່?

**2.3. ຂັ້ນທີ 3: ການສຶກສາຄວາມຮູ້** (15 ນາທີ)

- ນັກສຶກສາທີ່ໄດ້ຮັບຫົວຂໍ້ຍ່ອຍທີ່ຄືກັນຈາກກຸ່ມບ້ານແຕ່ລະກຸ່ມມາລວມກັນເປັນກຸ່ມດຽວກັນເປັນກຸ່ມໃໝ່ ເຊິ່ງເອີ້ນວ່າຜູ້ຊ່ຽວຊານ (Expert Group) ມີ 6 ກຸ່ມໆລະ 5-6 ຄົນ.
- ພາຍໃນກຸ່ມຜູ້ຊ່ຽວຊານກຸ່ມລະ 5 ຄົນນັ້ນ ແຕ່ລະກຸ່ມສຶກສາເນື້ອໃນອັນດຽວກັນ, ທໍາຄວາມເຂົ້າໃຈ ແລະ ອະທິບາຍຫົວຂໍ້ທີ່ສຶກສາຮ່ວມກັນ ເຊິ່ງສະມາຊິກພາຍໃນກຸ່ມອາດສະຫຼຸບປະເດັນຄວາມຮູ້ທີ່ສໍາຄັນຕາມແນວຄິດຂອງສະມາຊິກໃນກຸ່ມ ເພື່ອທີ່ບັນທຶກ ແລະ ນໍາເອົາຄວາມຮູ້ທີ່ໄດ້ຄົ້ນຄວ້າກັບໄປສອນໃຫ້ສະມາຊິກໃນກຸ່ມບ້ານ.

**2.4. ຂັ້ນທີ 4: ການຖ່າຍທອດຄວາມຮູ້** (20 ນາທີ)

ນັກສຶກສາຜູ້ທີ່ເປັນຜູ້ຊ່ຽວຊານແຕ່ລະຄົນທີ່ໄດ້ໄປສຶກສາຂໍ້ມູນຄວາມຮູ້ຈາກກຸ່ມຜູ້ຊ່ຽວຊານ ແລະ ໄດ້ກັບຄືນມາກຸ່ມບ້ານໃນຫົວຂໍ້ທີ່ຕົນເອງຮັບຜິດຊອບສຶກສາມາ.

ຜູ້ຊ່ຽວຊານທັງ 6 ຄົນ ນໍາສະເໜີຂໍ້ມູນໃນກຸ່ມບ້ານສ□າເລັດແລ້ວສະມາຊິກໃນກຸ່ມຕ້ອງສົນທະນາຫາຂໍ້ສະຫຼຸບໃນແຕ່ລະຫົວຂໍ້ຈາກ ສະມາຊິກທັງ 5 ຄົນເພື່ອເປັນຄວາມຮູ້ຂອງກຸ່ມ.

**2.5. ຂັ້ນທີ 5: ທົດສອບຄວາມຮູ້** (20 ນາທີ)

- ຫຼັງຈາກສໍາເລັດການດໍາເນີນກິດຈະກໍາການຮຽນ-ການສອນຄູຢາຍບົດທົດສອບໃຫ້ນັກຮຽນແຕ່ລະຄົນໃນກຸ່ມບ້ານທົດສອບໃນຫົວຂໍ້ດຽວກັນ.
- ຄູໃຫ້ຄະແນນແຕ່ລະຄົນໃນກຸ່ມບ້ານທຸກໆກຸ່ມ ແລ້ວນໍາເອົາຄະແນນຂອງສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານມາລວມເຂົ້າກັນ.

**2.6. ຂັ້ນທີ 6: ຊົມເຊີຍ ແລະ ມອບລາງວັນ** (5 ນາທີ)

ກຸ່ມທີ່ໄດ້ຄະແນນສູງສຸດຈະໄດ້ຮັບລາງວັນຈາກຄູ, ຊົມເຊີຍ ແລະ ນໍາເອົາຜົນການທົດສອບຕິດໄວ້ຫ້ອງຮຽນ.

**3. ຂັ້ນສະຫຼຸບ**

ເມື່ອສໍາເລັດການຮຽນ-ການສອນແລ້ວ ຄູ ແລະ ນັກສຶກສາຮ່ວມກັນສະຫຼຸບຜົນການເຮັດກິດຈະກໍາ, ບັນຫາທີ່ເກີດຂຶ້ນໃນລະຫວ່າງການດໍາເນີນກິດຈະກໍາ ແລະ ຫາທາງແກ້ໄຂເພື່ອເປັນແນວທາງໃນການດໍາເນີນການຮຽນ-ການສອນຄັ້ງຕໍ່ໄປ.

**4. ຂັ້ນປະເມີນ**(25 ນາທີ)

- ກວດສອບຈາກຄວາມຖືກຕ້ອງຂອງໃບກິດຈະກໍາ
- ກວດສອບຈາກຄະແນນການເຮັດບົດທົດສອບຍ່ອຍ
- ສັງເກດຈາກການຮ່ວມມືໃນການເຮັດກິດຈະກໍາກຸ່ມ
- ກວດສອບຈາກໃບຕິດຕາມຂະບວນການ

## ໃບກິດຈະກຳ ບົດສອນທີ 3

- ໃຫ້ນັກຮຽນອ່ານເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການອ່ານທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| ເນື້ອໃນ |
|---|
| 1. ການສອນຕ້ອງມີກິດຈະກຳໃຫ້ນັກຮຽນໄດ້ເຮັດໃນບາດກ້າວກ່ອນການອ່ານ, ໃນຂະນະທີ່ກຳລັງດຳເນີນການອ່ານ ແລະ ຫຼັງຈາກສຳເລັດການອ່ານ ໃຫ້ນັກຮຽນເຮັດ. |
| 2. ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈ |
| 3. ນັກຮຽນມີເຫດຜົນໃນການອ່ານບົດເລື່ອງ |
| 4. ກິດຈະກຳການອ່ານຕ້ອງບໍ່ຍາກເກີນໄປໃນການຊອກຫາຄຳຕອບຂອງນັກຮຽນ |
| 5. ນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ກຳລັງດຳເນີນການອ່ານ |

1. ການສອນທັກສະການອ່ານມີຈັກບາດກ້າວ?

- ໃຫ້ນັກຮຽນອ່ານກິດຈະກຳກ່ຽວກັບກິດຈະກຳກ່ອນອ່ານເຊິ່ງປະກອບມີ:
  - ໃຫ້ນັກຮຽນສ້າງຄຳຖາມທີ່ຄິດວ່າອາດຈະມີຄຳຕອບຈາກບົດເລື່ອງທີ່ນັກຮຽນຈະໄດ້ອ່ານ
  - ຄູເອົາເຈ້ຍທີ່ມີຄຳສັບກ່ຽວກັບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານ ແລະ ເລືອກເອົາຄຳສັບທີ່ເຂົາເຈົ້າຄາດຄະເນວ່າອາດຈະມີໃນບົດເລື່ອງທີ່ພວກເຂົາກຳລັງຈະໄດ້ອ່ານ.
  - ຄູເອົາເຈ້ຍກິດຈະກຳທີ່ຂຽນເປັນວະລີຫຼືປະໂຫຍກທີ່ກ່ຽວກັບບົດເລື່ອງໃຫ້ນັກຮຽນອ່ານແລ້ວເລືອກວ່າຈະມີເຫດການຫຍັງເກີດຂຶ້ນແດ່ຈາກວະລີດັ່ງກ່າວໃນບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.
  - ຄູເອົາເຈ້ຍຄຳຖາມທີ່ມີຄຳຕອບຖືກ-ຜິດໃຫ້ນັກຮຽນທົດລອງເລືອກຄຳຕອບກ່ຽວກັບບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.

2. ກິດຈະກຳກ່ອນການອ່ານຄູສາມາດໃຫ້ນັກຮຽນເຮັດກິດຈະກຳໃດແດ່?
3. ເປັນຫຍັງຄູຈິ່ງເຮັດກິດຈະກຳກ່ອນການອ່ານ?

- ກິດຈະກຳໃນບາດກ້າວຂະນະທີ່ອ່ານຄູຕ້ອງຢາຍໃບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານພ້ອມທັງຊອກໃຫ້ເອົາຄຳຕອບຂອງຄຳຖາມທີ່ພວກເຂົເຈົ້າໄດ້ເຮັດຈາກກິດຈະກຳທີ່ພວກເຂົາໄດ້ເຮັດໃນກິດຈະກຳກ່ອນການອ່ານ ແລະ ຄູຢາຍເຈ້ຍຄຳຖາມໃຫ້ນັກຮຽນເຮັດເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ກັບການອ່ານ

4. ໃນກິດຈະກຳຂະນະທີ່ອ່ານນັກຮຽນຈະໄດ້ເຮັດຫຍັງແດ່?
5. ເປັນຫຍັງຄູຈິ່ງເຮັດກິດຈະກຳໃນຂະນະທີ່ອ່ານ?

- ໃຫ້ນັກຮຽນອ່ານກິດຈະກຳທີ່ສາມາດນຳໃຊ້ເປັນກິດຈະກຳໃນບາດກ້າວຂະນະທີ່ອ່ານ
  - ໃຫ້ນັກຮຽນສົມມຸດສະຖານະການໃດນຶ່ງທີ່ໃກ້ຄຽງກັບເນື່ອໃນຂອງບົດເລື່ອງທີ່ນັກຮຽນໄດ້ອ່ານ ແລ້ວໃຫ້ເຂົາເຈົ້າຂຽນກ່ຽວກັບຕົວຂອງເຂົາເຈົ້າຈາກບົດເລື່ອງທີ່ມີດມຸດຂຶ້ນມາ
  - ຄູເຈົາຮູບພາບໃຫ້ນັກຮຽນເບິ່ງແລ້ວສ້າງບົດເລື່ອງຈາກຮູບພາບທີ່ຄູໃຫ້
  - ຄູເອົາຮູບພາບທີ່ມີລັກສະນະລຽງລຳດັບຂັ້ນຕອນຂອງເຫດການໃດນຶ່ງໃຫ້ນັກຮຽນເບິ່ງແລ້ວໃຫ້ນັກຮຽນພັນລະນາເປັນບົດເລິ່ງຕາມຮູບພາບ

6. ໃນກິດຈະກຳຫຼັງຈາກອ່ານຄູສາມາດໃຫ້ນັກຮຽນເຮັດກິດຈະກຳໃດແດ່?
7. ເປັນຫຍັງຄູຈິ່ງເຮັດກິດຈະກຳຫຼັງການອ່ານໝາຍຄວາມວ່າແນວໃດ?

- ໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະຂັ້ນຕອນຂອງການສອນການອ່ານ.

**ກິດຈະກຳ**

ການເດົາບົດເລື່ອງຈາກຄຳສັບ ຫຼືວະລີ, ການເດົາບົດເລື່ອງຈາກຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, ການປະໂຫຍກ ຖືກ/ຜິດ, ການສົນທະນາກ່ຽວກັບຮູບພາບ. ການສ້າງປະໂຫຍກ, ການຕັ້ງຄຳຖາມສຳຫຼວດຄວາມເຂົ້າໃຈ, ການສະແດງບົດບາດສົມມຸດ, ສ້າງບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳ

ຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄໍາຕອບຈາກການເດົາການອ່ານ , ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄ□າຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| ບາດກ້າວກ່ອນການອ່ານ | ບາດກ້າວໃນຂະນະທີ່ອ່ານ | ບາດກ້າວຫຼັງການອ່ານ |
|---|---|---|
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |

8. ກິດຈະກໍາທີ່ສາມາດນໍາໃຊ້ເຂົ້າໃນບາດກ້າວກ່ອນການອ່ານ, ຂະນະທີ່ອ່ານ ແລະ ຫຼັງການອ່ານມີຫຍັງແດ່?

## ຄໍາຕອບໃບກິດຈະກໍາ 3

1. ການສອນທັກສະການອ່ານປະກອບດ້ວຍ ສາມບາດກ້າວ
2. ຄູສາມາດໃຫ້ນັກຮຽນເຮັດກິດຈະກໍາຫຼາຍຮູບແບບເຊັ່ນ:
   - ໃຫ້ນັກຮຽນສ້າງຄ□າຖາມທີ່ຄິດວ່າອາດຈະມີຄ□າຕອບຈາກບົດເລື່ອງທີ່ນັກຮຽນຈະໄດ້ອ່ານ

- ຄູເອົາເຈ້ຍທີ່ມີຄໍາສັບກ່ຽວກັບເນື້ອໃນບົດເລື່ອງໃຫ້ນັກຮຽນອ່ານ ແລະ ເລືອກເອົາຄໍາສັບທີ່ເຂົາເຈົ້າຄາດຄະເນວ່າອາດຈະມີໃນບົດເລື່ອງທີ່ພວກເຂົາກໍາລັງຈະໄດ້ອ່ານ.
- ຄູເອົາເຈ້ຍກິດຈໍາກະທີ່ຂຽນເປັນວະລີທີ່ກ່ຽວກັບບົດເລື່ອງໃຫ້ນັກຮຽນອ່ານແລ້ວເລືອກວ່າຈະມີເຫດການຫຍັງເກີດຂຶ້ນແດ່ຈາກວະລີດັ່ງກ່າວໃນບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.
- ຄູເອົາເຈ້ຍຄໍາຖາມທີ່ມີຄໍາຕອບຖືກ-ຜິດໃຫ້ນັກຮຽນທົດລອງເລືອກຄໍາຕອບກ່ຽວກັບບົດເລື່ອງທີ່ເຂົາເຈົ້າຈະໄດ້ອ່ານ.

3. ເພື່ອເປັນການແນະນໍາໃຫ້ນັກຮຽນໄດ້ຄົ້ນຄິດວ່າພວກເຂົ້າຈະໄດ້ອ່ານກ່ຽວກັບຫຍັງ
4. ນັກກຮຽນຈະໄດ້ຊອກເອົາຄ□າຕອບຂອງຄ□າຖາມທີ່ພວກເຂົເຈົ້າໄດ້ເຮັດຈາກກິດຈະກ□າກ່ອນການອ່ານ ແລະ ຕອບຄໍາຖາມກ່ຽວກັບບົດອ່ານເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນ
5. ເພື່ອນັກຮຽນຈະໄດ້ເອົາໃຈໃສ່ໃນສິ່ງທີ່ພວກເຂົາກໍາລັງອ່ານ, ເພື່ອຄູຈະໄດ້ຮູ້ວ່ານັກຮຽນມີຄວາມເຂົ້າໃຈໃນບົດເລື່ອງທີ່ໄດ້ອ່ານ
6. ກິດຈະກໍາຫຼັງຈາກອ່ານຄູສາມາດໃຫ້ນັກຮຽນເຮັດກິດຈະກໍາຫຼາຍປະເພດເຊັ່ນ:
   - ໃຫ້ນັກຮຽນສົມມຸດສະຖານະການໃດນຶ່ງທີ່ໄກ້ຄຽງກັບເນື້ອໃນຂອງບົດເລື່ອງທີ່ນັກຮຽນໄດ້ອ່ານ ແລ້ວໃຫ້ເຂົາເຈົ້າຂຽນກ່ຽວກັບຕົວຂອງເຂົາເຈົ້າຈາກບົດເລື່ອງທີ່ມີດມຸດຂຶ້ນມາ
   - ຄູເຈົ້າຮູບພາບໃຫ້ນັກຮຽນເບິ່ງແລ້ວສ້າງບົດເລື່ອງຈາກຮູບພາບທີ່ຄູໃຫ້
   - ຄູເອົາຮູບພາບທີ່ມີລັກສະນະລຽງລໍາດັບຂັ້ນຕອນຂອງເຫດການໃດນຶ່ງໃຫ້ນັກຮຽນເບິ່ງແລ້ວໃຫ້ນັກຮຽນພັນລະນາເປັນບົດເລື່ງຕາມຮູບພາບ
7. ເພື່ອໃຫ້ນັກຮຽນໄດ້ຜັນຂະຫຍາຍຄວາມຮູ້ທີ່ໄດ້ຈາກການຮຽນ ແລະ ເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ບົດຮຽນ.
8. ກິດຈະກໍາຂອງແຕ່ລະບາດກ້າວ

| **ບາດກ້າວກ່ອນການອ່ານ** | **ບາດກ້າວໃນຂະນະທີ່ອ່ານ** | **ບາດກ້າວຫຼັງການອ່ານ** |
|---|---|---|
| - ການເດົາບົດເລື່ອງຈາກຄໍາສັບ ຫຼືວະລີ<br>- ການເດົາບົດເລື່ອງຈາກຮູບພາບ<br>- ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ<br>- ການປະໂຫຍກ ຖືກ/ຜິດ<br>- ການສົນທະນາກ່ຽວກັບຮູບພາບ<br>- ການສ້າງຄໍາຖາມທີ່ຄາດວ່າອາດຈະມີຄໍາຕອບຈາກບົດເລື່ອງ | - ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ<br>- ການກວດກາຄໍາຕອບຈາກການເດົາການອ່ານ<br>- ການຕື່ມຂໍ້ມູນໃສ່ຕາຕະລາງ<br>- ການຕອບຄໍາຖາມ ຖືກ/ຜິດ<br>- ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ<br>- ການຈັບຄູ່ປະໂຫຍກ | - ການສ້າງປະໂຫຍກ<br>- ການຕັ້ງຄໍາຖາມສໍາຫຼວດຄວາມເຂົ້າໃຈ<br>- ການສະແດງບົດບາດສົມມຸດ<br>- ສ້າງບົດເລື່ອງຄືນໃໝ່ |

## ບົດທົດສອບຫຼັງການຮຽນ 3

1. ການສອນທັກສະການອ່ານປະກອບມີຈັກບາດກ້າວ?
   ກ. ສອງບາດກ້າວ
   ຂ. ສາມບາດກ້າວ
   ຄ. ສີ່ບາດກ້າວ
   ງ. ຫ້າບາດກ້າວ
2. ການສອນທັກສະການອ່ານມີບາດກ້າວໃດແດ່?
   ກ. ບາດກ້າວກ່ອນການອ່ານ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງຈາກອ່ານ
   ຂ. ບາດກ້າວກ່ອນການອ່ານ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງຈາກອ່ານ
   ຄ. ບາດກ້າວກ່ອນການອ່ານ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງຈາກຟັງ
   ງ. ບາດກ້າວກ່ອນການອ່ານ, ບາດກ້າວຂະນະທີ່ອ່ານ ແລະ ບາດກ້າວຫຼັງອ່ານ
3. ກິດຈະກຳໃດບໍ່ແມ່ນກິດຈະກຳໃນບາດກ້າວກ່ອນການອ່ານ?
   ກ. ຄູໃຫ້ນັກຮຽນສ້າງຄູຖາມທີ່ຄິດວ່າອາດຈະມີຄຳຕອບຈາກບົດເລື່ອງ
   ຂ. ຄູໃຫ້ນັກຮຽນເດົາຄຳຕອບຖືກ-ຜິດ ກ່ຽວກັບບົດເລື່ອງທີ່ຈະອ່ານ
   ຄ. ຄູໃຫ້ນັກຮຽນອ່ານບົດເລື່ອງ ແລະ ຕອບຄຳຖາມກ່ຽວກັບບົດເລື່ອງ
   ງ. ຄູໃຫ້ນັກຮຽນເລືອກເອົາວະລີຫຼືປະໂຫຍກທີ່ເວົ້າເຖິງເຫດການທີ່ອາດເກີດຂຶ້ນໃນບົດເລື່ອງ
4. ຂໍ້ໃດແມ່ນກິດຈະກຳໃນບາດກ້າວຂະນະທີ່ອ່ານ?
   ກ. ນັກຮຽນຂີດກ້ອງເອົາວະລີຫຼືປະໂຫຍກທີ່ເວົ້າເຖິງເຫດການທີ່ເກີດຂຶ້ນໃນບົດເລື່ອງຈາກການເດົາ
   ຂ. ຄູໃຫ້ນັກຮຽນສ້າງບົດເລື່ອງຄືນໃໝ່ຈາກການຟັງ
   ຄ. ໃຫ້ນັກຮຽນພັນລະນາບົດເລື່ອງຕາມຮູບພາບ
   ງ. ນັກຮຽນຂຽນບົດພັນລະນາຈາກຄຳສັບ, ວະລີຫຼືປະໂຫຍກທີ່ເລືອກໄວ້ໃນກິດຈະກຳກ່ອນການອ່ານ
5. ຂໍ້ໃດແມ່ນກິດຈະກຳໃນບາດກ້າວຫຼັງຈາກອ່ານ?
   ກ. ຄູໃຫ້ນັກຮຽນເດົາບົດເລື່ອງຈາກຮູບພາບ
   ຂ. ຄູໃຫ້ນັກຮຽນສົມມຸດເຫດການທີ່ໃກ້ຄຽງກັບບົດເລື່ອງທີ່ອ່ານແລ້ວພັນລະນາກ່ຽວກັບເຫດການນັ້ນ
   ຄ. ຄູໃຫ້ນັກຮຽນເຮັດກິດຈະກຳຈັບຄູ່ປະໂຫຍກ
   ງ. ຄູໃຫ້ນັກຮຽນເດົາປະໂຫຍກຖືກ-ຜິດ

## ຄຳຕອບບົດທົດສອບ ບົດທີ 3

1. ການສອນທັກສະການອ່ານປະກອບມີຈັກບາດກ້າວ?

   ຂ. ສາມບາດກ້າວ

2. ການສອນທັກສະການອ່ານມີບາດກ້າວໃດແດ່?

   ງ. ບາດກ້າວກ່ອນການອ່ານ, ບາດກ້າວຂະນະທີ່ອ່ານ ແລະ ບາດກ້າວຫຼັງຈາກອ່ານ

3. ກິດຈະກຳໃດບໍ່ແມ່ນກິດຈະກຳໃນບາດກ້າວກ່ອນການອ່ານ?

   ຄ. ຄູໃຫ້ນັກຮຽນອ່ານບົດເລື່ອງ ແລະ ຕອບຄຳຖາມກ່ຽວກັບບົດເລື່ອງ

4. ຂໍ້ໃດແມ່ນກິດຈະກຳໃນບາດກ້າວຂະນະທີ່ອ່ານ?

   ກ. ນັກຮຽນຂີດກ້ອງເອົາວະລີຫຼືປະໂຫຍກທີ່ເວົ້າເຖິງເຫດການທີ່ເກີດຂຶ້ນໃນບົດເລື່ອງຈາກການເດົາ

5. ຂໍ້ໃດແມ່ນກິດຈະກຳໃນບາດກ້າວຫຼັງຈາກອ່ານ?

   ຂ. ຄູໃຫ້ນັກຮຽນສົມມຸດເຫດການທີ່ໄກ້ຄຽງກັບບົດເລື່ອງທີ່ອ່ານແລ້ວພັນລະນາກ່ຽວກັບເຫດການນັ້ນ

# ບົດສອນທີ 4

ວິຊາຫຼັກສູດ ແລະ ການສອນ ຫ້ອງປີ 3ຂ ຄູປະຖົມ

ບົດທີ 4: ວັນທີ

......../......./2018

ຫົວຂໍ້: ການສອນການຟັງ ເວລາ: 100 ນາທີ

**1. ຈຸດປະສົງ:** ຫຼັງຈາກຮຽນຈົບບົດນີ້ແລ້ວນັກຮຽນຈະສາມາດ:

- ຮູ້ບາດກ້າວຂອງການສອນທັກສະການຟັງ
- ສອນທັກການສະຟັງໄດ້ຢ່າງຖືກບາດກ້າວຂອງການສອນການຟັງ

**2. ອຸປະກອນ:** ໃບກິດຈະກຳ, ແບບຮຽນ.

**3. ເນື້ອໃນ:**

- ຕົວຢ່າງການສອນການຟັງ

ຄູເອົາໃບກິດຈະກຳໃຫ້ນັກຮຽນຄົ້ນຄ້ວາເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການຟັງທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| ເນື້ອໃນ |
|---|
| ການສອນຕ້ອງມີກິດຈະກຳໃນບາດກ້າວກ່ອນການຟັງ, ໃນຂະນະທີ່ຟັງ ແລະ ຫຼັງຈາກສຳເລັດການຟັງ ໃຫ້ນັກຮຽນເຮັດ. |
| ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈ |
| ນັກຮຽນມີເຫດຜົນໃນການຟັງບົດເລື່ອງ |
| ກິດຈະກຳຕ້ອງບໍ່ຍາກເກີນໄປໃນການຊອກຫາຄຳຕອບຂອງນັກຮຽນ |
| ນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ຟັງ |

- ກິດຈະກຳບາດກ້າວກ່ອນການຟັງ

ຄູເອົາໃບກິດຈະກຳໃຫ້ນັກຮຽນຈັດລຽງຮູບພາບກ່ຽວກັບຕອນຕ່າງໆຂອງການຫຼິ້ນກິລາບານເຕາະໃຫ້ຖືກຕ້ອງຕາມຂັ້ນ. ຫຼັງຈາກນັ້ນຄູ ຟັງ (ເປີດເທບ) ໃຫ້ນັກຮຽນຟັງເພື່ອກວດເຊັກຄຳຕອບ.



- ກິດຈະກຳບາດກ້າວໃນຂະນະທີ່ຟັງ

ຄູເອົາໃບເຈ້ຍກິດຈະກຳໃຫ້ນັກຮຽນເຊິ່ງປະກອບມີຄຳຖາມກ່ຽວກັບເນື້ອຂອງບົດເລື່ອງ ແລ້ວ ເປີດບົດເລື່ອງໃຫ້ນັກຮຽນຟັງ.

ຕົວຢ່າງຄຳຖາມ:

1. Who was playing football?
2. What happened to the ball?
3. Why couldn't they catch the ball?
4. Who had a good idea?
5. Why Sombath go to the house?
6. How did they get the ball again?

- ກິດຈະກຳບາດກ້າວຫຼັງຈາກການຟັງ

ຄູເອົາໃບກິດຈະກຳໃຫ້ນັກຮຽນທີ່ມີຄຳແນະນຳຂອງຄູວ່າ: ໃຫ້ພວກນ້ອງເບິ່ງຮູບພາບນັ້ນຄືນ ແລະ ນຳໃຊ້ຂໍ້ມູນໃນຮູບພາບນັ້ນເພື່ອສ້າງເປັນບົດເລື່ອງຄືນ.

- ກິດຈະກຳຕ່າງໆຂອງແຕ່ລະບາດກ້າວຂອງການສອນການຟັງ

ຄູເອົາໃບກິດຈະກຳໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະຂັ້ນຕອນຂອງການສອນການຟັງ.

**ກິດຈະກຳ**

ການເດົາບົດເລື່ອງຈາກຄຳສັບ ຫຼືວະລີ, ການເດົາບົດເລື່ອງຈາກຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, , ການສົນທະນາກ່ຽວກັບຮູບພາບ, ການຕັ້ງຄຳຖາມກວດຄວາມເຂົ້າໃຈຈາກການຟັງ, ການສະແດງບົດບາດສົມມຸດຈາກບົດເລື່ອງ, ສ້າງບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄຳຕອບຈາກການເດົາການຟັງ, ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄຳຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| ບາດກ້າວກ່ອນການຟັງ | ບາດກ້າວໃນຂະນະທີ່ຟັງ | ບາດກ້າວຫຼັງການຟັງ |
|---|---|---|
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |

# ກິດຈະກຳການຮຽນ-ການສອນ

1. **ຂັ້ນນຳ**

- ຄູອະທິບາຍກິດຈະກຳການຮຽນ-ການສອນແບບຮ່ວມມືເທັກນິກຈິກຊໍ (Jigsaw) ທັງຮູບແບບການດຳເນີນກິດຈະກຳ, ບົດບາດຂອງຄູ, ບົດບາດນັກຮຽນ ແລະ ໄລຍະເວລາການປະຕິບັດກິດຈະກຳ.
- ຄູແຈ້ງຈຸດປະສົງຂອງບົດຮຽນ
- ຄູທົບທວນບົດຮຽນທີ່ຜ່ານມາ

2. **ຂັ້ນສອນ**

**2.1. ຂັ້ນທີ 1: ການກຳນົດຂະໜາດຂອງກຸ່ມ** (10 ນາທີ)

ນັກຮຽນກຸ່ມທົດລອງມີຈຳນວນທັງໝົດ 31 ຄົນ ຜູ້ຄົ້ນຄວ້າແບ່ງອອກເປັນ 6 ກຸ່ມໆລະ 5 ຄົນ ເຊິ່ງເອີ້ນວ່າ ກຸ່ມ ບ້ານຂອງເຮົາ (Home Group) ເຊິ່ງສະມາຊິກໃນກຸ່ມປະກອບດ້ວຍນັກຮຽນທີ່ມີຄວາມສາມາດແຕກຕ່າງກັນເຊັ່ນ: ນັກຮຽນເກັ່ງ, ກາງ ແລະ ອ່ອນ. ຈາກນັ້ນໃຫ້ນັກຮຽນແຕ່ລະຄົນໃນກຸ່ມແບ່ງໜ້າທີ່ຮັບຜິດຊອບກັນເຊັ່ນ: ຫົວໜ້າກຸ່ມ, ເລຂາກຸ່ມ ແລະ ອື່ນໆດັ່ງຕົວຢ່າງນີ້:

ກຸ່ມA: ນັກສຶກສາຄົນທີ A1, ນັກສຶກສາຄົນທີ A2, ນັກສຶກສາຄົນທີ A3, ນັກສຶກສາຄົນທີ A4, ນັກສຶກສາຄົນທີ A5.

ກຸ່ມB: ນັກສຶກສາຄົນທີ B1, ນັກສຶກສາຄົນທີ B2, ນັກສຶກສາຄົນທີ B3, ນັກສຶກສາຄົນທີ B4, ນັກສຶກສາຄົນທີ B5.

ກຸ່ມC: ນັກສຶກສາຄົນທີ C1, ນັກສຶກສາຄົນທີ C2, ນັກສຶກສາຄົນທີ C3, ນັກສຶກສາຄົນທີ C4, ນັກສຶກສາຄົນທີ C5.

ກຸ່ມD: ນັກສຶກສາຄົນທີ D1, ນັກສຶກສາຄົນທີ D2, ນັກສຶກສາຄົນທີ D3, ນັກສຶກສາຄົນທີ D4, ນັກສຶກສາຄົນທີ D5.

ກຸ່ມE: ນັກສຶກສາຄົນທີ E1, ນັກສຶກສາຄົນທີ E2, ນັກສຶກສາຄົນທີ E3, ນັກສຶກສາຄົນທີ E4, ນັກສຶກສາຄົນທີ E5.

ກຸ່ມF: ນັກສຶກສາຄົນທີ F1, ນັກສຶກສາຄົນທີ F2, ນັກສຶກສາຄົນທີ F3, ນັກສຶກສາຄົນທີ F4, ນັກສຶກສາຄົນທີ F5+ F6.

**2.2. ຂັ້ນທີ 2: ການແບ່ງຫົວຂໍ້ຍ່ອຍ** (5 ນາທີ)

ຄູແຈກໃບກິດຈະກຳໃຫ້ສຳມະຊິກໃນກຸ່ມບ້ານເຊິ່ງໃນແຕ່ລະກຸ່ມປະກອບດ້ວຍຫົວຂໍ້ຍ່ອຍທີ່ສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານຈະໄດ້ແຈກຢາຍໄປສຶກສາ ແລະ ເຮັດກິດຈະກຳ ເປັນກຸ່ມໃໝ່ເຊິ່ງເອີ້ນວ່າກຸ່ມຜູ້ຊ່ຽວຊານ (Expert Group) ເຊັ່ນ:

- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 1 ໄດ້ຮັບຫົວຂໍ້ຍ່ອຍທີ 1:ຄູເອົາໃບກິດຈະກ□າໃຫ້ນັກຮຽນຄົ້ນຄ້ວາເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການຟັງທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| ເນື້ອໃນ |
| --- |
| ການສອນຕ້ອງມີກິດຈະກຳໃນບາດກ້າວກ່ອນການຟັງ, ກິດຈະກຳໃນຂະນະທີ່ຟັງ ແລະ ກິດຈະກຳຫຼັງຈາກສຳເລັດການຟັງໃຫ້ນັກຮຽນເຮັດ.<br>ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈ<br>ນັກຮຽນມີເຫດຜົນໃນການຟັງບົດເລື່ອງ<br>ກິດຈະກຳຕ້ອງບໍ່ຍາກເກີນໄປໃນການຊອກຫາຄຳຕອບຂອງນັກຮຽນ |

| ນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ຟັງ |
| --- |

1. ການສອນທັກສະການຟັງປະກອບມີຈັກບາດກ້າວ?

   ○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 2 ໄດ້ຮັບຫົວຂໍ້ຍ່ອຍທີ 2:ໃຫ້ນັກຮຽນຈັດລຽງຮູບພາບກ່ຽວກັບຕອນຕ່າງໆຂອງການຫຼິ້ນກິລາບານເຕາະໃຫ້ຖືກຕ້ອງຕາມຂັ້ນ.ຫຼັງຈາກນັ້ນຄູ ຟັງ (ເປີດເທບ) ໃຫ້ນັກຮຽນຟັງເພື່ອກວດເຊັກຄຳຕອບ.




2. ເປັນຫຍັງຄູຈຶ່ງເຮັດກິດຈະກຳກ່ອນການຟັງ?

   ○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 3 ໄດ້ຮັບຫົວຂໍ້ຍ່ອຍທີ 3:ໃຫ້ນັກຮຽນເຊິ່ງປະກອບມີຄຳຖາມກ່ຽວກັບເນື້ອຂອງບົດເລື່ອງ ແລ້ວ ເປີດບົດເລື່ອງໃຫ້ນັກຮຽນຟັງ.

   ຕົວຢ່າງຄຳຖາມ:

   1. Who was playing football?
   2. What happened to the ball?
   3. Why couldn’t they catch the ball?
   4. Who had a good idea?
   5. Why Sombath go to the house?
   6. How did they get the ball again?

3. ເປັນຫຍັງຄູຈຶ່ງເຮັດກິດຈະກ□າໃນຂະນະທີ່ຟັງ?

   ○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 4 ໄດ້ຮັບຫົວຂໍ້ຍ່ອຍທີ 4:ໃຫ້ພວກນ້ອງເບິ່ງຮູບພາບນັ້ນຄືນ ແລະ ນຳໃຊ້ຂໍ້ມູນໃນຮູບພາບນັ້ນເພື່ອສ້າງເປັນບົດເລື່ອງຄືນ.

4. ເປັນຫຍັງຄູຈຶ່ງເຮັດກິດຈະກ□າໃນບາດກ້າວຫຼັງການຟັງ?

   ○ ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 5 ໄດ້ຮັບຫົວຂໍ້ຍ່ອຍທີ 5: ໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະບາດກ້າວຂອງການສອນການຟັງ.

**ກິດຈະກຳ**

ການເດົາບົດເລື່ອງຈາກຄຳສັບ ຫຼືວະລີ, ການເດົາບົດເລື່ອງຈາກຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, ການສົນທະນາກ່ຽວກັບຮູບພາບ, ການຕັ້ງຄຳຖາມກວດຄວາມເຂົ້າໃຈຈາກການຟັງ, ການສະແດງບົດບາດສົມມຸດຈາກບົດເລື່ອງ, ສ້າງບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄຳຕອບຈາກການເດົາການຟັງ, ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄຳຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| **ບາດກ້າວກ່ອນການຟັງ** | **ບາດກ້າວໃນຂະນະທີ່ຟັງ** | **ບາດກ້າວຫຼັງການຟັງ** |
|---|---|---|
| -<br>-<br>-<br>-<br>-<br>-<br>- | -<br>-<br>-<br>-<br>-<br>-<br>- | -<br>-<br>-<br>-<br>-<br>-<br>- |

5. ກິດຈະກ□າທີ່ສາມາດນ□າໃຊ້ເຂົ້າໃນບາດກ້າວກ່ອນການຟັງ, ຂະນະທີ່ຟັງ ແລະ ຫຼັງການຟັງມີຫຍັງແດ່?

**2.3. ຂັ້ນທີ 3: ການສຶກສາຄວາມຮູ້** (15 ນາທີ)

- ນັກສຶກສາທີ່ໄດ້ຮັບຫົວຂໍ້ຍ່ອຍທີ່ຄືກັນຈາກກຸ່ມບ້ານແຕ່ລະກຸ່ມມາລວມກັນເປັນກຸ່ມດຽວກັນເປັນກຸ່ມໃໝ່ເຊິ່ງເອີ້ນວ່າຜູ້ຊ່ຽວຊານ (Expert Group) ມີ 6 ກຸ່ມໆລະ 5-6 ຄົນ.
- ພາຍໃນກຸ່ມຜູ້ຊ່ຽວຊານກຸ່ມລະ 5 ຄົນນັ້ນ ແຕ່ລະກຸ່ມສຶກສາເນື້ອໃນອັນດຽວກັນ, ທຳຄວາມເຂົ້າໃຈ ແລະ ອະທິບາຍຫົວຂໍ້ທີ່ສຶກສາຮ່ວມກັນ ເຊິ່ງສະມາຊິກພາຍໃນກຸ່ມອາດສະຫຼຸບປະເດັນຄວາມຮູ້ທີ່ສຳຄັນຕາມແນວຄິດຂອງສະມາຊິກໃນກຸ່ມ ເພື່ອທີ່ບັນທຶກ ແລະ ນຳເອົາຄວາມຮູ້ທີ່ໄດ້ຄົ້ນຄວ້າກັບໄປສອນໃຫ້ສະມາຊິກໃນກຸ່ມບ້ານ.

**2.4. ຂັ້ນທີ 4: ການຖ່າຍທອດຄວາມຮູ້** (20 ນາທີ)

ນັກສຶກສາຜູ້ທີ່ເປັນຜູ້ຊ່ຽວຊານແຕ່ລະຄົນທີ່ໄດ້ໄປສຶກສາຂໍ້ມູນຄວາມຮູ້ຈາກກຸ່ມຜູ້ຊ່ຽວຊານ ແລະ ໄດ້ກັບຄືນມາກຸ່ມບ້ານໃນຫົວຂໍ້ທີ່ຕົນເອງຮັບຜິດຊອບສຶກສາມາ.

ຜູ້ຊ່ຽວຊານທັງ 6 ຄົນ ນຳສະເໜີຂໍ້ມູນໃນກຸ່ມບ້ານສ□າເລັດແລ້ວສະມາຊິກໃນກຸ່ມຕ້ອງສົນທະນາຫາຂໍ້ສະຫຼຸບໃນແຕ່ລະຫົວຂໍ້ຈາກ ສະມາຊິກທັງ 5 ຄົນເພື່ອເປັນຄວາມຮູ້ຂອງກຸ່ມ.

**2.5. ຂັ້ນທີ 5: ທົດສອບຄວາມຮູ້** (20 ນາທີ)

- ຫຼັງຈາກສຳເລັດການດຳເນີນກິດຈະກຳການຮຽນ-ການສອນຄູຢາຍບົດທົດສອບໃຫ້ນັກຮຽນແຕ່ລະຄົນໃນກຸ່ມບ້ານທົດສອບໃນຫົວຂໍ້ດຽວກັນ.
- ຄູໃຫ້ຄະແນນແຕ່ລະຄົນໃນກຸ່ມບ້ານທຸກໆກຸ່ມ ແລ້ວນຳເອົາຄະແນນຂອງສະມາຊິກໃນກຸ່ມແຕ່ລະຄົນໃນກຸ່ມບ້ານມາລວມເຂົ້າກັນ.

**2.6. ຂັ້ນທີ 6: ຊົມເຊີຍ ແລະ ມອບລາງວັນ** (5 ນາທີ)

ກຸ່ມທີ່ໄດ້ຄະແນນສູງສຸດຈະໄດ້ຮັບລາງວັນຈາກຄູ, ຊົມເຊີຍ ແລະ ນຳເອົາຜົນການທົດສອບຕິດໄວ້ຫ້ອງຮຽນ.

3. **ຂັ້ນສະຫຼຸບ**

ເມື່ອສຳເລັດການຮຽນ-ການສອນແລ້ວ ຄູ ແລະ ນັກສຶກສາຮ່ວມກັນສະຫຼຸບຜົນການເຮັດກິດຈະກຳ, ບັນຫາທີ່ເກີດຂຶ້ນໃນລະຫວ່າງການດຳເນີນກິດຈະກຳ ແລະ ຫາທາງແກ້ໄຂເພື່ອເປັນແນວທາງໃນການດຳເນີນການຮຽນ-ການສອນຄັ້ງຕໍ່ໄປ.

4. **ຂັ້ນປະເມີນ**(25 ນາທີ)

- ກວດສອບຈາກຄວາມຖືກຕ້ອງຂອງໃບກິດຈະກຳ
- ກວດສອບຈາກຄະແນນການເຮັດບົດທົດສອບຍ່ອຍ
- ສັງເກດຈາກການຮ່ວມມືໃນການເຮັດກິດຈະກຳກຸ່ມ
- ກວດສອບຈາກໃບຕິດຕາມຂະບວນການ

## ໃບກິດຈະກຳ ບົດສອນທີ 4

○ ໃຫ້ນັກຮຽນຄົ້ນຄ້ວາເພື່ອສົນທະນາກ່ຽວກັບເທັກນິກຂອງການສອນການຟັງທີ່ຜູ້ສອນຕ້ອງໄດ້ເອົາໃຈໃສ່

| ເນື້ອໃນ |
| --- |
| ການສອນຕ້ອງມີກິດຈະກຳໃນບາດກ້າວກ່ອນການຟັງ, ໃນຂະນະທີ່ຟັງ ແລະ ຫຼັງຈາກສຳເລັດການຟັງ ໃຫ້ນັກຮຽນເຮັດ. ການສອນຕ້ອງໜ້າສົນໃຈ ແລະ ດຶງດູດໃຈນັກຮຽນມີເຫດຜົນໃນການຟັງບົດເລື່ອງກິດຈະກຳຕ້ອງບໍ່ຍາກເກີນໄປໃນການຊອກຫາຄຳຕອບຂອງນັກຮຽນນັກຮຽນຕ້ອງໄດ້ມີການຄົ້ນຄິດໃນຂະນະທີ່ຟັງ |

1. ການສອນການຟັງປະກອບມີຈັກບາດກ້າວ?

○ ໃຫ້ນັກຮຽນຈັດລຽງຮູບພາບກ່ຽວກັບຕອນຕ່າງໆຂອງການຫຼິ້ນກິລາບານເຕາະໃຫ້ຖືກຕ້ອງຕາມຂັ້ນ.ຫຼັງຈາກນັ້ນຄູ ຟັງ (ເປີດເທບ) ໃຫ້ນັກຮຽນຟັງເພື່ອກວດເຊັກຄຳຕອບ.




2. ເປັນຫຍັງຄູຈຶ່ງເຮັດກິດຈະກຳໃນບາດກ້າວກ່ອນການຟັງ?

○ ຄູເອົາໃບເຈ້ຍກິດຈະກຳໃຫ້ນັກຮຽນເຊິ່ງປະກອບມີຄຳຖາມກ່ຽວກັບເນື້ອຂອງບົດເລື່ອງ ແລ້ວ ເປີດບົດເລື່ອງໃຫ້ນັກຮຽນຟັງ.

ຄຳຖາມ:

1. Who was playing football?
2. What happened to the ball?
3. Why couldn't they catch the ball?
4. Who had a good idea?
5. Why Sombath go to the house?

6. How did they get the ball again?

3. ເປັນຫຍັງຄູຈຶ່ງເຮັດກິດຈະກ□າໃນບາດກ້າວຂະນະທີ່ຟັງ?




- ນັກສຶກສາແຕ່ລະຄົນຈາກແຕ່ລະກຸ່ມຄົນທີ 4 ໄດ້ຮັບຫົວຂໍ້ຍ່ອຍທີ 4: ໃຫ້ພວກນ້ອງເບິ່ງຮູບພາບນັ້ນຄືນ ແລະ  ນຳໃຊ້ຂໍ້ມູນໃນຮູບພາບນັ້ນເພື່ອສ້າງເປັນບົດເລື່ອງຄືນ.

4. ເປັນຫຍັງຄູຈຶ່ງເຮັດກິດຈະກ□າໃນບາດກ້າວຫຼັງການຟັງ?

- ໃຫ້ນັກຮຽນເອົາປະເພດຂອງກິດຈະກຳຂ້າງລຸ່ມນີ້ຈັດເຂົ້າແຕ່ລະບາດກ້າວຂອງການສອນການຟັງ.

**ກິດຈະກຳ**

ການເດົາບົດເລື່ອງຈາກຄຳສັບ ຫຼືອະລິ, ການເດົາບົດເລື່ອງຈາກຮູບພາບ, ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ, ການສົນທະນາກ່ຽວກັບຮູບພາບ, ການຕັ້ງຄຳຖາມກວດຄວາມເຂົ້າໃຈຈາກການຟັງ, ການສະແດງບົດບາດສົມມຸດຈາກບົດເລື່ອງ, ສ້າງບົດເລື່ອງຄືນໃໝ່, ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ, ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ, ການກວດກາຄຳຕອບຈາກການເດົາການຟັງ, ການຕື່ມຂໍ້ມູນໃສ່ຕາຕະລາງ, ການຕອບຄຳຖາມ ຖືກ/ຜິດ, ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ, ການຈັບຄູ່ປະໂຫຍກ

| ບາດກ້າວກ່ອນການຟັງ | ບາດກ້າວໃນຂະນະທີ່ຟັງ | ບາດກ້າວຫຼັງການຟັງ |
|---|---|---|
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |
| - | - | - |

5. ກິດຈະກ□າທີ່ສາມາດນ□າໃຊ້ເຂົ້າໃນບາດກ້າວກ່ອນການຟັງ, ຂະນະທີ່ຟັງ ແລະ ຫຼັງການຟັງມີຫຍັງແດ່?

## ຄຳຕອບໃບກິດຈະກຳ 4

1. ການສອນການຟັງປະກອບດ້ວຍ ສາມບາດກ້າວ
2. ເພື່ອເປັນການແນະນຳໃຫ້ນັກຮຽນໄດ້ຄົ້ນຄິດວ່າພວກເຂົ້າຈະໄດ້ຟັງກ່ຽວກັບຫຍັງ
3. ເພື່ອໃຫ້ນັກຮຽນຈະໄດ້ເອົາໃຈໃສ່ໃນສິ່ງທີ່ພວກເຂົາກຳລັງຟັງ, ເພື່ອຄູຈະໄດ້ຮູ້ວ່ານັກຮຽນມີຄວາມເຂົ້າໃຈໃນບົດເລື່ອງ, ນັກຮຽນມີເປົ້າໝາຍໃນການຟັງ.
4. ເພື່ອໃຫ້ນັກຮຽນໄດ້ຜັນຂະຫຍາຍຄວາມຮູ້ທີ່ໄດ້ຈາກການຮຽນ ແລະ ເພື່ອກວດເບິ່ງຄວາມເຂົ້າໃຈຂອງນັກຮຽນຕໍ່ບົດຮຽນ.
5. ກິດຈະກຳຂອງແຕ່ລະບາດກ້າວ

| ບາດກ້າວກ່ອນການຟັງ | ບາດກ້າວໃນຂະນະທີ່ຟັງ | ບາດກ້າວຫຼັງການຟັງ |
|---|---|---|
| - ການເດົາບົດເລື່ອງຈາກຄຳສັບ ຫຼື ວະລີ<br>- ການເດົາບົດເລື່ອງຈາກຮູບພາບ<br>- ການເດົາບົດເລື່ອງດ້ວຍຈັດລຽງຂັ້ນຕອນຂອງຮູບພາບ<br>- ການສົນທະນາກ່ຽວກັບຮູບພາບ<br>- ການສ້າງຄຳຖາມທີ່ຄາດວ່າອາດຈະມີຄຳຕອບຈາກບົດເລື່ອງ | - ການຈັດລຽງຮູບພາບໃຫ້ຖືກຕ້ອງຕາມຂັ້ນຕອນ<br>- ການກວດກາຄຳຕອບຈາກການເດົາໃນການຟັງ<br>- ການຕື່ມຂໍ້ມູນໃສ່ຕາຕະລາງ<br>- ການຕອບຄຳຖາມ ຖືກ/ຜິດ<br>- ການຕື່ມຂໍ້ມູນໃສ່ຊ່ອງຫວ່າງ<br>- ການຈັບຄູ່ປະໂຫຍກ | - ການຕັ້ງຄຳຖາມກວດຄວາມເຂົ້າໃຈຈາກການຟັງ<br>- ການສະແດງບົດບາດສົມມຸດຈາກບົດເລື່ອງ<br>- ສ້າງບົດເລື່ອງຄືນໃໝ່ |

# ບົດທົດສອບ ບົດທີ4

1. ການສອນທັກສະການຟັງມີຈັກບາດກ້າວ?
   ກ. ສາມ ບາດກ້າວ
   ຂ. ສີ່ ບາດກ້າວ
   ຄ. ຫ້າ ບາດກ້າວ
   ງ. ຫົກ ບາດກ້າວ
2. ການສອນທັກສະການຟັງປະກອບມີບາດກ້າວໃດແດ່?
   ກ. ບາດກ້າວກ່ອນການຟັງ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວສະຫຼຸບ
   ຂ. ບາດກ້າວກ່ອນການຟັງ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງການຟັງ
   ຄ. ບາດກ້າວກ່ອນການຟັງ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງການຟັງ
   ງ. ບາດກ້າວຄູນຳສະເໜີຄຳສັບ, ບາດກ້າວກ່ອນການຟັງ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງການຟັງ
3. ຄູໃຫ້ກິດຈະກຳນັກຮຽນເພື່ອຄົ້ນຄິດວ່າພວກເຂົາຈະໄດ້ຟັງກ່ຽວກັບຫຍັງແມ່ນບາດກ້າວໃດຂອງການສອນທັກສະການຟັງ?
   ກ. ບາດກ້າວກ່ອນການຟັງ
   ຂ. ບາດກ້າວການດຳເນີນກິດຈະກຳການສອນ
   ຄ. ບາດກ້າວຂະນະທີ່ຟັງ
   ງ. ບາດກ້າວຫຼັງຈາກຟັງ
4. ເປັນຫຍັງຄູຈຶ່ງດຳເນີນບາດກ້າວໃນຂະນະທີ່ຟັງ?
   ກ. ເພື່ອໃຫ້ນັກຮຽນໄດ້ສ້າງບົດເລື່ອງຄືນໃໝ່ ແລະ ເພື່ອໃຫ້ນັກຮຽນມີເປົ້າໝາຍໃນການຟັງ
   ຂ. ເພື່ອໃຫ້ນັກຮຽນໄດ້ຕື່ມຂໍ້ມູນໃສ່ຕາຕະລາງ ແລະ ເພື່ອໃຫ້ນັກຮຽນມີເປົ້າໝາຍໃນການຟັງ
   ຄ. ເພື່ອເປັນການກວກາຄຳຕອບຈາກການຟັງ ແລະ ເພື່ອໃຫ້ນັກຮຽນມີເປົ້າໝາຍໃນການຟັງ
   ງ. ເພື່ອຄູຈະໄດ້ຮູ້ວ່ານັກຮຽນມີຄວາມເຂົ້າໃຈໃນບົດເລື່ອງຄືນ ແລະ ເພື່ອໃຫ້ນັກຮຽນມີເປົ້າໝາຍໃນການຟັງ
5. ການດຳເນີນບາດກ້າວຫຼັງການຟັງມີເປົ້າໝາຍຫຍັງ?
   ກ. ເພື່ອໃຫ້ນັກຮຽນເອົາໃຈໃສ່ໃນສິ່ງທີ່ເຂົ້າເຈົ້າຟັງ
   ຂ. ເພື່ອໃຫ້ນັກຮຽນໄດ້ຜີນຂະຫຍາຍຄວາມຮູ້ທີ່ໄດ້ຈາກການຟັງ
   ຄ. ເພື່ອເປັນການແນະນຳບົດຮຽນກ່ຽວກັບເປົ້າໝາຍຂອງການຟັງ
   ງ. ເພື່ອກວດກາຄວາມເຂົ້າໃຈຂອັງນັກຮຽນຕໍ່ຫຼັງໄວຍາກອນ, ເພື່ອໃຫ້ນັກຮຽນໄດ້ຝຶກຊ້ອມບົດຮຽນ.

## ຄໍາຕອບບົດທົດສອບ ບົດທີ4

1. ການສອນທັກສະການຟັງມີຈັກບາດກ້າວ?

   ກ. ສາມ ບາດກ້າວ

2. ການສອນທັກສະການຟັງປະກອບມີບາດກ້າວໃດແດ່?

   ຂ. ບາດກ້າວກ່ອນການຟັງ, ບາດກ້າວຂະນະທີ່ຟັງ ແລະ ບາດກ້າວຫຼັງການຟັງ

3. ຄູໃຫ້ກິດຈະກໍານັກຮຽນເພື່ອຄົ້ນຄິດວ່າພວກເຂົາຈະໄດ້ຟັງກ່ຽວກັບຫຍັງແມ່ນບາດກ້າວໃດຂອງການສອນທັກສະການຟັງ?

   ກ. ບາດກ້າວກ່ອນການຟັງ

4. ເປັນຫຍັງຄູຈິ່ງດໍາເນີນບາດກ້າວໃນຂະນະທີ່ຟັງ?

   ງ. ເພື່ອຄູຈະໄດ້ຮູ້ວ່ານັກຮຽນມີຄວາມເຂົ້າໃຈໃນບົດເລື່ອງຄືນ ແລະ ເພື່ອໃຫ້ນັກຮຽນມີເປົ້າໝາຍໃນການຟັງ

5. ການດໍາເນີນບາດກ້າວຫຼັງການຟັງມີເປົ້າໝາຍຫຍັງ?

   ຂ. ເພື່ອໃຫ້ນັກຮຽນໄດ້ຜົນຂະຫຍາຍຄວາມຮູ້ທີ່ໄດ້ຈາກການຟັງ

# ບົດສອນທີ 5

ວິຊາຫຼັກສູດ ແລະ ການສອນ ຫ້ອງປີ 3ຂ ຄູປະຖົມ

ບົດທີ 5: ວັນທີ ......../......./2019

ຫົວຂໍ້: ການສອນການເວົ້າ ເວລາ: 100 ນາທີ

1. **ຈຸດປະສົງ:**ຫຼັງຈາກຮຽນຈົບບົດນີ້ແລ້ວນັກຮຽນຈະສາມາດ:
   - ສອນການເວົ້າດ້ວຍການນໍາໃຊ້ການຝຶກຊ້ອມເວົ້າແບບເວົ້າຕາມ, ແບບປ່ຽນແທນ ແລະ ແບບຜົນປ່ຽນ.
2. **ອຸປະກອນ:**ໃບກິດຈະກໍາ, ແບບຮຽນ, ປຶ້ມແບບຮຽນພາສາອັງກິດຊັ້ນປະຖົມເຫຼັ້ມ 1.
3. **ເນື້ອໃນ:**
   - ❖ ປະພດຂອງການເຝິກຊ້ອມເວົ້າ
   - o ການຝຶກຊ້ອມເວົ້າແບບເວົ້າຕາມ (Repetition drilling)

ຄູເອົາໃບເຈ້ຍກິດຈະກໍາໃຫ້ນັກຮຽນຈັບຄູປະເພດຂອງການຝຶກຊ້ອມເວົ້າໃສ່ກັບນິຍາມຂອງປະເພດຂອງການຝຶກຊ້ອມເວົ້າປະໂຫຍກ

| | |
|---|---|
| ການຝຶກຊ້ອມເວົ້າແບບເວົ້າຕາມ (Repetition drilling) | ກ. ນັກຮຽນຝຶກເວົ້າປະໂຫຍກດ້ວຍການສ້າງປະໂຫຍກຈໍານວນນ້ອຍເປັນຈໍານວນຫຼາຍ, ປ່ຽນປະທານຂອງປະໂຫຍກ ຫຼື ປ່ຽນຄໍາປະກອບຂອງປະໂຫຍກ<br>ຂ. ນັກຮຽນຝຶກເວົ້າປະໂຫຍກດ້ວຍການປ່ຽນຄໍາສັບ ຫຼື ວະລີຕາມໂຄງສ້າງຂອງປະໂຫຍກ.<br>ຄ. ນັກຮຽນຝຶກເວົ້າປະໂຫຍກດ້ວຍການເວົ້າຕາມຫຼັງຄູຕາມແບບທີ່ຄູເວົ້າ. |

